# ຄູ່ມືຄູ

# ແຊກຊ້ອນການສຶກສາພົນລະເມືອງໂລກ
# ເຂົ້າໃນວິຊາສຶກສາພົນລະເມືອງ
# ຊັ້ນມັດທະຍົມສຶກສາຕອນຕົ້ນ



ກະຊວງສຶກສາທິການ ແລະ ກິລາ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

2023

# ຄູ່ມືຄູ
# ແຊກຊ້ອນການສຶກສາພົນລະເມືອງໂລກ
# ເຂົ້າໃນວິຊາສຶກສາພົນລະເມືອງ
# ຊັ້ນມັດທະຍົມສຶກສາຕອນຕົ້ນ


ຮຽບຮຽງໂດຍ: ມີໄຊສະຫວັດ ແສງສະຫວ່າງ
ລັດດາວັນ ຈິດຕະວົງ
ພຸດທະວັນ ພິມມະທອງ
ເຄນ ອິນທະສຸກ
ບຸນຖະໜອມ ພອນມະນີ

ກວດແກ້ໂດຍ: ອານຸລົມ ວິໄລພອນ
ອ່ອນແກ້ວ ນວນນະວົງ
ອຸທິດ ທິບມະນີ
ແສງເງິນ ໄວຍາກອນ
ແກ້ວມະນີ ທອງປະເສີດ

ພິມເຂົ້າໜ້າໂດຍ: ບຸນຖະໜອມ ພອນມະນີ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2023

**ດ້ວຍການຮ່ວມມືກວດຜ່ານ ແລະ ປະກອບຄຳເຫັນຈາກ:**

ສີລິນທອນ ສັກລໍຄຳ
ເດຊານຸລາດ ແສນດວງເດດ
ລີຈາວ ໄຊເຍຍຊ່າງ
ໄຊຍະເດດ ຊີງມີໄຊ
ວົງເດືອນ ໂອໃສ
ວິນລາ ແສງສະຫວ່າງ
ທອງແດງ ສິມຈັນມະວົງ
ສຸກສັນ ໄຊຍະວົງ
ບົວເພັດ ອິນທະວົງ
ຂັນກາບ ພົງອຸດົມ
ວຽງອາທິດ ຂາວປະເສີດ
ແສງປະພາ ໂຫລານຸພາບ
ອິດທິດາ ຍັງນຸວົງ

# ຄຳນຳ

ປຶ້ມຄູ່ມືແຊກຊ້ອນການສຶກສາພົນລະເມືອງໂລກ ເຂົ້າໃນວິຊາສຶກສາພົນລະເມືອງຊັ້ນມັດທະຍົມສຶກສາຕອນຕົ້ນ ຮຽບຮຽງຂຶ້ນໂດຍອີງໃສ່ຫຼັກສູດວິຊາສຶກສາພົນລະເມືອງ ດ້ວຍການແຊກຊ້ອນເນື້ອໃນການສຶກສາພົນລະເມືອງໂລກເຂົ້າບາງເນື້ອໃນທີ່ມີຄວາມກ່ຽວຂ້ອງກັນ, ມີຈຸດປະສົງເພື່ອຊ່ວຍຄູໃນການຈັດການຮຽນການສອນ ຊຶ່ງປະກອບມີ 2 ພາກ ຄື:

ພາກທີ I ແນະນຳລວມ ປະກອບມີ: ຄວາມເປັນມາ, ຈຸດປະສົງ, ວິທີການນຳໃຊ້ປຶ້ມຄູ່ມືຄູ.

ພາກທີ II ແນະນຳການສອນແຕ່ລະບົດ ປະກອບມີ: ບົດທີແຊກຊ້ອນ, ຈຸດປະສົງ, ເນື້ອໃນ, ສື່ການຮຽນການສອນ, ກິດຈະກຳການຮຽນການສອນ, ການວັດ ແລະ ປະເມີນຜົນ.

ປຶ້ມຄູ່ມືຄູເຫຼັ້ມນີ້ ແມ່ນຮຽບຮຽງຂຶ້ນໂດຍວິຊາການພັດທະນາຫຼັກສູດ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ຄູ່ຮ່ວມງານຈາກພາກສ່ວນທີ່ກ່ຽວຂ້ອງລວມມີ ກົມຮ່ວມມືກັບຕ່າງປະເທດ, ກົມສ້າງຄູ, ກົມສາມັນສຶກສາ, ມະຫາວິທະຍາໄລແຫ່ງຊາດ, ພ້ອມດ້ວຍຊ່ຽວຊານຕ່າງປະເທດຈາກສູນການສຶກສາເພື່ອຄວາມເຂົ້າໃຈສາກົນໃນພາກພື້ນອາຊີ-ປາຊີຟິກ (APCEIU).

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ຫວັງວ່າ ປຶ້ມເຫຼັ້ມນີ້ຈະເປັນປະໂຫຍດໃຫ້ແກ່ຄູ ແລະ ຜູ້ບໍລິຫານ. ເຖິງຢ່າງໃດກໍຕາມ, ການຮຽບຮຽງປຶ້ມເຫຼັ້ມນີ້ ກໍຄືງບໍ່ປາສະຈາກຂໍ້ຂາດຕົກບົກພ່ອງໄດ້. ສະນັ້ນ, ຈຶ່ງຂໍຮ່ວມມືນຳທ່ານຜູ້ທີ່ນຳໃຊ້ປຶ້ມເຫຼັ້ມນີ້ ຈົ່ງຊ່ວຍເບິ່ງຈຸດບົກພ່ອງ ຫຼື ຈຸດຜິດພາດ ແລ້ວສົ່ງຄຳຄິດເຫັນຂອງທ່ານໄປຍັງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. ພວກເຮົາຈະຖືວ່າທຸກຄຳຄິດເຫັນຂອງທ່ານເປັນຂໍ້ມູນທີ່ມີຄຸນຄ່າ ແລະ ເປັນການຊ່ວຍປັບປຸງຄຸນນະພາບການສຶກສາຂອງພວກເຮົາໃຫ້ສູງຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

**ສາລະບານ**


**ພາກທີ I ແນະນຳລວມ**........................................................................1
1. ຄວາມເປັນມາ........................................................................1
2. ຈຸດປະສົງ........................................................................2
3. ວິທີການນຳໃຊ້ຄູ່ມື........................................................................2
4. ກ່ຽວກັບສຶກສາພົນລະເມືອງໂລກ (GCED)........................................................................3
5. ຂອບຫຼັກສູດການແຊກຊ້ອນສຶກສາພົນລະເມືອງໂລກ (GCED)..............................4
6. ຫຼັກການສອນ........................................................................6
7. ການຈັດການຮຽນການສອນ........................................................................8
8. ສື່ການຮຽນການສອນ........................................................................8
9. ການວັດ ແລະ ປະເມີນຜົນ........................................................................9
**ພາກທີ II ແນະນຳການສອນແຕ່ລະບົດ**........................................................................11
**1. ຊັ້ນມັດທະຍົມສຶກສາ ປີທີ 1**........................................................................11
ບົດທີ 5 ການມີລະບຽບວິໄນ........................................................................12
ບົດທີ 7 ການມີມະນຸດສຳພັນ........................................................................17
ບົດທີ 8 ການດຳລົງຊີວິດກັບທຳມະຊາດ........................................................................23
ບົດທີ 15 ສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍ..............................................29
**2. ຊັ້ນມັດທະຍົມສຶກສາ ປີທີ 2**........................................................................35
ບົດທີ 4 ຄຸນສົມບັດ ແລະ ລະບຽບວິໄນ........................................................................36
ບົດທີ 5 ການຮັກແພງມະນຸດດ້ວຍກັນ........................................................................43
ບົດທີ 8 ການໃຫ້ອະໄພ........................................................................49
ບົດທີ 12 ການເຮັດວຽກມີແຜນການ........................................................................56
ບົດທີ 13 ສິດໄດ້ຮັບການປົກປ້ອງ........................................................................62
ບົດທີ 18 ການປົກຄອງທ້ອງຖິ່ນ........................................................................68
**3. ຊັ້ນມັດທະຍົມສຶກສາ ປີທີ 3**........................................................................76
ພາກທີ I ຄຸນສົມບັດ ແລະ ວັດທະນະທຳ........................................................................77
ບົດທີ 1 ການນັບຖືສິ່ງທີ່ຖືກຕ້ອງ........................................................................77
ບົດທີ 5 ລະບຽບວິໄນ ແລະ ກົດໝາຍ........................................................................82

ບົດທີ 6 ການສ້າງສາຍສຳພັນເພື່ອນມິດ.....96
ບົດທີ 7 ການປະກອບສ່ວນເຄື່ອນໄຫວວຽກງານການເມືອງ-ສັງຄົມ.....101
ບົດທີ 8 ການຊອກຮູ້ຮໍ່າຮຽນ.....106
ບົດທີ 11 ການອອກແຮງງານດ້ວຍຄວາມຕື່ນຕົວ.....114
ບົດທີ 13 ການຕ້ານປາກົດການຫຍໍ້ທໍ້ທາງສັງຄົມ.....120
ບົດທີ 15 ການປ້ອງກັນບໍ່ໃຫ້ເກີດອຸບັດຕິເຫດ.....126
**4. ຊັ້ນມັດທະຍົມສຶກສາ ປີທີ 4** .....131
ບົດທີ 3 ການມີປະຊາທິປະໄຕ.....132
ບົດທີ 4 ການປົກປັກຮັກສາສັນຕິພາບ.....140
ບົດທີ 9 ການເຮັດວຽກມີປະສິດທິພາບ.....149
ບົດທີ 11 ພາລະກິດໄວໜຸ່ມລາວຕໍ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.....154

**ພາກທີ I ແນະນຳລວມ**

**1. ຄວາມເປັນມາ**

ໂລກປັດຈຸບັນແມ່ນໂລກແຫ່ງຍຸກໂລກາພິວັດ ຊຶ່ງມີການປ່ຽນແປງທາງດ້ານເສດຖະກິດ, ການເມືອງ, ສັງຄົມ ແລະ ວັດທະນະທຳ ຫຼາຍປະເທດໄດ້ຮັບຜົນກະທົບຈາກການຫັນເປັນອຸດສາຫະກຳ, ການຫັນເປັນຕົວເມືອງ, ວິທະຍາສາດສະໄໝໃໝ່, ການປະຕິວັດດິຈິຕອນໄດ້ຫັນປ່ຽນໂຄງລ່າງພື້ນຖານ, ການຂົນສົ່ງ, ການສື່ສານ ແລະ ຄວາມກ້າວໜ້າທາງດ້ານເຕັກໂນໂລຊີກຳລັງນຳເຂົ້າສູ່ການປະຕິວັດອຸດສາຫະກຳຄັ້ງທີສີ່. ຈາກການປ່ຽນແປງດັ່ງກ່າວເຮັດໃຫ້ເກີດມີບັນຫາຕ່າງໆ ຕາມມາ ເຊັ່ນ: ໂລກລະບາດ, ສົງຄາມ, ການລະເມີດສິດທິມະນຸດ, ບັນຫາສິ່ງແວດລ້ອມ ແລະ ອື່ນໆ. ຕົວຢ່າງ ບັນຫາການລະບາດຂອງພະຍາດໂຄວິດ 19 ເຖິງວ່າຈະເລີ່ມຕົ້ນເກີດໃນເຂດໃດໜຶ່ງ ແຕ່ມັນໄດ້ຂະຫຍາຍພ້ອມທັງສົ່ງຜົນກະທົບໄປທົ່ວປະເທດ, ພາກພື້ນ ແລະ ທົ່ວໂລກ. ຄວາມຂັດແຍ້ງ ແລະ ຄວາມບໍ່ສະເໝີພາບທີ່ເພີ່ມຂຶ້ນເປັນສາເຫດທີ່ກໍ່ໃຫ້ເກີດສົງຄາມ ເຖິງແມ່ນວ່າສົງຄາມລະຫວ່າງປະເທດຈະມີໜ້ອຍລົງກວ່າອະດີດທີ່ຜ່ານມາ ແຕ່ວ່າການປະທະກັນດ້ວຍກຳລັງປະກອບອາວຸດຢູ່ພາຍໃນປະເທດໄດ້ເພີ່ມຂຶ້ນ ສິ່ງນີ້ໄດ້ສົ່ງຜົນໃຫ້ຈຳນວນຜູ້ອົບພະຍົບ ແລະ ຜູ້ເຄື່ອນຍ້າຍຖິ່ນຖານພາຍໃນປະເທດເພີ່ມຂຶ້ນຢ່າງຫຼວງຫຼາຍ. ນອກນັ້ນ, ຍັງມີຄວາມຮຸນແຮງໃນຮູບແບບອື່ນ ເຊັ່ນ: ຄວາມຮຸນແຮງໃນຄອບຄົວ, ການກໍ່ອາຊະຍາກຳ, ການທາລຸນເດັກ, ການຂົ່ມເຫັງ ລວມທັງຊ່ອງທາງທາງອິນເຕີເນັດ ທີ່ກຳລັງເປັນບັນຫາທີ່ເພີ່ມຂຶ້ນຢູ່ໃນຫຼາຍສັງຄົມ ຊຶ່ງເຮັດໃຫ້ເກີດປາກົດການຫຍໍ້ທໍ້ຕ່າງໆ ໂດຍສະເພາະແມ່ນດ້ານການສຶກສາທີ່ບໍ່ສາມາດບັນລຸໄດ້ຕາມໂຄງການຫຼັກສູດເຮັດໃຫ້ປະສິດທິພາບຂອງການຮຽນການສອນຫຼຸດລົງ ຍ້ອນການຮຽນບໍ່ປົກກະຕິ, ການພົວພັນທາງສັງຄົມຖືກຈຳກັດ, ຂາດເງື່ອນໄຂດ້ານປັດໄຈສີ່ ທີ່ສົ່ງຜົນໃຫ້ຂາດໂອກາດທາງການສຶກສາ ແລະ ບັນຫາອື່ນໆ.

ສປປ ລາວ ກໍເປັນປະເທດໜຶ່ງທີ່ໄດ້ຮັບຜົນກະທົບຈາກການປ່ຽນແປງດັ່ງກ່າວ. ສະນັ້ນ, ກະຊວງສຶກສາທິການ ແລະ ກິລາຈຶ່ງໄດ້ວາງນະໂຍບາຍການຈັດຕັ້ງປະຕິບັດການສຶກສາພົນລະເມືອງໂລກໃນສະຖານການສຶກສາ ເປັນບຸລິມະສິດໜຶ່ງທີ່ສ້າງໂອກາດໃຫ້ຜູ້ຮຽນເຂົ້າເຖິງເນື້ອໃນຂອງຫຼັກສູດ, ສະພາບແວດລ້ອມການຮຽນ, ການປະຕິບັດການສອນ ແລະ ການປະເມີນຜົນ. ການຈັດກິດຈະກຳການຮຽນການສອນການສຶກສາພົນລະເມືອງໂລກມີຫຼາຍຮູບແບບ ເຊັ່ນ: ການແຊກຊ້ອນເຂົ້າໃນວິຊາສຶກສາພົນລະເມືອງຊັ້ນມັດທະຍົມສຶກສາໂດຍນຳໃຊ້ວິທີການຮຽນແບບມີສ່ວນຮ່ວມ, ການຈັດກິດຈະກຳໃນວັນສຳຄັນຕ່າງໆຂອງໂລກ, ການປຸກຈິດສຳນຶກ, ການມີສ່ວນຮ່ວມຂອງຊຸມຊົນ ແລະ ການສ້າງສາຍພົວພັນກັບໂຮງຮຽນແຫ່ງຕ່າງໆ.

ກະຊວງສຶກສາທິການ ແລະ ກິລາ ໄດ້ມອບໝາຍໃຫ້ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ຮ່ວມມືກັບ ສູນການສຶກສາເພື່ອຄວາມເຂົ້າໃຈສາກົນໃນພາກພື້ນອາຊີ-ປາຊີຟິກ (APCEIU) ໃນການຈັດຕັ້ງປະຕິບັດໂຄງການພັດທະນາຫຼັກສູດແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນຫຼັກສູດວິຊາສຶກສາພົນລະເມືອງຊັ້ນມັດທະຍົມສຶກສາ ໂດຍການສ້າງຫຼັກສູດ ແລະ ປຶ້ມຄູ່ມືເພື່ອປະກອບການຮຽນການສອນການສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງສໍາລັບຊັ້ນມັດທະຍົມສຶກສາ.

**2. ຈຸດປະສົງ**

- ເພື່ອໃຫ້ຄູສອນນໍາໃຊ້ໃນການຈັດການຮຽນການສອນທີ່ແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນຫຼັກສູດວິຊາສຶກສາພົນລະເມືອງຊັ້ນມັດທະຍົມສຶກສາຕອນຕົ້ນ.
- ເພື່ອສ້າງຄ່ານິຍົມ ແລະ ເປັນການປູກຝັງການເຄົາລົບສິດທິມະນຸດ, ຄວາມຍຸຕິທໍາທາງສັງຄົມ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມຍືນຍົງດ້ານສິ່ງແວດ ລ້ອມເຂົ້າໃນການຈັດການຮຽນການສອນແຊກຊ້ອນການສຶກສາພົນລະເມືອງໂລກສໍາລັບຊັ້ນມັດທະຍົມສຶກສາຕອນຕົ້ນ.
- ເພື່ອໃຫ້ຄູ:
  - ຮູ້ວິທີການແນະນໍາຂໍ້ມູນ ແລະ ແນວຄວາມຄິດພື້ນຖານກ່ຽວກັບການແຊກຊ້ອນເນື້ອໃນຂອງການສຶກສາພົນລະເມືອງໂລກເຂົ້າໃນບົດທີ່ຈະແຊກຊ້ອນໄດ້.
  - ສາມາດນໍາໃຊ້ເນື້ອໃນ ແລະ ວິທີການກ່ຽວກັບການສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງ.
  - ເຫັນຄຸນຄ່າ ແລະ ບົດບາດຂອງການເປັນພົນລະເມືອງໂລກ.

**3. ວິທີການນໍາໃຊ້ຄູ່ມື**

**1) ແນະນໍາວິທີການນໍາໃຊ້ແຕ່ລະພາກ**

ພາກທີ I ສາມາດໃຊ້ເປັນຂໍ້ມູນອ້າງອີງທົ່ວໄປເພື່ອໃຫ້ຄູໄດ້ທໍາຄວາມເຂົ້າໃຈກ່ຽວກັບການສຶກສາພົນລະເມືອງໂລກ.

ພາກທີ II ແມ່ນໃຊ້ເນື້ອໃນບົດສອນທີ່ແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງ ໂດຍມີເນື້ອໃນແຕ່ລະບົດທີ່ມີກິດຈະກໍາການສອນ, ບົດບາດສົມມຸດທີ່ແຕກຕ່າງກັນ.

**ໝາຍເຫດ**

ຖ້າຂໍ້ມູນໃນປຶ້ມຄູ່ມືເຫຼັ້ມນີ້ບໍ່ພຽງພໍ ຄູສາມາດຄົ້ນຫາຂໍ້ມູນຕ່າງໆ ມາເພີ່ມເຕີມໄດ້

ຈາກໜັງສືພິມ, ສື່ອິນເຕີເນັດ, ຢູທູບ... ສໍາລັບໂຮງຮຽນທີ່ບໍ່ມີເຄື່ອນໄຂທາງດ້ານອິນເຕີເນັດ ຄູສາມາດຊອກຫາອຸປະກອນທີ່ມີໃນທ້ອງຖິ່ນ, ການສ້າງບົດບາດສົມມຸດທີ່ສອດຄ່ອງ ແລະ ເໝາະສົມກໍສາມາດນໍາມາໃຊ້ແທນໄດ້.

**4. ກ່ຽວກັບການສຶກສາພົນລະເມືອງໂລກ (Global Citizenship Education: GCED)**

ການສຶກສາພົນລະເມືອງໂລກ (ສພລ ຫຼື GCED) ແມ່ນການສຶກສາແບບຫັນປ່ຽນທີ່ສາມາດພັດທະນາຄວາມຮູ້, ທັກສະ, ຄ່ານິຍົມ ແລະ ທັດສະນະຄະຕິທີ່ຈໍາເປັນໃຫ້ແກ່ນັກຮຽນ ເພື່ອສ້າງໃຫ້ໂລກມີຄວາມຍຸຕິທໍາ, ມີສັນຕິພາບ ແລະ ມີຄວາມຍືນຍົງຫຼາຍຂຶ້ນ ໂດຍອີງໃສ່ຫຼັກການສາກົນດ້ານສິດທິມະນຸດ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ບໍ່ມີການຈໍາແນກ ບໍ່ເລືອກປະຕິບັດ, ບໍ່ໃຊ້ຄວາມຮຸນແຮງ ແລະ ການເຄົາລົບທຸກຄົນ. ການຫັນປ່ຽນທາງດ້ານແນວຄວາມຄິດທີ່ສອດຄ່ອງດ້ານການສຶກສາເພື່ອສ້າງຄວາມເຂົ້າໃຈ ແລະ ແກ້ໄຂບັນຫາຂອງໂລກທາງດ້ານສັງຄົມ, ການເມືອງ, ວັດທະນະທໍາ, ເສດຖະກິດ ແລະ ສິ່ງແວດລ້ອມ.

ເພື່ອຕອບສະໜອງຕໍ່ຄວາມຮຽກຮ້ອງຕ້ອງການໃຫ້ມີການສຶກສາທີ່ກ່ຽວຂ້ອງຫຼາຍຂຶ້ນໂດຍສຶກສາໃຫ້ພົນລະເມືອງມີສ່ວນຮ່ວມເລີ່ມຈາກການກະທໍາສ່ວນຕົວ, ສັງຄົມຢ່າງຫ້າວຫັນ, ມີຄວາມຮັບຜິດຊອບໃນການພັດທະນາສັງຄົມ, ເຄົາລົບຄວາມຫຼາກຫຼາຍທາງດ້ານວັດທະນະທໍາ, ສົ່ງເສີມຄວາມຮູ້ ແລະ ຄວາມເຂົ້າໃຈທີ່ສໍາຄັນກ່ຽວກັບສາເຫດຂອງຄວາມຂັດແຍ່ງ. ເພື່ອສ້າງໂລກໃຫ້ມີຄວາມຍຸຕິທໍາ, ສະຫງົບສຸກ, ຜ່ອນສັ້ນຜ່ອນຍາວ, ທົ່ວເຖິງ ແລະ ມີຄວາມຍືນຍົງ ໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ.

ເນື້ອໃນຫຼັກທີ່ຈະສອນໃນການສຶກສາພົນລະເມືອງໂລກເປັນແນວທາງການສຶກສາແບບຫັນປ່ຽນ ເພື່ອສົ່ງເສີມຄ່ານິຍົມຕ່າງໆ ເຊັ່ນ: ຄວາມຍຸຕິທໍາ, ການເຄົາລົບໃນຄວາມຫຼາກຫຼາຍ, ຄວາມສາມັກຄີເພື່ອມະນຸດສະທໍາ, ທັງເປັນການຊຸກຍູ້ໃຫ້ຜູ້ຮຽນກາຍເປັນພົນລະເມືອງທີ່ຫ້າວຫັນ. ດັ່ງນັ້ນ, ເນື້ອໃນຫຼັກສໍາລັບການສອນການສຶກສາພົນລະເມືອງໂລກປະກອບ ດ້ວຍການສົ່ງເສີມສັນຕິພາບ ແລະ ຫຼຸດຜ່ອນຄວາມຂັດແຍ່ງ, ການເຄົາລົບຄວາມຫຼາກຫຼາຍ, ໂລກາພິວັດ, ການພັດທະນາແບບຍືນຍົງ ແລະ ສິດທິມະນຸດ.

ວິທີການສອນການສຶກສາພົນລະເມືອງໂລກ ແມ່ນອີງໃສ່ 6 ຫຼັກການສອນ ຄື: ການສົນທະນາ ແລະ ການມີສ່ວນຮ່ວມ, ການສອນແບບເຊື່ອມໂຍງ ແລະ ແບບກ່ຽວຂ້ອງກັບຄວາມຮູ້ຫຼາຍສາຂາ, ການສອນແບບວິທີທີ່ຫຼາກຫຼາຍ, ການສອນແບບການສ້າງຄ່ານິຍົມ, ການສອນແບບການສ້າງຄວາມເຂັ້ມແຂງທີ່ສໍາຄັນ ແລະ ການສອນແບບສາມາດນໍາໃຊ້ປະໂຫຍດໄດ້ ແລະ ມີຄວາມກ່ຽວຂ້ອງ (ຢູ່ໃນທ້ອງຖິ່ນ ແລະ ທົ່ວໂລກ). ການສອນການສຶກສາພົນລະເມືອງໂລກມີຍຸດທະສາດ ແລະ ວິທີການສອນຄື: ການຫັນປ່ຽນການສອນທີ່ຈໍາເປັນ

ແລະ ການສອນການສຶກສາພົນລະເມືອງໂລກ; ໃນນີ້ ຄູເປັນຜູ້ອຳນວຍຄວາມສະດວກ; ການຮຽນຮູ້ແບບມີສ່ວນຮ່ວມ ແລະ ວິທີການສອນແບບສ້າງສັນ.

**5. ຂອບຫຼັກສູດການແຊກຊ້ອນສຶກສາພົນລະເມືອງໂລກ (GCED)**

- **ໂຄງສ້າງຫຼັກສູດ**

ຕາຕະລາງລຸ່ມນີ້ແມ່ນພາບລວມຂອງໂຄງສ້າງຫຼັກສູດທີ່ແຊກຊ້ອນເນື້ອໃນ ສພລ ຫຼື GCED ເຂົ້າໃນວິຊາສຶກສາພົນລະເມືອງຂອງຊັ້ນມັດທະຍົມສຶກສາຕອນຕົ້ນ.

**ໂຄງສ້າງຫຼັກສູດຊັ້ນມັດທະຍົມສຶກສາຕອນຕົ້ນ**

| ຫົວຂໍ້ ສພລ ທີ່ແຊກຊ້ອນໃນຫຼັກສູດ | ມ.1 | | | ມ.2 | | | ມ.3 | | | ມ.4 | | |
|---|---|---|---|---|---|---|---|---|---|---|---|---|
| | ບົດທີ | ບົດທີ່ແຊກຊ້ອນ | ຊົ່ວໂມງ | ບົດທີ | ບົດທີ່ແຊກຊ້ອນ | ຊົ່ວໂມງ | ບົດທີ | ບົດທີ່ແຊກຊ້ອນ | ຊົ່ວໂມງ | ບົດທີ | ບົດທີ່ແຊກຊ້ອນ | ຊົ່ວໂມງ |
| ຫົວຂໍ້ທີ 1 | | | | 17, 18 | 18 | 2 | 5 | 5 | 1 | 3, 14, 16 | 3 | 1 |
| ຫົວຂໍ້ທີ 2 | 8 | 8 | 2 | | | | 13, 14 | 13 | 2 | | | |
| ຫົວຂໍ້ທີ 3 | | | | | | | | | | 10, 11 | 11 | 1 |
| ຫົວຂໍ້ທີ 4 | 15 | 15 | 1 | 8, 7 | 8 | 1 | 6, 1, 9 | 6 | 1 | | | |
| ຫົວຂໍ້ທີ 5 | | | | 13 | 13 | 1 | 1, 18. | 1 | 1 | | | |

| | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|
| ຫົວຂໍ້ ທີ 6 | 7 | 7 | 1 | 5, 6, 9, 16 | 5 | 1 | 3, 8, 9 | 8 | 1 | 4, 5, 7, 12, 18 | 4 | 1 |
| ຫົວຂໍ້ ທີ 7 | | | | 7, 12, 14, 15 | 12 | 1 | 7, 17 | 7 | 1 | 9 | 9 | 1 |
| ຫົວຂໍ້ ທີ 8 | 1, 2, 3, 4, 5, 6, 7, 9, 11, 13, 16, 17. | 5 | 1 | 1, 2, 10, 11, 15 | 4 | 1 | 1, 2, 10, 11, 15, 16. | 15 | 1 | 2, 8, 13, 17. | | 1 |
| ຫົວຂໍ້ ທີ 9 | | | | | | | 11 | 11 | 1 | | | |

- **9 ຫົວຂໍ້ຂອງ ສພລ (GCED)**
  1. ລະບົບ ແລະ ໂຄງປະກອບໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ
  2. ບັນຫາທີ່ມີຜົນກະທົບຕໍ່ການພົວພັນ ແລະ ສາຍພົວພັນລະຫວ່າງຊຸມຊົນໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ
  3. ແນວຄິດພື້ນຖານ ແລະ ອິດທິພົນທາງອຳນາດ
  4. ລະດັບຄວາມແຕກຕ່າງດ້ານເອກະລັກ

5. ຄວາມແຕກຕ່າງ ແລະ ສາຍພົວພັນລະຫວ່າງຊຸມຊົນ

6. ຄວາມແຕກຕ່າງ ແລະ ການເຄົາລົບຄວາມຫຼາກຫຼາຍ

7. ການລົງມືປະຕິບັດທີ່ສາມາດດຳເນີນການດ້ວຍຕົນເອງ ແລະ ຮ່ວມກັນ

8. ພຶດຕິກຳທີ່ມີຄວາມຮັບຜິດຊອບຢ່າງມີຈະລິຍະທຳ

9. ການເຂົ້າມາມີສ່ວນຮ່ວມ ແລະ ການລົງມືປະຕິບັດ

**6. ຫຼັກການສອນ**

ເພື່ອໃຫ້ບັນລຸເປົ້າໝາຍຂອງການສຶກສາພົນລະເມືອງໂລກ ຈະຕ້ອງໃຊ້ວິທີການສອນແບບທັນປ່ຽນໄປຕາມການປ່ຽນແປງໃນແຕ່ລະໄລຍະ ແລະ ພັດທະນາຫຼັກສູດໃຫ້ສອດຄ່ອງກັບພາກພື້ນ ແລະ ສາກົນ. ໃນນີ້ ໄດ້ນຳສະເໜີຫຼັກການສອນການສຶກສາພົນລະເມືອງໂລກທີ່ສຳຄັນ 6 ຫຼັກການ ດັ່ງນີ້:

**ຫຼັກການສອນທີ 1: ການສົນທະນາ ແລະ ການມີສ່ວນຮ່ວມ**

ການຈັດຕັ້ງປະຕິບັດການສອນການສຶກສາພົນລະເມືອງໂລກໃຫ້ໄດ້ດີທີ່ສຸດແມ່ນຄວນຈັດຢູ່ພາຍໃຕ້ສະພາບແວດລ້ອມທີ່ເນັ້ນນັກຮຽນເປັນໃຈກາງ (Learner-centered) ຊຶ່ງນັກຮຽນ ແລະ ຄູສາມາດສົນທະນາບັນຫາ ແລະ ຮຽນຮູ້ສິ່ງຕ່າງໆຮ່ວມກັນ. ຄູຄວນມີສ່ວນຮ່ວມໃນການສົນທະນາກັບນັກຮຽນ ແລະ ຊຸກຍູ້ໃຫ້ພວກເຂົາມີສ່ວນຮ່ວມໃນການສົນທະນາຮ່ວມກັນ. ການສົນທະນາເປີດໂອກາດໃຫ້ນັກຮຽນໄດ້ແລກປ່ຽນຄວາມຄິດເຫັນຂອງຕົນ, ການຕັ້ງຄຳຖາມ, ການຮັບຟັງຄວາມຄິດເຫັນຂອງກັນ ແລະ ກັນ ທັງສະທ້ອນໃຫ້ເຫັນທັດສະນະໃໝ່ຫຼາຍອັນທີ່ພວກເຂົາໄດ້ຮຽນຮູ້. ໂດຍການຊຸກຍູ້ໃຫ້ນັກຮຽນມີສ່ວນຮ່ວມຢ່າງຫ້າວຫັນໃນຂະບວນການຮຽນຜ່ານການສົນທະນາກັບຄູ ແລະ ໝູ່ເພື່ອນ ສິ່ງເຫຼົ່ານີ້ຈະຊ່ວຍໃຫ້ພວກເຂົາເກີດການຮຽນຮູ້ໃນປະເດັນຕ່າງໆ ທີ່ພວກເຂົາກຳລັງຮຽນໃນຫ້ອງຮຽນໄດ້ຫຼາຍຂຶ້ນ.

**ຫຼັກການສອນທີ 2: ແບບເຊື່ອມໂຍງ ແລະ ແບບກ່ຽວຂ້ອງກັບຄວາມຮູ້ຫຼາຍສາຂາ**

ການສຶກສາພົນລະເມືອງໂລກຮຽກຮ້ອງໃຫ້ມີການຮຽນຮູ້ແບບເຊື່ອມໂຍງ ຫຼື ຮຽນຮູ້ບັນຫາຈາກຫຼາຍມຸມມອງທີ່ແຕກຕ່າງກັນ ໂດຍໃຊ້ວິທີການຮຽນຮູ້ທີ່ຫຼາກຫຼາຍ. ວິທີທີ່ດີສຳລັບການຮຽນຮູ້ແບບເຊື່ອມໂຍງຮອບດ້ານແມ່ນການມີສ່ວນຮ່ວມກັບຊຸມຊົນ, ການຮຽນຮູ້ທີ່ກ້າວຂ້າມຂໍ້ຈຳກັດສະເພາະໃນຫ້ອງຮຽນ ໂດຍການໃຫ້ນັກຮຽນມີການພົວພັນ ແລະ ສົນທະນາກັບຜູ້ທີ່ມີຄວາມຮູ້ທີ່ແຕກຕ່າງກັນໃນທ້ອງຖິ່ນຂອງຕົນ. ພວກເຂົາຈະໄດ້ຮັບການຊຸກຍູ້ໃຫ້ເກີດການຄົ້ນຫາ, ການສ້າງຄວາມເຂົ້າໃຈ ແລະ ການເຄົາລົບນັບຖືເຊິ່ງກັນ ແລະ ກັນ. ຄູເປັນ

ຜູ້ອຳນວຍຄວາມສະດວກ ໂດຍສາມາດສ້າງວິທີໃຫ້ນັກຮຽນເຂົ້າໃຈວ່າ ບັນຫາຕ່າງໆ ມີການເຊື່ອມໂຍງກ່ຽວຂ້ອງກັນແນວໃດ ເພື່ອເປີດກວ້າງທັດສະນະຂອງພວກເຂົາໄປສູ່ການສ້າງຄວາມເຂົ້າໃຈໂລກທີ່ຕົນອາໄສຢູ່.

**ຫຼັກການສອນທີ 3: ແບບວິທີທີ່ຫຼາກຫຼາຍ**

ຄູຄວນມີສ່ວນຮ່ວມກັບນັກຮຽນແບບເຊື່ອມໂຍງຮອບດ້ານ, ບໍ່ວ່າຈະເປັນທາງດ້ານຮ່າງກາຍ ແລະ ຈິດໃຈ. ດັ່ງນັ້ນ, ການໃຊ້ຍຸດທະສາດເຕັກນິກການຮຽນຮູ້ແບບຕ່າງໆທີ່ກ່ຽວຂ້ອງກັບປະສາດຮັບຮູ້ໃນເວລາສອນຈຶ່ງເປັນສິ່ງສຳຄັນ ເຊັ່ນ: ການເບິ່ງເຫັນ, ສຽງ, ກິ່ນ, ລົດຊາດ ແລະ ການສຳຜັດ. ຮູບແບບການຮຽນຮູ້ທີ່ສ້າງສັນເຫຼົ່ານີ້ ປະກອບດ້ວຍການໂຕ້ວາທີ, ການຈຳລອງເຫດການ, ສິລະປະກຳ, ການສະແດງບົດບາດສົມມຸດ ແລະ ການເລົ່າເລື່ອງດ້ວຍຮູບພາບ. ບັນດາເຕັກນິກເຫຼົ່ານີ້ຈະຊ່ວຍໃຫ້ນັກຮຽນເຂົ້າໃຈໃນສິ່ງທີ່ໄດ້ຮຽນຮູ້ ເພາະພວກເຂົາມີສ່ວນຮ່ວມໃນຫຼາຍລະດັບທັງດ້ານຄວາມຮູ້, ພຶດຕິກຳ, ອາລົມ-ສັງຄົມ.

**ຫຼັກການສອນທີ 4: ການສ້າງຄ່ານິຍົມ**

ຄູບໍ່ຄວນສຸມໃສ່ແຕ່ການສອນກ່ຽວກັບຄວາມເປັນຈິງ, ຄວາມຮູ້ ແລະ ໃຫ້ຂໍ້ມູນກັບນັກຮຽນເທົ່ານັ້ນ ແຕ່ຄວນຊ່ວຍໃຫ້ພວກເຂົາໄດ້ພັດທະນາຄ່ານິຍົມຕ່າງໆ ເຊັ່ນ: ການເຫັນອົກເຫັນໃຈກັນ, ຄວາມຍຸຕິທຳ, ຄວາມເມດຕາ, ການເຄົາລົບຜູ້ອື່ນ ແລະ ການບໍ່ໃຊ້ຄວາມຮຸນແຮງ. ໃນຖານະເປັນຜູ້ອຳນວຍຄວາມສະດວກ, ຄູສາມາດສອນນັກຮຽນກ່ຽວກັບວິທີການກວດສອບຄ່ານິຍົມ ແລະ ຫຼັກການຕ່າງໆ, ວິທີການປະເມີນຄວາມຄາດຫວັງ, ການປະຕິບັດ ແລະ ການກະທຳຂອງຕົນ, ວິທີການພັດທະນາຄ່ານິຍົມ ແລະ ນິດໄສທີ່ດີ. ນັກຮຽນສາມາດນຳໃຊ້ຄວາມຮູ້ທີ່ໄດ້ຮຽນໃນຫ້ອງຮຽນໄປໃຊ້ເພື່ອປະໂຫຍດຕໍ່ສ່ວນລວມໄດ້ ຖ້າຫາກພວກເຂົາມີຄ່ານິຍົມ, ທັດສະນະຄະຕິ ແລະ ແນວຄວາມຄິດທີ່ຖືກຕ້ອງຕາມທີ່ໄດ້ຮັບການສິ່ງເສີມຈາກການສຶກສາພົນລະເມືອງໂລກ.

**ຫຼັກການສອນທີ 5: ການສ້າງຄວາມເຂັ້ມແຂງທີ່ສຳຄັນ**

ນັກຮຽນບໍ່ຄວນຮັບຮູ້ແຕ່ສະເພາະສະພາບການຂອງໂລກເທົ່ານັ້ນ ແຕ່ຍັງຕ້ອງສາມາດຕອບສະໜອງໄດ້ຕໍ່ກັບສິ່ງທ້າທາຍໃນລະດັບທ້ອງຖິ່ນ ແລະ ລະດັບຊາດ ໂດຍການລົງມືປະຕິບັດຕົວຈິງ ເຊັ່ນ: ຖ້ານັກຮຽນມີສ່ວນຮ່ວມໃນການເຄື່ອນໄຫວ ແລະ ຄວາມພະຍາຍາມໃນການສະແຫວງຫາວິທີແກ້ໄຂບັນຫາຕ່າງໆ ກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ການຄ້າມະນຸດໄດ້ຫຼາຍເທົ່າໃດ ພວກເຂົາຍິ່ງຮັບຮູ້ເຖິງບັນດາສາເຫດທີ່ກໍ່ໃຫ້ເກີດຄວາມບໍ່ສະເໝີພາບ ແລະ ຄວາມບໍ່ຍຸຕິທຳໄດ້ຫຼາຍເທົ່ານັ້ນ. ຄວາມຮູ້ເພີ່ມເຕີມກ່ຽວກັບບັນຫາເຫຼົ່ານີ້

ຈະກະຕຸ້ນໃຫ້ນັກຮຽນກາຍເປັນຕົວແທນຂອງການປ່ຽນແປງໃນທາງບວກ, ໂດຍການນຳໃຊ້ຄວາມຮູ້, ທັກສະ ແລະ ຄ່ານິຍົມຂອງພວກເຂົາເຂົ້າມາມີບົດບາດຢ່າງຫ້າວຫັນໃນການປ່ຽນແປງຊຸມຊົນ, ທ້ອງຖິ່ນ, ຊາດ ແລະ ໂລກໃຫ້ດີຂຶ້ນ.

**ຫຼັກການສອນທີ 6: ສາມາດໃຊ້ປະໂຫຍດໄດ້ ແລະ ມີຄວາມກ່ຽວຂ້ອງ (ຢູ່ໃນທ້ອງຖິ່ນ ແລະ ທົ່ວໂລກ)**

ເພື່ອໃຫ້ນັກຮຽນກາຍເປັນຕົວແທນແຫ່ງການປ່ຽນແປງໃນອະນາຄົດທີ່ມີປະສິດທິພາບ ເນື້ອໃນການຮຽນຮູ້ຄວນອີງໃສ່ບັນຫາໃນຊີວິດຈິງ ແລະ ປະສົບການໂດຍກົງທີ່ຜ່ານການລົງມືປະຕິບັດ. ຄວາມຮູ້ ແລະ ທັກສະ ການປະຕິບັດທີ່ກ່ຽວຂ້ອງຈະຊ່ວຍໃຫ້ນັກຮຽນສາມາດນຳສິ່ງທີ່ພວກເຂົາໄດ້ຮຽນຮູ້ມາໝູນໃຊ້ເຂົ້າໃນຊີວິດປະຈຳວັນຂອງຕົນໄດ້.

**7. ການຈັດການຮຽນການສອນ**

ວິທີຈັດຕັ້ງການຮຽນການສອນກ່ຽວກັບການສຶກສາພົນລະເມືອງໂລກຈະໃຊ້ວິທີບູລະນະການໃນວິຊາສຶກສາພົນລະເມືອງຂອງຊັ້ນມັດທະຍົມສຶກສາ ໂດຍເລີ່ມຈາກຊັ້ນ ມ.1-ມ.7 ຊຶ່ງພິຈາລະນາຈາກຜົນການວິເຄາະເນື້ອໃນຫຼັກສູດໂດຍສົມທຽບໃສ່ກັບ 9 ຫົວຂໍ້ຂອງການສຶກສາພົນລະເມືອງໂລກທີ່ສາມາດແຊກຊ້ອນຄວາມຮູ້ໃນແຕ່ລະຂັ້ນຕາມຄວາມເໝາະສົມ ໂດຍບໍ່ໄດ້ແຕະຕ້ອງເວລາທີ່ກຳນົດໄວ້ໃນຫຼັກສູດແຫ່ງຊາດ ພຽງແຕ່ຈັດບຸລິມະສິດຫົວຂໍ້ທີ່ຈະແຊກຊ້ອນ ຫຼື ຮູບແບບກິດຈະກຳການສອນຄວາມຮູ້ໃນເລື່ອງນີ້ ເພື່ອໃຫ້ນັກຮຽນໄດ້ມີຄວາມຮູ້, ທັກສະ ແລະ ປັບປ່ຽນພຶດຕິກຳໄປໃນທາງບວກໂດຍເນັ້ນການຢູ່ຮ່ວມກັນໂດຍສັນຕິ, ການບໍ່ຈຳແນກຄວາມແຕກຕ່າງ, ການເຫັນຄຸນຄ່າ ແລະ ການເຄົາລົບນັບຖືວັດທະນະທຳເຊິ່ງກັນ ແລະ ກັນ ຢູ່ໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ.

ການສອນຄວາມຮູ້ກ່ຽວກັບສຶກສາພົນລະເມືອງຊັ້ນມັດທະຍົມສຶກສາຕອນຕົ້ນ ກຳນົດສອນ 1 ຊົ່ວໂມງຕໍ່ອາທິດ, 1 ສົກຮຽນມີ 33 ອາທິດ ລວມທັງໝົດ ເປັນ 33 ຊົ່ວໂມງ.

**8. ສື່ການຮຽນການສອນ**

ການນຳໃຊ້ສື່ການຮຽນການສອນແມ່ນສິ່ງທີ່ຈຳເປັນສຳລັບການນຳໃຊ້ຫຼັກສູດ ເພື່ອສົ່ງເສີມຄວາມຮູ້ ແລະ ທັກສະຕ່າງໆຂອງນັກຮຽນໃຫ້ເປັນໄປຕາມຈຸດປະສົງທີ່ໄດ້ກຳນົດໄວ້ໃນຫຼັກສູດ. ສື່ການຮຽນການສອນປະກອບດ້ວຍປຶ້ມແບບຮຽນ, ຄູ່ມືຄູ, ປຶ້ມອ່ານເສີມ, ອຸປະກອນປະຈັກຕາ ແລະ ອື່ນໆ.

ນອກຈາກນີ້, ຄູມີຄວາມຈຳເປັນຕ້ອງໄດ້ຜະລິດສື່ການຮຽນການສອນເພີ່ມຕື່ມຕາມເນື້ອໃນຂອງແຕ່ລະບົດຮຽນໂດຍນຳໃຊ້ວັດສະດຸທີ່ຫາໄດ້ໃນທ້ອງຖິ່ນ. ຄູ ແລະ ຜູ້ອຳນວຍການໂຮງຮຽນໃນທົ່ວປະເທດມີໜ້າທີ່ຮັບຜິດຊອບໃນການຮັບປະກັນໃຫ້ໂຮງຮຽນຂອງ

ຕົນມີອຸປະກອນ ຫຼື ແຫຼ່ງການຮຽນທີ່ພຽງພໍ ແລະ ຫຼາກຫຼາຍ ເພື່ອທີ່ຈະສາມາດປັບລຸຕາມຈຸດປະສົງ, ເນື້ອໃນຫຼັກສູດ ແລະ ຄວາມຕ້ອງການຂອງນັກຮຽນໃນທ້ອງຖິ່ນຂອງຕົນ. ຄູຄວນຄຳນຶງເຖິງການຜະລິດສື່ການຮຽນການສອນທີ່ມີຄວາມຍືນຍົງໂດຍອີງໃສ່ຄວາມຕ້ອງການຂອງນັກຮຽນ ແລະ ສາມາດດັດປັບອຸປະກອນເຫຼົ່ານັ້ນໄດ້ຕາມຄວາມເໝາະສົມ.

**9. ການວັດ ແລະ ປະເມີນຜົນ**

ການວັດຜົນ ໝາຍເຖິງການເກັບກຳຂໍ້ມູນຕ່າງໆ ຂອງນັກຮຽນຢູ່ໃນຂະບວນການຮຽນການສອນໂດຍໃຊ້ເຄື່ອງມືຢ່າງໃດຢ່າງໜຶ່ງມາປະຕິບັດ.

ການປະເມີນຜົນ ໝາຍເຖິງການນຳເອົາຜົນຂອງການວັດຜົນການຮຽນມາຕີລາຄາ ແລະ ວິນິດໄສ ແລ້ວຕັດສິນໃຈໂດຍອາໄສຫຼັກການຢ່າງໃດຢ່າງໜຶ່ງ.

ການວັດ ແລະ ການປະເມີນຜົນ ແມ່ນເປັນສ່ວນໜຶ່ງຂອງຂະບວນການຮຽນການສອນ ແລະ ເປັນຂໍ້ມູນທີ່ສຳຄັນໃນການປະເມີນຄວາມຄືບໜ້າທາງດ້ານການຮຽນຂອງນັກຮຽນຕາມມາດຕະຖານຜົນສຳເລັດທີ່ກຳນົດໄວ້.

**ວິທີການວັດຜົນ**:

- ການສັງເກດ ເຊັ່ນ: ແບບກວດສອບລາຍການ, ປະເມີນຕາມລະດັບ, ການປະເມີນແບບບັນທຶກ.
- ການສຳພາດ ເຊັ່ນ: ແບບສຳພາດຕາມຄຳຖາມ, ຄຳຖາມເຈາະຈີ້ມ.
- ການທົດສອບພາກປະຕິບັດ: ແບບທົດສອບພາກປະຕິບັດ.
- ການໃຊ້ແຟ້ມສະສົມຜົນງານ: ແບບປະເມີນຊຶ່ງມີເກນການໃຫ້ຄະແນນແບບຮູບຣິກ (Rubric).

**ວິທີການປະເມີນຜົນ**:

ການປະເມີນຜົນການຮຽນ ມີສອງຮູບແບບ ຄື: ການປະເມີນເພື່ອປັບປຸງການຮຽນ ແລະ ການປະເມີນເພື່ອສະຫຼຸບຜົນການຮຽນ.

1) ການປະເມີນເພື່ອປັບປຸງການຮຽນ (Formative Assessment)

ການປະເມີນເພື່ອປັບປຸງການຮຽນແມ່ນການປະເມີນລະຫວ່າງການຮຽນທີ່ມີການດຳເນີນການຢ່າງຕໍ່ເນື່ອງຕະຫຼອດການຮຽນການສອນ ແລະ ເປັນການເກັບກຳຂໍ້ມູນການຮຽນຂອງນັກຮຽນດ້ວຍ. ໃນຂະນະທີ່ໃຫ້ນັກຮຽນປະຕິບັດກິດຈະກຳ, ຄູກໍສັງເກດ, ສອບຖາມ, ຈົດບັນທຶກແລ້ວວິເຄາະຂໍ້ມູນວ່ານັກຮຽນຮູ້, ເຂົ້າໃຈ ຫຼື ບໍ່ ຈະຕ້ອງໃຫ້ນັກຮຽນປັບປຸງຈຸດໃດ ຫຼື ຜູ້ສອນຈະຕ້ອງປັບປຸງຈຸດໃດ ເພື່ອໃຫ້ເກີດຄວາມກ້າວໜ້າໃນການຮຽນຕາມມາດຕະຖານ

ຜົນສຳເລັດ. ການປະເມີນລະຫວ່າງການຮຽນດຳເນີນການໄດ້ຫຼາຍຮູບແບບ ເຊັ່ນ: ການໃຫ້ຂໍ້ແນະນຳ, ຂໍ້ສັງເກດໃນການນຳສະເໜີຜົນງານ, ການສົນທະນາລະຫວ່າງຜູ້ສອນກັບນັກຮຽນທັງແບບກຸ່ມ ແລະ ແບບລາຍບຸກຄົນ, ການສຳພາດ ເປັນຕົ້ນ.

ຜົນທີ່ໄດ້ຈາກການປະເມີນໃນຂະນະທີ່ຮຽນນີ້ ສາມາດຊ່ວຍໃຫ້ຄູຮູ້ວ່າ ຕົນເອງຄວນປັບປຸງວິທີການສອນຂອງຕົນແນວໃດ ເພື່ອໃຫ້ນັກຮຽນທຸກຄົນບັນລຸຕາມຈຸດປະສົງການຮຽນໃຫ້ຫຼາຍທີ່ສຸດ.

2) ການປະເມີນເພື່ອສະຫຼຸບຜົນການຮຽນ (Summative Assessment)

ການປະເມີນເພື່ອສະຫຼຸບຜົນການຮຽນ ເປັນການປະເມີນທີ່ດຳເນີນການເມື່ອສິ້ນສຸດບົດຮຽນ ເພື່ອກວດສອບຜົນການຮຽນຂອງນັກຮຽນຕາມຕົວຊີ້ວັດ ແລະ ຍັງໃຊ້ເພື່ອເປັນຂໍ້ມູນໃນການປຽບທຽບກັບການປະເມີນກ່ອນຮຽນ, ການປະເມີນເພື່ອສະຫຼຸບຜົນການຮຽນຍັງໃຊ້ເພື່ອກວດສອບຜົນສຳເລັດຂອງນັກຮຽນຕອນທ້າຍພາກຮຽນ ຫຼື ທ້າຍປີຮຽນອີກດ້ວຍ. ການປະເມີນເພື່ອສະຫຼຸບຜົນການຮຽນສາມາດນຳໃຊ້ວິທີການ ແລະ ເຄື່ອງມືປະເມີນໄດ້ຢ່າງຫຼາກຫຼາຍ ແລະ ມັກດຳເນີນການຢ່າງເປັນທາງການຫຼາຍກວ່າການປະເມີນລະຫວ່າງການ

ຮຽນ.

## ພາກທີ II ແນະນຳການສອນແຕ່ລະບົດ

## 1. ຊັ້ນມັດທະຍົມສຶກສາ ປີທີ 1

ການແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງ ຊັ້ນມັດທະຍົມສຶກສາ ປີທີ 1 ສາມາດແຊກຊ້ອນໄດ້ 4 ບົດ ຄື: ບົດທີ 5, 7, 8 ແລະ 15.

- ບົດທີ 5 ຊົ່ວໂມງທີ 1 ຫົວຂໍ້ທີ 2. ການນັບຖືລະບຽບວິໄນ ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 2 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.
- ບົດທີ 7 ຊົ່ວໂມງທີ 1 ຫົວຂໍ້ທີ 3. ການສ້າງມະນຸດສຳພັນທີ່ດີ ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 2 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.
- ບົດທີ 8 ຊົ່ວໂມງທີ 2 ຫົວຂໍ້ທີ 4. ການປົກປັກຮັກສາທຳມະຊາດ ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 1 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.
- ບົດທີ 15 ຊົ່ວໂມງທີ 1 ບົດເລື່ອງ “ແມ່ນ້ຳ ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 2 ໃຫ້ຄູນຳໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.

# ບົດທີ 5 ການມີລະບຽບວິໄນ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 2 ການນັບຖືລະບຽບວິໄນ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍຄວາມໝາຍສຳຄັນຂອງການນັບຖືລະບຽບວິໄນ ແລະ ການປະພຶດທີ່ມີຄວາມຮັບຜິດຊອບໃນຊີວິດສ່ວນຕົວ, ໂຮງຮຽນ ແລະ ຊຸມຊົນ.
- ເຫັນຄຸນຄ່າຂອງການປະພຶດທີ່ມີຄວາມຮັບຜິດຊອບໃນຊີວິດສ່ວນຕົວ, ໃນໂຮງຮຽນ ແລະ ໃນຊຸມຊົນ.
- ຈຳແນກຜົນດີຂອງການມີລະບຽບວິໄນ ແລະ ຜົນເສຍຂອງການບໍ່ມີລະບຽບວິໄນ.

## II. ເນື້ອໃນ

### ລະບຽບວິໄນ

ລະບຽບແມ່ນຫຼັກການທີ່ວາງໄວ້, ແມ່ນຂໍ້ກຳນົດ ຫຼື ຂໍ້ບັງຄັບລວມຂອງຊຸມຊົນ, ສັງຄົມ, ອົງການຈັດຕັ້ງ, ໂຮງຮຽນ ຫຼື ໜ່ວຍງານໃດໜຶ່ງພ້ອມກັນວາງອອກ ແລະ ປະຕິບັດດ້ວຍຄວາມຕື່ນຕົວ, ຄວາມສະໝັກໃຈ ເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍໃນທົ່ວສັງຄົມ ຫຼື ໜ່ວຍງານ. ຖ້າໃຜຝ່າຝືນບໍ່ປະຕິບັດຕາມຕ້ອງໄດ້ຕັກເຕືອນ, ປັບໃໝ ຫຼື ລົງໂທດຕາມຄວາມເໝາະສົມ, ຕາມລະບຽບ ຫຼື ຂໍ້ກຳນົດທີ່ວາງອອກ.

### ການນັບຖືລະບຽບວິໄນ

ແມ່ນການປະຕິບັດຂໍ້ກຳນົດ, ຂໍ້ບັງຄັບຂອງລວມໝູ່, ການຈັດຕັ້ງຕ່າງໆ ໃນສັງຄົມຢ່າງເຄັ່ງຄັດ, ການນັບຖືລະບຽບວິໄນສະແດງອອກໃນການປະຕິບັດຕົວ, ຊຶ່ງເປັນປັດໄຈສຳຄັນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຕົນເອງ, ຄອບຄົວ, ຊຸມຊົນ-ສັງຄົມ ແລະ ອົງການຈັດຕັ້ງຕ່າງໆ. ການນັບຖືລະບຽບວິໄນບໍ່ພຽງແຕ່ປົກປ້ອງຜົນປະໂຫຍດລວມຂອງສັງຄົມເທົ່ານັ້ນ ແຕ່ຍັງປົກປ້ອງ ແລະ ຮັບປະກັນຜົນປະໂຫຍດຂອງຕົນເອງອີກດ້ວຍ.

ນັກຮຽນຕ້ອງປະຕິບັດລະບຽບວິໄນຂອງໂຮງຮຽນໃຫ້ຖືກຕ້ອງ, ນຸ່ງເຄື່ອງແບບນັກຮຽນເປັນລະບຽບຮຽບຮ້ອຍດີ, ກ່ອນຈະເຂົ້າຫ້ອງຮຽນຕ້ອງຈັດແຖວ, ວັນຈັນຕ້ອງຈັດແຖວເຄົາລົບທຸງຊາດ, ເວລານັ່ງໃນຫ້ອງບໍ່ຄວນຍອກກັນ ແລະ ຕັ້ງໃຈຟັງຄູອະທິບາຍບົດຮຽນ.

ການປະພຶດທີ່ມີຄວາມຮັບຜິດຊອບ ໝາຍເຖິງການເຄົາລົບ ແລະ ປະຕິບັດວິໄນຮ່ວມກັນໃນຄອບຄົວ, ໂຮງຮຽນ, ຊຸມຊົນ, ສັງຄົມ, ພາກພື້ນ ແລະ ສາກົນ. ໂດຍປະຕິບັດຕາມຂໍ້ກຳນົດກົດລະບຽບ (ກົດບັດອາຊຽນ) ແລະ ກົດໝາຍ (ກົດໝາຍສາກົນ).

## III. ສື່ການຮຽນການສອນ

- ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຂັ້ນ ມ.1
- ຮູບພາບ ຫຼື ບົດເລື່ອງສັ້ນຂອງຜູ້ເປັນແບບຢ່າງໃນການເຄົາລົບນັບຖືລະບຽບວິໄນດີຢູ່ໃນຄອບຄົວ, ໂຮງຮຽນ, ຊຸມຊົນ ແລະ ສັງຄົມ.

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທົບທວນບົດທີ່ຮຽນຜ່ານມາ**

**ກ. ສົນທະນາຖາມ-ຕອບ (5 ນາທີ)**

**ຄຳຖາມ**

1) ຄວາມສຸພາບຮຽບຮ້ອຍແມ່ນຫຍັງ?

2) ຫາກບໍ່ມີຄວາມສຸພາບຮຽບຮ້ອຍຈະເປັນແນວໃດ?

- ຄູສະຫຼຸບຄຳຕອບຂອງນັກຮຽນຕາມເນື້ອໃນທີ່ມີໃນປຶ້ມແບບຮຽນ
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບກ່ຽວກັບສິ່ງທີ່ໄດ້ຮຽນໃນຊົ່ວໂມງກ່ອນ.
- ຄູອະທິບາຍຕື່ມວ່າ:  ຄວາມສຸພາບຮຽບຮ້ອຍແມ່ນການປະພຶດຂອງແຕ່ລະຄົນໃນເວລາພົບປະ, ພົວພັນກັບຄົນອື່ນ ຊຶ່ງສະແດງອອກໃນການເຄົາລົບນັບຖື, ຄວາມຮັກແພງກັບຄົນອ້ອມຂ້າງ.

**2. ສະເໜີບົດຮຽນໃໝ່**

**ກ. ສົນທະນາຖາມ-ຕອບ (10 ນາທີ)**

- ຄູອະທິບາຍຄວາມໝາຍຂອງຄຳວ່າ: "ລະບຽບ ແລະ ລະບຽບວິໄນ"

**ລະບຽບ** ແມ່ນຖືກລຳດັບ, ມີຄວາມຮຽບຮ້ອຍ, ເປັນແຖວດີ

**ລະບຽບວິໄນ**: ຂໍ້ກຳນົດ, ຂໍ້ບັງຄັບເປັນຫຼັກການ ຫຼື ແນວທາງປະຕິບັດ ເປັນຂໍ້ກຳນົດກົດເກນຢ່າງຖືກຕ້ອງ ເພື່ອໃຫ້ທຸກຄົນປະຕິບັດຕາມ.

- ຈາກນັ້ນ ຄູໃຫ້ນັກຮຽນອ່ານເນື້ອໃນບົດຮຽນໃນປຶ້ມແບບຮຽນ.

**ຂ. ສັງເກດຮູບພາບ (10 ນາທີ)**

- ຄູໃຫ້ນັກຮຽນສັງເກດຮູບພາບທີ 1, 2, 3 ແລະ 4 ໃນປຶ້ມແບບຮຽນ

- ຄູຕັ້ງຄຳຖາມເຈາະຈີ້ມ ແລ້ວຖາມວ່າ:

**ຄຳຖາມ**

1) ນັກຮຽນເຫັນຫຍັງແດ່ໃນຮູບພາບ?

- ຄູໃຫ້ນັກຮຽນ 1-2 ຄົນປະກອບຄຳເຫັນ.
- ຄູໃຫ້ນັກຮຽນຈຳນວນໜຶ່ງປະກອບຄວາມເຫັນເພີ່ມເຕີມຖ້າຂໍ້ໃດຍັງບໍ່ຄົບຖ້ວນ.
- ຄູສະຫຼຸບເພີ່ມເຕີມໂດຍຫຍໍ້.

**ຄຳຕອບ**

1) ຮູບພາບທີ 1 ສະແດງໃຫ້ເຫັນເຖິງການປະຕິບັດຖືກຕ້ອງຕາມລະບຽບການສັນຈອນ, ຮູບພາບທີ 2 ສະແດງໃຫ້ເຫັນການນຸ່ງຖືຖືກລະບຽບ, ຮູບພາບທີ 3 ສະແດງໃຫ້ເຫັນເຖິງການນຸ່ງຖື ແລະ ການຈັດແຖວເປັນລະບຽບຮຽບຮ້ອຍໃນເວລາເຄົາລົບທຸງ, ຮູບພາບທີ 4 ສະແດງໃຫ້ເຫັນເຖິງນັກຮຽນກຳລັງອະນາໄມຫ້ອງຮຽນ.

3. **ສົນທະນາເລື່ອງ: "ຟ້າລົມຝົນຕົກ" ໃນປຶ້ມແບບຮຽນ (20 ນາທີ)**

- ຄູໃຫ້ນັກຮຽນທຸກຄົນອ່ານເລື່ອງ "ຟ້າລົມຝົນຕົກ" ໃນປຶ້ມແບບຮຽນ ແລ້ວຕອບຄຳຖາມລຸ່ມນີ້:

**ຄຳຖາມ**

1) ໃນເລື່ອງນີ້ມີເນື້ອໃນທີ່ເວົ້າເຖິງທ້າວສົມພອນ ແລະ ນາງສີວອນ ນັບຖືລະບຽບວິໄນຢູ່ບ່ອນໃດ?
2) ພວກນ້ອງໄດ້ຮຽນຮູ້ຫຍັງແດ່ຈາກເລື່ອງນີ້?

- ຄູໃຫ້ນັກຮຽນຄົ້ນຄວ້າຄຳຖາມ
- ຄູໃຫ້ນັກຮຽນຈຳນວນໜຶ່ງປະກອບຄວາມຄິດເຫັນເພີ່ມເຕີມຖ້າຂໍ້ໃດຍັງບໍ່ຄົບຖ້ວນ.
- ຄູສະຫຼຸບຄືນ

**ຄຳຕອບ**

1) ໃນເລື່ອງນີ້ມີເນື້ອໃນທີ່ເວົ້າເຖິງທ້າວສົມພອນ ແລະ ນາງສີວອນ ນັບຖືລະບຽບວິໄນຢູ່ບ່ອນວ່າ:
   - ໄປໂຮງຮຽນແຕ່ເຊົ້າ.
   - ກວາດເດີ່ນໂຮງຮຽນ, ຫ້ອງຮຽນໃຫ້ສະອາດ.
   - ເຊັດໂຕະ-ຕັ່ງ, ມ້ຽນຮູບຜູ້ນຳ, ຄຳຂວັນ ແລະ ຮູບແຕ້ມໄວ້ບ່ອນເກົ່າ.

- ເຂົ້າຫ້ອງຮຽນທັນເວລາທຸກຄັ້ງ.
- ນັ່ງໃນຫ້ອງເປັນລະບຽບ ແລະ ຕັ້ງໃຈຟັງຄູອະທິບາຍບົດຮຽນ.

2) ພວກນ້ອງໄດ້ຮຽນຮູ້ການເອົາແບບຢ່າງຂອງທ້າວສົມພອນ ແລະ ນາງສີວອນ.

**4. ສະຫຼຸບ (5 ນາທີ)**

ຄູສະຫຼຸບເນື້ອໃນບົດຮຽນກ່ຽວກັບ: ລະບຽບວິໄນ, ການນັບຖືລະບຽບວິໄນ ແລະ ການປະພຶດທີ່ມີຄວາມຮັບຜິດຊອບ ໂດຍສັງລວມຫຍໍ້ຈາກເນື້ອໃນ ຂໍ້ II ແລະ ໃຫ້ນັກຮຽນບັນທຶກ.

ຄູເນັ້ນຕື່ມ: ທຸກຄົນຕ້ອງນັບຖື ແລະ ປະຕິບັດຕາມລະບຽບວິໄນຂອງແຕ່ລະຂັ້ນວາງອອກ ຈຶ່ງຈະເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

ລະບຽບວິໄນເຖິງວ່າບໍ່ແມ່ນກົດໝາຍ ແຕ່ກໍແມ່ນຂໍ້ກຳນົດໃນສັງຄົມ ເພື່ອໃຫ້ຄົນປະພຶດຕົນເປັນຄົນດີ, ເຄົາລົບນັບຖື ແລະ ປະຕິບັດໃຫ້ຖືກຕ້ອງ.

**ວຽກບ້ານ**:

- ຄູແນະນຳໃຫ້ນັກຮຽນເຮັດບົດຝຶກຫັດຂໍ້ 1, 2, 3 ໃນປຶ້ມແບບຮຽນ ໜ້າທີ 20.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນຈາກ:

- ການຕອບຄຳຖາມປະລະໄນລຸ່ມນີ້:
- ໃຫ້ນັກຮຽນໝາຍ ✓ ໃສ່ຕໍ່ໜ້າຄຳຕອບທີ່ເຫັນວ່າຖືກຕ້ອງ

1. ຂໍ້ໃດແມ່ນການປະຕິບັດທີ່ນັບຖືລະບຽບວິໄນ?

    ກ. ຂີ່ລົດຮຽງກັນ 3 ຄົນ

    ✓ ຂ. ຂີ່ລົດໃຫ້ເປັນແຖວ

    ຄ. ຂີ່ລົດລ່ວງໄຟແດງ

    ງ. ເຕະບານຢູ່ກາງຖະໜົນ

2. ຂໍ້ໃດລຸ່ມນີ້ນັກຮຽນຄິດວ່າແມ່ນຄວາມໝາຍຂອງລະບຽບວິໄນ?

    ກ. ກົດໝາຍ

    ✓ ຂ. ຂໍ້ກຳນົດ

    ຄ. ຄວາມສາມັກຄີ

    ງ. ການປະພຶດ

3. ການປະພຶດທີ່ມີຄວາມຮັບຜິດຊອບສະແດງອອກແນວໃດ?

ກ. ເອື່ອຍອີງໝູ່ໃນເວລາສອບເສັງ

ຂ. ບໍ່ເຮັດວຽກຕາມການມອບໝາຍ

ຄ. ບໍ່ປະຕິບັດເວລາໃນການເຂົ້າຮຽນ

✓ ງ. ເຄົາລົບ ແລະ ປະຕິບັດວິໄນຮ່ວມກັນ

# ບົດທີ 7 ການມີມະນຸດສຳພັນ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 3 ການສ້າງມະນຸດສຳພັນທີ່ດີ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍສຳຄັນຂອງການມີມະນຸດສຳພັນ, ການພົວພັນກັບຄົນອື່ນໃນຊຸມຊົນ ແລະ ໃນໂລກ.
- ເຫັນຄຸນຄ່າຂອງການມີມະນຸດສຳພັນ ແລະ ພົວພັນກັບຜູ້ອື່ນໃນຊຸມຊົນ ແລະ ໃນໂລກ.
- ຍົກຕົວຢ່າງການສ້າງສາຍພົວພັນທີ່ດີກັບບຸກຄົນ ແລະ ກຸ່ມຄົນທີ່ແຕກຕ່າງກັນ.

## II. ເນື້ອໃນ

ການມີມະນຸດສຳພັນໝາຍເຖິງຄວາມສາມາດທີ່ບຸກຄົນຖ່າຍທອດຄວາມຮູ້ສຶກ ຫຼື ຄວາມຄິດໄປຍັງຄົນອື່ນ ໂດຍໃຊ້ສິລະປະອັນນຸ້ມນວນໃນການເຂົ້າໄປຫາບຸກຄົນ ຫຼື ກຸ່ມຄົນ.

ການມີມະນຸດສຳພັນແມ່ນມີຄວາມສຳຄັນຢ່າງຍິ່ງ ເນື່ອງຈາກວ່າ ການສ້າງຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ເປັນສິ່ງທີ່ຈຳເປັນຂອງມວນມະນຸດທົ່ວໂລກ. ໃຜໆກໍຕ້ອງການຄວາມພໍໃຈ, ຄວາມຮັກແພງ, ຄວາມສະໜິດສະໜົມ ແລະ ຢູ່ຮ່ວມກັນໂດຍສັນຕິ.

ການສ້າງມະນຸດສຳພັນທີ່ດີຕ້ອງມີຄວາມຊື່ສັດບໍລິສຸດ, ເຄົາລົບນັບຖື, ຮັກແພງ, ມີນ້ຳໃຈເອື້ອເຟື້ອເພື່ອແຜ່, ບໍ່ເຫັນແກ່ຕົນເອງ ຟັງຄວາມຄິດເຫັນຂອງຄົນອື່ນ, ສະໜັບສະໜູນ ແລະ ຮ່ວມມືດ້ວຍຄວາມບໍລິສຸດໃຈໃຫ້ໂອກາດຕໍ່ກັນ, ມີຄວາມຄິດສ້າງສັນ, ມີຄວາມສາມັກຄີບໍ່ສ້າງຄວາມເດືອດຮ້ອນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ. ຫຼີກເວັ້ນຄວາມບໍ່ເຂົ້າໃຈກັນ, ຄຽດແຄ້ນ, ເວົ້າສິ່ງບໍ່ດີໃຫ້ກັນ, ສ້າງສາຍສຳພັນອັນດີກັບທຸກຫ້ອງ, ທຸກໂຮງຮຽນ ແລະ ຊຸມຊົນທີ່ຕົນເອງອາໄສຢູ່.

ນອກຈາກນີ້ ຍັງຕ້ອງໄດ້ສ້າງສາຍພົວພັນທີ່ດີກັບບັນດາປະເທດໃນພາກພື້ນ ແລະ ໃນໂລກ ຊຶ່ງມີຄວາມສຳຄັນຢ່າງຍິ່ງເຮົາຄວນສ້າງຄວາມສາມັກຄີ, ຮັກແພງ, ເຄົາລົບນັບຖືຄວາມແຕກຕ່າງທາງດ້ານພາສາ, ວັດທະນະທຳ ແລະ ແນວຄວາມຄິດທີ່ຫຼາກຫຼາຍ ເພື່ອການຢູ່ຮ່ວມກັນຢ່າງສັນຕິ ແລະ ມີຄວາມຍືນຍົງ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຊັ້ນ ມ.1.
2. ປຶ້ມຄູ່ມືການແຊກຊ້ອນການສຶກສາພົນລະເມືອງໂລກ.
3. ຮູບພາບປະກອບການສອນໃນທ້າຍບົດຮຽນ.
4. ຮູບພາບການພົວພັນກັບກຸ່ມຄົນທີ່ມີຄວາມແຕກຕ່າງຫຼາກຫຼາຍ.

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ຄູຕັ້ງຄຳຖາມ**

1) ຄວາມຮູ້ບຸນຄຸນໝາຍຄວາມວ່າແນວໃດ?
2) ຄວາມຮູ້ບຸນຄຸນຕໍ່ພໍ່ແມ່, ຜູ້ອາວຸໂສ ແລະ ຜູ້ທີ່ມີຜົນງານຕໍ່ປະເທດຊາດໄດ້ສະແດງອອກຄືແນວໃດ?

- ຄູສະຫຼຸບຄືນກ່ຽວກັບຄວາມຮູ້ບຸນຄຸນ ແລະ ການສະແດງອອກໃນບົດຮຽນຜ່ານມາ.

**2. ສະເໜີບົດຮຽນໃໝ່**

**ກ. ສັງເກດຮູບພາບ (5 ນາທີ)**

- ຄູໃຫ້ນັກຮຽນສັງເກດຮູບພາບລຸ່ມນີ້.



ການພົວພັນກັບກຸ່ມຄົນທີ່ຫຼາກຫຼາຍ

- ນັກຮຽນສັງເກດຮູບພາບພ້ອມທັງສົນທະນາກັນເພື່ອແລກປ່ຽນກ່ຽວກັບສິ່ງທີ່ພົບເຫັນໃນຮູບພາບ.

- ຄູສົນທະນາກັບນັກຮຽນ ແລ້ວຕອບຄຳຖາມດັ່ງນີ້:

**ຄຳຖາມ**

1) ນັກຮຽນຄິດວ່າຮູບພາບນີ້ສະແດງເຖິງຫຍັງ?
2) ການຢູ່ຮ່ວມກັນ ແລະ ມີມະນຸດສຳພັນທີ່ດີຕໍ່ກັນມີຜົນດີແນວໃດ?
3) ນັກຮຽນຈະມີມະນຸດສຳພັນ ແລະ ສ້າງສາຍພົວພັນທີ່ດີກັບຄົນອື່ນໃນຊຸມຊົນ ແລະ ໃນໂລກຄືແນວໃດ?

- ນັກຮຽນອາສາສະໝັກຕອບ 1-2 ຄົນ.
- ຄູສະຫຼຸບຄືນກ່ຽວກັບການຕອບຄຳຖາມ ເພື່ອໃຫ້ນັກຮຽນເຂົ້າໃຈຢ່າງເລິກເຊິ່ງ.

**ຄຳຕອບ**

1) ຮູບພາບສະແດງເຖິງການພົວພັນກັບກຸ່ມຄົນທີ່ຫຼາກຫຼາຍໃນສັງຄົມ, ເມື່ອມີການພົວພັນກັບຄົນອື່ນເຮົາຕ້ອງໄດ້ສ້າງມະນຸດສຳພັນທີ່ດີກັບທຸກຄົນ, ເຄົາລົບຄວາມແຕກ ຕ່າງທີ່ຫຼາກຫຼາຍ ໂດຍບໍ່ຈຳແນກ ເຊື້ອຊາດ, ຜິວພັນ, ພາສາ, ເພດ, ອາຍຸ, ວັດທະນະທຳ...
2) ການຢູ່ຮ່ວມກັນ ແລະ ການມີມະນຸດສຳພັນທີ່ດີຕໍ່ກັນ ຈະເຮັດໃຫ້ມີຄວາມຮັກແພງ, ຊ່ວຍເຫຼືອ ແລະ ພ້ອມກັນປະກອບສ່ວນເຂົ້າໃນການພັດທະນາສັງຄົມ ແລະ ປະເທດຊາດໃຫ້ຈະເລີນກ້າວໜ້າ.
3) ນັກຮຽນຈະມີມະນຸດສຳພັນ ແລະ ສ້າງສາຍພົວພັນທີ່ດີກັບຄົນອື່ນໃນຊຸມຊົນ ແລະ ໃນໂລກຄື: ມີຄວາມສາມັກຄີ, ຮັກແພງ, ຊ່ວຍເຫຼືອກັນ ແລະ ກັນ, ເຄົາລົບນັບຖືຄວາມແຕກຕ່າງທີ່ຫຼາກຫຼາຍທາງດ້ານພາສາ, ວັດທະນະທຳ ແລະ ຄວາມຄິດ.

**ຂ. ສຶກສາເນື້ອໃນບົດຮຽນ (20 ນາທີ)**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ. ຈາກນັ້ນ, ໃຫ້ຄົ້ນຄວ້າເນື້ອໃນບົດຮຽນ ແລ້ວຕອບຄຳຖາມລຸ່ມນີ້:

**ຄຳຖາມ**

1) ມະນຸດໝາຍເຖິງຫຍັງ?
2) ສຳພັນແມ່ນຫຍັງ?
3) ມະນຸດສຳພັນແມ່ນຫຍັງ?
4) ການມີມະນຸດສຳພັນມີຄວາມສຳຄັນແນວໃດ?
5) ຢາກສ້າງມະນຸດສຳພັນທີ່ດີຕ້ອງເຮັດແນວໃດ?

6) ຍ້ອນຫຍັງຈຶ່ງຕ້ອງສ້າງມະນຸດສຳພັນທີ່ດີກັບພາກພື້ນ ແລະ ໃນໂລກ?

- ຕາງໜ້າກຸ່ມຂຶ້ນລາຍງານ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບດັ່ງນີ້:

**ຄຳຕອບ**

1) ມະນຸດ ແມ່ນຄົນທີ່ມີຄວາມຮູ້, ຄວາມສາມາດ, ມີເຫດຜົນ ແລະ ຮູ້ຈັກໃຊ້ເຫດຜົນ.
2) ສຳພັນ ແມ່ນການພົວພັນ, ຜູກພັນ, ກ່ຽວພັນລະຫວ່າງຄົນກັບຄົນໃນສັງຄົມ.
3) ການມີມະນຸດສຳພັນໝາຍເຖິງຄວາມສາມາດທີ່ບຸກຄົນຖ່າຍທອດຄວາມຮູ້ສຶກ ຫຼື ຄວາມຄິດໄປຍັງຄົນອື່ນ ໂດຍໃຊ້ສິລະປະອັນນິ້ມນວນໃນການເຂົ້າໄປຫາບຸກຄົນ ຫຼື ກຸ່ມຄົນ.
4) ການມີມະນຸດສຳພັນແມ່ນມີຄວາມສຳຄັນຢ່າງຍິ່ງ ເນື່ອງຈາກວ່າ ການສ້າງຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ເປັນສິ່ງທີ່ຈຳເປັນຂອງມວນມະນຸດທົ່ວໂລກ. ໃຜໆກໍຕ້ອງການຄວາມພໍໃຈ, ຄວາມຮັກແພງ, ຄວາມສະໜິດສະໜົມ ແລະ ຢູ່ຮ່ວມກັນໂດຍສັນຕິ.
5) ການສ້າງມະນຸດສຳພັນທີ່ດີຕ້ອງມີຄວາມຊື່ສັດບໍລິສຸດ, ເຄົາລົບນັບຖື, ຮັກແພງ, ມີນໍ້າໃຈເອື້ອເຟື້ອເພື່ອແຜ່, ບໍ່ເຫັນແກ່ຕົນເອງ ຟັງຄວາມຄິດເຫັນຂອງຄົນອື່ນ, ສະໜັບສະໜູນ ແລະ ຮ່ວມມືດ້ວຍຄວາມບໍລິສຸດໃຈໃຫ້ໂອກາດຕໍ່ກັນ, ມີຄວາມຄິດສ້າງສັນ, ມີຄວາມສາມັກຄີບໍ່ສ້າງຄວາມເດືອດຮ້ອນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ. ຫຼີກເວັ້ນຄວາມບໍ່ເຂົ້າໃຈກັນ, ຄຽດແຄ້ນ, ເວົ້າສິ່ງບໍ່ດີໃຫ້ກັນ, ສ້າງສາຍສຳພັນອັນດີກັບທຸກຫ້ອງ, ທຸກໂຮງຮຽນ ແລະ ຊຸມຊົນ.
6) ຍ້ອນວ່າມີຄວາມສຳຄັນຢ່າງຍິ່ງ ເຮົາຄວນມີຄວາມສາມັກຄີ, ຮັກແພງ, ເຄົາລົບນັບຖືຄວາມແຕກຕ່າງທາງດ້ານພາສາ, ວັດທະນະທຳ ແລະ ແນວຄວາມຄິດທີ່ຫຼາກຫຼາຍເພື່ອການຢູ່ຮ່ວມກັນຢ່າງສັນຕິ ແລະ ມີຄວາມຍືນຍົງ.

**3. ສົນທະນາກ່ຽວກັບບົດເລື່ອງ (15 ນາທີ)**

- ຄູໃຫ້ນັກຮຽນອ່ານບົດເລື່ອງ “ລຸງໄກສອນກັບປະຊາຊົນ” ແລ້ວໃຫ້ນັກຮຽນຕອບຄຳຖາມດັ່ງນີ້:

**ຄຳຖາມ**

1) ເລື່ອງ “ລຸງໄກສອນກັບປະຊາຊົນ” ມີບ່ອນໃດທີ່ເວົ້າເຖິງ ລຸງໄກສອນ ພົມວິຫານ ມີມະນຸດສຳພັນກັບປະຊາຊົນ?
2) ນັກຮຽນຄວນຮູ້ ແລະ ຮຽນເອົາແບບແຜນວິທີເຮັດວຽກຂອງ ທ່ານໄກສອນ ພົມວິຫານ

ເຂົ້າໃນການດຳລົງຊີວິດຄືແນວໃດ?

3) ພວກເຮົາຄວນສະແດງຄວາມຮູ້ບຸນຄຸນຕໍ່ທ່ານໄກສອນ ພົມວິຫານແນວໃດ?

- ນັກຮຽນ 5-6 ຄົນອາສາສະໝັກຕອບ.
- ຄູ ແລະ ນັກຮຽນສະຫຼຸບຄຳຕອບຮ່ວມກັນ.

**ຄຳຕອບ**

1) ເລື່ອງ "ລຸງໄກສອນກັບປະຊາຊົນ" ບ່ອນທີ່ເວົ້າເຖິງ ລຸງໄກສອນ ພົມວິຫານ ມີມະນຸດສຳພັນກັບປະຊາຊົນ ຄື: ທ່ານໄກສອນ ພົມວິຫານ ບໍ່ເຄີຍຖືຕົວ, ມັກຕ້ອນຮັບການຢ້ຽມຢາມຂອງເພື່ອນສະຫາຍ, ພໍ່ແມ່ປະຊາຊົນບັນດາເຜົ່າ ຫຼື ເພິ່ນກໍໄປຢ້ຽມຢາມປະຊາຊົນບັນດາເຜົ່າ ແລະ ເປັນຫ່ວງເປັນໃຍນຳເຂົາເຈົ້າຢູ່ສະເໝີ.

2) ນັກຮຽນຄວນຮູ້ ແລະ ຮຽນເອົາແບບແຜນວິທີເຮັດວຽກຂອງ ທ່ານ ໄກສອນ ພົມວິຫານເຂົ້າໃນການດຳລົງຊີວິດ ຄື: ຖືຜົນປະໂຫຍດສ່ວນລວມຫຼາຍກວ່າສ່ວນຕົວ, ດຳລົງຊີວິດແບບງ່າຍດາຍ, ປະຢັດ, ສັດຊື່, ມີມະນຸດສະທຳສູງ, ບໍ່ຟຸມເຟືອຍ, ດຸໝັ່ນ, ຮັກປະຊາຊົນ ແລະ ປະເທດຊາດ.

3) ພວກເຮົາຄວນຮຽນເອົານ້ຳໃຈຮັກຊາດອັນແທ້ຈິງ, ນ້ຳໃຈເສຍສະຫຼະອັນແຮງກ້າ, ປີຊາສາມາດ ແລະ ສະຫຼາດສ່ອງໃສ, ຮຽນເອົາແບບຢ່າງການສ້າງຄວາມສາມັກຄີລະຫວ່າງຊົນເຜົ່າ, ຊັ້ນຄົນຕ່າງໆບໍ່ວ່າຢູ່ພາຍໃນ ແລະ ຕ່າງປະເທດ.

**4. ສະຫຼຸບ (5 ນາທີ)**

ຄູສະຫຼຸບຄືນກ່ຽວກັບຄວາມໝາຍສຳຄັນຂອງການມີມະນຸດສຳພັນ, ການພົວພັນກັບຄົນອື່ນ, ຜົນດີຂອງການມີມະນຸດສຳພັນ, ການພົວພັນກັບຜູ້ອື່ນໃນຊຸມຊົນ ແລະ ໃນໂລກ.

ພ້ອມນີ້, ຄູອະທິບາຍເພີ່ມຕື່ມອີກວ່າ ການມີມະນຸດສຳພັນ ແລະ ການສ້າງສາຍສຳພັນທີ່ດີບໍ່ພຽງແຕ່ກັບທຸກຫ້ອງ, ທຸກໂຮງຮຽນ ແລະ ຊຸມຊົນທີ່ຕົນເອງອາໄສຢູ່ເທົ່ານັ້ນ ເຮົາຍັງຕ້ອງການມີມະນຸດສຳພັນ ແລະ ສ້າງສາຍພົວພັນທີ່ດີກັບບັນດາປະເທດໃນພາກພື້ນ ແລະ ໃນໂລກ ຊຶ່ງມີຄວາມສຳຄັນຢ່າງຍິ່ງເຮົາຄວນສ້າງຄວາມສາມັກຄີ, ຮັກແພງ, ເຄົາລົບນັບຖືຄວາມແຕກຕ່າງທາງດ້ານພາສາ, ວັດທະນະທຳ ແລະ ແນວຄວາມຄິດທີ່ຫຼາກຫຼາຍ ເພື່ອການຢູ່ຮ່ວມກັນຢ່າງ

ສັນຕິ ແລະ ມີຄວາມຍືນຍົງ.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນຜົນຈາກການຕອບຄໍາຖາມປະລະໄນລຸ່ມນີ້:

- ນັກຮຽນຈົ່ງໝາຍ ✓ ໃສ່ຕໍ່ໜ້າຄໍາຕອບທີ່ເຫັນວ່າຖືກຕ້ອງ

1. ຂໍ້ໃດ ບໍ່ແມ່ນ ການມີມະນຸດສໍາພັນ?

✓ ກ. ມັກຜົນປະໂຫຍດສ່ວນຕົວ

ຂ. ຟັງຄວາມຄິດເຫັນເຊິ່ງກັນ ແລະ ກັນ

ຄ. ການຖ່າຍທອດຄວາມຮູ້ສຶກທີ່ດີຕໍ່ຄົນອື່ນ

ງ. ການຢູ່ຮ່ວມກັນ, ຟັງຄວາມຄິດເຫັນເຊິ່ງກັນ ແລະ ກັນ

2. ການພົວພັນທີ່ດີກັບຄົນອື່ນໃນຊຸມຊົນ ແລະ ໃນໂລກຄວນເຮັດແນວໃດ?

ກ. ບໍ່ເຄົາລົບຄວາມແຕກຕ່າງທີ່ຫຼາກຫຼາຍ

ຂ. ບໍ່ເຄົາລົບນັບຖືຄວາມຄິດທີ່ຫຼາກຫຼາຍ

ຄ. ເຄົາລົບແນວຄວາມຄິດຄົນອື່ນເທົ່າທີ່ຈໍາເປັນ

✓ ງ. ສາມັກຄີຮັກແພງ, ເຄົາລົບຄວາມແຕກຕ່າງທີ່ຫຼາກຫຼາຍ

3. ຂໍ້ໃດແມ່ນການສ້າງມະນຸດສໍາພັນທີ່ດີ?

ກ. ຟັງຄວາມຄິດເຫັນເຊິ່ງກັນ ແລະ ກັນ ໃນບາງຄັ້ງ

ຂ. ມີນໍ້າໃຈເອື້ອເຟື້ອເພື່ອແຜ່, ເຫັນແກ່ຕົນເອງໃນບາງຄັ້ງ

✓ ຄ. ມີຄວາມສາມັກຄີ, ມີນໍ້າໃຈເອື້ອເຟື້ອເພື່ອແຜ່

ງ. ມີນໍ້າໃຈເອື້ອເຟື້ອເພື່ອແຜ່, ມັກຜົນປະໂຫຍດສ່ວນຕົວ

**ໝາຍເຫດ**:

- ຄູນໍາໃຊ້ຮູບພາບໃນທ້າຍບົດຮຽນ ແລ້ວໃຫ້ນັກຮຽນສັງເກດຮູບພາບ, ສົນທະນາແລກປ່ຽນກ່ຽວກັບສິ່ງທີ່ພົບເຫັນໃນຮູບພາບ ແລະ ຄູຕັ້ງຄໍາຖາມ ຫຼື ຄູຫາກມີວິທີການອື່ນ, ຮູບພາບອື່ນທີ່ສອດຄ່ອງ ແລະ ເໝາະສົມກໍສາມາດນໍາໃຊ້ເພີ່ມຕື່ມ.

# ບົດທີ 8 ການດຳລົງຊີວິດກັບທຳມະຊາດ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 4 ການປົກປັກຮັກສາທຳມະຊາດ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ບອກວິທີການປົກປັກຮັກສາສິ່ງແວດລ້ອມ ແລະ ການປ້ອງກັນສິ່ງທ້າທາຍໃນໂລກ (ການປ່ຽນແປງດິນຟ້າອາກາດ, ມົນລະພິດ, ໄພທຳມະຊາດ).
- ສ້າງຕົນເອງໃຫ້ມີພຶດຕິກຳທີ່ດີ, ຮູ້ຮັກທຳມະຊາດ ແລະ ເຫັນຄຸນຄ່າຂອງການປ້ອງກັນຕໍ່ສິ່ງທ້າທາຍໃນໂລກ.
- ຕ້ານການກະທຳທີ່ບໍ່ຖືກຕ້ອງຕໍ່ທຳມະຊາດ ເປັນຕົ້ນແມ່ນສິ່ງທ້າທາຍໃນໂລກ (ການປ່ຽນແປງດິນຟ້າອາກາດ, ມົນລະພິດ, ໄພທຳມະຊາດ) .

## II. ເນື້ອໃນ

ໄພທາງທຳມະຊາດມີອັນຕະລາຍຕໍ່ຄົນ ແລະ ສັດ ຊຶ່ງໄພທາງທຳມະຊາດສ່ວນຫຼາຍມີສາເຫດມາຈາກການກະທຳຂອງມະນຸດ ເຊັ່ນ: ການຕັດໄມ້ທຳລາຍປ່າ, ຈູດປ່າເຮັດໄຮ່ຢ່າງຊະຊາຍ, ການຖິ້ມຂີ້ເຫຍື້ອຊະຊາຍ, ການຜະລິດຈາກໂຮງງານອຸດສາຫະກຳຕ່າງໆ. ບັນດາສິ່ງເຫຼົ່ານັ້ນເຮັດໃຫ້ເກີດການປ່ຽນແປງດິນຟ້າອາກາດ ກໍ່ໃຫ້ເກີດບັນຫາຕ່າງໆຕາມມາ ເຊັ່ນ: ນໍ້າຖ້ວມ, ໄພແຫ້ງແລ້ງ, ແຜ່ນດິນໄຫວ ແລະ ອື່ນໆ.

ເພື່ອຫຼີກລ່ຽງບັນຫາດັ່ງກ່າວພວກເຮົາຕ້ອງຮ່ວມແຮງຮ່ວມໃຈກັນປົກປັກຮັກສາທຳມະຊາດ ໂດຍເລີ່ມຈາກການຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີນິດໄສເປັນຄົນມີລະບຽບ, ບໍ່ສ້າງຄວາມເດືອດຮ້ອນໃຫ້ແກ່ຄົນອ້ອມຂ້າງ. ສ່ວນຄອບຄົວ, ສັງຄົມ ຕ້ອງເປັນເຈົ້າການປົກປັກຮັກສາ, ຮູ້ນຳໃຊ້ຊັບພະຍາກອນທຳມະຊາດຢ່າງປະຢັດ, ຮັກສາຄວາມສະອາດ, ຄວາມສວຍງາມ ເພື່ອໃຫ້ມີປ່າໄມ້ອຸດົມຂຽວສົດຢູ່ຕະຫຼອດ, ມີແມ່ນໍ້າລຳເຊໃສສະອາດໄວ້ໃຊ້ຍາວນານ, ບ້ານເມືອງຂອງເຮົາໜ້າຢູ່ອາໄສ, ດຶງດູດນັກທ່ອງທ່ຽວມາທ່ຽວຊົມສ້າງລາຍຮັບໃຫ້ແກ່ປະເທດຊາດ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາ ສຶກສາພົນລະເມືອງ ຊັ້ນ ມ.1
2. ຮູບພາບຄວາມແຫ້ງແລ້ງ, ນໍ້າຖ້ວມ, ໄຟໄໝ້ປ່າ

3. ໝາກບານ ຫຼື ເຈ້ຍເສດທີ່ມ້ວນເປັນໜ່ວຍກົມ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 2*

### 1. ທວນຄືນບົດຮຽນເກົ່າ

**ກ. ຫຼິ້ນເກມ (5 ນາທີ)**

- ຄູທວນຄືນກ່ຽວກັບສິ່ງທີ່ໄດ້ຮຽນໃນຊົ່ວໂມງທີ່ຜ່ານມາ ດັ່ງນີ້:
- ຄູໃຫ້ນັກຮຽນຢືນເປັນວົງມົນປິ່ນໜ້າເຂົ້າຫາກັນ. ຈາກນັ້ນ, ໃຊ້ໝາກບານ ຫຼື ເຈ້ຍເສດທີ່ມ້ວນເປັນໜ່ວຍກົມໃຫ້ນັກຮຽນຈັບ ແລ້ວສົ່ງຕໍ່ໄປເທື່ອລະຄົນ ເມື່ອຄູໃຫ້ສັນຍານວ່າຢຸດ ນັກຮຽນຕ້ອງຢຸດສົ່ງໝາກບານ. ຖ້າໝາກບານຢຸດຢູ່ກັບຜູ້ໃດ ແມ່ນຜູ້ນັ້ນຕ້ອງໄດ້ຕອບສິ່ງທີ່ໄດ້ຮຽນໃນຊົ່ວໂມງກ່ອນມາ 1 ຢ່າງ ແລະ ສືບຕໍ່ເຮັດຕໍ່ໄປໃຫ້ນັກຮຽນໄດ້ຕອບປະມານ 3-4 ຄົນ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບກ່ຽວກັບສິ່ງທີ່ໄດ້ຮຽນໃນຊົ່ວໂມງກ່ອນ.

### 2. ສະເໜີບົດຮຽນໃໝ່

**ຂ. ສົນທະນາກ່ຽວກັບຮູບພາບ (5 ນາທີ)**

- ຄູໃຫ້ນັກຮຽນແຕ່ລະກຸ່ມເບິ່ງຮູບພາບກ່ຽວກັບການປ່ຽນແປງຂອງດິນຟ້າອາກາດລຸ່ມນີ້:



ໄຟໄໝ້ປ່າ



ນ້ຳຖ້ວມ



ຄວາມແຫ້ງແລ້ງ

- ຄູຕັ້ງຄຳຖາມດັ່ງນີ້:
  1) ນັກຮຽນເຫັນຮູບຫຍັງແດ່?
  2) ແມ່ນຫຍັງທີ່ເປັນສາເຫດໃຫ້ເກີດເຫດການຕາມຮູບພາບ?
- ນັກຮຽນອາສາສະໝັກຕອບຄຳຖາມ.

**ຄຳຕອບ**

1) ນ້ຳຖ້ວມ, ໄຟໄໝ້ປ່າ, ໄພແຫ້ງແລ້ງ.
2) ສາເຫດເກີດຈາກມະນຸດສ້າງຂຶ້ນ ເຊັ່ນ: ການຕັດໄມ້ທຳລາຍປ່າ, ຈູດປ່າເຮັດໄຮ່ຢ່າງຊະຊາຍ, ການຖິ້ມຂີ້ເຫຍື້ອຊະຊາຍ, ການຜະລິດຈາກໂຮງງານອຸດສາຫະກຳຕ່າງໆ.

**ຄ. ຄົ້ນຄວ້າເປັນກຸ່ມ (35 ນາທີ)**

- ຄູແບ່ງນັກຮຽນເປັນກຸ່ມຕາມຄວາມເໝາະສົມຕອບຄຳຖາມລຸ່ມນີ້:
  1) ຜົນຮ້າຍຈາກທຳມະຊາດມີຫຍັງແດ່?
  2) ຍ້ອນຫຍັງພວກເຮົາຈຶ່ງຕ້ອງປ້ອງກັນບໍ່ໃຫ້ເກີດການປ່ຽນແປງຂອງດິນຟ້າອາກາດ?
  3) ການປ່ຽນແປງຂອງດິນຟ້າອາກາດຢູ່ທ້ອງຖິ່ນມີຜົນກະທົບຕໍ່ປະເທດ ແລະ ສາກົນແນວໃດ?
  4) ພວກເຮົາຈະປ້ອງກັນຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດແນວໃດ?
- ຄູ ແລະ ນັກຮຽນສະຫຼຸບກ່ຽວກັບຮູບພາບ ແລະ ຕອບຄຳຖາມດັ່ງນີ້:

**ຄຳຕອບ**

1) ເກີດໄພແຫ້ງແລ້ງ, ນ້ຳຖ້ວມ, ເກີດມົນລະພິດທາງນ້ຳ, ທາງອາກາດ ແລະ ອື່ນໆ.
2) ເພື່ອປ້ອງກັນບໍ່ໃຫ້ເກີດໄພທາງທຳມະຊາດ ເຊັ່ນ: ບັນຫານ້ຳຖ້ວມ, ໄພແຫ້ງແລ້ງ, ແຜ່ນດິນໄຫວ ແລະ ອື່ນໆ.
3) ຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດຢູ່ທ້ອງຖິ່ນເຮັດໃຫ້ຝົນບໍ່ຕົກຕາມລະດູການກໍ່ໃຫ້ເກີດໄພແຫ້ງ, ສິ່ງຜົນເຮັດໃຫ້ການຜະລິດຂະແໜງການຕ່າງໆຫຼຸດລົງ ແລະ ບໍ່ພຽງພໍສຳລັບການບໍລິໂພກໃນທົ່ວສັງຄົມ. ເມື່ອແຕ່ລະປະເທດບໍ່ສາມາດທຳການຜະລິດຮັບໃຊ້ສັງຄົມຢ່າງພຽງພໍອາດກໍ່ໃຫ້ເກີດບັນຫາໄພອຶດຫິວຢ່າງກວ້າງຂວາງ ຊຶ່ງມີຜົນກະທົບໄປທົ່ວໂລກ.
4) ພວກເຮົາຕ້ອງຮ່ວມແຮງຮ່ວມໃຈກັນ, ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີນິດໄສເປັນຄົນມີລະບຽບບໍ່ສ້າງຄວາມເດືອດຮ້ອນໃຫ້ແກ່ຄົນອ້ອມຂ້າງ. ສ່ວນຄອບຄົວ, ສັງຄົມ ຕ້ອງເປັນເຈົ້າການປົກປັກຮັກສາ, ຮູ້ນຳໃຊ້ຊັບພະຍາກອນທຳມະຊາດຢ່າງປະຢັດ, ຮັກສາຄວາມສະອາດ, ຄວາມສວຍງາມ ເພື່ອໃຫ້ມີປ່າໄມ້ອຸດົມຂຽວສົດຢູ່ຕະຫຼອດ, ມີແມ່

ນ້ຳລຳເຊໃສສະອາດໄວ້ໃຊ້ຍາວນານ.

3. **ສະຫຼຸບ (5 ນາທີ)**

- ຄູ ແລະ ນັກຮຽນສະຫຼຸບກ່ຽວກັບເນື້ອໃນບົດຮຽນທີ່ຮຽນມາທັງໝົດໃນ 1 ຊົ່ວໂມງ.
- ຄູອະທິບາຍຕື່ມວ່າ ເພື່ອຫຼີກລ່ຽງບັນຫາດັ່ງກ່າວພວກເຮົາຕ້ອງຮ່ວມແຮງຮ່ວມໃຈກັນປົກປັກຮັກສາທຳມະຊາດ ໂດຍເລີ່ມຈາກການຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີນິດໄສເປັນຄົນມີລະບຽບ, ບໍ່ສ້າງຄວາມເດືອດຮ້ອນໃຫ້ແກ່ຄົນອ້ອມຂ້າງ. ສ່ວນຄອບຄົວ, ສັງຄົມຕ້ອງເປັນເຈົ້າການປົກປັກຮັກສາ, ຮູ້ນຳໃຊ້ຊັບພະຍາກອນທຳມະຊາດຢ່າງປະຢັດ, ຮັກສາຄວາມສະອາດ, ຄວາມສວຍງາມ ເພື່ອໃຫ້ມີປ່າໄມ້ອຸດົມຂຽວສົດຢູ່ຕະຫຼອດ, ມີແມ່ນ້ຳລຳເຊໃສສະອາດໄວ້ໃຊ້ຍາວນານ, ບ້ານເມືອງຂອງເຮົາໜ້າຢູ່ອາໄສ, ດຶງດູດນັກທ່ອງທ່ຽວມາທ່ຽວຊົມ ສ້າງລາຍຮັບໃຫ້ແກ່ປະເທດຊາດ. ພ້ອມນີ້ສາກົນໄດ້ໃຫ້ຄວາມສຳຄັນຂອງການຮັກສາສິ່ງແວດລ້ອມ ດ້ວຍການກຳນົດເອົາວັນທີ 5 ມິຖຸນາ ຂອງທຸກໆປີ ເປັນວັນສິ່ງແວດລ້ອມໂລກ ເພື່ອສົ່ງເສີມໃຫ້ທຸກຄົນເຫັນຄຸນຄ່າ ແລະ ຄວາມສຳຄັນຂອງສິ່ງແວດລ້ອມ.

**ວຽກບ້ານ**

1. ແນະນຳນັກຮຽນສ້າງແຜນການເຄື່ອນໄຫວລະອຽດ ເພື່ອປົກປັກຮັກສາສິ່ງແວດລ້ອມໃນການດຳລົງຊີວິດ.
2. ແນະນຳນັກຮຽນເຮັດບົດຝຶກຫັດທີ 1, 2 ໃນປຶ້ມແບບຮຽນ.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນຜົນຈາກການຕອບຄຳຖາມ

1. ໃຫ້ນັກຮຽນອ່ານຂໍ້ຄວາມຢູ່ຫ້ອງເນື້ອໃນ ແລ້ວໃຊ້ເຄື່ອງໝາຍ ✓ ໃສ່ຫ້ອງ ຖືກ ຫຼື ຜິດຢູ່ຕາຕະລາງລຸ່ມນີ້:

| ເນື້ອໃນ | ຖືກ | ຜິດ |
|---|---|---|
| ໄພແຫ້ງແລ້ງ, ແຜ່ນດິນໄຫວແມ່ນຜົນຮ້າຍຈາກທຳມະຊາດ | | |
| ການປ້ອງກັນບໍ່ໃຫ້ເກີດການປ່ຽນແປງຂອງດິນຟ້າອາກາດແມ່ນເພື່ອບໍ່ໃຫ້ເກີດໄພທຳມະຊາດ | | |
| ການປ່ຽນແປງຂອງດິນຟ້າອາກາດຢູ່ທ້ອງຖິ່ນບໍ່ມີຜົນຕໍ່ປະເທດ ແລະ ສາກົນ | | |

| | | |
|---|---|---|
| ມີສະເພາະແຕ່ນັກຮຽນຜູ້ດຽວກໍສາມາດປ້ອງກັນຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດໄດ້ | | |
| ເພື່ອປ້ອງກັນຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດ, ຄອບຄົວ, ສັງຄົມ ຕ້ອງເປັນເຈົ້າການປົກປັກຮັກສາ, ຮູ້ນໍາໃຊ້ຊັບພະຍາກອນທໍາມະຊາດຢ່າງປະຢັດ | | |

**ຄໍາຕອບ**

| ເນື້ອໃນ | ຖືກ | ຜິດ |
|---|---|---|
| ໄພແຫ້ງແລ້ງ, ແຜ່ນດິນໄຫວແມ່ນຜົນຮ້າຍຈາກທໍາມະຊາດ | ✓ | |
| ການປ້ອງກັນບໍ່ໃຫ້ເກີດການປ່ຽນແປງຂອງດິນຟ້າອາກາດແມ່ນເພື່ອບໍ່ໃຫ້ເກີດໄພທໍາມະຊາດ | ✓ | |
| ການປ່ຽນແປງຂອງດິນຟ້າອາກາດຢູ່ທ້ອງຖິ່ນບໍ່ມີຜົນຕໍ່ປະເທດ ແລະ ສາກົນ | | ✓ |
| ມີສະເພາະແຕ່ນັກຮຽນຜູ້ດຽວກໍສາມາດ ປ້ອງກັນຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດໄດ້ | | ✓ |
| ເພື່ອປ້ອງກັນຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດ, ຄອບຄົວ, ສັງຄົມ ຕ້ອງເປັນເຈົ້າການປົກປັກຮັກສາ, ຮູ້ນໍາໃຊ້ຊັບພະຍາກອນທໍາມະຊາດຢ່າງປະຢັດ | ✓ | |

**ໝາຍເຫດ**

- ຄູສາມາດນໍາໃຊ້ວິທີການສອນອື່ນມາໃຊ້ແທນ ຖ້າຫາກເຫັນວ່າເປັນວິທີທີ່ສອດຄ່ອງ ແລະ ເໝາະສົມ.

**ຂໍ້ມູນເພີ່ມຕື່ມ**

- ສູນຝຶກອົບຮົມປ່າໄມ້ຊຸມຊົນຂອງພາກພື້ນ (RECOFTC), 2012. ການສ້າງຄວາມສາມາດກ່ຽວກັບ REDD+ ໃນລະດັບທ້ອງຖິ່ນຮາກຖານຢູ່ທະວີບອາຊີ-ປາຊີຟິກ: ການປ່ຽນແປງດິນຟ້າອາກາດ, ປ່າໄມ້ ແລະ ພວກທ່ານ. RECOFTC- The Center for People and Forests.

# ບົດທີ 15 ສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍ

## ສອນແຊກຊ້ອນເຂົ້າບົດເລື່ອງ: ແມ່ນ້ຳ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍຂອງສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍກ່ຽວກັບຊີວິດ, ຮ່າງກາຍ, ຊື່ສຽງ, ສຸຂະພາບ, ກຽດສັກສີ ແລະ ການປ້ອງກັນຄວາມຮຸນແຮງ, ການແກ້ໄຂຄວາມຂັດແຍ່ງ ຂອງຕົນ ແລະ ຄົນອື່ນ.
- ເຄົາລົບສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍກ່ຽວກັບຊີວິດ, ຮ່າງກາຍ, ຊື່ສຽງ, ສຸຂະພາບ, ກຽດສັກສີ ແລະ ການປ້ອງກັນຄວາມຮຸນແຮງ, ການແກ້ໄຂຄວາມຂັດແຍ່ງ ຂອງຕົນ ແລະ ຄົນອື່ນ.
- ຈຳແນກສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍກ່ຽວກັບຊີວິດ, ຮ່າງກາຍ, ຊື່ສຽງ, ສຸຂະພາບ, ກຽດສັກສີ ແລະ ການປ້ອງກັນຄວາມຮຸນແຮງ, ການແກ້ໄຂຄວາມຂັດແຍ່ງ ຂອງຕົນ ແລະ ຄົນອື່ນ.

## II. ເນື້ອໃນ

ສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍກ່ຽວກັບຊີວິດ, ຮ່າງກາຍ, ຊື່ສຽງ, ສຸຂະພາບ ແລະ ກຽດສັກສີແມ່ນສິດພື້ນຖານຂອງພົນລະເມືອງລາວທຸກຄົນ, ເປັນສິດທີ່ພົວພັນກັບທຸກຄົນ ເຊິ່ງເປັນສິດທີ່ສຳຄັນ ແລະ ມີຄຸນຄ່າທີ່ສຸດສຳລັບພົນລະເມືອງລາວ ແລະ ພົນລະເມືອງທຸກຄົນໃນໂລກ.

ກົດໝາຍຂອງ ສປປ ລາວໄດ້ກຳນົດໄວ້ໃນມາດຕາ 83 ການທຳຮ້າຍຮ່າງກາຍວ່າ

“ບຸກຄົນໃດຫາກເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບ ໂດຍເຈດຕະນາ ຈະຖືກລົງໂທດ ຕັດອິດສະຫຼະພາບແຕ່ 3 ເດືອນ ຫາ 1 ປີ ”. ໃນກໍລະນີທີ່ມີການທຸບຕີ ຫຼື ໃນກໍລະນີທີ່ມີການກະທຳຜິດດັ່ງກ່າວ ຫາກໄດ້ເຮັດໃຫ້ມີການບາດເຈັບສາຫັດຈະຖືກລົງໂທດຕັດອິດສະຫຼະພາບແຕ່ 1 ປີ ຫາ 5 ປີ. ໃນກໍລະນີການກະທຳຜິດດັ່ງກ່າວຫາກໄດ້ມີການເສຍອົງຄະ ຫຼື ເສຍຊີວິດຈະຖືກລົງໂທດຕັດອິດສະຫຼະພາບແຕ່ 5 ປີ ຫາ 10 ປີ.

ລັດພາຄີຮັບຮູ້ສິດຂອງເດັກນ້ອຍໃນການໄດ້ຮັບການປົກປ້ອງ ບໍ່ໃຫ້ຖືກຂູດຮີດດ້ານເສດຖະກິດ ແລະ ຖືກໃຊ້ເຮັດວຽກທີ່ເປັນອັນຕະລາຍ ຫຼື ເປັນການກະທົບຕໍ່ການສຶກສາ ຫຼື ເປັນຜົນເສຍຫາຍແກ່ສຸຂະພາບ ຫຼື ແກ່ການພັດທະນາທາງຮ່າງກາຍ, ຈິດປະສາດ, ຈິດໃຈ, ຈັນຍາທຳ ຫຼື ທາງດ້ານສັງຄົມຂອງເດັກ.

ເດັກທຸກຄົນມີສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍຢ່າງເທົ່າທຽມກັນຢູ່ໃນທຸກສະຖານທີ່ ເຊັ່ນ: ໂຮງຮຽນ, ຄອບຄົວ, ສັງຄົມ ແລະ ໃນໂລກ ແລະ ສາມາດຮຽກຮ້ອງເອົາສິດຂອງຕົນໃນກໍລະນີຖືກລະເມີດ ຫຼື ບໍ່ໄດ້ຮັບຄວາມເປັນທຳໂດຍບໍ່ມີການຈຳແນກເຊື້ອຊາດ, ຜິວພັນ, ເພດ, ພາສາ, ສາສະໜາ...

ພັກ ແລະ ລັດຖະບານຂອງລາວ ກໍຄືລັດພາຄີຂອງບັນດາປະເທດອື່ນໆໃນໂລກ ຍາມໃດກໍໄດ້ເອົາໃຈໃສ່ໃນການອອກກົດໝາຍຕ່າງໆ ເພື່ອສະແດງເຖິງການຄຸ້ມຄອງ ແລະ ປົກປ້ອງສິດຂອງພົນລະເມືອງທຸກຄົນ.

ທຸກຄົນຕ້ອງໄດ້ຮັບການປົກປ້ອງຄຸ້ມຄອງຈາກກົດໝາຍ ເພື່ອປ້ອງກັນບໍ່ໃຫ້ເກີດຄວາມຮຸນແຮງ, ບັນດາຂໍ້ຂັດແຍ່ງກໍຈະໄດ້ຮັບການແກ້ໄຂ ທຸກຄົນຈະບໍ່ຖືກທຸບຕີ, ປ້ອຍດ່າ, ທໍລະມານ, ຂູດຮີດ, ຂົ່ມເຫັງ, ໃຊ້ແຮງງານໜັກ ແລະ ອື່ນໆ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຂັ້ນ ມ.1
2. ຮູບພາບໃນປຶ້ມແບບຮຽນ
3. ບົດເລື່ອງ ແມ່ນ້ຳ
4. ເຈ້ຍນ້ອຍສຳລັບຂຽນຄຳຕອບ
5. ກາວຕິດເຈ້ຍ, ສະກັອດ
6. ເຈ້ຍແຜ່ນໃຫຍ່ສຳລັບຂຽນເນື້ອໃນບົດຮຽນ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທົບທວນບົດທີ່ຮຽນຜ່ານມາ (5 ນາທີ)**

**ກ. ສົນທະນາຖາມ-ຕອບ**

- ຄູຕັ້ງຄຳຖາມ:

1) ກົດໝາຍວ່າດ້ວຍການສຶກສາແຫ່ງ ສປປ ລາວໃນມາດຕາ 6 ສິດຂອງພົນລະເມືອງໃນການສຶກສາ ມີເນື້ອໃນວ່າແນວໃດ?

- ນັກຮຽນຕອບ.
- ຄູສະຫຼຸບຄໍາຕອບຂອງນັກຮຽນຕາມເນື້ອໃນທີ່ມີໃນປຶ້ມແບບຮຽນ.
- ຄູອະທິບາຍຕື່ມວ່າ: ທຸກຄົນຕ້ອງໄດ້ຮັບການປົກປ້ອງບໍ່ໃຫ້ຖືກທຸບຕີ, ປ້ອຍດ່າ, ທໍລະມານ, ຂູດຮີດ, ຂົ່ມເຫັງ, ໃຊ້ແຮງງານໜັກ ແລະ ອື່ນໆ ຊຶ່ງອາດເປັນຜົນກະທົບເຮັດໃຫ້ບໍ່ໄດ້ຮັບການສຶກສາ ຫຼື ດໍາລົງຊີວິດຢູ່ໃນສັງຄົມບໍ່ໄດ້ ເພາະນີ້ແມ່ນສິດທິມະນຸດທີ່ຕ້ອງໄດ້ຮັບການປົກປ້ອງຄຸ້ມຄອງທາງດ້ານກົດໝາຍບໍ່ວ່າຈະຢູ່ສະຖານທີ່ໃດໃນໂລກນີ້ກໍຕາມທຸກຄົນຕ້ອງໄດ້ຮັບສິດທິພື້ນຖານດັ່ງກ່າວຢ່າງເທົ່າທຽມກັນ.

**2. ສະເໜີບົດຮຽນໃໝ່**

**ຂ. ສົນທະນາລວມກ່ຽວກັບສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍ (20 ນາທີ)**

- ຄູໃຫ້ນັກຮຽນສັງເກດຮູບພາບໃນປຶ້ມແບບຮຽນໜ້າທີ 82-83 ແລ້ວຖາມວ່າ:
  1) ນັກຮຽນເຫັນຫຍັງແດ່ໃນຮູບພາບ?
  2) ຄົນໃນແຕ່ລະຮູບພາບກໍາລັງເຮັດຫຍັງ?
  3) ນັກຮຽນເຄີຍຕົກຢູ່ໃນກໍລະນີໃນຮູບພາບນີ້ບໍ່?
  4) ນັກຮຽນເຄີຍຖືກທຸບຕີ, ຖືກປ້ອຍດ່າ, ທໍລະມານ, ຂູດຮີດ, ຂົ່ມເຫັງ, ໃຊ້ແຮງງານໜັກ ແລະ ອື່ນໆ ບໍ່?
  5) ຖ້າເຄີຍຢູ່ໃນກໍລະນີໃດ?
  6) ສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍກ່ຽວກັບຊີວິດ, ຮ່າງກາຍ, ຊື່ສຽງ, ສຸຂະພາບ, ກຽດສັກສີ ແມ່ນຫຍັງ?
  7) ຍ້ອນຫຍັງທຸກຄົນຕ້ອງໄດ້ຮັບການປົກປ້ອງຄຸ້ມຄອງຈາກກົດໝາຍ?
- ຄູໃຫ້ນັກຮຽນຄົ້ນຄິດ ແລະ ຊອກຫາຄໍາຕອບ.
- ຄູເອົາເຈ້ຍຄໍາຖາມແຕ່ລະຂໍ້ໄປຕິດໃສ່ກະດານ ຫຼື ບ່ອນທີ່ເໝາະສົມຕາມຝາຫ້ອງຮຽນ, ມຸມ ຫຼື ແຈຫ້ອງ.
- ນັກຮຽນຂຽນຄໍາຕອບໃສ່ເຈ້ຍນ້ອຍຂອງຕົນເອງ ໂດຍຕອບແຕ່ລະຂໍ້ໃສ່ເຈ້ຍແຕ່ລະໃບແລ້ວເອົາໄປຕິດໃສ່ຕາມແຕ່ລະຄໍາຖາມທີ່ຂຽນຢູ່ໃນເຈ້ຍຕາມມຸມຫ້ອງນັ້ນ.
- ຄູແນະນໍາໃຫ້ນັກຮຽນແຕ່ລະຄົນອອກໄປອ່ານເບິ່ງຄໍາຕອບທີ່ແຕ່ລະຄົນຂຽນໄວ້
- ຫຼັງຈາກນັ້ນຄູໃຫ້ນັກຮຽນເປັນຕົວແທນອ່ານຄໍາຕອບແຕ່ລະຂໍ້.
- ຄູ ແລະ ນັກຮຽນສະຫຼຸບຄໍາຕອບຮ່ວມກັນດັ່ງນີ້:

**ຄຳຕອບ**

ໃນການຕອບຄຳຖາມຂໍ້ທີ 1-5 ແມ່ນຄູເປີດໂອກາດໃຫ້ນັກຮຽນຕອບຕາມຄວາມຄິດເຫັນຂອງເຂົາເຈົ້າ.

6) ສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍກ່ຽວກັບຊີວິດ, ຮ່າງກາຍ, ຊື່ສຽງ, ສຸຂະພາບ ແລະ ກຽດສັກສີແມ່ນສິດພື້ນຖານຂອງພົນລະເມືອງລາວທຸກຄົນ, ເປັນສິດທີ່ພົວພັນກັບທຸກຄົນ ຊຶ່ງເປັນສິດທີ່ສຳຄັນ ແລະ ມີຄຸນຄ່າທີ່ສຸດສຳລັບພົນລະເມືອງລາວ ແລະ ພົນລະເມືອງທຸກຄົນໃນໂລກ.

7) ທຸກຄົນຕ້ອງໄດ້ຮັບການປົກປ້ອງຄຸ້ມຄອງຈາກກົດໝາຍ ເພື່ອປ້ອງກັນບໍ່ໃຫ້ເກີດຄວາມຮຸນແຮງ, ບັນດາຂໍ້ຂັດແຍ້ງກໍຈະໄດ້ຮັບການແກ້ໄຂ ທຸກຄົນຈະບໍ່ຖືກທຸບຕີ, ປ້ອຍດ່າ, ທໍລະມານ, ຂູດຮີດ, ຂົ່ມເຫັງ, ໃຊ້ແຮງງານໜັກ ແລະ ອື່ນໆ.

- ຄູສະຫຼຸບ ໂດຍເນັ້ນໃຫ້ນັກຮຽນເຂົ້າໃຈວ່າ: ລັດ ແລະ ສັງຄົມໄດ້ເຄົາລົບ ແລະ ປົກປ້ອງຊີວິດ, ຮ່າງກາຍ, ກຽດສັກສີ ແລະ ຊື່ສຽງຂອງເດັກສະເໝີ.

**ຄ. ສົນທະນາກ່ຽວກັບການປະຕິບັດສິດ ແລະ ຄວາມຮັບຜິດຊອບຂອງເດັກ (15 ນາທີ)**

- ຄູແບ່ງນັກຮຽນເປັນກຸ່ມຕາມຄວາມເໝາະສົມ. ຈາກນັ້ນ, ໃຫ້ນັກຮຽນອ່ານເລື່ອງ " ແມ່ນ້າ " ໃນປຶ້ມແບບຮຽນ ແລ້ວແບ່ງຄຳຖາມລຸ່ມນີ້ໃຫ້ແຕ່ລະກຸ່ມຕອບ:

**ຄຳຖາມ**

1) ເປັນຫຍັງນາງຄຳກ້ອນຈຶ່ງຖືກທຸບຕີ, ປ້ອຍດ່າ?
2) ການກະທຳຂອງແມ່ນ້າຖືກຕ້ອງບໍ່? ເພາະເຫດໃດ?
3) ເມື່ອເຫັນແມ່ນ້າກຳລັງທຸບຕີລູກ ພໍ່ຂອງນາງຄຳກ້ອນຄວນເຮັດແນວໃດ?
4) ນັກຮຽນຄິດວ່າການກະທຳຂອງປ້າຄຳຖືກຕ້ອງບໍ່? ເພາະເຫດໃດ?
5) ນັກຮຽນຄິດວ່າ ນາງຄຳກ້ອນຄວນໄດ້ຮັບສິດໃນການປົກປ້ອງທາງດ້ານກົດໝາຍບໍ່? ຍ້ອນຫຍັງ?
6) ກົດໝາຍຂອງ ສປປ ລາວໄດ້ກຳນົດໄວ້ໃນມາດຕາ 83 ແມ່ນກ່ຽວກັບຫຍັງ? ມີເນື້ອໃນວ່າແນວໃດ?
7) ພັກ ແລະ ລັດຖະບານກໍຄືລັດພາຄີສາກົນໄດ້ເຮັດແນວໃດ ເພື່ອສະແດງເຖິງການປົກປ້ອງຄຸ້ມຄອງສິດຂອງເດັກ?

- ນັກຮຽນແຕ່ລະກຸ່ມອ່ານບົດເລື່ອງ ແລະ ຕອບຄຳຖາມຕາມການແບ່ງປັນ.
- ຕາງໜ້າແຕ່ລະກຸ່ມລາຍງານ.

- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບດັ່ງນີ້:

**ຄໍາຕອບ**

1) ຍ້ອນວ່າແມ່ນ້າຄິດວ່ານາງຄໍາກ້ອນນອນຢູ່ລ້າບໍ່ເຮັດວຽກເຮືອນ.
2) ບໍ່ຖືກຕ້ອງ ຍ້ອນວ່າ ລາວຄວນຖາມສາເຫດການນອນຂອງນາງຄໍາກ້ອນກ່ອນ. ອີກຢ່າງໜຶ່ງ ການທຸບຕີເດັກ ຫຼື ຄົນອື່ນຈົນໄດ້ຮັບບາດເຈັບນັ້ນແມ່ນຜິດກົດໝາຍ.
3) ລາວຄວນຫ້າມແມ່ນ້າບໍ່ໃຫ້ທຸບຕີລູກ ແລະ ຊ່ວຍເຫຼືອບໍ່ໃຫ້ຮັບຄວາມຮຸນແຮງ ແລະ ປັບຄວາມເຂົ້າໃຈກັນ.
4) ຖືກຕ້ອງ ຍ້ອນວ່າ ລາວຊ່ວຍຫ້າມ ພ້ອມທັງແນະນໍາວ່າເປັນການກະທໍາທີ່ບໍ່ຖືກຕ້ອງ ແລະ ໄດ້ເລົ່າເຫດການໃຫ້ຫົວໜ້າໜ່ວຍຟັງ.
5) ນາງຄໍາກ້ອນຄວນໄດ້ຮັບການປົກປ້ອງທາງດ້ານກົດໝາຍຍ້ອນວ່າ: ເດັກທຸກຄົນມີສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍຢ່າງເທົ່າທຽມກັນຢູ່ໃນທຸກສະຖານທີ່ ເຊັ່ນ: ໂຮງຮຽນ, ຄອບຄົວ, ສັງຄົມ ແລະ ໃນໂລກ ແລະ ສາມາດຮຽກຮ້ອງເອົາສິດຂອງຕົນໃນກໍລະນີຖືກລະເມີດ ຫຼື ບໍ່ໄດ້ຮັບຄວາມເປັນທໍາໂດຍບໍ່ມີການຈໍາແນກເຊື້ອຊາດ, ຜິວພັນ, ເພດ, ພາສາ, ສາສະໜາ...
6) ກົດໝາຍຂອງ ສປປ ລາວໄດ້ກໍານົດໄວ້ໃນມາດຕາ 83 ການທໍາຮ້າຍຮ່າງກາຍເນື້ອໃນລະບຸວ່າ “ບຸກຄົນໃດຫາກເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບ ໂດຍເຈດຕະນາ ຈະຖືກລົງໂທດ ຕັດອິດສະຫຼະພາບແຕ່ 3 ເດືອນ ຫາ 1 ປີ ”. ໃນກໍລະນີທີ່ມີການທຸບຕີ ຫຼື ໃນກໍລະນີທີ່ມີການກະທໍາຜິດດັ່ງກ່າວ ຫາກໄດ້ເຮັດໃຫ້ມີການບາດເຈັບສາຫັດຈະຖືກລົງໂທດຕັດອິດສະຫຼະພາບແຕ່ 1 ປີ ຫາ 5 ປີ. ໃນກໍລະນີການກະທໍາຜິດດັ່ງກ່າວຫາກໄດ້ມີການເສຍອົງຄະ ຫຼື ເສຍຊີວິດຈະຖືກລົງໂທດຕັດອິດສະຫຼະພາບແຕ່ 5 ປີ ຫາ 10 ປີ.
7) ພັກ ແລະ ລັດຖະບານຂອງລາວ ກໍຄືລັດພາຄີຂອງບັນດາປະເທດອື່ນໆໃນໂລກ ຍາມໃດກໍໄດ້ເອົາໃຈໃສ່ໃນການອອກກົດໝາຍຕ່າງໆ ເພື່ອສະແດງເຖິງການຄຸ້ມຄອງ ແລະ ປົກປ້ອງສິດຂອງພົນລະເມືອງທຸກຄົນ.

**3. ຄູສະຫຼຸບ (5 ນາທີ)**

- ຄູ ແລະ ນັກຮຽນສະຫຼຸບຄືນບົດຮຽນຜ່ານມາໃນ 1 ຊົ່ວໂມງດັ່ງນີ້:

1) ສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍກ່ຽວກັບຊີວິດ...
2) ກົດໝາຍຂອງ ສປປ ລາວໄດ້ກໍານົດໄວ້ໃນມາດຕາ 83 ການທໍາຮ້າຍຮ່າງກາຍ ...

3) ລັດພາຄີຮັບຮູ້ສິດຂອງເດັກນ້ອຍໃນການໄດ້ຮັບການປົກປ້ອງ ບໍ່ໃຫ້ຖືກຂູດຮີດ...

4) ພັກ ແລະ ລັດຖະບານຂອງລາວ ກໍຄືລັດພາຄີຂອງບັນດາປະເທດອື່ນໆໃນໂລກ ...

5) ທຸກຄົນຕ້ອງໄດ້ຮັບການປົກປ້ອງຄຸ້ມຄອງຈາກກົດໝາຍ...

ໂດຍຄູເນັ້ນໃຫ້ນັກຮຽນເຂົ້າໃຈຕື່ມວ່າ: ເດັກທຸກຄົນມີສິດໄດ້ຮັບການປົກປ້ອງທາງດ້ານກົດໝາຍຢ່າງເທົ່າທຽມກັນຢູ່ໃນທຸກສະຖານທີ່ ເຊັ່ນ: ໂຮງຮຽນ, ຄອບຄົວ, ສັງຄົມ ແລະ ໃນໂລກ ແລະ ສາມາດຮຽກຮ້ອງເອົາສິດຂອງຕົນໃນກໍລະນີຖືກລະເມີດ ຫຼື ບໍ່ໄດ້ຮັບຄວາມເປັນທຳໂດຍບໍ່ມີການຈຳແນກເຊື້ອຊາດ, ຜິວພັນ, ເພດ, ພາສາ, ສາສະໜາ...

ລັດພາຄີຮັບຮູ້ສິດຂອງເດັກນ້ອຍໃນການໄດ້ຮັບການປົກປ້ອງ ບໍ່ໃຫ້ຖືກຂູດຮີດດ້ານເສດຖະກິດ ແລະ ຖືກໃຊ້ເຮັດວຽກທີ່ເປັນອັນຕະລາຍ ຫຼື ເປັນການກະທົບຕໍ່ການສຶກສາ ຫຼື ເປັນຜົນເສຍຫາຍແກ່ສຸຂະພາບຫຼື ແກ່ການພັດທະນາທາງຮ່າງກາຍ, ຈິດປະສາດ, ຈິດໃຈ, ຈັນຍາທຳ ຫຼື ທາງດ້ານສັງຄົມຂອງເດັກ.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນນັກຮຽນຈາກການຕອບຄຳຖາມຂ້າງລຸ່ມນີ້:

ຄຳແນະນຳ: ນັກຮຽນຈົ່ງໃສ່ເຄື່ອງໝາຍ ✓ ໃສ່ຫ້ອງຂໍ້ຄວາມທີ່ຂຽນວ່າ: ຖືກ ແລະ ຜິດ

| ຂໍ້ຄວາມ | ຖືກ | ຜິດ |
|---|---|---|
| ພົນລະເມືອງລາວທຸກຄົນມີສິດບໍ່ໃຫ້ໃຜມາລ່ວງລະເມີດຮ່າງກາຍ. | ✓ | |
| ທຸກຄົນມີສິດປົກປ້ອງກຽດສັກສີຂອງຕົນເອງເທົ່ານັ້ນ, ສ່ວນຄົນອື່ນບໍ່ຈຳເປັນ | | ✓ |
| ຖ້າຕົນເອງຖືກລະເມີດທາງດ້ານຮ່າງກາຍຈະມິດງຽບບໍ່ເວົ້າໃຫ້ໃຜຟັງ | | ✓ |
| ເຄົາລົບກົດໝາຍບໍ່ແມ່ນໜ້າທີ່ຂອງເດັກ | | ✓ |
| ການຖືກລ່ວງລະເມີດພາໃຫ້ສັງຄົມມີຄວາມສະຫງົບ | | ✓ |
| ການຖືກລ່ວງລະເມີດໃນກໍລະນີໄດ້ຮັບບາດເຈັບຈຶ່ງໄດ້ຮັບການລົງໂທດ | | ✓ |
| ເດັກທຸກຄົນມີສິດໄດ້ຮັບການປົກປ້ອງ | ✓ | |

**ໝາຍເຫດ**

- ສຳລັບກິດຈະກຳການຮຽນການສອນທີ່ແນະນຳໃນບົດສອນນີ້ເປັນພຽງວິທີການໜຶ່ງທີ່ໄດ້ກຳນົດໄວ້ແຕ່ຖ້າຄູຫາກມີວິທີການອື່ນທີ່ສອດຄ່ອງ ແລະ ເໝາະສົມກໍສາມາດນຳມາໃຊ້ແທນໄດ້.

## 2. ຊັ້ນມັດທະຍົມສຶກສາ ປີທີ 2

ການແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງ ຊັ້ນມັດທະຍົມສຶກສາ ປີທີ 2 ສາມາດແຊກຊ້ອນໄດ້ 6 ບົດ ຄື: ບົດທີ 4, 5, 8, 12, 13 ແລະ 18.

- ບົດທີ 4 ຊົ່ວໂມງທີ 1 ຫົວຂໍ້ທີ 4. ຄຸນສົມບັດ ແລະ ລະບຽບວິໄນຕໍ່ການດໍາລົງຊີວິດ ໃຫ້ຄູນໍາໃຊ້ປື້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 2 ໃຫ້ຄູນໍາໃຊ້ປື້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.
- ບົດທີ 5 ຊົ່ວໂມງທີ 1 ຫົວຂໍ້ທີ 2. ມູນເຊື້ອການຮັກແພງມະນຸດດ້ວຍກັນ ໃຫ້ຄູນໍາໃຊ້ປື້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 2. ມູນເຊື້ອການຮັກແພງມະນຸດດ້ວຍກັນ ໃຫ້ຄູນໍາໃຊ້ປື້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.
- ບົດທີ 8 ມີ 1 ຊົ່ວໂມງ ໃຫ້ຄູນໍາໃຊ້ປື້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບເນື້ອໃນ ສພສ ແຊກຊ້ອນເຂົ້າຫົວຂໍ້ທີ 2. ບົດບາດ ແລະ ຄວາມສໍາຄັນຂອງການໃຫ້ອະໄພ.
- ບົດທີ 12 ຊົ່ວໂມງທີ 1 ຫົວຂໍ້ທີ 3. ການດໍາລົງຊີວິດມີຈຸດໝາຍ ແລະ ເຮັດວຽກມີແຜນການ ໃຫ້ຄູນໍາໃຊ້ປື້ມຄູ່ມືເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 2 ໃຫ້ຄູນໍາໃຊ້ປື້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.
- ບົດທີ 13 ຊົ່ວໂມງທີ 1 ຫົວຂໍ້ທີ 1. ສິດ ແລະ ຄວາມຮັບຜິດຊອບຂອງເດັກ ໃຫ້ຄູນໍາໃຊ້ປື້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 2 ໃຫ້ຄູນໍາໃຊ້ປື້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.
- ບົດທີ 18 ຊົ່ວໂມງທີ 2 ຫົວຂໍ້ທີ 2.3 ສິດ ແລະ ໜ້າທີ່ຂອງນາຍບ້ານ ໃຫ້ຄູນໍາໃຊ້ປື້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 1 ໃຫ້ຄູນໍາໃຊ້ປື້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.

# ບົດທີ 4 ຄຸນສົມບັດ ແລະ ລະບຽບວິໄນ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 4 ຄຸນສົມບັດ ແລະ ລະບຽບວິໄນຕໍ່ການດຳລົງຊີວິດ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍສຳຄັນຂອງຄຸນສົມບັດ ແລະ ລະບຽບວິໄນ, ການປະພຶດທີ່ມີຄວາມຮັບຜິດຊອບຕໍ່ລະບຽບວິໄນຂອງໂຮງຮຽນ ແລະ ຊຸມຊົນ.
- ເຄົາລົບນັບຖືຜູ້ທີ່ມີຄຸນສົມບັດ, ມີລະບຽບວິໄນ ແລະ ລະບຽບວິໄນທີ່ວາງອອກ.
- ຈຳແນກຄຸນສົມບັດ ແລະ ລະບຽບວິໄນທີ່ມີຄວາມຄ້າຍຄືກັນ ແລະ ແຕກຕ່າງກັນ.

## II. ເນື້ອໃນ

**ຄຸນສົມບັດ ແລະ ລະບຽບວິໄນ** ແມ່ນຂໍ້ກຳນົດສອງຢ່າງທີ່ຕິດພັນກັນ ແລະ ກົມກຽວກັນຢ່າງສະໜິດແໜ້ນຢູ່ໃນການເຄື່ອນໄຫວຂອງຄົນເຮົາ ຄົນທີ່ມີຄຸນສົມບັດແມ່ນຄົນທີ່ປະຕິບັດຕົນຢູ່ໃນຂອບລະບຽບວິໄນ ແຕ່ທັງສອງຢ່າງນີ້ມີຄວາມໝາຍແຕກຕ່າງກັນ.

**ຄຸນສົມບັດ** ແມ່ນຄຸນລັກສະນະປະຈຳຕົວຂອງຄົນເຮົາທີ່ສະແດງອອກໃນພຶດຕິກຳແຫ່ງຄວາມດີ ຄື: ກິລິຍາ, ມາລະຍາດ, ການປາກເວົ້າ, ການອອກແຮງງານ, ບຸກຄະລິກສ່ວນຕົວ ແລະ ແບບແຜນການດຳລົງຊີວິດ.

**ລະບຽບວິໄນ** ໝາຍເຖິງຂໍ້ກຳນົດຂອງລວມໝູ່ ໂດຍຮຽກຮ້ອງໃຫ້ສະມາຊິກທຸກຄົນຕ້ອງປະຕິບັດຕາມ, ເຖິງວ່າມັກ ຫຼື ບໍ່ມັກກໍຕ້ອງປະຕິບັດ ແລະ ຮັບປະກັນຄວາມເປັນລະບຽບຮັບປະກັນໃຫ້ທຸກຄົນໃນໜ່ວຍງານນັ້ນໆ ຕ້ອງປະຕິບັດຢ່າງເຂັ້ມງວດ ແລະ ມີຜົນດີ.

**ຄຸນສົມບັດ ແລະ ລະບຽບວິໄນ ມີລັກສະນະຄ້າຍຄື ແລະ ແຕກຕ່າງກັນ**:

- **ຈຸດຄ້າຍຄືກັນ**: ຄຸນສົມບັດ ແລະ ລະບຽບວິໄນແມ່ນຕັ້ງຂຶ້ນເພື່ອໃຫ້ທຸກຄົນປະຕິບັດໃນທາງທີ່ດີ, ຮູ້ເຄື່ອນໄຫວວຽກງານ, ທຳມາຫາກິນດ້ວຍຄວາມບໍລິສຸດ, ມີຄວາມສາມັກຄີຮັກແພງ ແລະ ຢູ່ຮ່ວມກັນໂດຍສັນຕິ.
- **ຈຸດແຕກຕ່າງກັນ**: ຄຸນສົມບັດແມ່ນລັກສະນະສະເພາະຂອງແຕ່ລະຄົນ ຊຶ່ງສະແດງອອກຜ່ານບຸກຄະລິກ, ນິດໄສຂອງຕົນຕໍ່ບຸກຄົນໃນສັງຄົມ ແລະ ລະບຽບວິໄນ ແມ່ນຂໍ້ກຳນົດລວມໝູ່ທີ່ສ້າງຂຶ້ນເພື່ອໃຫ້ທຸກຄົນປະຕິບັດຢ່າງເຂັ້ມງວດ.

ຄຸນສົມບັດ ແລະ ລະບຽບວິໄນແມ່ນມີຄວາມສຳຄັນ ແລະ ຈຳເປັນເພາະວ່າ ຄຸນສົມບັດ ແລະ ລະບຽບວິໄນແມ່ນຫຼັກການແຫ່ງຄວາມດີ ຊຶ່ງທຸກຄົນມີຄວາມຕ້ອງການ ເພື່ອພັດທະນາແບບແຜນການດຳລົງຊີວິດໃຫ້ມີຄວາມຈະເລີນກ້າວໜ້າ.

ສິ່ງທີ່ສຳຄັນສຳລັບນັກຮຽນໃນການຝຶກຝົນຫຼໍ່ຫຼອມຄຸນສົມບັດ ແລະ ລະບຽບວິໄນ ຕ້ອງໄດ້ປະພຶດຕົນໃຫ້ມີຄວາມຮັບຜິດຊອບ ເປັນຕົ້ນແມ່ນ ຕໍ່ລະບຽບວິໄນຂອງໂຮງຮຽນ ແລະ ຊຸມຊົນ ເຊັ່ນ:

- ປະຕິບັດລະບຽບວິໄນຂອງໂຮງຮຽນ, ມາໂຮງຮຽນເປັນປົກກະຕິ, ຕົງຕໍ່ເວລາໃນການເຂົ້າຮຽນ, ເຂົ້າຫ້ອງຮຽນພ້ອມດ້ວຍອຸປະກອນການຮຽນຄົບຊຸດ, ປົກປັກຮັກສາອຸປະກອນ ການຮຽນ ແລະ ອາຄານຮຽນ...
- ປະຕິບັດຕາມລະບຽບຂອງຊຸມຊົນເພື່ອໃຫ້ຢູ່ຮ່ວມກັນຢ່າງສະຫງົບສຸກ, ເປັນລະບຽບຮຽບຮ້ອຍໃນຊຸມຊົນ, ຊ່ວຍກັນຮັກສາຄວາມສະອາດໃນຊຸມຊົນ, ບໍ່ລະເມີດສິດທິຂອງຜູ້ອື່ນ, ບໍ່ຫຍຸ້ງກ່ຽວກັບສິ່ງເສບຕິດ, ບໍ່ທຳລາຍສິ່ງຂອງສ່ວນລວມ, ຊ່ວຍກັນຮັກສາວັດທະນະທຳ, ຮີດຄອງປະເພນີຂອງທ້ອງຖິ່ນ ແລະ ຂອງຊາດ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຊັ້ນ ມ.2
2. ປຶ້ມຄູ່ມືການແຊກຊ້ອນການສຶກສາພົນລະເມືອງໂລກ
3. ຮູບພາບການປະພຶດຂອງບຸກຄົນທີ່ມີຄຸນສົມບັດ ແລະ ລະບຽບວິໄນ
4. ຮູບພາບຂອງຜູ້ນຳທີ່ຄູຊອກມາໄດ້ເພື່ອໃຫ້ນັກຮຽນເບິ່ງ ແລະ ສຶກສາຄົ້ນຄວ້າ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ຄູຕັ້ງຄຳຖາມ**

1) ການນັບຖືຕົນເອງສະແດງອອກຄືແນວໃດ?

2) ຖ້າພວກເຮົາບໍ່ນັບຖື ແລະ ບໍ່ໃຫ້ກຽດຕົນເອງຈະເປັນຄືແນວໃດ?

- ຄູສະຫຼຸບຄືນຕາມເນື້ອໃນບົດຮຽນ ບົດທີ 3 ຂໍ້ທີ 1.

**2. ສະເໜີບົດຮຽນໃໝ່**

**ກ. ສົນທະນາລວມ (10 ນາທີ)**

- ຄູສະເໜີບົດ: ຄຸນສົມບັດ ແລະ ລະບຽບວິໄນ. ຈາກນັ້ນ, ໃຫ້ນັກຮຽນສັງເກດຮູບພາບໃນປຶ້ມແບບຮຽນ ໜ້າທີ 14 ແລະ ຮູບພາບລຸ່ມນີ້:



ການປະຕິບັດລະບຽບວິໄນ ແລະ ບໍ່ປະຕິບັດລະບຽບວິໄນຂອງໂຮງຮຽນ



ຜູ້ທີ່ມີຄຸນສົມບັດ ແລະ ບໍ່ມີຄຸນສົມບັດ

- ຄູຕັ້ງຄຳຖາມ

  1) ຄົນໃນຮູບພາບນີ້ກຳລັງເຮັດຫຍັງ?

  2) ຮູບພາບໃດສະແດງເຖິງຄຸນສົມບັດ? ຍ້ອນຫຍັງ?

  3) ຮູບພາບໃດສະແດງເຖິງລະບຽບວິໄນ? ຍ້ອນຫຍັງ?

- ຄູ ແລະ ນັກຮຽນສະຫຼຸບຄຳຕອບກ່ຽວກັບຮູບພາບຮ່ວມກັນ.

**ຂ. ສຶກສາເນື້ອໃນບົດຮຽນ (25 ນາທີ)**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ ແລ້ວໃຫ້ນັກຮຽນອ່ານເນື້ອໃນບົດຮຽນ ຂໍ້ 1, 2, 3, 4, 5 ແລະ ບົດເລື່ອງ ນັກຮຽນມີຄຸນສົມບັດ ໃນປຶ້ມແບບຮຽນ ແລ້ວຢາຍຄຳຖາມໃຫ້ແຕ່ລະກຸ່ມດັ່ງນີ້:

**ຄຳຖາມ**

  1) ຄຸນສົມບັດ ແລະ ລະບຽບວິໄນແມ່ນຫຍັງ?

  2) ຄຸນສົມບັດ ແລະ ລະບຽບວິໄນມີການພົວພັນກັນແນວໃດ?

  3) ຄຸນສົມບັດ ແລະ ລະບຽບວິໄນມີຄວາມຄ້າຍຄືກັນ ແລະ ແຕກຕ່າງກັນແນວໃດ?

  4) ຍ້ອນຫຍັງຈຶ່ງຕ້ອງນຳເອົາຄຸນສົມບັດ ແລະ ລະບຽບວິໄນເຂົ້າໃນການດຳລົງຊີວິດ?

  5) ການປະພຶດທີ່ມີຄວາມຮັບຜິດຊອບຕໍ່ລະບຽບວິໄນຂອງໂຮງຮຽນ ແລະ ຊຸມຊົນສະແດງອອກແນວໃດ?

  6) ເຮົາຄວນເຄົາລົບນັບຖືຜູ້ທີ່ມີຄຸນສົມບັດ ແລະ ລະບຽບວິໄນແນວໃດ?

  7) ຈົ່ງອ່ານເລື່ອງ ນັກຮຽນມີຄຸນສົມບັດ ແລ້ວສັງລວມສິ່ງທີ່ໄດ້ຮຽນຮູ້ຈາກທ້າວແກ້ວໃຈ ແລະ ນາງວັນນີ.

- ນັກຮຽນແຕ່ລະກຸ່ມຄົ້ນຄວ້າ.
- ຄູໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານຜົນການຄົ້ນຄວ້າສ່ວນຜູ້ອື່ນໆໃຫ້ຕິດຕາມ ແລະ ກຽມປະກອບຄຳເຫັນເພີ່ມຕື່ມ.
- ຄູ ແລະ ນັກຮຽນສະຫຼຸບຄຳຕອບຮ່ວມກັນ.

**ຄຳຕອບ**

  1) ຄຸນສົມບັດ ແລະ ລະບຽບວິໄນ ແມ່ນຂໍ້ກຳນົດສອງຢ່າງທີ່ຕິດພັນກັນ ແລະ ກົມກຽວກັນຢ່າງສະໜິດແໜ້ນຢູ່ໃນການເຄື່ອນໄຫວຂອງຄົນເຮົາ ຄົນທີ່ມີຄຸນສົມບັດແມ່ນຄົນທີ່ປະຕິບັດຕົນຢູ່ໃນຂອບລະບຽບວິໄນ ຊຶ່ງສະແດງອອກທາງມາລະຍາດ ເຊັ່ນ:

ການປາກເວົ້າ, ການນຸ່ງຖື ການເຄື່ອນໄຫວອອກແຮງງານອື່ນໆ.

2) ຄຸນສົມບັດ ແລະ ລະບຽບວິໄນ ມີການພົວພັນກັນຢ່າງສະໜິດແໜ້ນ ຍ້ອນວ່າຄົນທີ່ມີຄຸນສົມບັນດີແມ່ນຄົນທີ່ມີຄວາມຕື່ນຕົວປະຕິບັດລະບຽບວິໄນດີ.

3) ຄຸນສົມບັດ ແລະ ລະບຽບວິໄນ ມີລັກສະນະຄ້າຍຄື ແລະ ແຕກຕ່າງກັນ ຄື:

- ຈຸດຄ້າຍຄືກັນ: ຄຸນສົມບັດ ແລະ ລະບຽບວິໄນແມ່ນຕັ້ງຂຶ້ນເພື່ອໃຫ້ທຸກຄົນປະຕິບັດໃນທາງທີ່ດີ, ຮູ້ເຄື່ອນໄຫວວຽກງານ, ທຳມາຫາກິນດ້ວຍຄວາມບໍລິສຸດ, ມີຄວາມສາມັກຄີຮັກແພງ ແລະ ຢູ່ຮ່ວມກັນໂດຍສັນຕິ.
- ຈຸດແຕກຕ່າງກັນ: ຄຸນສົມບັດ ແມ່ນລັກສະນະສະເພາະຂອງແຕ່ລະຄົນ ຊຶ່ງສະແດງອອກຜ່ານບຸກຄະລິກ, ນິດໄສຂອງຕົນຕໍ່ບຸກຄົນໃນສັງຄົມ ແລະ ລະບຽບວິໄນແມ່ນຂໍ້ກຳນົດລວມໝູ່ທີ່ສ້າງຂຶ້ນເພື່ອໃຫ້ທຸກຄົນປະຕິບັດຢ່າງເຂັ້ມງວດ.

4) ຍ້ອນວ່າ ຄຸນສົມບັດ ແລະ ລະບຽບວິໄນມີຄວາມຈຳເປັນໃນການຊ່ວຍປັບປຸງ, ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີສະຕິຕໍ່ລະບຽບວິໄນ, ຮັກສາທາດແທ້ຄຸນສົມບັດອັນດີງາມ, ຊ່ວຍໃຫ້ຫຼີກເວັ້ນການກະທຳທີ່ບໍ່ດີ, ຝຶກຝົນໃຫ້ຕົນເອງມີມາລະຍາດໃນການປາກເວົ້າ, ນຸ່ງຖື, ການເຄື່ອນໄຫວ, ດຳລົງຊີວິດ ແລະ ຮູ້ວາງໂຕຖືກຕ້ອງກັບກາລະເທສະໃນສັງຄົມ.

5) ການປະພຶດທີ່ມີຄວາມຮັບຜິດຊອບຕໍ່ລະບຽບວິໄນຂອງໂຮງຮຽນ ແລະ ຊຸມຊົນແມ່ນ:

- ປະຕິບັດລະບຽບວິໄນຂອງໂຮງຮຽນ, ມາໂຮງຮຽນເປັນປົກກະຕິ, ຕົງຕໍ່ເວລາໃນການເຂົ້າຮຽນ, ເຂົ້າຫ້ອງຮຽນພ້ອມດ້ວຍອຸປະກອນການຮຽນຄົບຊຸດ, ປົກປັກຮັກສາອຸປະກອນການຮຽນ ແລະ ອາຄານຮຽນ...
- ປະຕິບັດຕາມລະບຽບຂອງຊຸມຊົນເພື່ອໃຫ້ຢູ່ຮ່ວມກັນຢ່າງສະຫງົບສຸກ, ເປັນລະບຽບຮຽບຮ້ອຍໃນຊຸມຊົນ, ຊ່ວຍກັນຮັກສາຄວາມສະອາດໃນຊຸມຊົນ, ບໍ່ລະເມີດສິດທິຂອງຜູ້ອື່ນ, ບໍ່ຫຍຸ້ງກ່ຽວກັບສິ່ງເສບຕິດ, ບໍ່ທຳລາຍສິ່ງຂອງສ່ວນລວມ, ຊ່ວຍກັນຮັກສາວັດທະນະທຳ, ຮີດຄອງປະເພນີຂອງທ້ອງຖິ່ນ ແລະ ຂອງຊາດ.

6) ຮັບຮູ້ຄວາມສາມາດ, ຄວາມເປັນແບບຢ່າງທີ່ດີ, ປະຕິບັດຕາມຄຳຕັກເຕືອນ, ສັ່ງສອນ ແລະ ທຳຕົນເປັນຄົນທີ່ມີຄຸນສົມບັດ, ມີລະບຽບວິໄນດີ, ຫຼີກເວັ້ນການກະທຳທີ່ຝ່າຝືນລະບຽບວິໄນ, ຂາດຄຸນສົມບັດ.

7) ສິ່ງທີ່ໄດ້ຮຽນຮູ້ຈາກທ້າວແກ້ວໃຈ ແລະ ນາງວັນນີ ແມ່ນ ທັງສອງມີຄຸນສົມບັດ ແລະ ລະບຽບວິໄນດີ, ມີການຊ່ວຍເຫຼືອໝູ່ເພື່ອນ, ຄອບຄົວ ແລະ ອື່ນໆ.

**3. ສະຫຼຸບ (10 ນາທີ)**

ຄູ ແລະ ນັກຮຽນສະຫຼຸບຄືນກ່ຽວກັບຄວາມໝາຍຄວາມສຳຄັນຂອງຄຸນສົມບັດ ແລະ ລະບຽບວິໄນ, ການປະພຶດທີ່ມີຄວາມຮັບຜິດຊອບຕໍ່ລະບຽບວິໄນຂອງໂຮງຮຽນ ແລະ ຊຸມຊົນ, ຄວາມຄ້າຍຄື-ຄວາມແຕກຕ່າງກັນຂອງຄຸນສົມບັດ ແລະ ລະບຽບວິໄນ.

ພ້ອມນີ້ ໃຫ້ຄູເນັ້ນສິ່ງທີ່ສຳຄັນສຳລັບນັກຮຽນໃນການເຝິກຝົນຫຼໍ່ຫຼອມຄຸນສົມບັດ ແລະ ລະບຽບວິໄນ ຕ້ອງໄດ້ປະພຶດຕົນໃຫ້ມີຄວາມຮັບຜິດຊອບ ເປັນຕົ້ນແມ່ນ ຕໍ່ລະບຽບວິໄນຂອງໂຮງຮຽນ ແລະ ຊຸມຊົນ ເຊັ່ນ:

- ປະຕິບັດລະບຽບວິໄນຂອງໂຮງຮຽນ, ມາໂຮງຮຽນເປັນປົກກະຕິ, ຕົງຕໍ່ເວລາໃນການເຂົ້າຮຽນ, ເຂົ້າຫ້ອງຮຽນພ້ອມດ້ວຍອຸປະກອນການຮຽນຄົບຊຸດ, ປົກປັກຮັກສາອຸປະກອນການຮຽນ ແລະ ອາຄານຮຽນ...
- ປະຕິບັດຕາມລະບຽບຂອງຊຸມຊົນເພື່ອໃຫ້ຢູ່ຮ່ວມກັນຢ່າງສະຫງົບສຸກ, ເປັນລະບຽບຮຽບຮ້ອຍໃນຊຸມຊົນ, ຊ່ວຍກັນຮັກສາຄວາມສະອາດໃນຊຸມຊົນ, ບໍ່ລະເມີດສິດທິຂອງຜູ້ອື່ນ, ບໍ່ຫຍຸ້ງກ່ຽວກັບສິ່ງເສບຕິດ, ບໍ່ທຳລາຍສິ່ງຂອງສ່ວນລວມ, ຊ່ວຍກັນຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງທ້ອງຖິ່ນ, ຂອງຊາດ, ພາກພື້ນ ແລະ ສາກົນ.

**ວຽກບ້ານ**

1. ແນະນຳແກ້ບົດຝຶກຫັດໃນປຶ້ມແບບຮຽນ
2. ນັກຮຽນຈົ່ງຂຽນບົດເລື່ອງສັ້ນ ກ່ຽວກັບບຸກຄົນທີ່ມີຄຸນສົມບັດ ແລະ ລະບຽບວິໄນດີທີ່ຕົນເອງຄິດວ່າຄວນເຄົາລົບ ແລະ ເອົາເປັນແບບຢ່າງ.

## V. ການວັດ ແລະ ປະເມີນຜົນ

ປະເມີນນັກຮຽນຈາກການຕອບຄຳຖາມລຸ່ມນີ້:

- ໃຫ້ນັກຮຽນຂີດວົງມົນ ◯ ອ້ອມເອົາຂໍ້ທີ່ເຫັນວ່າຖືກຕ້ອງ.

1. ຄຸນສົມບັດແມ່ນຫຍັງ?

ກ. ຂໍ້ບັງຄັບສະເພາະ

ຂ. ຂໍ້ກຳນົດພື້ນຖານ

ⓒ ຄ. ລັກສະນະປະຈຳໂຕຂອງຄົນ

ງ. ຂໍ້ບັງຄັບທາງກົດໝາຍ

2. ລະບຽບວິໄນແມ່ນຫຍັງ?

ກ. ແບບແຜນການປະຕິບັດ

ຂ. ແບບແຜນການດຳລົງຊີວິດ

ຄ. ລັກສະນະປະຈຳໂຕຂອງຄົນ

ⓒ ງ. ຂໍ້ກຳນົດທີ່ທຸກຄົນຕ້ອງປະຕິບັດ

3. ຂໍ້ໃດ ບໍ່ແມ່ນ ການປະພຶດທີ່ມີຄວາມຮັບຜິດຊອບຕໍ່ລະບຽບວິໄນຂອງໂຮງຮຽນ?

ກ. ມາໂຮງຮຽນເປັນປົກກະຕິ, ຕົງຕໍ່ເວລາໃນການເຂົ້າຮຽນ

ຂ. ປົກປັກຮັກສາອຸປະກອນການຮຽນ ແລະ ອາຄານຮຽນ

ຄ. ບໍ່ຕົງຕໍ່ເວລາໃນການເຂົ້າຮຽນເປັນບາງຄັ້ງ

ⓒ ງ. ອຸປະກອນການຮຽນບໍ່ຄົບຊຸດ

4. ຂໍ້ໃດ ບໍ່ແມ່ນ ການປະພຶດທີ່ມີຄວາມຮັບຜິດຊອບຕໍ່ລະບຽບວິໄນຂອງຊຸມຊົນ?

ກ. ບໍ່ລະເມີດສິດທິຂອງຜູ້ອື່ນ, ບໍ່ທຳລາຍສິ່ງຂອງສ່ວນລວມ

ຂ. ບໍ່ທຳລາຍສິ່ງຂອງສ່ວນລວມ, ບໍ່ຫຍຸ້ງກ່ຽວກັບສິ່ງເສບຕິດ

ⓒ ຄ. ຖືເບົາຕໍ່ການຮັກສາວັດທະນະທຳ ແລະ ຮີດຄອງປະເພນີຂອງທ້ອງຖິ່ນ

ງ. ຊ່ວຍກັນຮັກສາຄວາມສະອາດໃນຊຸມຊົນ, ບໍ່ທຳລາຍສິ່ງຂອງສ່ວນລວມ

# ບົດທີ 5 ການຮັກແພງມະນຸດດ້ວຍກັນ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 2 ມູນເຊື້ອການຮັກແພງມະນຸດດ້ວຍກັນ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍຂອງການຮັກແພງມະນຸດດ້ວຍກັນ, ມູນເຊື້ອການຮັກແພງມະນຸດດ້ວຍກັນ ແລະ ການຢູ່ຮ່ວມກັນຢ່າງສັນຕິ.
- ເຫັນຄຸນຄ່າຂອງການຮັກແພງມະນຸດດ້ວຍກັນ ແລະ ການຢູ່ຮ່ວມກັນຢ່າງສັນຕິ.
- ຍົກຕົວຢ່າງທີ່ສະແດງອອກໃນການຮັກແພງມະນຸດດ້ວຍກັນຢູ່ໃນການດຳລົງຊີວິດ.

## II. ເນື້ອໃນ

**ຄວາມໝາຍຂອງການຮັກແພງມະນຸດ**

ການຮັກແພງມະນຸດ ແມ່ນການເຫັນອົກເຫັນໃຈຕໍ່ມະນຸດດ້ວຍກັນ, ໃຫ້ການອຸ້ມຊູຊ່ວຍເຫຼືອໃນຍາມຂັດສົນ, ສົ່ງເສີມການແບ່ງເບົາຄວາມທຸກສຸກ, ປົກປ້ອງຜົນປະໂຫຍດ, ບໍ່ກ້າວກ່າຍສິດຜົນປະໂຫຍດອັນຊອບທຳຂອງກັນ ແລະ ກັນ. ຢູ່ຮ່ວມກັນໂດຍສັນຕິ, ບໍ່ສ້າງຄວາມເດືອດຮ້ອນໃຫ້ກັນ.

**ມູນເຊື້ອການຮັກແພງມະນຸດດ້ວຍກັນ**

ຄວາມຮັກແພງມະນຸດດ້ວຍກັນເປັນມູນເຊື້ອອັນລ້ຳຄ່າຂອງຊາດມາແຕ່ດຶກດຳບັນການຮັກແພງມະນຸດ ແມ່ນການຮັກແພງຄົນກັບຄົນດ້ວຍກັນ ໂດຍເລີ່ມຈາກພໍ່ແມ່, ອ້າຍເອື້ອຍນ້ອງທຸກຄົນໃນຄອບຄົວ, ໝູ່ເພື່ອນ, ຄູອາຈານ, ເຖົ້າແກ່ອາວຸໂສ, ບັນດາຜູ້ນຳ ແລະ ບຸກຄົນໃນສັງຄົມ.

**ຄວາມຮັກແພງພາຍໃນຄອບຄົວ**: ແມ່ນເລີ່ມຈາກສາຍພົວພັນພໍ່ແມ່ລູກ, ພໍ່ແມ່ໃຫ້ການກຳເນີດ ແລະ ເບິ່ງແຍງລ້ຽງດູ, ສົ່ງເສີມໃຫ້ໄດ້ຮັບການສຶກສາ, ການດຳລົງຊີວິດຢູ່ໃນສັງຄົມດີ, ສ່ວນລູກກໍຕ້ອງຮູ້ກະຕັນຍູ, ຮັກແພງເຄົາລົບນັບຖືພໍ່ແມ່, ເບິ່ງແຍງດູແລໃນຍາມເພິ່ນເຖົ້າແກ່.

**ຄວາມຮັກແພງຕໍ່ກັບໝູ່ເພື່ອນ, ຜູ້ເຖົ້າແກ່ອາວຸໂສ, ຜູ້ນຳ, ບຸກຄົນໃນສັງຄົມ**

- ຄວາມຮັກແພງຕໍ່ກັບໝູ່ເພື່ອນຕ້ອງໃຫ້ການຊຸກຍູ້ ຊ່ວຍເຫຼືອກັນ ເຊັ່ນ: ການປົກປ້ອງສິ່ງທີ່ຖືກຕ້ອງ, ເປັນທີ່ເພິ່ງພາອາໄສກັນ, ເປັນກຳລັງໃຈ ແລະ ໃຫ້ຄຳຕັກເຕືອນສິ່ງທີ່

ດີງາມ, ຊ່ວຍເຫຼືອດ້ານການຄົ້ນຄວ້າຮ່ຳຮຽນ, ຮ່ວມສຸກຮ່ວມທຸກນຳກັນ.

- ຕໍ່ກັບຄູບາ, ອາຈານ ຕ້ອງຮູ້ສົມມາຄາລະວະ, ໃຫ້ກຽດ, ຮັບຟັງຄຳສັ່ງສອນຂອງເພິ່ນ ໂດຍຕັ້ງໃຈສຶກສາຮ່ຳຮຽນ, ດຸໝັ່ນ, ຊອກຮູ້ຮ່ຳຮຽນໃຫ້ເກັ່ງ, ມີຄວາມກ້າວໜ້າ ແລະ ຮອດຍາມບຸນ ຫຼື ວັນສຳຄັນຈັດຕັ້ງກັນໄປອວຍພອນເພິ່ນ.
- ຕໍ່ກັບເຖົ້າແກ່ອາວຸໂສ ຕອບບຸນແທນຄຸນ, ຟັງຄຳສັ່ງສອນ, ເບິ່ງແຍງ, ຊ່ວຍເຫຼືອ ແລະ ໃຫ້ກຳລັງໃຈເພິ່ນຢູ່ສະເໝີ.
- ຕໍ່ກັບບັນດາຜູ້ນຳ ຮູ້ເຄົາລົບນັບຖື, ຟັງຄຳສັ່ງສອນ, ຊອກຮູ້ຮ່ຳຮຽນ, ເອົາແບບຢ່າງໃນການດຳລົງຊີວິດທີ່ງ່າຍດາຍ, ໃຫ້ກຽດ ແລະ ປະຕິບັດຕາມຄຳສັ່ງສອນຂອງເພິ່ນຢູ່ສະເໝີ.
- ຕໍ່ກັບບຸກຄົນອື່ນທົ່ວໄປໃນສັງຄົມ ຕ້ອງເຄົາລົບ, ນັບຖື, ໃຫ້ກຽດເຊິ່ງກັນ ແລະ ກັນ, ບໍ່ອິດສາບັງບຽດ, ບໍ່ໝິ່ນປະໝາດ ແລະ ໃຫ້ການຊ່ວຍເຫຼືອຕາມຄວາມສາມາດ.

ການຢູ່ຮ່ວມກັນຢ່າງສັນຕິ ແມ່ນການທີ່ມະນຸດມາຢູ່ຮ່ວມກັນເປັນສັງຄົມ, ຊຶ່ງສາມາດປະຕິບັດຕາມກົດເກນການຢູ່ຮ່ວມກັນດ້ວຍການປະຕິບັດຕາມຂໍ້ກຳນົດກົດລະບຽບ, ກົດໝາຍ ບົນພື້ນຖານຂອງຄຸນນະທຳ ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນ. ສະຫະປະຊາຊາດໄດ້ປະກາດໃນວັນທີ 16 ເດືອນພຶດສະພາ ເປັນວັນສາກົນແຫ່ງການດຳລົງຊີວິດຮ່ວມກັນໂດຍສັນຕິພາບ, ເຄົາລົບໃນຄວາມແຕກຕ່າງ, ຄວາມຫຼາກຫຼາຍ ແລະ ຄວາມສາມັກຄີແບບຍືນຍົງ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຊັ້ນ ມ.2
2. ເອກະສານຕ່າງໆ ທີ່ພົວພັນກັບເນື້ອໃນບົດຮຽນ
3. ບົດເລື່ອງສັ້ນ, ຮູບພາບຕ່າງໆ ທີ່ກ່ຽວພັນກັບເນື້ອໃນຂອງບົດຮຽນ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ລະດົມສະໝອງ (5 ນາທີ)**

- ຄູໃຫ້ນັກຮຽນສັງເກດຮູບພາບໜ້າທີ 20 ໃນປຶ້ມແບບຮຽນ ແລ້ວຖາມວ່າ:

**ຄຳຖາມ**

1) ນັກຮຽນເຫັນຫຍັງແດ່ໃນຮູບພາບ?

2) ຄົນໃນຮູບພາບກຳລັງເຮັດຫຍັງ?

3. ເປັນຫຍັງຈຶ່ງມອບດອກໄມ້?

- ຄູໃຫ້ນັກຮຽນ 3-4 ຄົນ ຕອບຄຳຖາມ.

- ຄູໃຫ້ນັກຮຽນຈຳນວນໜຶ່ງປະກອບຄວາມເຫັນເພີ່ມເຕີມຖ້າຂໍ້ໃດຍັງບໍ່ຄົບຖ້ວນ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບກ່ຽວກັບຮູບພາບສະແດງເຖິງຄວາມຮັກແພງ ແລະ ຮູ້ບຸນຄຸນມະນຸດດ້ວຍກັນ.

**ຄຳຕອບ**

- ນັ້ນແມ່ນການສະແດງເຖິງການຮັກແພງຄົນກັບຄົນດ້ວຍກັນ ໂດຍເລີ່ມຈາກພໍ່ແມ່, ອ້າຍ, ເອື້ອຍນ້ອງ, ເພື່ອນມິດ, ເຖົ້າແກ່ຜູ້ອາວຸໂສ, ຄູບາ-ອາຈານ, ບັນດາທ່ານຜູ້ນຳ.

**2. ສະເໜີບົດຮຽນໃໝ່**

***ກ. ສົນທະນາຖາມ-ຕອບ (10 ນາທີ)***

- ຄູຕັ້ງຄຳຖາມ:
  1) ການຮັກແພງມະນຸດມີຄວາມໝາຍຄືແນວໃດ?
  2) ມູນເຊື້ອການຮັກແພງມະນຸດດ້ວຍກັນມີຄວາມໝາຍຄືແນວໃດ?
- ຄູໃຫ້ນັກຮຽນອ່ານເນື້ອໃນ ຂໍ້ທີ 1 ໜ້າທີ 20 ໃນປຶ້ມແບບຮຽນ ແລະ ສົນທະນາກັນ; ຈາກນັ້ນ ໃຫ້ນັກຮຽນ 2-3 ຄົນສະໝັກຕອບແຕ່ລະຄຳຖາມ. (ຄູຕ້ອງຂຽນຄຳຕອບຂອງນັກຮຽນໃສ່ກະດານພ້ອມ).
- ຄູສັງລວມຄຳຕອບ ແລະ ສະຫຼຸບເນື້ອໃນຂອງບົດຮຽນຄືນໃຫ້ຖືກຕ້ອງ.

**ຄຳຕອບ**

1) ການຮັກແພງມະນຸດ ແມ່ນການເຫັນອົກເຫັນໃຈຕໍ່ມະນຸດດ້ວຍກັນ, ໃຫ້ການອຸ້ມຊູຊ່ວຍເຫຼືອໃນຍາມຂັດສົນ, ສົ່ງເສີມການແບ່ງເບົາຄວາມທຸກສຸກ, ປົກປ້ອງຜົນປະໂຫຍດ, ບໍ່ກ້າວກ່າຍສິດຜົນປະໂຫຍດອັນຊອບທຳຂອງກັນ ແລະ ກັນ ຢູ່ຮ່ວມກັນໂດຍສັນຕິ, ບໍ່ສ້າງຄວາມເດືອດຮ້ອນໃຫ້ກັນ.
2) ມູນເຊື້ອການຮັກແພງມະນຸດດ້ວຍກັນ ເປັນມູນເຊື້ອອັນລ້ຳຄ່າຂອງຊາດມາແຕ່ດຶກດຳບັນການຮັກແພງມະນຸດ ແມ່ນການຮັກແພງຄົນກັບຄົນດ້ວຍກັນ ໂດຍເລີ່ມຈາກພໍ່ແມ່, ອ້າຍເອື້ອຍນ້ອງທຸກຄົນໃນຄອບຄົວ, ໝູ່ເພື່ອນ, ຄູອາຈານ, ເຖົ້າແກ່ອາວຸໂສ, ບັນດາຜູ້ນຳ ແລະ ບຸກຄົນໃນສັງຄົມ.

**3. ສົນທະນາກ່ຽວກັບມູນເຊື້ອຂອງການຮັກແພງມະນຸດດ້ວຍກັນ (25 ນາທີ)**

- ຄູແບ່ງນັກຮຽນເປັນ 4 ກຸ່ມ ແລ້ວໃຫ້ອ່ານເນື້ອໃນ ຂໍ້ທີ 2 ໜ້າທີ 21 ໃນປຶ້ມແບບຮຽນ ແລະ ສົນທະນາກັນ.
- ຄູຍາຍຄຳຖາມໃຫ້ນັກຮຽນ ກຸ່ມລະ 3 ຂໍ້ (ຂໍ້1, 2 ຄົ້ນຄວ້າຕາມບົດຮຽນ, ຂໍ້ (+) ຄົ້ນຄວ້າ

ຕາມຄວາມເຂົ້າໃຈ) ດັ່ງນີ້:

**ກຸ່ມທີ 1**:

1) ເປັນຫຍັງຈຶ່ງຮັກແພງພໍ່ແມ່? ນອກຈາກພໍ່ແມ່ແລ້ວຍັງມີໃຜອີກແດ່ທີ່ຄວນຮັກແພງ?

2) ມູນເຊື້ອຂອງການຮັກແພງມະນຸດດ້ວຍກັນສະແດງອອກແນວໃດ?

+ ການຢູ່ຮ່ວມກັນຢ່າງສັນຕິແມ່ນຫຍັງ? (ນັກຮຽນຕອບຕາມຄວາມເຂົ້າໃຈ)

**ກຸ່ມທີ 2**

3) ຄວາມຮັກແພງຕໍ່ພາຍໃນຄອບຄົວສະແດງອອກແນວໃດ?

4) ຄວາມຮັກແພງຕໍ່ກັບໝູ່ເພື່ອນສະແດງອອກແນວໃດ?

+ ການຢູ່ຮ່ວມກັນຢ່າງສັນຕິແມ່ນຫຍັງ? (ນັກຮຽນຕອບຕາມຄວາມເຂົ້າໃຈ)

**ກຸ່ມທີ 3**

5) ຄວາມຮັກແພງຕໍ່ກັບຄູອາຈານສະແດງອອກແນວໃດ?

6) ຄວາມຮັກແພງຕໍ່ກັບບຸກຄົນອື່ນທົ່ວໄປໃນສັງຄົມສະແດງອອກແນວໃດ?

+ ການຢູ່ຮ່ວມກັນຢ່າງສັນຕິແມ່ນຫຍັງ? (ນັກຮຽນຕອບຕາມຄວາມເຂົ້າໃຈ)

**ກຸ່ມທີ 4**

7) ຄວາມຮັກແພງຕໍ່ກັບເຖົ້າແກ່ອາວຸໂສສະແດງອອກແນວໃດ?

8) ຄວາມຮັກແພງຕໍ່ກັບບັນດາຜູ້ນໍາສະແດງອອກແນວໃດ?

+ ການຢູ່ຮ່ວມກັນຢ່າງສັນຕິແມ່ນຫຍັງ? (ນັກຮຽນຕອບຕາມຄວາມເຂົ້າໃຈ)

- ຄູໃຫ້ນັກຮຽນຄົ້ນຄວ້າຄໍາຖາມ
- ຄູໃຫ້ນັກຮຽນຈໍານວນໜຶ່ງປະກອບຄວາມຄິດເຫັນເພີ່ມເຕີມຖ້າຂໍ້ໃດຍັງບໍ່ຄົບຖ້ວນ.
- ຄູສະຫຼຸບຄືນ:

**ຄໍາຕອບ**

1) ຍ້ອນພໍ່ແມ່ໃຫ້ການກໍາເນີດ ແລະ ເບິ່ງແຍງລ້ຽງດູ, ສິ່ງເສີມໃຫ້ໄດ້ຮັບການສຶກສາ ແລະ ດໍາລົງຊີວິດຢູ່ໃນສັງຄົມໃຫ້ເປັນຄົນດີ ນອກຈາກນີ້ກໍຄວນຮັກແພງໝູ່ເພື່ອນ, ຜູ້ອາວຸ ໂສ, ຜູ້ນໍາ ແລະ ບຸກຄົນໃນສັງຄົມ.

2) ມູນເຊື້ອຂອງການຮັກແພງມະນຸດດ້ວຍກັນສະແດງອອກໃນການປະຕິບັດຕໍ່ພໍ່ແມ່, ໝູ່ເພື່ອນ, ຜູ້ອາວຸໂສ, ຜູ້ນໍາ ແລະ ບຸກຄົນໃນສັງຄົມ ເຊັ່ນ: ສິ່ງເສີມໃຫ້ລູກໄດ້ຮັບການສຶກສາ, ກະຕັນຍູເບິ່ງແຍງພໍ່ແມ່, ການປົກປ້ອງສິ່ງທີ່ຖືກຕ້ອງ, ໃຫ້ກໍາລັງໃຈ, ໃຫ້ຄໍາຕັກເຕືອນ, ຮູ້ສົມມາຄາລະວະ, ຟັງຄໍາສັ່ງສອນ, ຊ່ວຍເຫຼືອເຊິ່ງກັນແລະກັນ.

3) ຄວາມຮັກແພງພາຍໃນຄອບຄົວ ແມ່ນເລີ່ມຈາກສາຍພົວພັນພໍ່ແມ່ລູກ, ພໍ່ແມ່ໃຫ້ການກຳເນີດ ແລະ ເບິ່ງແຍງລ້ຽງດູ, ສົ່ງເສີມໃຫ້ໄດ້ຮັບການສຶກສາ, ການດຳລົງຊີວິດຢູ່ໃນສັງຄົມດີ, ສ່ວນລູກກໍຕ້ອງຮູ້ກະຕັນຍູ, ຮັກແພງເຄົາລົບນັບຖືພໍ່ແມ່, ເບິ່ງແຍງດູແລໃນຍາມເພິ່ນເຖົ້າແກ່.
4) ຄວາມຮັກແພງຕໍ່ກັບໝູ່ເພື່ອນຕ້ອງໃຫ້ການຊຸກຍູ້ຊ່ວຍເຫຼືອກັນ ເຊັ່ນ: ການປົກປ້ອງສິ່ງທີ່ຖືກຕ້ອງ, ເປັນທີ່ເພິ່ງພາອາໄສບໍ່ຖອດຖິ້ມກັນໃນຍາມຂັດສົນ, ເປັນກຳລັງໃຈ ແລະ ໃຫ້ຄຳຕັກເຕືອນສິ່ງທີ່ດີງາມ, ຊ່ວຍເຫຼືອດ້ານການຄົ້ນຄວ້າຮ່ຳຮຽນ, ຮ່ວມສຸກຮ່ວມທຸກນຳກັນ.
5) ຄວາມຮັກແພງຕໍ່ກັບຄູອາຈານ ຕ້ອງຮູ້ສົມມາຄາລະວະ, ໃຫ້ກຽດ, ຮັບຟັງຄຳສັ່ງສອນຂອງເພິ່ນ ໂດຍຕັ້ງໃຈສຶກສາຮ່ຳຮຽນ, ດຸໝັ່ນ, ຊອກຮູ້ຮ່ຳຮຽນໃຫ້ເກັ່ງ, ມີຄວາມກ້າວໜ້າ ແລະ ຮອດຍາມບຸນ ຫຼື ວັນສຳຄັນຈັດຕັ້ງກັນໄປອວຍພອນເພິ່ນ.
6) ຄວາມຮັກແພງຕໍ່ກັບບຸກຄົນອື່ນທົ່ວໄປໃນສັງຄົມ ຕ້ອງເຄົາລົບ, ນັບຖື, ໃຫ້ກຽດເຊິ່ງກັນ ແລະ ກັນ, ບໍ່ອິດສາບັງບຽດ, ບໍ່ໝິ່ນປະໝາດ ແລະ ໃຫ້ການຊ່ວຍເຫຼືອຕາມຄວາມສາມາດ.
7) ຄວາມຮັກແພງຕໍ່ກັບເຖົ້າແກ່ອາວຸໂສ ຕອບບຸນແທນຄຸນ, ຟັງຄວາມສັ່ງສອນ, ເບິ່ງແຍງລ້ຽງດູ, ຊ່ວຍເຫຼືອ ແລະ ໃຫ້ກຳລັງໃຈເພິ່ນຢູ່ສະເໝີ.
8) ຄວາມຮັກແພງຕໍ່ກັບບັນດາຜູ້ນຳ ຮູ້ເຄົາລົບນັບຖື, ຟັງຄຳສັ່ງສອນ, ຊອກຮູ້ຮ່ຳຮຽນ, ເອົາແບບຢ່າງໃນການດຳລົງຊີວິດທີ່ງ່າຍດາຍ, ໃຫ້ກຽດ ແລະ ປະຕິບັດຕາມຄຳສັ່ງສອນຂອງເພິ່ນຢູ່ສະເໝີ ດັ່ງຄຳສຸພາສິດລາວທີ່ວ່າ:

ໄມ້ລຳດຽວ ລ້ອມຮົ້ວບໍ່ໄຂວ່
ໄພ່ບໍ່ພ້ອມ ແປງບ້ານບໍ່ເຮືອງ

ຄຳສຸພາສິດນີ້ ເວົ້າເຖິງຄວາມສາມັກຄີ, ຖ້າມີແຕ່ໄມ້ລຳດຽວລ້ອມຮົ້ວບໍ່ໄຂວ່ໄດ້, ຕ້ອງມີຫຼາຍລຳຈຶ່ງລ້ອມຮົ້ວໄຂວ່, ກໍຄືກັນກັບຄົນເຮົາ, ຖ້າມີຫຼາຍຄົນເຮັດຫຍັງກໍແລ້ວໄວ.

\+ ການຢູ່ຮ່ວມກັນຢ່າງສັນຕິ ແມ່ນການທີ່ມະນຸດມາຢູ່ຮ່ວມກັນເປັນສັງຄົມ ຊຶ່ງສາມາດປະຕິບັດຕາມກົດເກນການຢູ່ຮ່ວມກັນດ້ວຍການປະຕິບັດຕາມຂໍ້ກຳນົດກົດລະບຽບ, ກົດໝາຍ ບົນພື້ນຖານຂອງຄຸນນະທຳ ມີການຊ່ວຍເຫຼືອຊຶ່ງກັນ ແລະ ກັນ. ສະຫະປະຊາຊາດໄດ້ປະກາດໃນວັນທີ 16 ເດືອນພຶດສະພາ ເປັນວັນສາກົນແຫ່ງການດຳລົງ

ຊີວິດຮ່ວມກັນໂດຍສັນຕິພາບ, ເຄົາລົບໃນຄວາມແຕກຕ່າງ, ຄວາມຫຼາກຫຼາຍ ແລະ ຄວາມສາມັກຄີແບບຍືນຍົງ.

**4. ສະຫຼຸບ (10 ນາທີ)**

ຄູ ແລະ ນັກຮຽນສະຫຼຸບກ່ຽວກັບ ຄວາມໝາຍການຮັກແພງມະນຸດດ້ວຍກັນ, ມູນເຊື້ອການຮັກແພງມະນຸດດ້ວຍກັນ ແລະ ການຢູ່ຮ່ວມກັນຢ່າງສັນຕິ ຕາມເນື້ອໃນຂໍ້ທີ II.

**ວຽກບ້ານ**

- ຄູແນະນຳນັກຮຽນເຮັດບົດຝຶກຫັດຢູ່ບ້ານ ຂໍ້ 1, 2, 3 ໃນປຶ້ມແບບຮຽນໜ້າທີ 25.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນຈາກ:

- ການຕອບຄຳຖາມປະລະໄນລຸ່ມນີ້:
- ໃຫ້ນັກຮຽນໝາຍ ✓ ໃສ່ຕໍ່ໜ້າຄຳຕອບທີ່ເຫັນວ່າຖືກຕ້ອງ

1. ເປັນຫຍັງຈຶ່ງຮັກແພງພໍ່ແມ່?

   ✓ ກ. ໃຫ້ກຳເນີດ

   ຂ. ໃຫ້ຄວາມສຸກ

   ຄ. ໃຫ້ຄວາມຮູ້

   ງ. ໃຫ້ການຊ່ວຍເຫຼືອ

2. ມູນເຊື້ອການຮັກແພງມະນຸດດ້ວຍກັນແມ່ນເລີ່ມຈາກໃຜ?

   ກ. ໝູ່ເພື່ອນ

   ✓ ຂ. ຄອບຄົວ

   ຄ. ຜູ້ອາວຸໂສ

   ງ. ບຸກຄົນອື່ນ

3. ການຢູ່ຮ່ວມກັນຢ່າງສັນຕິຕ້ອງເຮັດແນວໃດ?

   ກ. ບໍ່ຊ່ວຍເຫຼືອເຊິ່ງກັນ ແລະ ກັນ

   ຂ. ປະຕິບັດຕາມຄຳສັ່ງ

   ✓ ຄ. ເຄົາລົບໃນຄວາມແຕກຕ່າງ, ຄວາມຫຼາກຫຼາຍ

   ງ. ບໍ່ໃຫ້ກຽດເຊິ່ງກັນ ແລະ ກັນ

# ບົດທີ 8 ການໃຫ້ອະໄພ

## ແຊກຊ້ອນເຂົ້າຫົວຂໍ້ທີ 2 ບົດບາດ ແລະ ຄວາມສຳຄັນຂອງການໃຫ້ອະໄພ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ ແລະ ຄວາມສຳຄັນຂອງການໃຫ້ອະໄພ, ການເຈລະຈາຕໍ່ລອງ, ການໄກ່ເກ່ຍ, ການຄືນດີຕໍ່ກັນ ຫຼື ການແກ້ໄຂບັນຫາທັງສອງຝ່າຍໄດ້ຮັບຜົນປະໂຫຍດ.
- ເຫັນຄຸນຄ່າຂອງການໃຫ້ອະໄພ, ການເຈລະຈາຕໍ່ລອງ, ການໄກ່ເກ່ຍ, ການຄືນດີຕໍ່ກັນ ຫຼື ການແກ້ໄຂບັນຫາທັງສອງຝ່າຍໄດ້ຮັບຜົນປະໂຫຍດ.
- ຍົກຕົວຢ່າງກ່ຽວກັບການໃຫ້ອະໄພ, ການເຈລະຈາຕໍ່ລອງ, ການໄກ່ເກ່ຍ, ການຄືນດີຕໍ່ກັນ ຫຼື ການແກ້ໄຂບັນຫາທັງສອງຝ່າຍໄດ້ຮັບຜົນປະໂຫຍດ.

## II. ເນື້ອໃນ

ການໃຫ້ອະໄພແມ່ນມີຈິດໃຈກວ້າງຂວາງ, ມີຄວາມເມດຕາສົງສານ, ຄົນທີ່ຮູ້ໃຫ້ອະໄພແມ່ນຄົນທີ່ຮູ້ເຄົາລົບນັບຖື, ສົງສານ, ຜ່ອນສັ້ນ, ຜ່ອນຍາວໃຫ້ຄົນອື່ນ, ເວລາທີ່ເຂົາເຈົ້າມີຄວາມໂສກເສົ້າ ຫຼື ມີຄວາມຜິດຈະຕ້ອງໄດ້ປັບປຸງແກ້ໄຂ.

ສະນັ້ນ, ການໃຫ້ອະໄພໝາຍເຖິງການສະແດງອອກຕໍ່ຄົນອື່ນດ້ວຍຄວາມເມດຕາສົງສານ, ມີຈິດໃຈກວ້າງຂວາງ, ຮູ້ຜ່ອນສັ້ນຜ່ອນຍາວ ແລະ ຮູ້ໃຫ້ກຽດຄົນອື່ນ.

ການໃຫ້ອະໄພມີຄວາມໝາຍສຳຄັນຍິ່ງ ເພາະມັນຊ່ວຍໃຫ້ຄົນເຮົາດຳລົງຊີວິດແບບງ່າຍດາຍ, ປັບຕົວເຂົ້າກັບຊຸມຊົນ, ຍົກສູງບົດບາດ ແລະ ຄວາມເຊື່ອໝັ້ນຂອງຕົນເຂົ້າໃນສັງຄົມ. ນອກນັ້ນ ການໃຫ້ອະໄພຍັງປະກອບສ່ວນສຳຄັນເຮັດໃຫ້ຊີວິດສັງຄົມມີຄວາມສະຫງົບ, ຫຼີກເວັ້ນຄວາມເຄັ່ງຕຶງ, ຫຼຸດການປະທະ ທີ່ອາດຈະກໍ່ໃຫ້ເກີດຜົນກະທົບ ແລະ ເກີດຄວາມເສຍຫາຍໃຫ້ແກ່ສັງຄົມ. ລາວເຮົາກໍເປັນປະເທດໜຶ່ງທີ່ຍົກສູງນໍ້າໃຈການໃຫ້ອະໄພເຊິ່ງກັນ ແລະ ກັນ ເພາະມັນແມ່ນຄວາມຈຳເປັນແກ່ການສ້າງສັນຕິພາບໂລກ, ຕ້ານການກະທຳທີ່ຮຸນແຮງ ຫຼື ການຈຳແນກມະນຸດດ້ວຍກັນ.

ການເຈລະຈາຕໍ່ລອງແມ່ນຂະບວນການຂອງບຸກຄົນທີ່ຕ້ອງການແກ້ໄຂບັນຫາໂດຍສັນຕິວິທີເພື່ອໃຫ້ເກີດການປະນີປະນອມ, ພະຍາຍາມຫາຂໍ້ຕົກລົງທີ່ຍອມຮັບໄດ້ຂອງທັງສອງຝ່າຍ ແລະ ສະເໜີຂໍ້ແລກປ່ຽນ ຊຶ່ງຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ.

ໃນການດຳລົງຊີວິດ ການໃຫ້ກຳລັງໃຈ ແລະ ຮູ້ໃຫ້ອະໄພເຊິ່ງກັນ ແລະ ກັນ ສະແດງອອກຜ່ານການປະພຶດຂອງຄົນເຮົາເຊັ່ນ: ການປາກເວົ້າ, ອະໄພໂທດ, ໃຫ້ກຽດ, ຜ່ອນສັ້ນຜ່ອນຍາວ, ແກ້ໄຂບັນຫາດ້ວຍການເຈລະຈາຄືນດີຕໍ່ກັນ ສິ່ງນີ້ຈະຊ່ວຍໃຫ້ຄົນເຮົາມີຄວາມສາມັກຄີປອງດອງກັນ, ທຸກບັນຫາທີ່ເກີດຂຶ້ນບໍ່ວ່າຈະເປັນບັນຫາລະຫວ່າງບຸກຄົນ ຫຼື ລະຫວ່າງຊາດ ແມ່ນລ້ວນແຕ່ເກີດຈາກຂໍ້ຂັດແຍ້ງ ຫຼື ຄວາມບໍ່ເຂົ້າໃຈກັນ. ສະນັ້ນ, ການແກ້ໄຂບັນຫາດ້ວຍການເຈລະຈາຕໍ່ລອງຈະເຮັດໃຫ້ບັນຫາໄດ້ຮັບການແກ້ໄຂ, ທຸກຄົນຈະຢູ່ຮ່ວມກັນຢູ່ໃນໂລກໄດ້ຢ່າງສັນຕິສຸກ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງຊັ້ນ ມ.2
2. ຮູບພາບໃນປຶ້ມແບບຮຽນ
3. ຮູບພາບໃນປຶ້ມຄູ່ມືຄູ
4. ບົດເຫດການ
5. ເຈ້ຍແຜ່ນໃຫຍ່ສຳລັບຂຽນເນື້ອໃນບົດຮຽນ

## IV. ກິດຈະກຳການຮຽນການສອນ

### 1. ທົບທວນບົດທີ່ຮຽນຜ່ານມາ (5 ນາທີ)

**ກ. ສົນທະນາຖາມ-ຕອບ**:

- ຄູສົນທະນາກັບນັກຮຽນດ້ວຍຄຳຖາມລຸ່ມນີ້:

  1. ຄວາມສາມັກຄີແມ່ນຫຍັງ?

- ນັກຮຽນຕອບ
- ຄູສະຫຼຸບຄຳຕອບຂອງນັກຮຽນຕາມເນື້ອໃນທີ່ມີໃນປຶ້ມແບບຮຽນຄື:

ຄວາມສາມັກຄີແມ່ນມາດຖານຄຸນສົມບັດທີ່ດີຂອງຄົນໃນການດຳລົງຊີວິດ ໂດຍການປະຕິບັດຕໍ່ຄົນທີ່ຢູ່ອ້ອມຂ້າງດ້ວຍຄວາມດີ, ຄວາມຈິງໃຈ, ຄວາມຮັກແພງຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ ແລະ ຢູ່ຮ່ວມກັນດ້ວຍຄວາມສັນຕິສຸກ.

ການສ້າງຄວາມສາມັກຄີໃຫ້ເປັນປຶກແຜ່ນແໜ້ນໜາພາຍໃນສັງຄົມ ຈະເຮັດໃຫ້ຕົນເອງ, ຄອບຄົວ, ປະເທດຊາດ, ພາກພື້ນມີຄວາມສະຫງົບສຸກ ແລະ ໝັ້ນຄົງ.

- ຄູອະທິບາຍຕື່ມວ່າ:

ທຸກຄົນຄວນມີຄວາມສາມັກຄີຮັກແພງເຊິ່ງກັນ ແລະ ກັນ ຍ້ອນມີຄວາມສາມັກຄີ ຈຶ່ງມີການໃຫ້ອະໄພ ເມື່ອໃຫ້ອະໄພຕໍ່ກັນແລ້ວ ກໍຈະບໍ່ມີຄວາມຮຸນແຮງ ແລະ ບັນຫາກໍໄດ້ຮັບການແກ້ໄຂ ທັງສອງຝ່າຍຕ່າງມີຄວາມສຸກ ແລະ ມີຜົນປະໂຫຍດຮ່ວມກັນ.

**2. ສະເໜີບົດຮຽນໃໝ່**

**ກ. ສັງເກດຮູບພາບ (10 ນາທີ)**

- ຄູໃຫ້ນັກຮຽນແຕ່ລະຄົນສັງເກດຮູບພາບໃນປຶ້ມແບບຮຽນ ໜ້າທີ 36 ແລ້ວຖາມວ່າ:
  1) ນັກຮຽນເຫັນຫຍັງແດ່ໃນຮູບພາບ, ຄົນໃນແຕ່ລະຮູບພາບກຳລັງເຮັດຫຍັງ?
  2) ນັກຮຽນເຄີຍຕົກຢູ່ໃນກໍລະນີໃນຮູບພາບນີ້ບໍ່?
  3) ນັກຮຽນເຄີຍໃຫ້ອະໄພຄົນອື່ນ ຫຼື ໝູ່ເພື່ອນໃນເວລາທີ່ເຂົາເຮັດຜິດພາດບໍ່?
  4) ຖ້າເຄີຍໃຫ້ອະໄພແມ່ນກ່ຽວກັບເລື່ອງຫຍັງ?
  5) ນັກຮຽນທີ່ເຄີຍເຮັດຜິດພາດ ເຄີຍໄດ້ຮັບການໃຫ້ອະໄພຈາກໝູ່ເພື່ອນ ຫຼື ຄົນອື່ນບໍ່, ຖ້າເຄີຍໄດ້ຮັບການໃຫ້ອະໄພໃນກໍລະນີໃດ?
- ຄູໃຫ້ນັກຮຽນຊອກຫາຄຳຕອບກ່ຽວກັບຮູບພາບ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຄຳຕອບຕາມທີ່ນັກຮຽນໄດ້ຕອບມາ ແລະ ເພີ່ມເຕີມບາງຈຸດທີ່ຍັງເຫັນວ່າບໍ່ທັນໄດ້ຄົບຖ້ວນ.

**ຂ. ສົນທະນາຖາມ-ຕອບ (10 ນາທີ)**

- ຄູໃຫ້ນັກຮຽນອ່ານເນື້ອໃນບົດຮຽນ ຂໍ້ທີ 1 ແລະ 2 ໃນປຶ້ມແບບຮຽນ ເພື່ອຄົ້ນຄວ້າ ແລະ ຊອກຫາຄຳຕອບຕາມຄຳຖາມຂ້າງລຸ່ມນີ້:
  1. ການໃຫ້ອະໄພແມ່ນຫຍັງ?
  2. ບົດບາດ ແລະ ຄວາມສຳຄັນຂອງການໃຫ້ອະໄພສະແດງອອກແນວໃດ?
  3. ນັກຮຽນຈະເຮັດແນວໃດ ເພື່ອໃຫ້ບັນຫາໄດ້ຮັບການແກ້ໄຂຢ່າງສັນຕິວິທີ?
  4. ຍ້ອນຫຍັງເຮົາຈຶ່ງຕ້ອງໃຊ້ວິທີການເຈລະຈາຕໍ່ລອງ?
- ນັກຮຽນອາສາສະໝັກຕອບ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບດັ່ງນີ້:
  1. ການໃຫ້ອະໄພແມ່ນການສະແດງອອກຕໍ່ຄົນອື່ນດ້ວຍຄວາມເມດຕາສົງສານ, ມີຈິດໃຈກວ້າງຂວາງ, ຮູ້ຜ່ອນສັ້ນຜ່ອນຍາວ, ຮູ້ໃຫ້ກຽດຄົນອື່ນ.
  2. ສະແດງອອກຜ່ານການປະພຶດຂອງຄົນເຮົາ ເຊັ່ນ: ການປາກເວົ້າ, ອະໄພຍະໂທດ,

ໃຫ້ກຽດ, ຜ່ອນສັ້ນຜ່ອນຍາວ, ແກ້ໄຂບັນຫາດ້ວຍການເຈລະຈາຄືນດີຕໍ່ກັນ ສິ່ງນີ້ຈະຊ່ວຍໃຫ້ຄົນເຮົາມີຄວາມສາມັກຄີປອງດອງກັນ, ສາມາດຢູ່ຮ່ວມກັນຢູ່ໃນໂລກໄດ້ຢ່າງສັນຕິສຸກ.

3. ໃຊ້ວິທີການເຈລະຈາຕໍ່ລອງ ຍ້ອນວ່າແມ່ນຂະບວນການຂອງບຸກຄົນ ທີ່ຕ້ອງການແກ້ໄຂບັນຫາ ໂດຍສັນຕິວິທີ ເພື່ອໃຫ້ເກີດການປານີປານອມ, ພະຍາຍາມຫາຂໍ້ຕົກລົງທີ່ຍອມຮັບໄດ້ຂອງທັງສອງຝ່າຍ ແລະ ສະເໜີຂໍ້ແລກປ່ຽນ ຊຶ່ງຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ.
4. ເພື່ອໃຫ້ບັນຫາໄດ້ຮັບການແກ້ໄຂ, ທຸກຄົນຈະຢູ່ຮ່ວມກັນຢູ່ໃນໂລກໄດ້ຢ່າງສັນຕິ ສຸກ.

**ຄ. ສຶກສາເຫດການ (20 ນາທີ)**

- ຄູແບ່ງນັກຮຽນອອກເປັນ 3 ກຸ່ມ ຫຼື ຕາມຄວາມເໝາະສົມ.
- ຄູໃຫ້ນັກຮຽນອ່ານ “ເຫດການ” ໃນປຶ້ມແບບຮຽນ ແລ້ວຕອບຄຳຖາມລຸ່ມນີ້:

1) ທ້າວສົມປອງ ມີອາຊີບຫຍັງ? ແລະ ມີນິດໄສແນວໃດ?
2) ນາງ ບົວລີ ມີອາຊີບຫຍັງ? ແລະ ລາວເປັນຄົນແນວໃດ?
3) ຍ້ອນຫຍັງນາງບົວລີຈຶ່ງໄປແຈ້ງການຈັດຕັ້ງຂອງບ້ານ?
4) ນາຍບ້ານໄດ້ສະເໜີວິທີແກ້ໄຂແນວໃດ?
5) ໃນເລື່ອງນີ້ແມ່ນໃຜເປັນຜູ້ໃຫ້ອະໄພ ແລະ ຜູ້ໃດຄືຜູ້ທີ່ໄດ້ຮັບການໃຫ້ອະໄພ?
6) ຜ່ານການເຈລະຈາຕໍ່ລອງ, ໄກ່ເກ່ຍ ແລະ ຄືນດີຕໍ່ກັນ ຈະມີຫຍັງເກີດຂຶ້ນ?
7) ຖ້າມີການໃຫ້ອະໄພ ເຊິ່ງກັນ ແລະ ກັນ ຈະເຮັດໃຫ້ສັງຄົມ ແລະ ໂລກຂອງພວກເຮົາເປັນແນວໃດ?

- ຄູໃຫ້ກຸ່ມທີ 1 ຕອບຄຳຖາມ 1, 2 ແລະ 3. ກຸ່ມທີ 2 ຕອບຄຳຖາມ 4 ແລະ 5. ກຸ່ມທີ 3 ຕອບຄຳຖາມ 6 ແລະ 7 ແລ້ວຂຽນຄຳຕອບໃສ່ເຈ້ຍແຜ່ນໃຫຍ່
- ຕາງໜ້າກຸ່ມຂຶ້ນລາຍງານຄົ້ນຄວ້າ.
- ນັກຮຽນຄົນອື່ນຕິດຕາມ ແລະ ປະກອບຄວາມເຫັນເພີ່ມເຕີມ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຄຳຕອບດັ່ງນີ້:

**ຄຳຕອບ**

1) ທ້າວສົມປອງມີອາຊີບບໍ່ໝັ້ນຄົງ, ລາວມີນິດໄສມັກດື່ມເຫຼົ້າ, ຊຸມແຊວ ແລະ ມັກຕີເມຍ.

2) ນາງບົວລີມີອາຊີບເປັນຄູສອນ ລາວມີນິດໄສໃຊ້ຈ່າຍປະຢັດ, ມີຄວາມຮັບຜິດຊອບ ແລະ ເຮັດວຽກເຮືອນ.
3) ຍ້ອນຜົວຂອງລາວປ້ອຍດ່າ, ທຸບຕີ ເຮັດໃຫ້ລາວບໍ່ມີຄວາມສຸກ, ວຽກທັງໝົດຕົກໃສ່ຜູ້ເປັນເມຍ.
4) ນາຍບ້ານສະເໜີໃຫ້ແຍກກັນຢູ່ຊົ່ວຄາວ, ຢູ່ໃຜຢູ່ມັນກ່ອນໃຈດີແລ້ວຈຶ່ງກັບມາອີກ.
5) ຜູ້ໃຫ້ອະໄພແມ່ນນາງບົວລີ ແລະ ລູກ, ຜູ້ທີ່ໄດ້ຮັບການໃຫ້ອະໄພແມ່ນທ້າວສົມປອງ.
6) ທ້າວສົມປອງ, ລູກ ແລະ ນາງບົວລີກໍຢູ່ຮ່ວມກັນຢ່າງມີຄວາມສຸກ. ໃນການດຳລົງຊີວິດ ການໃຫ້ກຳລັງໃຈ ແລະ ຮູ້ໃຫ້ອະໄພເຊິ່ງກັນ ແລະ ກັນ ສະແດງອອກຜ່ານການປະພຶດຂອງຄົນເຮົາ ເຊັ່ນ: ການປາກເວົ້າ, ອະໄພໂທດ, ໃຫ້ກຽດ, ຜ່ອນສັ້ນຜ່ອນຍາວ, ແກ້ໄຂບັນຫາດ້ວຍການເຈລະຈາຄືນດີຕໍ່ກັນ ສິ່ງນີ້ຈະຊ່ວຍໃຫ້ຄົນເຮົາມີຄວາມສາມັກຄີປອງ ດອງກັນ, ທຸກບັນຫາທີ່ເກີດຂຶ້ນບໍ່ວ່າຈະເປັນບັນຫາລະຫວ່າງບຸກຄົນ ຫຼື ລະຫວ່າງຊາດ ແມ່ນລ້ວນແຕ່ເກີດຈາກຂໍ້ຂັດແຍ້ງ ຫຼື ຄວາມບໍ່ເຂົ້າໃຈກັນ.
7) ການໃຫ້ອະໄພມີຄວາມໝາຍສຳຄັນຍິ່ງ ເພາະມັນຊ່ວຍໃຫ້ຄົນເຮົາດຳລົງຊີວິດແບບງ່າຍດາຍ, ປັບຕົວເຂົ້າກັບຊຸມຊົນ, ຍົກສູງບົດບາດ ແລະ ຄວາມເຊື່ອໝັ້ນຂອງຕົນເຂົ້າໃນສັງຄົມ. ເຮັດໃຫ້ສັງຄົມມີຄວາມສະຫງົບ, ຫຼີກເວັ້ນຄວາມເຄັ່ງຕຶງ, ຫຼຸດການປະທະ ທີ່ອາດຈະກໍ່ໃຫ້ເກີດຜົນກະທົບ ແລະ ເກີດຄວາມເສຍຫາຍໃຫ້ແກ່ສັງຄົມ. ແມ່ນຄວາມຈຳເປັນແກ່ການສ້າງສັນຕິພາບໂລກ, ຕ້ານການກະທຳທີ່ຮຸນແຮງ ຫຼື ການຈຳແນກມະນຸດດ້ວຍກັນ.

**3. ຄູສະຫຼຸບ (5 ນາທີ)**

ຄູເວົ້າເຖິງວັນແຫ່ງການໃຫ້ອະໄພໃນທົ່ວໂລກມາໃຫ້ນັກຮຽນຟັງ ຄື: ວັນສາກົນແຫ່ງການໃຫ້ອະໄພເຊິ່ງກັນ ແລະ ກັນ ແມ່ນວັນທີ 7 ກໍລະກົດ 1994 ຊຶ່ງວັນດັ່ງກ່າວນັ້ນ ທຸກຄົນໄດ້ມາຈັດກິດຈະກຳຮ່ວມກັນ, ສະແດງຄວາມຮູ້ສຶກທີ່ດີຕໍ່ກັນ, ການຂໍໂທດຕໍ່ຄົນທີ່ເຮົາໄດ້ເຮັດຜິດຕໍ່ເຂົາເຈົ້າ, ການໃຫ້ອະໄພຕໍ່ກັນ. ນອກຈາກນັ້ນໃນວັນດັ່ງກ່າວ ພວກເຮົາບໍ່ພຽງແຕ່ກ່າວຄຳຂໍໂທດຕໍ່ກັນແຕ່ຍັງຕ້ອງຂໍໂທດຕໍ່ໂລກໜ່ວຍນີ້ທີ່ເຮົາໄດ້ກະທຳສິ່ງໃດກໍຕາມທີ່ເຮັດໃຫ້ໂລກມີບາດແຜ ຄື: ເຮັດໃຫ້ເກີດພາວະໂລກຮ້ອນ, ເກີດໄພພິບັດ, ໄຟໄໝ້ປ່າ, ລົມພະຍຸ ແລະ ອື່ນໆ ຊຶ່ງສິ່ງເຫຼົ່ານີ້ລ້ວນແຕ່ເກີດມາຈາກການກະທຳຂອງມະນຸດເຮົາ. ສະນັ້ນ, ພວກເຮົາຈະເຮັດຫຍັງແດ່ ເພື່ອສະແດງເຖິງການຂໍໂທດຕໍ່ໂລກ.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນນັກຮຽນຈາກການຕອບຄໍາຖາມຂ້າງລຸ່ມນີ້:

- ໃຫ້ນັກຮຽນໝາຍ ✓ ໃສ່ຕໍ່ໜ້າຄໍາຕອບທີ່ເຫັນວ່າຖືກຕ້ອງ

1. ຍ້ອນຫຍັງພວກເຮົາຈຶ່ງໃຫ້ອະໄພຕໍ່ກັນ?

  ກ. ເຫັນຄວາມຜິດຂອງໝູ່ແຕ່ບໍ່ທັກທ້ວງ

  ✓ ຂ. ເມດຕາສົງສານເພື່ອນມະນຸດ

  ✓ ຄ. ແບ່ງເບົາຄວາມສຸກທຸກກັບໝູ່ເພື່ອນ

  ✓ ງ. ມີຈິດໃຈກວ້າງຂວາງ

  ຈ. ເຫັນໝູ່ມີຄວາມຜິດຕ້ອງຕັກເຕືອນ

  ສ. ເວົ້າເຍາະເຍີ້ຍ ແລະ ທັກທ້ວງຂວັນຄົນອື່ນ

  ຊ. ຟັງຄວາມຄິດເຫັນຂອງໝູ່

  ຍ. ຢາກແກ້ແຄ້ນຄົນອື່ນ

  ດ. ຜ່ອນສັ້ນ ຜ່ອນຍາວ

2. ຄູໃຫ້ວຽກບ້ານ

ນັກຮຽນຈົ່ງແຕ້ມຮູບ ຫຼື ປະດິດໂປສະກາດ ແລະ ຂຽນຄໍາຂໍໂທດທີ່ຕົນເອງຢາກເວົ້າຕໍ່ຄົນອື່ນເຊັ່ນ: ພໍ່, ແມ່, ອ້າຍ, ເອື້ອຍນ້ອງ, ໝູ່ເພື່ອນ ແລະ ຜູ້ອື່ນໆ ຫຼື ຕໍ່ໂລກທີ່ພວກເຮົາໄດ້ມີສ່ວນເຮັດໃຫ້ໂລກມີບາດແຜ? ແລ້ວມາສົ່ງຄູໃນຊົ່ວໂມງຕໍ່ໄປ.

- ຄູຍົກໂປສະກາດຕົວຢ່າງລຸ່ມນີ້ໃຫ້ນັກຮຽນເບິ່ງ ຫຼື ນັກຮຽນສາມາດອອກ ແບບໂປສະກາດຂອງຕົນເອງຕາມໃຈ ຕົວຢ່າງ:



ໂປສະກາດແບ່ງເບົາຄວາມສຸກທຸກກັບໝູ່ເພື່ອນ



ການມີຈິດໃຈກວ້າງຂວາງ



ການແກ້ໄຂບັນຫາດ້ວຍການເຈລະຈາຄືນດີຕໍ່ກັນ

**ໝາຍເຫດ:**

- ສຳລັບກິດຈະກຳການຮຽນການສອນທີ່ແນະນຳໃນບົດສອນນີ້ເປັນພຽງວິທີການໜຶ່ງທີ່ໄດ້ກຳນົດໄວ້ ແຕ່ຖ້າຄູຫາກມີວິທີການອື່ນທີ່ສອດຄ່ອງ ແລະ ເໝາະສົມກໍສາມາດນຳມາໃຊ້ແທນໄດ້.

# ບົດທີ 12 ການເຮັດວຽກມີແຜນການ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 3 ການດຳລົງຊີວິດມີຈຸດໝາຍ ແລະ ເຮັດວຽກມີແຜນການ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍຂອງການເຮັດວຽກມີແຜນການ.
- ເຫັນຄຸນຄ່າຂອງການດຳລົງຊີວິດທີ່ມີຈຸດໝາຍ ແລະ ເຮັດວຽກມີແຜນການໃນການລົງມືປະຕິບັດ.
- ປຽບທຽບຜົນໄດ້ຮັບລະຫວ່າງການດຳລົງຊີວິດທີ່ມີຈຸດໝາຍ ແລະ ການເຮັດວຽກມີແຜນການກັບການດຳລົງຊີວິດທີ່ມີຈຸດໝາຍ ແລະ ການເຮັດວຽກບໍ່ມີແຜນການ.

## II. ເນື້ອໃນ

ການວາງແຜນ ແມ່ນການກຳນົດຈຸດປະສົງລະດັບຄາດໝາຍຢ່າງຈະແຈ້ງ ແລະ ແທດເໝາະກັບຕົວຈິງ, ກຳນົດເນື້ອໃນແຜນການ ນັບທັງຜູ້ຮັບຜິດຊອບແຕ່ລະວຽກຢ່າງລະອຽດ, ກຳນົດເວລາປະຕິບັດຢ່າງຈະແຈ້ງ, ວິທີການ ແລະ ມາດຕະການປະຕິບັດ.

ການເຮັດວຽກມີແຜນການ ແມ່ນການດຳລົງຊີວິດ ແລະ ເຮັດວຽກມີການວາງແຜນ, ການກຳນົດໜ້າທີ່, ຈັດແຈງວຽກງານຂອງຕົນເອງໃນແຕ່ລະມື້, ແຕ່ລະອາທິດຢ່າງເໝາະສົມ. ເພື່ອເຮັດໃຫ້ການປະຕິບັດວຽກງານຢ່າງຖືກຕ້ອງ ມີຄຸນນະພາບ ແລະ ມີປະສິດທິພາບດີ. ການເຮັດວຽກມີແຜນການຊ່ວຍສ້າງຄວາມເປັນເຈົ້າການໃຫ້ແກ່ຕົນເອງ, ສາມາດຄາດຄະເນໄວ້ລ່ວງໜ້າວ່າແຕ່ລະວຽກຄວນເຮັດແນວໃດ, ປະສານສົມທົບກັບໃຜ, ເມື່ອເຮັດໄປແລ້ວຈະມີບັນຫາຫຍັງເກີດຂຶ້ນ ແລະ ແກ້ໄຂແນວໃດ...

ການດຳລົງຊີວິດທີ່ມີຈຸດໝາຍແມ່ນ ການສູ້ຊົນ ບຸກບືນ, ມີຄວາມດຸໝັ່ນຂະຫຍັນພຽນໃນການອອກແຮງງານ, ເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເອົາໃຈໃສ່ໃນການຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ ແລະ ດ້ານວິຊາສະເພາະ, ບໍ່ຫຼີ້ນກິນຟຸມເຟືອຍ.

ການລົງມືປະຕິບັດທີ່ມີຜົນໄດ້ຮັບ ແມ່ນການວາງແຜນຢ່າງມີຈຸດໝາຍ, ມີແຜນການເພື່ອໃຫ້ມີຜົນສຳເລັດໃນການຮ່ຳຮຽນ ແລະ ການເຮັດວຽກອື່ນໆ ຊຶ່ງກ່ອນອື່ນໝົດຕ້ອງເລີ່ມຈາກຕົນເອງຈາກນັ້ນຈຶ່ງກ້າວໄປເຖິງລະດັບທ້ອງຖິ່ນ, ລະດັບຊາດ ແລະ ສາກົນ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຂັ້ນ ມ.2
2. ຮູບພາບ ແລະ ຕາຕະລາງໃນປຶ້ມແບບຮຽນ
3. ຮູບພາບອື່ນໆທີ່ກ່ຽວຂ້ອງກັບບົດຮຽນ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທົບທວນບົດທີ່ຮຽນຜ່ານມາ (5 ນາທີ)**

- ຄູຕັ້ງຄຳຖາມ:
  1) ການເຊື່ອໝັ້ນຕົນເອງສະແດງອອກແນວໃດແດ່?
  2) ຖ້າຂາດການເຊື່ອໝັ້ນຕົນເອງຈະເປັນແນວໃດ?
- ນັກຮຽນອາສາສະໝັກຕອບຄຳຖາມ.
- ຄູສະຫຼຸບຄຳຕອບຂອງນັກຮຽນ ຕາມເນື້ອໃນປຶ້ມແບບຮຽນ.

**ຄຳຕອບ**

1) ຄູອະທິບາຍຕື່ມວ່າ: ການເຊື່ອໝັ້ນຕົນເອງແມ່ນຄວາມພາກພູມໃຈ ແລະ ເຊື່ອໝັ້ນໃນຄວາມສາມາດຂອງຕົນເອງໃນການກະທຳສິ່ງໃດໜຶ່ງ, ກ້າຕັດສິນໃຈໂດຍບໍ່ມີຄວາມລັງເລໃຈ ແຕ່ຕ້ອງຢູ່ບົນພື້ນຖານການໄຕ່ຕອງ, ພາກພຽນ, ມີເຫດ ແລະ ຜົນ ເຊັ່ນ: ໃນການຮ່ຳຮຽນ ແລະ ການດຳລົງຊີວິດປະຈຳວັນ.
2) ຖ້າຫາກຂາດການເຊື່ອໝັ້ນໃນຕົນເອງແລ້ວຈະເຮັດໃຫ້ເປັນຄົນຢ້ານກົວ ແລະ ເຮັດສິ່ງໃດກໍຍາກທີ່ຈະປະສົບຜົນສຳເລັດ.

**2. ສະເໜີບົດຮຽນໃໝ່**

**ກ. ສັງເກດຮູບພາບ (10 ນາທີ)**

- ຄູໃຫ້ນັກຮຽນສັງເກດຮູບພາບໃນປຶ້ມແບບຮຽນ ແລ້ວຖາມວ່າ:

**ຄຳຖາມ**

1) ຄົນໃນແຕ່ລະຮູບພາບກຳລັງເຮັດຫຍັງ?

2) ນັກຮຽນປະຕິບັດຕົນເອງຄືຮູບພາບໃດແດ່?

- ນັກຮຽນປະກອບຄວາມເຫັນ.
- ຄູ ແລະ ນັກຮຽນພ້ອມກັນສະຫຼຸບຄຳຕອບກ່ຽວກັບຮູບພາບ.

**ຂ. ສົນທະນາຕາຕະລາງປະຈຳອາທິດຂອງທ້າວສຸນີໄຊ (15 ນາທີ)**

- ຄູໃຫ້ນັກຮຽນສັງເກດຕາຕະລາງປະຈຳອາທິດຂອງທ້າວສຸນີໄຊ ໃນປຶ້ມແບບຮຽນໜ້າ 59.
- ຄູໃຫ້ນັກຮຽນປະກອບຄວາມຄິດເຫັນໃສ່ຕາຕະລາງຕາມຄຳຖາມທີ່ຄູຕັ້ງຂຶ້ນ.

**ຄຳຖາມ**:

1) ຕາຕະລາງປະຈຳອາທິດ ຂອງທ້າວສຸນີໄຊ ເປັນແນວໃດ?

2) ຕາຕະລາງປະຈຳອາທິດ ຂອງທ້າວສຸນີໄຊ ມີຈຸດດີ ແລະ ຈຸດອ່ອນແນວໃດ?

3) ນັກຮຽນຄວນເອົາແບບຢ່າງທ້າວສຸນີໄຊບໍ່? ຍ້ອນຫຍັງ?

- ຄູໃຫ້ນັກຮຽນອາສາສະໝັກຕອບຄຳຖາມ ສະຫຼັບຍິງ-ຊາຍ.
- ນັກຮຽນຜູ້ອື່ນໆ ປະກອບຄຳຄິດຄຳເຫັນເພີ່ມຕື່ມ.
- ຄູ ແລະ ນັກຮຽນພ້ອມກັນສະຫຼຸບ ເພື່ອເປັນເອກະພາບ ໂດຍຄູເນັ້ນຕື່ມວ່າ:
  - ຕາຕະລາງເຮັດວຽກປະຈຳອາທິດຂອງ ທ້າວສຸນີໄຊ ລະອຽດ ແລະ ຈະແຈ້ງດີ.
  - ການເຄື່ອນໄຫວເຮັດວຽກຂອງ ທ້າວສຸນີໄຊ ໃນແຕ່ລະມື້ມີຄວາມເໝາະສົມ, ຮອບຄອບຊຶ່ງເລີ່ມແຕ່ 5 ໂມງເຊົ້າຈົນເຖິງ 23 ໂມງກາງຄືນ ໃນແຕ່ລະວັນຈົນໝົດອາທິດ.
- ຄູສະຫຼຸບຄຳຕອບ ຫຼັງຈາກນັ້ນຄູໃຫ້ນັກຮຽນອ່ານຂໍ້ 1, 2, 3 ໃນປຶ້ມແບບຮຽນ.

**ຄ. ປຽບທຽບຜົນໄດ້ຮັບຂອງການດຳລົງຊີວິດທີ່ມີຈຸດໝາຍ ແລະ ການເຮັດວຽກມີແຜນການກັບການເຮັດວຽກທີ່ບໍ່ມີຈຸດໝາຍ ແລະ ການເຮັດວຽກບໍ່ມີແຜນການ (15 ນາທີ)**

- ຄູໃຫ້ນັກຮຽນແບ່ງເປັນ 2 ກຸ່ມ ປະສົມຍິງ-ຊາຍ.
- ຄູກຽມເຈ້ຍເພື່ອຂຽນຄຳຖາມໃບລະ 1 ຄຳຖາມ.
- ຄູໃຫ້ນັກຮຽນສຶກສາຕົວຢ່າງແລ້ວຢາຍເຈ້ຍຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າເພື່ອຕອບຄຳຖາມລຸ່ມນີ້:

**ຕົວຢ່າງ 1**: ທ້າວຄຳດີ ຢາກເປັນນັກຮຽນເກັ່ງ ລາວຈຶ່ງຕັ້ງໃຈເອົາໃຈໃສ່ເລົ່າບົດຮຽນ ແລະ ແກ້ບົດຝຶກຫັດ ສຸດທ້າຍລາວກໍໄດ້ເປັນນັກຮຽນເກັ່ງຂອງໂຮງຮຽນຕາມທີ່ລາວຕັ້ງໃຈ ແລະ ໄດ້ກາຍເປັນຕົວແທນໄປແຂ່ງຂັນຕອບຄຳຖາມວິທະຍາສາດຢູ່ໂຮງຮຽນ

ອ້ອມຂ້າງ.

**ຕົວຢ່າງ 2**: ນາງມາລີ ມີຄວາມຝັນຢາກໄດ້ລົດຈັກໄວ້ຫຼວໄປຮຽນໃນມະຫາວິທະຍາໄລ, ແຕ່ລາວບໍ່ໄດ້ເກັບອອມເງິນ ເງິນທີ່ພໍ່ແມ່ເອົາໃຫ້ແຕ່ລະມື້ລາວຊື້ອັນທີ່ບໍ່ມີປະໂຫຍດ. ເມື່ອເສັງຈົບຊັ້ນມັດທະຍົມແລ້ວ ຮອດເວລາເຂົ້າຮຽນໃນມະຫາວິທະຍາໄລ ລາວບໍ່ມີເງິນທີ່ຈະໄປຊື້ລົດຈັກຕາມທີ່ລາວຢາກໄດ້.

- ຄູຕັ້ງຄຳຖາມຈາກຕົວຢ່າງ 1 ແລະ 2 ດັ່ງນີ້:

**ຄຳຖາມ**

1) ຈຸດໝາຍ ແລະ ແຜນການຂອງທ້າວຄຳດີ ແລະ ນາງມາລີ ແມ່ນຫຍັງ?
2) ຜົນໄດ້ຮັບຂອງການເຮັດວຽກຢ່າງມີແຜນການໄດ້ສ້າງຄຸນຄ່າໃນການດຳລົງຊີວິດແນວໃດ?
3) ຈົ່ງປຽບທຽບການດຳລົງຊີວິດທີ່ມີຈຸດໝາຍ ແລະ ການເຮັດວຽກມີແຜນການກັບການການດຳລົງຊີວິດທີ່ບໍ່ມີຈຸດໝາຍ ແລະ ການເຮັດວຽກບໍ່ມີແຜນການມີຜົນໄດ້ຮັບຕ່າງກັນແນວໃດ?

- ຄູໃຫ້ຕາງໜ້າກຸ່ມຂຶ້ນລາຍງານ ແລະ ກຸ່ມອື່ນຊ່ວຍປະກອບຄຳຄິດເຫັນ.
- ຄູສັງລວມຄຳຕອບແຕ່ລະຂໍ້ດັ່ງນີ້

**ຄຳຕອບ**

1) ຈຸດໝາຍ ແລະ ແຜນການຂອງທ້າວຄຳດີ ແລະ ນາງມາລີແມ່ນ:
   - ທ້າວຄຳດີ ຢາກເປັນນັກຮຽນເກັ່ງ ລາວຈຶ່ງຕັ້ງໃຈເອົາໃຈໃສ່ເລົ່າບົດຮຽນ ແລະ ແກ້ບົດຝຶກຫັດ.
   - ນາງມາລີ ມີຄວາມຝັນຢາກໄດ້ລົດຈັກໄວ້ຫຼວໄປຮຽນໃນມະຫາວິທະຍາໄລ, ແຕ່ລາວບໍ່ມີແຜນເກັບອອມເງິນ ເງິນທີ່ພໍ່ແມ່ເອົາໃຫ້ແຕ່ລະມື້ລາວຊື້ອັນທີ່ບໍ່ມີປະໂຫຍດ.
2) ຜົນໄດ້ຮັບຂອງການເຮັດວຽກຢ່າງມີແຜນການໄດ້ສ້າງຄຸນຄ່າໃນການດຳລົງຊີວິດຄື: ເຮັດໃຫ້ມີຜົນສຳເລັດໃນການດຳລົງຊີວິດ, ເປັນຄົນມີລະບຽບແບບແຜນ, ມີຄວາມຮັບຜິດຊອບ, ດຸໝັ່ນອົດທົນ, ຮູ້ຄຸນຄ່າຂອງເວລາ, ຄຸນຄ່າຂອງຕົນເອງ, ສ້າງຄວາມພູມໃຈໃຫ້ຕົນເອງ, ເຮັດໃຫ້ຄົນອື່ນມີຄວາມເຄົາລົບນັບຖື, ສັງຄົມຍ້ອງຍໍ...
   (ຄຳຕອບນີ້ເປັນພຽງແນວທາງ ຄູສາມາດເພີ່ມຄຳຕອບທີ່ຫຼາກຫຼາຍກວ່ານີ້)
3) ປຽບທຽບການດຳລົງຊີວິດທີ່ມີຈຸດໝາຍ ແລະ ການເຮັດວຽກມີແຜນການກັບການ

ການດຳລົງຊີວິດທີ່ບໍ່ມີຈຸດໝາຍ ແລະ ການເຮັດວຽກບໍ່ມີແຜນການມີຄວາມແຕກຕ່າງກັນ ຄື:

| ການດຳລົງຊີວິດທີ່ມີຈຸດໝາຍ ແລະ ການເຮັດວຽກມີແຜນການ | ການດຳລົງຊີວິດທີ່ບໍ່ມີຈຸດໝາຍ ແລະ ການ ເຮັດວຽກບໍ່ມີແຜນການ |
|---|---|
| - ມີການວາງແຜນ | - ບໍ່ມີການວາງແຜນ |
| - ກຳນົດໜ້າທີ່ວຽກງານຂອງຕົນເອງໃນແຕ່ລະມື້ | - ບໍ່ມີການກຳນົດໜ້າທີ່ວຽກງານຂອງຕົນເອງແຕ່ໃນລະມື້ |
| - ການປະຕິບັດວຽກຖືກຕ້ອງ | - ການປະຕິບັດວຽກບໍ່ຖືກຕ້ອງ |
| - ວຽກມີຄຸນນະພາບສູງ | - ວຽກບໍ່ມີຄຸນນະພາບ |
| - ມີຜົນສຳເລັດ | - ບໍ່ມີຜົນສຳເລັດ |

**3. ສະຫຼຸບ (5 ນາທີ)**

ຜູ້ທີ່ເຮັດວຽກມີແຜນການ: ເປັນຜູ້ທີ່ວາງແຜນ, ຮູ້ກຳນົດການເຮັດໃນແຕ່ລະວັນ, ແຕ່ລະອາທິດຢ່າງເໝາະສົມ ແລະ ປະຕິບັດຢ່າງເຄັ່ງຄັດຕາມແຜນທີ່ວາງໄວ້ເພື່ອໃຫ້ບັນລຸຕາມຈຸດປະສົງ ແລະ ເກີດຜົນດີມີປະໂຫຍດ ຍັງສ້າງຕົນເອງເປັນເປັນຄົນເຫັນຄຸນຄ່າໃນເວລາ ແລະມີລະບຽບວິໄນ ເຊັ່ນ: ການຮ່ຳຮຽນ, ການອອກແຮງງານ, ແລະ ການເຄື່ອນໄຫວວຽກງານອື່ນໆກໍໄດ້ຮັບຜົນດີເຮັດໃຫ້ພໍ່ແມ່, ອ້າຍ,ເອື້ອຍ, ນ້ອງ, ເພື່ອນມີຄວາມຮັກແພງ ແລະ ຕົນເອງເປັນພົນລະເມືອງດີ ພ້ອມທັງມີອະນາຄົດທີ່ດີ.

**ວຽກບ້ານ**

- ຄູໃຫ້ນັກຮຽນເຮັດບົດຝຶກຫັດທີ 1 ແລະ 2 ແລ້ວສົ່ງຄູໃນຊົ່ວໂມງຕໍ່ໄປ.

## IV. ການວັດ ແລະ ປະເມີນຜົນ

ສັງເກດຈາກການຕອບຄຳຖາມລຸ່ມນີ້:

1. ຄູໃຫ້ນັກຮຽນໃຫ້ຄວາມໝາຍການເຮັດວຽກມີແຜນການຕາມຄວາມເຂົ້າໃຈຂອງຕົນ.
2. ຄູໃຫ້ນັກຮຽນແຕ່ລະຄົນປຽບທຽບຕາມຄວາມຄິດຂອງຕົນເອງລະຫວ່າງການດຳລົງຊີວິດທີ່ມີຈຸດໝາຍ ແລະ ການເຮັດວຽກມີແຜນການກັບການການດຳລົງຊີວິດທີ່ບໍ່ມີຈຸດໝາຍ ແລະ ການເຮັດວຽກບໍ່ມີແຜນການມີຄວາມແຕກຕ່າງກັນແນວໃດ?

| ການດຳລົງຊີວິດທີ່ມີຈຸດໝາຍ ແລະ ການເຮັດວຽກມີແຜນການ | ການດຳລົງຊີວິດທີ່ບໍ່ມີຈຸດໝາຍ ແລະ ການເຮັດວຽກບໍ່ມີແຜນການ |
|---|---|
| .............................................<br>...................................................<br>................................................... | .............................................<br>...................................................<br>................................................... |

**ຂໍ້ມູນເພີ່ມເຕີມ**: ເປົ້າໝາຍຂອງຊີວິດສຳຄັນຕໍ່ການເປັນມະນຸດແນວໃດ?
https://becommon.co/life/question-life-purpose/

# ບົດທີ 13 ສິດໄດ້ຮັບການປົກປ້ອງ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 1 ສິດ ແລະ ຄວາມຮັບຜິດຊອບຂອງເດັກ

ເວລາ 2 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ບອກສິດ ແລະ ຄວາມຮັບຜິດຊອບຂອງເດັກໃນກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ຄວາມຍຸຕິທຳ ແລະ ການເຂົ້າເຖິງຄວາມຍຸຕິທຳ.
- ຮັບຮູ້ການປົກປ້ອງລ້ຽງດູເດັກທີ່ໄດ້ກຳນົດໃນກົດໝາຍ.
- ຮັກຄວາມຍຸຕິທຳ ແລະ ປະຕິບັດຕົນໃຫ້ເປັນຄົນມີຄວາມຍຸຕິທຳ.

## II. ເນື້ອໃນ

ສິດໄດ້ຮັບການປົກປ້ອງ ແມ່ນການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເຊິ່ງໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງເດັກ, ລວມທັງມາດຕະການຕໍ່ຜູ້ກະທຳຜິດຕໍ່ເດັກ, ແນໃສ່ເຮັດໃຫ້ເດັກມີຄວາມສົມບູນທາງດ້ານຮ່າງກາຍ, ຈິດໃຈ ແລະ ມັນສະໝອງ, ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ, ສາມາດດຳລົງຊີວິດໃນສັງຄົມຢ່າງມີຄຸນນະພາບ ແລະ ກາຍເປັນຜູ້ສືບທອດທີ່ດີຂອງຊາດ.

ໃນຖະແຫຼງການສາກົນ ວ່າດ້ວຍສິດທິມະນຸດ ແລະ ໃນສົນທິສັນຍາສາກົນກ່ຽວກັບສິດທິມະນຸດນັ້ນ ອົງການສະຫະປະຊາຊາດໄດ້ປະກາດ ແລະ ເຫັນພ້ອມນຳກັນວ່າ ທຸກຄົນສົມຄວນໄດ້ຮັບທຸກສິດທິ ແລະ ອິດສະລະພາບທີ່ໄດ້ກຳນົດມານັ້ນ ໂດຍປາສະຈາກການຈຳແນກໃດໆ ໂດຍສະເພາະດ້ານເຊື້ອຊາດ, ຜິວພັນ, ເພດ, ພາສາ, ສາສະໜາ, ຄວາມຄິດເຫັນທາງດ້ານການເມືອງ ແລະ ອື່ນໆ

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຊັ້ນ ມ.2
2. ຮູບພາບ ໃນປຶ້ມແບບຮຽນ
3. ບົດເລື່ອງ ໂຮງຮຽນເດັກກຳພ້າ
4. ເຈ້ຍນ້ອຍສຳລັບຂຽນຄຳຕອບ
5. ກາວຕິດເຈ້ຍ, ສະກັອດ

6. ກ່ອງສໍາລັບໃສ່ເຈ້ຍຈົກສະຫຼາກ

## IV. ກິດຈະກໍາການຮຽນການສອນ

***ຊົ່ວໂມງທີ 1***

**1. ທົບທວນບົດທີ່ຮຽນຜ່ານມາ**

**ກ. ຫຼິ້ນເກມ (5 ນາທີ)**

- ຄູຂຽນຕົວເລກ 1 ແລະ 2 ໃສ່ເຈ້ຍນ້ອຍ ເລກລະໃບ. ຈາກນັ້ນ, ເອົາໃສ່ກ່ອງ ໃຫ້ນັກຮຽນຈົກສະຫຼາກໂດຍກໍານົດດັ່ງນີ້:
- ນັກຮຽນທີ່ຈົກໄດ້ເລກ 1 ແມ່ນໃຫ້ຕອບສິ່ງທີ່ໄດ້ຮຽນໃນຊົ່ວໂມງຜ່ານມາ.
- ນັກຮຽນທີ່ຈົກໄດ້ເລກ 2 ແມ່ນສົ່ງກ່ອງໃຫ້ນັກຮຽນຜູ້ອື່ນຈົກສະຫຼາກຕໍ່ໄປ.
- ຄູສືບຕໍ່ປະຕິບັດດັ່ງຂ້າງເທິງໃຫ້ໄດ້ປະມານ 2-3 ຄົນ
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບກ່ຽວກັບສິ່ງທີ່ໄດ້ຮຽນໃນຊົ່ວໂມງກ່ອນ.

**2. ສະເໜີບົດຮຽນໃໝ່**

**ຂ. ສົນທະນາກ່ຽວກັບຮູບພາບ (10 ນາທີ)**

- ຄູໃຫ້ນັກຮຽນສັງເກດຮູບພາບໃນປຶ້ມແບບຮຽນ ໜ້າທີ 61 ແລ້ວຖາມວ່າ:
  1) ນັກຮຽນເຫັນຫຍັງແດ່ໃນຮູບພາບ?
  2) ຄົນໃນແຕ່ລະຮູບພາບກໍາລັງເຮັດຫຍັງ?
  3) ນັກຮຽນເຄີຍເຮັດກິດຈະກໍາໃດໃນຮູບພາບນີ້?
  4) ບັນດາຮູບພາບເຫຼົ່ານີ້ກ່ຽວຂ້ອງກັບສິດ ແລະ ຄວາມຮັບຜິດຊອບຂອງເດັກບໍ່? ຍ້ອນຫຍັງ?
- ຄູໃຫ້ນັກຮຽນ 3-4 ຄົນປະກອບຄວາມເຫັນ.
- ຄູໃຫ້ນັກຮຽນຈໍານວນໜຶ່ງປະກອບຄວາມເຫັນເພີ່ມເຕີມ ຖ້າຂໍ້ໃດຍັງບໍ່ຄົບຖ້ວນ.

**ຄໍາຕອບ**:

1) ຮູບແຜ່ນພັບກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ການຮຽນຮູ້ຂອງເດັກນ້ອຍ ແລະ ໄວໜຸ່ມ, ການເຂົ້າຮ່ວມກິດຈະກໍາຕ່າງໆ, ກາຂອງກະຊວງຍຸຕິທໍາ, ການຊັກຢາກັນພະຍາດ, ໂອກາດຂອງການໄດ້ຮັບການສຶກສາຮໍ່າຮຽນ.
2) ເດັກນ້ອຍຮຽນຄານ, ເດັກນ້ອຍນັ່ງຫຼິ້ນ, ໄວໜຸ່ມຮ້ອງເພງ, ຫຼິ້ນດົນຕີ, ອອກແຮງງານ, ເຕະບານ, ໝໍກວດຄົນເຈັບ, ເດັກນ້ອຍນັ່ງຮຽນໜັງສື, ເດັກນ້ອຍໄປໂຮງຮຽນ,

ພໍ່ແມ່ພາລູກໄປໂຮງຮຽນ.

3) ເຄີຍໄປໂຮງຮຽນ, ເຕະບານນຳໝູ່, ຮ້ອງເພງ, ໄປໃຫ້ໝໍກວດພະຍາດ.

4) ກ່ຽວຂ້ອງກັບສິດ ຍ້ອນວ່າເດັກທຸກຄົນມີສິດໄດ້ຮັບການສຶກສາຮ່ຳຮຽນ ແລະ ຮັບການອົບຮົມສັ່ງສອນ, ຖືກລ້ຽງດູ, ເບິ່ງແຍງໃຫ້ເຕີບໃຫຍ່, ຫຼິ້ນ, ມ່ວນຊື່ນ, ຮັບຮູ້ຂ່າວສານ, ເຮັດກິດຈະກຳຕ່າງໆ.

**ຄ. ເຮັດວຽກເປັນຄູ່ (30 ນາທີ)**

- ຄູໃຫ້ນັກຮຽນແຕ່ລະຄົນອ່ານຂໍ້ທີ 1 ແລະ 2 ໃນປຶ້ມແບບຮຽນໜ້າທີ 62-65. ຈາກນັ້ນ, ໃຫ້ນັກຮຽນອ່ານເລື່ອງ "ໂຮງຮຽນເດັກກຳພ້າ" ໃນປຶ້ມແບບຮຽນ ໜ້າທີ 66 ແລ້ວຕອບຄຳຖາມລຸ່ມນີ້:

1) ເປັນຫຍັງເດັກໃນໂຮງຮຽນກຳພ້າຄົນນີ້ຈຶ່ງປະພຶດລະເມີດກົດໝາຍ?

2) ເດັກຄົນນີ້ບໍ່ໄດ້ຮັບສິດຫຍັງຖ້າທຽບໃສ່ເດັກຄົນອື່ນ?

3) ນັກຮຽນຄິດວ່າສິດພື້ນຖານຂອງເດັກທີ່ຄວນຈະໄດ້ຮັບໃນຄອບຄົວມີຫຍັງແດ່?

4) ນັກຮຽນຄິດວ່າສິດພື້ນຖານຂອງເດັກທີ່ຄວນຈະໄດ້ຮັບຢູ່ໃນໂຮງຮຽນມີຫຍັງແດ່?

5) ນັກຮຽນຄິດວ່າສິດພື້ນຖານຂອງເດັກທີ່ຄວນຈະໄດ້ຮັບຢູ່ໃນສັງຄົມ ຫຼື ສາກົນມີຫຍັງແດ່?

6) ຄວາມຮັບຜິດຊອບຂອງເດັກມີຫຍັງແດ່?

7) ນັກຮຽນຈະເຮັດແນວໃດຖ້າຫາກຖືກລະເມີດສິດໃດໜຶ່ງທີ່ຄວນຈະໄດ້ຮັບ?

- ຄູໃຫ້ນັກຮຽນແຕ່ລະຄົນຂຽນຄຳຕອບໃສ່ເຈ້ຍ ແລ້ວເອົາໄປຕິດໃສ່ກະດານ
- ຄູໃຫ້ນັກຮຽນ 1-2 ຄົນອາສາສະໝັກຂຶ້ນມາອ່ານຄຳຕອບ

**ຄຳຕອບ**:

1) ຍ້ອນວ່າແມ່ຜູ້ທີ່ເອົາລາວໄປລ້ຽງບໍ່ເອົາໃຈໃສ່ສຶກສາອົບຮົມ ແລະ ສັ່ງສອນລາວ.

2) ສິດໄດ້ຮັບການລ້ຽງດູ, ເບິ່ງແຍງໃຫ້ເຕີບໃຫຍ່ ແລະ ສິດໄດ້ຮັບການສຶກສາຮ່ຳຮຽນ ແລະ ຮັບການອົບຮົມສັ່ງສອນ.

3) ເດັກມີສິດຄື:
   - ເກີດ, ມີຊື່, ມີສັນຊາດ.
   - ສິດໄດ້ຮັບການລ້ຽງດູ, ເບິ່ງແຍງໃຫ້ເຕີບໃຫຍ່.
   - ສິດໄດ້ຮັບການສຶກສາຮ່ຳຮຽນ ແລະ ຮັບການອົບຮົມສັ່ງສອນ.

- ຫຼິ້ນ, ມ່ວນຊື່ນ, ຮັບຮູ້ຂ່າວສານ, ເຮັດກິດຈະກໍາຕ່າງໆ.

4) ສິດພື້ນຖານຂອງເດັກທີ່ຄວນຈະໄດ້ຮັບຢູ່ໃນໂຮງຮຽນມີ:
   - ສິດໄດ້ຮັບການສຶກສາຮໍ່າຮຽນ ແລະ ຮັບການອົບຮົມສັ່ງສອນ.
   - ຫຼິ້ນ, ມ່ວນຊື່ນ, ຮັບຮູ້ຂ່າວສານ, ເຮັດກິດຈະກໍາຕ່າງໆ.
5) ເດັກທຸກຄົນຕ້ອງໄດ້ໃຊ້ສິດຂອງຕົນຢ່າງຄົບຖ້ວນຕາມສິດທີ່ມີໃນກົດໝາຍຢ່າງສະເໝີພາບ ແລະ ເທົ່າທຽມກັນ ຢູ່ໃນທຸກສະຖານທີ່ໂດຍບໍ່ມີການຈໍາແນກ.
6) ຄວາມຮັບຜິດຊອບຂອງເດັກມີ ຄື: ເຄົາລົບນັບຖື ແລະ ຊ່ວຍເຫຼືອຄົນອື່ນ, ດຸໝັ່ນຮໍ່າຮຽນ, ຮັກສາສຸຂະພາບ, ເຄົາລົບ ແລະ ປະຕິບັດຕາມລະບຽບກົດໝາຍ, ສັດຊື່ບໍລິສຸດ, ຮັກຊາດ ແລະ ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ, ປະກອບສ່ວນເຂົ້າໃນກິດຈະກໍາສັງຄົມຕາມຄວາມສາມາດ.
7) ເມື່ອຖືກລະເມີດສິດຢູ່ໃນທຸກສະຖານທີ່ ເຊັ່ນ: ໂຮງຮຽນ, ຄອບຄົວ, ສັງຄົມ ຫຼື ປະເທດໃດກໍຕາມ ເດັກສາມາດຮຽກຮ້ອງເອົາສິດຂອງຕົນຕາມສະຖານທີ່ ຫຼື ໜ່ວຍງານທີ່ຮັບຜິດຊອບໂດຍບໍ່ມີການຈໍາແນກເຊື້ອຊາດ, ຜິວພັນ, ເພດ, ພາສາ, ສາສະໜາ ແລະ ອື່ນໆ.

**3. ສະຫຼຸບ (5 ນາທີ)**

ຄູ ແລະ ນັກຮຽນສະຫຼຸບກ່ຽວກັບເນື້ອໃນບົດຮຽນທີ່ຮຽນທັງໝົດໃນ 1 ຊົ່ວໂມງ.

ຄູເນັ້ນໃຫ້ນັກຮຽນເຂົ້າໃຈວ່າ: ລັດ ແລະ ສັງຄົມໄດ້ເຄົາລົບ ແລະ ປົກປ້ອງຊີວິດ, ຮ່າງກາຍ, ກຽດສັກສີ ແລະ ຊື່ສຽງຂອງເດັກສະເໝີ. ເດັກທຸກຄົນມີສິດເກີດ, ມີຊື່, ມີສັນຊາດ, ຖືກລ້ຽງດູ, ເບິ່ງແຍງໃຫ້ເຕີບໃຫຍ່; ສຶກສາຮໍ່າຮຽນ ແລະ ຮັບການອົບຮົມສັ່ງສອນ; ຫຼິ້ນ, ມ່ວນຊື່ນ, ຮັບຮູ້ຂ່າວສານ, ເຮັດກິດຈະກໍາຕ່າງໆ. ສ່ວນເດັກກໍມີໜ້າທີ່ຮັບຜິດຊອບຄື: ເຄົາລົບພໍ່ແມ່, ຜູ້ປົກຄອງ, ຄູອາຈານ, ທ່ານຜູ້ນໍາ; ເຄົາລົບນັບຖືກົດໝາຍ ແລະ ຄົນອື່ນ; ຊ່ວຍເຫຼືອ, ເບິ່ງແຍງພໍ່ແມ່ຍາມເຖົ້າແກ່; ດຸໝັ່ນຮໍ່າຮຽນ; ບໍ່ຫຼິ້ນກິນຟຸມເຟືອຍ, ບໍ່ຫຼິ້ນການພະນັນ ແລະ ເສບຢາເສບຕິດ.

ໃນຖະແຫຼງການສາກົນ ວ່າດ້ວຍສິດທິມະນຸດ ແລະ ໃນສົນທິສັນຍາສາກົນກ່ຽວກັບສິດທິມະນຸດນັ້ນ ອົງການສະຫະປະຊາຊາດໄດ້ປະກາດ ແລະ ເຫັນພ້ອມນໍາກັນວ່າ ທຸກຄົນສົມຄວນໄດ້ຮັບທຸກສິດທິ ແລະ ອິດສະລະພາບທີ່ໄດ້ກໍານົດມານັ້ນ ໂດຍປາສະຈາກການຈໍາແນກໃດໆ ໂດຍສະເພາະດ້ານເຊື້ອຊາດ, ຜິວພັນ, ເພດ, ພາສາ, ສາສະໜາ, ຄວາມຄິດເຫັນທາງດ້ານການເມືອງ ແລະ ອື່ນໆ.

## V. ການວັດ ແລະ ປະເມີນຜົນ

ປະເມີນນັກຮຽນຈາກ:

ການຈັບຄູ່ຂໍ້ຄວາມທີ່ມີຄວາມກ່ຽວຂ້ອງກັນລຸ່ມນີ້:

ຄວາມຮັບຜິດຊອບຂອງລັດ

ສິດທິເດັກ

ຄວາມຮັບຜິດຊອບຂອງເດັກ

ຄວາມຮັບຜິດຊອບຂອງຄອບຄົວ-ສັງຄົມ

ມີສິດເກີດ, ມີຊື່, ມີສັນຊາດ

ຖືກລ້ຽງດູ, ເບິ່ງແຍງໃຫ້ເຕີບໃຫຍ່

ສຶກສາຮ່ຳຮຽນ ແລະ ຮັບການອົບຮົມສັ່ງສອນ

ຫຼິ້ນ, ມ່ວນຊື່ນ, ຮັບຮູ້ຂ່າວສານ, ເຮັດກິດຈະກຳຕ່າງໆ

ເຄົາລົບພໍ່ແມ່, ຜູ້ປົກຄອງ, ຄູອາຈານ, ທ່ານຜູ້ນຳ

ເຄົາລົບນັບຖືກົດໝາຍ ແລະ ຄົນອື່ນ

ຊ່ວຍເຫຼືອ, ເບິ່ງແຍງພໍ່ແມ່ຍາມເຖົ້າແກ່

ດຸໝັ່ນຮ່ຳຮຽນ

ປະກອບສ່ວນເຂົ້າໃນກິດຈະກຳສັງຄົມຕາມຄວາມສາມາດ

ປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

ສຶກສາອົບຮົມ, ພັດທະນາທາງດ້ານຮ່າງກາຍ, ຈິດໃຈ

ປ້ອງກັນບໍ່ໃຫ້ຖືກຂົ່ມເຫັງ ແລະ ບໍ່ຖືກໃຊ້ແຮງງານເດັກໜັກໜ່ວງ

ວາງນະໂຍບາຍກ່ຽວກັບການສຶກສາອົບຮົມ ແລະ ກໍ່ສ້າງເດັກ

ສ້າງ ແລະ ຂະຫຍາຍໂຮງຮຽນໃຫ້ພຽງພໍ

ສົ່ງເສີມໃຫ້ເດັກມີສ່ວນຮ່ວມໃນການເຄື່ອນໄຫວສັງຄົມ

ສ້າງ ແລະ ປັບປຸງມາດຕະການໃນການປົກປ້ອງເດັກ

ສຶກສາອົບຮົມ

**ຄໍາຕອບ**




**ໝາຍເຫດ**

- ສໍາລັບໂຮງຮຽນທີ່ບໍ່ມີເງື່ອນໄຂໃນການເອົາເຈ້ຍຄໍາຕອບໄປຕິດໃສ່ກະດານແມ່ນໃຫ້ນັກຮຽນເອົາເຈ້ຍມາໂຮມກັນໃສ່ກ່ອງ ແລ້ວໃຫ້ນັກຮຽນຈັບເອົາຄໍາຕອບຂຶ້ນມາອ່ານກໍໄດ້ ຫຼື ຄູຫາກມີວິທີການອື່ນທີ່ສອດຄ່ອງ ແລະ ເໝາະສົມກໍສາມາດນໍາມາໃຊ້ແທນໄດ້.

**ເອກະສານອ້າງອີງ**


- ກະຊວງການຕ່າງປະເທດ, ກົມສົນທິສັນຍາ ແລະ ກົດໝາຍ, ປະມວນສົນທິສັນຍາສາກົນ ສິດທິມະນຸດ ປີ 1999, ໜ້າທີ 68 ວັກທີ 3).

# ບົດທີ 18 ການປົກຄອງທ້ອງຖິ່ນ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 2.3 ສິດ ແລະ ໜ້າທີ່ຂອງນາຍບ້ານ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍສິດ ແລະ ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນ, ໂຄງປະກອບ ແລະ ລະບົບການຄຸ້ມຄອງພື້ນຖານຂອງທ້ອງຖິ່ນ, ຂອງຊາດ ແລະ ຂອງໂລກ.
- ເຫັນຄວາມສຳຄັນຂອງໂຄງປະກອບ ແລະ ລະບົບການຄຸ້ມຄອງພື້ນຖານຂອງທ້ອງຖິ່ນ, ຂອງຊາດ ແລະ ຂອງໂລກ.
- ຈຳແນກໂຄງປະກອບ ແລະ ລະບົບການຄຸ້ມຄອງພື້ນຖານຂອງທ້ອງຖິ່ນ, ຂອງຊາດ ແລະ ຂອງໂລກ.
- ປະຕິບັດ, ສະໜັບສະໜູນ ແລະ ປະກອບສ່ວນໃນວຽກງານຕ່າງໆ ຂອງອຳນາດການປົກຄອງທ້ອງຖິ່ນ.

## II. ເນື້ອໃນ

ອຳນາດການປົກຄອງທ້ອງຖິ່ນ ເປັນຕົວແທນຕາງໜ້າລັດຖະບານ ຢູ່ແຕ່ລະແຂວງ, ເມືອງ, ບ້ານ. ເພື່ອຊີ້ນຳ, ກວດກາ ອົງການປົກຄອງຂັ້ນທ້ອງຖິ່ນ, ພັດທະນາເສດຖະກິດ-ສັງຄົມ ແລະ ຄວາມເປັນລະບຽບຮຽບຮ້ອຍທ້ອງຖິ່ນ.

ສປປ ລາວ ແບ່ງການປົກຄອງທ້ອງຖິ່ນອອກເປັນ 17 ແຂວງ, 1 ນະຄອນຫຼວງ ແລະ 3 ຂັ້ນການປົກຄອງ ຄື: ຂັ້ນແຂວງມີ ແຂວງ ແລະ ນະຄອນຫຼວງ. ຂັ້ນເມືອງມີ ເມືອງ, ນະຄອນ ແລະ ເທດສະບານ, ຂັ້ນບ້ານມີ ບ້ານ. ອົງການປົກຄອງແຕ່ລະຂັ້ນລ້ວນແຕ່ປະຕິບັດຕາມສິດ ແລະ ໜ້າທີ່ຂອງຕົນເອງ. ນອກຈາກລະບົບການປົກຄອງຂັ້ນທ້ອງຖິ່ນ ແລະ ສູນກາງແລ້ວ ຍັງມີລະບົບການຄຸ້ມຄອງພື້ນຖານຂອງພາກພື້ນ ແລະ ສາກົນ ເຊັ່ນ: ອົງການສະຫະປະຊາຊາດ, ອົງການອະນາໄມໂລກ, ອົງການອາຫານໂລກ ເປັນຕົ້ນ. ບັນດາອົງການສາກົນຕ່າງໆຈະມີໜ້າທີ່ແຕກຕ່າງກັນໃນການປະສານງານ ແລະ ແກ້ໄຂບັນຫາຕ່າງໆລະຫວ່າງປະເທດເພື່ອໃຫ້ສັງຄົມມີຄວາມສະຫງົບ, ປະຊາຊາດມີຄວາມສະເໝີພາບ ແລະ ສາມາດດຳລົງຊີວິດຢູ່

ຮ່ວມກັນໄດ້ຢ່າງສັນຕິ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາ ສຶກສາພົນລະເມືອງ ຊັ້ນ ມ.2
2. ແຜນວາດໂຄງຮ່າງການຈັດຕັ້ງຂັ້ນສູນກາງ, ແຂວງ, ເມືອງ ແລະ ບ້ານ
3. ຮູບສັນຍະລັກອົງການສະຫະປະຊາຊາດ, ອົງການອະນາໄມໂລກ, ອົງການອາຫານໂລກ.

## IV. ກິດຈະກຳການຮຽນການສອນ

***ຊົ່ວໂມງທີ 2***

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

- ຄູໃຫ້ນັກຮຽນຂຽນ 1 ຢ່າງຈາກສິ່ງທີ່ຕົນເອງຈື່ໄດ້ໃນການຮຽນຂອງຊົ່ວໂມງຜ່ານມາໃນເຈ້ຍແຜ່ນນ້ອຍ.
- ຄູໃຫ້ນັກຮຽນ 5-6 ຄົນອ່ານສິ່ງທີ່ຕົນເອງຂຽນໃຫ້ໝູ່ຟັງ.
- ຄູ ແລະ ນັກຮຽນທວນຄືນບົດຮຽນທີ່ຜ່ານມາຮ່ວມກັນ.

**2. ສະເໜີບົດຮຽນໃໝ່**

**ກ. ສົນທະນາລວມ (5 ນາທີ)**

- ຄູໃຫ້ນັກຮຽນສັງເກດຮູບພາບລຸ່ມນີ້:



ສັນຍະລັກອົງການສະຫະປະຊາຊາດ

ສັນຍະລັກ ອົງການອະນາໄມໂລກ

ສັນຍະລັກ ອົງການອາຫານໂລກ

- ຄູຕັ້ງຄຳຖາມດັ່ງນີ້:
  1) ຮູບເຫຼົ່ານີ້ແມ່ນສັນຍະລັກຂອງອົງການໃດ?
  2) ໜ້າທີ່ຫຼັກຂອງອົງການເຫຼົ່ານີ້ແມ່ນຫຍັງ?
  3) ນອກຈາກອົງການເຫຼົ່ານີ້ນັກຮຽນຮູ້ຈັກອົງການໃດແດ່?
  4) ເປັນຫຍັງຈຶ່ງຕ້ອງມີອົງການຕ່າງໆເຫຼົ່ານີ້?
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບກ່ຽວກັບສັນຍະລັກອົງການຕ່າງໆ ດັ່ງນີ້:

**ຄຳຕອບ**:
  1) ສັນຍະລັກຂອງອົງການສະຫະປະຊາຊາດ, ອົງການອະນາໄມໂລກ ແລະ ອົງການອາຫານໂລກ.
  2) ອົງການສະຫະປະຊາຊາດມີໜ້າທີ່ຫຼັກໃນການຮັກສາສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງປະເທດ. ອົງການອະນາໄມໂລກມີໜ້າທີ່ຫຼັກໃນການປະສານງານທາງດ້ານສາທາລະນະສຸກລະຫວ່າງປະເທດ. ອົງການອາຫານໂລກມີໜ້າທີ່ຫຼັກໃນການຊ່ວຍເຫຼືອທາງດ້ານອາຫານ, ຈັດການກັບບັນຫາຄວາມອຶດຫິວໃນທົ່ວໂລກ.
  3) ກອງທຶນການເງິນລະຫວ່າງປະເທດ (IMF). ທະນາຄານໂລກ (world Bank) ແລະ ອື່ນໆ.
  4. ເພື່ອເປັນຕົວແທນໃນການປະສານງານວຽກງານຕ່າງໆໃນພາກພື້ນ ແລະ ສາກົນ

**ຂ. ຄົ້ນຄວ້າເປັນກຸ່ມ (35 ນາທີ)**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ ແລ້ວໃຫ້ນັກຮຽນອ່ານບົດຮຽນ ຂໍ້ທີ 2 ໃນປຶ້ມແບບຮຽນ ແລະ ອ່ານບົດເລື່ອງ “ຄອບຄົວຂອງທ້າວສົມໂພດ” ແລ້ວແບ່ງຄຳຖາມແຕ່ລະກຸ່ມຄົ້ນຄວ້າລຸ່ມນີ້:

**ຄຳຖາມ**:
  1) ເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ເຈົ້າເມືອງມີສິດ ແລະ ໜ້າທີ່ຫຍັງແດ່?
  2) ຫົວໜ້າເຫດສະບານມີສິດ ແລະ ໜ້າທີ່ຫຍັງແດ່?
  3) ນາຍບ້ານມີສິດ ແລະ ໜ້າທີ່ຫຍັງແດ່?
  4) ຍ້ອນຫຍັງຈຶ່ງຕ້ອງມີລະບົບການປົກຄອງລະດັບທ້ອງຖິ່ນ, ຂອງຊາດ ແລະ ຂອງໂລກ?
  5) ນັກຮຽນຈະປະກອບສ່ວນໃນລະບົບການປົກຄອງ ຂອງທ້ອງຖິ່ນ, ຂອງຊາດ ແລະ ຂອງໂລກແນວໃດ?

6. ຈົ່ງອ່ານບົດເລື່ອງ "ຄອບຄົວຂອງທ້າວສົມໂພດ" ແລ້ວຕອບຄໍາຖາມ:
 - ການປົກຄອງບ້ານຂອງທ້າວສົມໂພດປະກອບມີໃຜແດ່? ແຕ່ລະຄົນມີໜ້າທີ່ແນວໃດ?
 - ເງື່ອນໄຂການສ້າງບ້ານວັດທະນະທໍາມີຫຍັງແດ່?
 - ທ້າວສົມໂພດໄດ້ປະກອບສ່ວນຫຍັງເພື່ອຊ່ວຍບ້ານຂອງລາວ?
- ຕາງໜ້ານັກຮຽນແຕ່ລະກຸ່ມຂຶ້ນລາຍງານ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ ດັ່ງນີ້:

**ຄໍາຕອບ**:

1) ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ເຈົ້າເມືອງ, ເຈົ້ານະຄອນ ມີສິດ ແລະ ໜ້າທີ່ ຄື: ຮັບປະກັນການປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ, ຊີ້ນໍາ, ກວດກາ ການເຄື່ອນໄຫວຂອງທຸກຂະແໜງການທີ່ຂຶ້ນກັບຄວາມຮັບຜິດຊອບຂອງຄົນ, ຍົກ ເລີກຂໍ້ຕົກລົງຂອງທຸກຂະແໜງການທີ່ຢູ່ຂັ້ນຂອງຕົນທີ່ຂັດກັບກົດໝາຍ, ຄຸ້ມຄອງ ພົນລະເມືອງທີ່ຢູ່ໃນເຂດສິດອໍານາດຂອງຕົນ, ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມ ທີ່ກໍານົດໄວ້ໃນກົດໝາຍ.
2) ຫົວໜ້າເທດສະບານມີສິດ ແລະ ໜ້າທີ່ ວາງແຜນ, ຈັດຕັ້ງປະຕິບັດ, ຄຸ້ມຄອງພັດ ທະນາຕົວເມືອງ, ບໍລິການສາທາລະນະໃຫ້ທົ່ວເມືອງໃຫ້ມີຄວາມເປັນລະບຽບຮຽບ ຮ້ອຍ ແລະ ປະຕິບັດສິດ, ໜ້າທີ່ຕາມທີ່ກໍານົດໄວ້ໃນກົດໝາຍ.
3) ນາຍບ້ານມີສິດ ແລະ ໜ້າທີ່ ຈັດຕັ້ງ, ປະຕິບັດລະບຽບກົດໝາຍ, ມະຕິຄໍາສັ່ງຂອງ ລັດ, ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ພັດທະນາ ບ້ານໃຫ້ມີຄວາມໜັກແໜ້ນ.
4) ເພື່ອໃຫ້ມີໜ່ວຍງານການປະສານງານ ແລະ ແກ້ໄຂບັນຫາຕ່າງໆຢູ່ໃນສັງຄົມ ກໍຄື ລະຫວ່າງປະເທດ ເພື່ອແນໃສ່ໃຫ້ສັງຄົມມີຄວາມສະຫງົບ, ປະຊາຊາດມີຄວາມ ສະເໝີພາບ ແລະ ສາມາດໍາລົງຊີວິດຢູ່ຮ່ວມກັນໄດ້ຢ່າງສັນຕິ.
5) ນັກຮຽນທຸກຄົນມີໜ້າທີ່ສະໜັບສະໜູນ ແລະ ປະກອບສ່ວນໃນວຽກງານຕ່າງໆ ຂອງ ອໍານາດການປົກຄອງແຕ່ລະຂັ້ນ ຕາມຄວາມສາມາດຕົວຈິງດ້ວຍຄວາມຫ້າວຫັນ ແລະ ຕື່ນຕົວເພື່ອເຮັດໃຫ້ບ້ານ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມ ສະຫງົບ ແລະ ສີວິໄລ.

6) ບົດເລື່ອງ "ຄອບຄົວຂອງທ້າວສົມໂພດ"

- ການປົກຄອງຂັ້ນບ້ານຂອງທ້າວສົມໂພດປະກອບມີ: ນາຍບ້ານ ເປັນຜູ້ຮັບຜິດຊອບວຽກງານລວມໃນບ້ານ. ຮອງນາຍບ້ານ: ເປັນຜູ້ຊ່ວຍນາຍບ້ານໃນການບໍລິຫານວຽກງານຕ່າງໆຂອງບ້ານ. ແນວໂຮມບ້ານ: ຊ່ວຍນາຍບ້ານປຶກສາຫາລື, ໂຄສະນາ, ປຸກລະດົມຊາວບ້ານປະກອບສ່ວນພັດທະນາບ້ານ. ຫົວໜ້າສະຫະພັນແມ່ຍິງ ແລະ ຊາວໜຸ່ມບ້ານ: ຊ່ວຍວຽກງານບໍລິຫານ ແລະ ເຄື່ອນໄຫວວຽກງານຕ່າງໆຂອງບ້ານ. ຫົວໜ້າໜ່ວຍ (ຈຸ): ແມ່ນຮັບຜິດຊອບເກັບກຳສະມາຊິກ, ຜົນງານຂອງແຕ່ລະຄອບຄົວ. ໜ່ວຍປ້ອງກັນຄວາມສະຫງົບບ້ານ: ມີໜ້າທີ່ເວນຍາມກວດກາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງບ້ານ.
- ເງື່ອນໄຂບ້ານວັດທະນະທຳ ຕ້ອງມີກົດລະບຽບສະເພາະຂອງບ້ານ ໂດຍບໍ່ຂັດກັບກົດໝາຍ, ເອົາໃຈໃສ່ສ້າງຄອບຄົວວັດທະນະທຳໃໝ່ຕາມ 5 ມາດຖານ ແລະ ມີຄອບຄົວວັດທະນະທຳ 80% ຂຶ້ນໄປ, ສ້າງຂະບວນການເຄື່ອນໄຫວວັດທະນະທຳດີ, ສ້າງຄວາມເບີກບານມ່ວນຊື່ນໃຫ້ປະຊາຊົນ, ສ້າງສະຖານທີ່ເຄື່ອນໄຫວກິດຈະກຳ ແລະ ອື່ນໆ ເພື່ອຕອບສະໜອງຂໍ້ມູນຂ່າວສານ ແລະ ຍົກລະດັບຄວາມຮູ້ ແລະ ມີທ່າແຮງດ້ານຕ່າງໆ.
- ທ້າວສົມໂພດໄດ້ປະກອບສ່ວນໃນການອອກແຮງງານລວມໃນການອະນາໄມຕາມເສັ້ນທາງ, ຮ່ອງລະບາຍນໍ້າຂອງບ້ານ.

**3. ສະຫຼຸບ (5 ນາທີ)**

- ຄູ ແລະ ນັກຮຽນສະຫຼຸບກ່ຽວກັບສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງກຳແພງ, ເຈົ້າເມືອງ, ຫົວໜ້າເທດສະບານ, ນາຍບ້ານ. ອຳນາດການປົກຄອງບ້ານ ແລະ ເງື່ອນໄຂຂອງບ້ານວັດທະນະທຳ.

ພ້ອມນີ້, ຄູອະທິບາຍເພີ່ມຕື່ມອີກວ່າ ຢູ່ທຸກສະຖານທີ່ລ້ວນແຕ່ມີອົງການປົກຄອງສະເພາະຂອງຕົນ ໂດຍການສ້າງໂຄງປະກອບ ແລະ ລະບົບການຄຸ້ມຄອງພື້ນຖານເລີ່ມຈາກຂັ້ນທ້ອງຖິ່ນແນໃສ່ໃຫ້ປະຊາຊົນມີຄວາມສາມັກຄີ, ເຂົ້າໃຈ ແລະ ເຄົາລົບເຊິ່ງກັນ ແລະ ກັນ. ການສ້າງໂຄງປະກອບ ແລະ ລະບົບການຄຸ້ມຄອງລະດັບຊາດກໍເພື່ອໃຫ້ມີຫຼັກການປະຕິບັດທີ່ເປັນເອກະພາບ, ສະເໝີພາບ ແລະ ຮຽນຮູ້ໃນການຢູ່ຮ່ວມກັນ. ສຳລັບການສ້າງໂຄງປະກອບ ແລະ ລະບົບການຄຸ້ມຄອງລະດັບພາກພື້ນ ແລະ ສາກົນກໍເພື່ອໃຫ້ບັນດາປະຊາຊາດ

ໃນໂລກມີຫຼັກການປະຕິບັດທີ່ເປັນໜຶ່ງດຽວກັນ, ຖືກປະຕິບັດຢ່າງເທົ່າທຽມບົນພື້ນຖານສ້າງສັງຄົມໂລກໃຫ້ມີຄວາມຍຸຕິທຳ ແລະ ສີວິໄລ.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນຜົນຈາກການຂີດລູກສອນໃສ່ຂໍ້ຄວາມຕ່າງໆຈາກຖັນ 1 (ກ, ຂ, ຄ...) ໄປໃສ່ຂໍ້ຄວາມຕ່າງໆຢູ່ຖັນ 2 (1, 2, 3, 4) ທີ່ເຫັນວ່າມີສ່ວນພົວພັນກັນ.

| **ໜ້າວຽກທີ່ຮັບຜິດຊອບ** | **ອົງການຮັບຜິດຊອບ** |
|---|---|
| ກ. ຄຸ້ມຄອງພັດທະນາຕົວເມືອງ | |
| ຂ. ໜັງສືສະເໜີພັກເຊົາຊົ່ວຄາວ | |
| ຄ. ຮັບປະກັນການປະຕິບັດລັດຖະທຳມະນູນ | 1. ຫ້ອງການປົກຄອງບ້ານ |
| ງ. ບໍລິການສາທາລະນະໃຫ້ທົ່ວເມືອງ | |
| ຈ. ຮັບຮູ້ຊີວະປະຫວັດ | 2. ຫ້ອງການປົກຄອງເທດສະບານ |
| ສ. ຄຸ້ມຄອງພົນລະເມືອງທົ່ວແຂວງ | |
| ຊ. ວຽກງານສາທາລະນະສຸກລະຫວ່າງປະເທດ | 3.ຫ້ອງການປົກຄອງແຂວງ |
| ຍ. ສ້າງເມືອງໃຫ້ມີຄວາມເປັນລະບຽບ | |
| ດ. ຈັດການກັບບັນຫາຄວາມອຶດຫິວໃນທົ່ວໂລກ | 4. ອົງການຈັດຕັ້ງສາກົນ |
| ຕ. ອະນຸມັດການແຕ່ງດອງ | |
| ຖ. ກວດກາການເຄື່ອນໄຫວວຽກງານໃນແຂວງ | |

**ຄຳຕອບ:**

**ໜ້າວຽກທີ່ຮັບຜິດຊອບ**

ກ. ຄຸ້ມຄອງພັດທະນາຕົວເມືອງ
ຂ. ໜັງສືສະເໜີພັກເຊົາຊົ່ວຄາວ
ຄ. ຮັບປະກັນການປະຕິບັດລັດຖະທຳມະນູນ
ງ. ບໍລິການສາທາລະນະໃຫ້ທົ່ວເມືອງ
ຈ. ຮັບຮູ້ຊີວະປະຫວັດ
ສ. ຄຸ້ມຄອງພົນລະເມືອງທົ່ວແຂວງ
ຊ. ວຽກງານສາທາລະນະສຸກລະຫວ່າງປະເທດ
ຍ. ສ້າງເມືອງໃຫ້ມີຄວາມເປັນລະບຽບ
ດ. ຈັດການກັບບັນຫາຄວາມອຶດຫິວໃນທົ່ວໂລກ
ຕ. ອະນຸມັດການແຕ່ງດອງ
ຖ. ກວດກາການເຄື່ອນໄຫວວຽກງານໃນແຂວງ

**ອົງການຮັບຜິດຊອບ**

1. ຫ້ອງການປົກຄອງບ້ານ
2. ຫ້ອງການປົກຄອງເທດສະບານ
3. ຫ້ອງການປົກຄອງແຂວງ
4. ອົງການຈັດຕັ້ງສາກົນ

**ໝາຍເຫດ**

- ເພື່ອເປັນການປະຢັດເວລາ ຄູຄວນກຽມແຜນວາດໂຄງຮ່າງການຈັດຕັ້ງຂັ້ນສູນກາງ, ແຂວງ, ເມືອງ ແລະ ບ້ານ ໄວ້ກ່ອນລ່ວງໜ້າ.

**ເອກະສານອ້າງອີງ**

- ອົງການລະຫວ່າງປະເທດ; ພາກວິຊາສຳພັນລະຫວ່າງປະເທດ; ຄະນະລັດຖະສາດ; ມະຫາວິທະຍາໄລລາມຄຳແຫງ.

### 3. ຊັ້ນມັດທະຍົມສຶກສາ ປີທີ 3

ການແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງ ຊັ້ນມັດທະຍົມສຶກສາ ປີທີ 3 ສາມາດແຊກຊ້ອນໄດ້ 8 ບົດ ຄື: ບົດທີ 1, 5, 6, 7, 8, 11, 13 ແລະ 15.

- ບົດທີ 1 ມີ 1 ຊົ່ວໂມງ ໃຫ້ຄູນໍາໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບເນື້ອໃນ ສພລ ແຊກຊ້ອນເຂົ້າບົດເລື່ອງ "ບໍ່ຢາກອອກໂຮງຮຽນ".
- ບົດທີ 5 ມີ 1 ຊົ່ວໂມງ ໃຫ້ຄູນໍາໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບເນື້ອໃນ ສພລ ແຊກຊ້ອນເຂົ້າຫົວຂໍ້ທີ 1. ລະບຽບວິໄນ ແລະ ກົດໝາຍແມ່ນຫຍັງ.
- ບົດທີ 6 ມີ 1 ຊົ່ວໂມງ ໃຫ້ຄູນໍາໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບເນື້ອໃນ ສພລ ແຊກຊ້ອນເຂົ້າຫົວຂໍ້ທີ 1.2 ການສ້າງສາຍສໍາພັນເພື່ອນມິດ.
- ບົດທີ 7 ຊົ່ວໂມງທີ 1 ຫົວຂໍ້ທີ 5. ຜົນໄດ້ຮັບການປະກອບສ່ວນເຄື່ອນໄຫວວຽກງານການເມືອງ-ສັງຄົມ, ສໍາລັບຊົ່ວໂມງທີ 2 ໃຫ້ຄູນໍາໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.
- ບົດທີ 8 ມີ 1 ຊົ່ວໂມງ ໃຫ້ຄູນໍາໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບເນື້ອໃນ ສພສ ແຊກຊ້ອນເຂົ້າຫົວຂໍ້ທີ 3. ຄຸນປະໂຫຍດຂອງການເຄົາລົບນັບຖື ແລະ ການຊອກ ຮູ້ຮໍ່າຮຽນກັບບັນດາເຜົ່າ-ຊາດອື່ນ.
- ບົດທີ 11 ຊົ່ວໂມງທີ 1 ຫົວຂໍ້ທີ 2. ການໝູນໃຊ້ຄວາມຕື່ນຕົວ ແລະ ປະດິດສ້າງອອກແຮງງານເຂົ້າໃນການດໍາລົງຊີວິດ ໃຫ້ຄູນໍາໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 2 ໃຫ້ຄູນໍາໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.
- ບົດທີ 13 ຊົ່ວໂມງທີ 1 ຫົວຂໍ້ທີ 1. ປາກົດການຫຍໍ້ທໍ້ທາງສັງຄົມແມ່ນຫຍັງ ໃຫ້ຄູນໍາໃຊ້ປຶ້ມຄູ່ມືຄູ ເຫຼັ້ມນີ້ສອນ ສໍາລັບຊົ່ວໂມງທີ 2 ໃຫ້ຄູນໍາໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.
- ບົດທີ 15 ຊົ່ວໂມງທີ 1 ຫົວຂໍ້ທີ 2. ການປ້ອງກັນອຸບັດຕິເຫດຈາກທາດເບື່ອ, ເຄມີ ໃຫ້ຄູນໍາໃຊ້ປຶ້ມຄູ່ມືຄູເຫຼັ້ມນີ້ສອນ, ສໍາລັບຊົ່ວໂມງທີ 2 ໃຫ້ຄູນໍາໃຊ້ປຶ້ມຄູ່ມືຄູ ວິຊາສຶກສາພົນລະເມືອງ.

# ພາກທີ I ຄຸນສົມບັດ ແລະ ວັດທະນະທຳ
# ບົດທີ 1 ການນັບຖືສິ່ງທີ່ຖືກຕ້ອງ
## ສອນແຊກຊ້ອນເຂົ້າໃນບົດເລື່ອງ "ບໍ່ຢາກອອກໂຮງຮຽນ"

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍຂອງການນັບຖືສິ່ງທີ່ຖືກຕ້ອງ ແລະ ຄວາມຍຸຕິທຳ .
- ຮັກຄວາມຍຸຕິທຳ ແລະ ນຳໃຊ້ສິ່ງທີ່ຖືກຕ້ອງເຂົ້າໃນຊີວິດປະຈຳວັນ.
- ຈຳແນກພຶດຕິກຳທີ່ມີຄວາມຍຸຕິທຳ ແລະ ບໍ່ມີຄວາມຍຸຕິທຳ.

## II. ເນື້ອໃນ

**ສິ່ງທີ່ຖືກຕ້ອງ** ໝາຍເຖິງຄວາມເປັນທຳ, ແທດເໝາະກັບມາດຕະຖານຄຸນສົມບັດ ແລະ ຜົນປະໂຫຍດລວມຂອງຊາດ ຫຼື ການປະພຶດຂອງຄົນທີ່ເຮັດສິ່ງໃດສິ່ງໜຶ່ງຂຶ້ນ ແລະ ສິ່ງນັ້ນບໍ່ຜິດຕໍ່ລະບຽບຫຼັກການ, ກົດໝາຍບ້ານເມືອງ, ຮີດຄອງປະເພນີ, ຫຼັກສິນທຳຂອງຕົນເອງ, ຄອບຄົວ, ສັງຄົມ ແລະ ປະເທດຊາດ.

**ການເຄົາລົບນັບຖືສິ່ງທີ່ຖືກຕ້ອງ** ແມ່ນເພື່ອຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະຫງົບສຸກຂອງບ້ານເມືອງ ໂດຍການປະຕິບັດຕົນໃຫ້ການເປັນຄົນດີ, ສັດຊື່ ແລະ ມີຄຸນນະທຳຢູ່ສະເໝີ.

**ສິ່ງທີ່ຖືກຕ້ອງ ແລະ ສິ່ງທີ່ບໍ່ຖືກຕ້ອງສະແດງອອກດັ່ງນີ້:**

ສິ່ງທີ່ຖືກຕ້ອງ ສະແດງອອກໃນການປະຕິບັດຕົນເປັນຄົນດີຂອງສັງຄົມ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ສັດຊື່ບໍລິສຸດຕໍ່ຕົນເອງ ແລະ ຄົນອື່ນ, ປະຕິບັດຕາມລະບຽບກົດໝາຍບ້ານເມືອງ, ເປັນຄົນດີທີ່ມີສິນທຳປະຈຳໃຈ, ຮັກແພງ ແລະ ຊ່ວຍເຫຼືອໝູ່ຄູ່ກຳຄືຄົນອື່ນດ້ວຍຄວາມຈິງໃຈຢູ່ສະເໝີ.

ສິ່ງທີ່ບໍ່ຖືກຕ້ອງ ສະແດງອອກໃນການປະຕິບັດທີ່ຜິດຕໍ່ລະບຽບກົດໝາຍບ້ານເມືອງ, ບໍ່ມີຄວາມຮັບຜິດຊອບ, ບໍ່ມີຄວາມສັດຊື່ຕໍ່ຕົນເອງ ແລະ ຄົນອື່ນ, ບໍ່ມີຄວາມຮັກແພງສາມັກຄີກັບຄົນອ້ອມຂ້າງ...

ຄວາມຍຸຕິທຳແມ່ນ ຄຸນສົມບັດຂອງຄົນ ຊຶ່ງສະແດງອອກເຖິງຄວາມສະເໝີພາບ, ການ

ແກ້ໄຂວຽກງານ, ບໍ່ອຽງຊ້າຍ, ອຽງຂວາ, ແກ້ໄຂດ້ວຍຄວາມຖືກຕ້ອງ, ໂດຍເກີດມາຈາກສິດຜົນປະໂຫຍດເພື່ອສ່ວນລວມ ແລະ ຍົກສູງສິດຜົນປະໂຫຍດສ່ວນລວມຫຼາຍກວ່າສ່ວນຕົວ.

ຄວາມບໍ່ຍຸຕິທຳ ໝາຍເຖິງຜົນຂອງການກະທຳທີ່ບໍ່ຖືກຕ້ອງ, ບໍ່ເປັນທຳ ເຊັ່ນ: ຕັດສິນຜິດເປັນຖືກ ຫຼື ຖືກເປັນຜິດ, ການຂາດໂອກາດ ແລະ ສິດຕ່າງໆທີ່ຄວນໄດ້ຮັບທີ່ລະບຸໄວ້ຕາມກົດໝາຍ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຂັ້ນ ມ.3
2. ເນື້ອໃນກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ມາດຕາ 3: ສິດທິຂອງເດັກ
3. ຍົກຕົວຢ່າງນັກຮຽນດີເດັ່ນ ແລະ ເຮັດສິ່ງທີ່ຖືກຕ້ອງໃນການຮໍ່າຮຽນ, ການອອກແຮງງານ ແລະ ປະຕິບັດຕາມການສັນຈອນຢ່າງຖືກຕ້ອງ
4. ຮູບພາບອື່ນໆ ທີ່ກ່ຽວຂ້ອງກັບບົດຮຽນ (ຖ້າມີ)

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ລະດົມສະໝອງ (5 ນາທີ)**

- ຄູຍົກຮູບພາບໃນປຶ້ມແບບຮຽນ ໜ້າທີ 1 ໃຫ້ນັກຮຽນສັງເກດແລ້ວຖາມວ່າ:
  1) ຄົນໃນຮູບພາບກຳລັງເຮັດຫຍັງ?
  2) ການກະທຳຂອງເຂົາເຈົ້າຖືກຕ້ອງແລ້ວບໍ່?
- ຄູ ແລະ ນັກຮຽນສະຫຼຸບຄຳຕອບກ່ຽວກັບຮູບພາບ.

**2. ສະເໜີບົດຮຽນໃໝ່**

**ກ. ສົນທະນາຖາມຕອບ (5 ນາທີ)**

- ຄູຖາມນັກຮຽນຕາມຄຳຖາມລຸ່ມນີ້:
  1) ສິ່ງທີ່ຖືກຕ້ອງແມ່ນຫຍັງ?
  2) ເປັນຫຍັງຈຶ່ງຕ້ອງເຄົາລົບນັບຖືສິ່ງທີ່ຖືກຕ້ອງ?
  3) ສິ່ງທີ່ຖືກຕ້ອງ ແລະ ບໍ່ຖືກຕ້ອງສະແດງອອກຢູ່ບ່ອນໃດ?
- ນັກຮຽນອາສາສະໝັກຕອບຕາມຄວາມເຂົ້າໃຈ.

- ຄູສັງລວມຄືນຄຳຕອບທີ່ຖືກຕ້ອງໃຫ້ນັກຮຽນ.

**ຄຳຕອບ**

1) ສິ່ງທີ່ຖືກຕ້ອງ ໝາຍເຖິງຄວາມເປັນທຳ, ແທດເໝາະກັບມາດຕະຖານຄຸນສົມບັດ ແລະ ຜົນປະໂຫຍດລວມຂອງຊາດ ຫຼື ການປະພຶດຂອງຄົນທີ່ເຮັດສິ່ງໃດສິ່ງໜຶ່ງຂຶ້ນ ແລະ ສິ່ງນັ້ນບໍ່ຜິດຕໍ່ລະບຽບຫຼັກການ, ກົດໝາຍບ້ານເມືອງ, ຮີດຄອງປະເພນີ, ຫຼັກສິນທຳຂອງຕົນເອງ, ຄອບຄົວ, ສັງຄົມ ແລະ ປະເທດຊາດ.
2) ການເຄົາລົບນັບຖືສິ່ງທີ່ຖືກຕ້ອງ ແມ່ນເພື່ອຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະຫງົບສຸກຂອງບ້ານເມືອງ ໂດຍການປະຕິບັດຕົນໃຫ້ກາຍເປັນຄົນດີ, ສັດຊື່ ແລະ ມີຄຸນນະທຳຢູ່ສະເໝີ.
3) ສິ່ງທີ່ຖືກຕ້ອງ ແລະ ບໍ່ຖືກຕ້ອງສະແດງອອກດັ່ງນີ້:
   - ສິ່ງທີ່ຖືກຕ້ອງ ສະແດງອອກໃນການປະຕິບັດຕົນເປັນຄົນດີຂອງສັງຄົມ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ສັດຊື່ບໍລິສຸດຕໍ່ຕົນເອງ ແລະ ຄົນອື່ນ, ປະຕິບັດຕາມລະບຽບກົດໝາຍບ້ານເມືອງ, ເປັນຄົນດີທີ່ມີສິນທຳປະຈຳໃຈ, ຮັກແພງ ແລະ ຊ່ວຍເຫຼືອໝູ່ຄູ່ກໍຄືຄົນອື່ນດ້ວຍຄວາມຈິງໃຈຢູ່ສະເໝີ.
   - ສິ່ງທີ່ບໍ່ຖືກຕ້ອງ ສະແດງອອກໃນການປະຕິບັດທີ່ຜິດຕໍ່ລະບຽບກົດໝາຍບ້ານເມືອງ, ບໍ່ມີຄວາມຮັບຜິດຊອບ, ບໍ່ມີຄວາມສັດຊື່ຕໍ່ຕົນເອງ ແລະ ຄົນອື່ນ, ບໍ່ມີຄວາມຮັກແພງສາມັກຄີກັບຄົນອ້ອມຂ້າງ...

**ຂ. ສົນທະນາເລື່ອງ "ບໍ່ຢາກອອກໂຮງຮຽນ" (20 ນາທີ)**

- ຄູແບ່ງນັກຮຽນເປັນກຸ່ມຕາມຄວາມເໝາະສົມ.
- ຄູໃຫ້ແຕ່ລະກຸ່ມສົນທະນາເລື່ອງ "ບໍ່ຢາກອອກໂຮງຮຽນ" ແລະ ຕອບຄຳຖາມ:

**ຄຳຖາມ**

1) ເປັນຫຍັງທ້າວຄຳໃສຈຶ່ງບໍ່ຢາກອອກໂຮງຮຽນ?
2) ການກະທຳຂອງແມ່ນ້າທ້າວຄຳໃສ ໃນເບື້ອງຕົ້ນມີຄວາມຍຸຕິທຳ ຫຼື ບໍ່? ຍ້ອນຫຍັງ?
3) ສຸດທ້າຍທ້າວຄຳໃສ ໄດ້ຮັບຄວາມຍຸຕິທຳ ຫຼື ບໍ່? ຍ້ອນຫຍັງ?
4) ທ້າວຄຳໃສໄດ້ປະຕິຍານຕໍ່ເອື້ອຍຄູແນວໃດ?

- ຄູຢາຍເຈ້ຍແຜ່ນໃຫຍ່ໃຫ້ນັກຮຽນ ແຕ່ລະກຸ່ມຄົ້ນຄວ້າ ແລະ ຂຽນຄຳຕອບຂອງຕົນເອງ.

- ຕາງໜ້າກຸ່ມຂຶ້ນສະເໜີກຸ່ມອື່ນໆປະກອບຄຳຄິດເຫັນ.
- ຄູຖາມເຈາະຈີ້ມ ຖ້າເນື້ອໃນຄຳຕອບຍັງບໍ່ຄົບຖ້ວນ.
- ຄູສະຫຼຸບຄຳຕອບ ແລະ ເນັ້ນບາງບັນຫາ:

**ຄຳຕອບ**:

1) ຍ້ອນລາວຢາກຮຽນໃຫ້ຈົບ ແລະ ມີອະນາຄົດທີ່ດີ.
2) ການກະທຳຂອງແມ່ນ້າທ້າວຄຳໃສ ໃນເບື້ອງຕົ້ນບໍ່ມີຄວາມຍຸຕິທຳ ຍ້ອນລາວບໍ່ຟັງຄຳອະທິບາຍຂອງຄຳໃສ ຢາກໃຫ້ຄຳໃສອອກໂຮງຮຽນ ຈຶ່ງຕັດສິນໂດຍລຳພັງໃຈ ເຮັດໃຫ້ຄຳໃສຂາດໂອກາດໃນການເຂົ້າຮຽນ ແລະ ເປັນການລະເມີດສິດທິພື້ນຖານຂອງເດັກ.
3) ທ້າວຄຳໃສ ໄດ້ຮັບຄວາມຍຸຕິທຳ ຍ້ອນຄູໄດ້ອະທິບາຍທຸກຢ່າງໃຫ້ພໍ່ແມ່ຄຳໃສຟັງ ແລະ ພວກເພິ່ນກໍເຂົ້າໃຈດີ.
4) ທ້າວຄຳໃສໄດ້ປະຕິຍານຕໍ່ເອື້ອຍຄູວ່າ ຈະປະພຶດຕົນເປັນຄົນດີ ເຮັດແຕ່ສິ່ງທີ່ຖືກຕ້ອງ, ປະຕິບັດຕາມລະບຽບວິໄນຂອງໂຮງຮຽນ ແລະ ກົດໝາຍບ້ານເມືອງ.

- ຄູອະທິບາຍເພີ່ມເຕີມກ່ຽວກັບຄວາມຍຸຕິທຳ ແລະ ບໍ່ຍຸຕິທຳ:

ຄວາມຍຸຕິທຳແມ່ນ ຄຸນສົມບັດຂອງຄົນ ຊຶ່ງສະແດງອອກເຖິງຄວາມສະເໝີພາບ, ການແກ້ໄຂວຽກງານບໍ່ອຽງຊ້າຍ, ບໍ່ອຽງຂວາ, ແກ້ໄຂດ້ວຍຄວາມຖືກຕ້ອງ, ໂດຍເກີດມາຈາກສິດຜົນປະໂຫຍດເພື່ອສ່ວນລວມ ແລະ ຍົກສູງສິດຜົນປະໂຫຍດສ່ວນລວມຫຼາຍກວ່າສ່ວນຕົວ.

ຄວາມບໍ່ຍຸຕິທຳແມ່ນ ໝາຍເຖິງຜົນຂອງການກະທຳທີ່ບໍ່ຖືກຕ້ອງ, ບໍ່ເປັນທຳ ເຊັ່ນ: ຕັດສິນຜິດເປັນຖືກ ຫຼື ຖືກເປັນຜິດ, ການຂາດໂອກາດ ແລະ ສິດຕ່າງໆທີ່ຄວນໄດ້ຮັບທີ່ລະບຸໄວ້ຕາມກົດໝາຍ.

**3. ສະຫຼຸບ (5 ນາທີ)**

ສິ່ງທີ່ຖືກຕ້ອງ ແລະ ຄວາມຍຸຕິທຳ ເປັນສິ່ງວັດແທກຄຸນງາມຄວາມດີ ຊຶ່ງສະແດງເຖິງຄຸນສົມບັດສິນທຳປະຈຳໃຈຂອງແຕ່ລະຄົນ ໂດຍຜ່ານການກະທຳຂອງບຸກຄົນໃນການດຳລົງຊີວິດ ຢາກເຮັດໄດ້ສິ່ງດັ່ງກ່າວຕ້ອງເຄົາລົບນັບຖື, ຊ່ວຍເຫຼືອສາມັກຄີເຊິ່ງກັນ ແລະ ກັນ, ປະກອບສ່ວນເຂົ້າໃນການສ້າງສັງຄົມໃຫ້ມີຄວາມສະຫງົບສຸກ, ເຄົາລົບນັບຖື ແລະ ປະຕິບັດສິ່ງທີ່ຖືກຕ້ອງໃນການດຳລົງຊີວິດຂອງທຸກຄົນໃຫ້ຖືກຕາມລະບຽບກົດໝາຍຂອງບ້ານເມືອງ.

**ວຽກບ້ານ**

- ຄູແນະນຳນັກຮຽນເຮັດບົດຝຶກຫັດຢູ່ທ້າຍບົດຮຽນ ແລ້ວມາສົ່ງຄູໃນຊົ່ວໂມງຕໍ່ໄປ.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນຈາກ: ການຕອບຄຳຖາມລຸ່ມນີ້:

1. ຄວາມຍຸຕິທຳແມ່ນຫຍັງ?

   ........................................................................................................

   ........................................................................................................

2. ຄວາມບໍ່ຍຸຕິທຳແມ່ນຫຍັງ?

   ........................................................................................................

   ........................................................................................................

**ຄຳຕອບ**

1. ຄວາມຍຸຕິທຳແມ່ນ ຄຸນສົມບັດຂອງຄົນ ຊຶ່ງສະແດງອອກເຖິງຄວາມສະເໝີພາບ, ການແກ້ໄຂວຽກງານບໍ່ອຽງຊ້າຍ, ບໍ່ອຽງຂວາ, ແກ້ໄຂດ້ວຍຄວາມຖືກຕ້ອງ, ໂດຍເກີດມາຈາກສິດຜົນປະໂຫຍດເພື່ອສ່ວນລວມ ແລະ ຍົກສູງສິດຜົນປະໂຫຍດສ່ວນລວມຫຼາຍກວ່າສ່ວນຕົວ.
2. ຄວາມບໍ່ຍຸຕິທຳແມ່ນ ໝາຍເຖິງຜົນຂອງການກະທຳທີ່ບໍ່ຖືກຕ້ອງ, ບໍ່ເປັນທຳ ເຊັ່ນ: ຕັດສິນຜິດເປັນຖືກ ຫຼື ຖືກເປັນຜິດ, ການຂາດໂອກາດ ແລະ ສິດຕ່າງໆທີ່ຄວນໄດ້ຮັບທີ່ລະບຸໄວ້ຕາມກົດໝາຍ.

**ເອກະສານຂໍ້ມູນເພີ່ມເຕີມ**:

- ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບເລກທີ 05/ ສພຊ, ລົງວັນທີ 27 ທັນວາ 2006
- ສົນທິສັນຍາວ່າດ້ວຍສິດທິເດັກ

  ເວັບໄຊ: www. Child Rights

# ບົດທີ 5 ລະບຽບວິໄນ ແລະ ກົດໝາຍ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 1 ລະບຽບວິໄນ ແລະ ກົດໝາຍແມ່ນຫຍັງ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ**:

- ບອກຄວາມໝາຍຂອງລະບຽບວິໄນ, ກົດໝາຍ, ຫຼັກນິຕິກໍາໃນພາກພື້ນ ແລະ ສາກົນ.
- ຈໍາແນກຜົນດີຂອງລະບຽບວິໄນ, ກົດໝາຍ, ການຄຸ້ມຄອງທີ່ດີ, ຫຼັກນິຕິກໍາໃນພາກພື້ນ ແລະ ສາກົນ.
- ເຄົາລົບນັບຖືລະບຽບວິໄນ, ກົດໝາຍບ້ານເມືອງ ແລະ ຫຼັກນິຕິກໍາໃນພາກພື້ນ ແລະ ສາກົນໃຫ້ຖືກຕ້ອງ.
- ຝຶກຝົນຕົນເອງໃຫ້ເປັນຄົນຮູ້ຜູ້ດີມີລະບຽບວິໄນໃນການດໍາລົງຊີວິດ.

## II. ເນື້ອໃນ

**ລະບຽບວິໄນ**: ແມ່ນຂໍ້ກໍານົດທີ່ບຸກຄົນໃດໜຶ່ງ, ການຈັດຕັ້ງ ຫຼື ໜ່ວຍງານໃດໜຶ່ງພ້ອມກັນວາງອອກ ແລະ ພ້ອມກັນປະຕິບັດດ້ວຍຄວາມຕື່ນຕົວ, ສະໝັກໃຈ ແລະ ມີຄວາມຮັບຜິດຊອບສູງຕໍ່ຂໍ້ກໍານົດດັ່ງກ່າວ.

**ກົດໝາຍ**: ແມ່ນບັນດາຂໍ້ບັງຄັບທີ່ລັດວາງອອກ ເພື່ອຄຸ້ມຄອງປະຊາຊົນຂອງລັດໃນທົ່ວສັງຄົມ ໃຫ້ສັງຄົມມີຄວາມສະຫງົບສຸກ.

**ນິຕິກໍາ**: ແມ່ນເອກະສານທາງດ້ານກົດໝາຍ ທີ່ດັດປັບສາຍພົວພັນສັງຄົມ, ມີຜົນບັງຄັບທົ່ວໄປ ຫຼື ມີຜົນບັງຄັບສະເພາະ.

**ນິຕິກໍາພາກພື້ນ ແລະ ສາກົນ**: ແມ່ນບັນດາສົນທິສັນຍາທີ່ລັດຖະບານໃດໜຶ່ງໄດ້ລົງນາມເປັນລາຍລັກອັກສອນກັບພາຄີຕ່າງປະເທດຊຶ່ງພາໃຫ້ເກີດສິດ ແລະ ພັນທະຕາມກົດໝາຍສາກົນ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາ ສຶກສາພົນລະເມືອງ ຊັ້ນ ມ.3
2. ປຶ້ມກ່ຽວກັບກົດລະບຽບຂອງໂຮງຮຽນ, ອົງການຈັດຕັ້ງຕ່າງໆ ເຊັ່ນ: ເຍົາວະຊົນ, ຊາວໜຸ່ມ, ແມ່ຍິງ, ກໍາມະບານ...

3. ປຶ້ມກົດໝາຍຕ່າງໆເຊັ່ນ: ກົດໝາຍການສຶກສາ, ກົດໝາຍສິດທິເດັກ, ກົດໝາຍຄອບຄົວ...
4. ຮູບເອກະສານ: ກົດບັດອາຊຽນ, ກົດບັດສະຫະປະຊາຊາດ, ປະມວນກົດໝາຍສາກົນສິດທິມະນຸດ, ລັດຖະທຳມະນູນ

## IV. ກິດຈະກຳການຮຽນການສອນ

***ຊົ່ວໂມງທີ 1***

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ຫຼິ້ນເກມ**

- ຄູໃຫ້ນັກຮຽນທຸກຄົນຫຼັບຕາແຕ້ມຮູບຕາມຄຳສັ່ງຈາກຄູ (ໝາກກ້ຽງ) ດັ່ງນີ້:
  - ແຕ້ມຮູບວົງມົນ
  - ທາງເທິງສຸດມີກ້ານຍາວ
  - ຢູ່ກ້ານມີໃບສອງໃບ
- ຄູເລືອກເອົາຜູ້ທີ່ແຕ້ມຄ້າຍຄື ໝາກກ້ຽງໜ້ອຍ ແລະ ຫຼາຍທີ່ສຸດ ຢ່າງລະ 2 ຄົນ ເວົ້າຄືນສິ່ງທີ່ຕົນໄດ້ຮຽນໃນຊົ່ວໂມງຜ່ານມາ.
- ຄູ ແລະ ນັກຮຽນທວນຄືນບົດຮຽນທີ່ຜ່ານມາຮ່ວມກັນ.

**2. ສະເໜີບົດຮຽນໃໝ່**

**ຂ. ສັງເກດຮູບພາບ (5 ນາທີ)**

- ຄູແບ່ງນັກຮຽນເປັນ 2 ກຸ່ມໃຫຍ່ (ຕາມການນັ່ງຂອງນັກຮຽນເບື້ອງຊ້າຍ ແລະ ຂວາມືຂອງຄູ).
- ຄູຍົກປຶ້ມກ່ຽວກັບກົດລະບຽບຂອງໂຮງຮຽນ, ອົງການຈັດຕັ້ງຕ່າງໆ ທີ່ຄູສາມາດຫາມາໄດ້ ແລະ ຮູບລຸ່ມນີ້ໃຫ້ນັກຮຽນສັງເກດ.




ໜ້າປົກຂອງກົດບັດອາຊຽນ




ໜ້າປົກຂອງປຶ້ມປະມວນສົນທິສັນຍາສາກົນ

## ກົດບັດ ສະຫະປະຊາຊາດ

---

ພວກເຮົາບັນດາ, ປະຊາຊົນ
ແຫ່ງ ສະຫະປະຊາຊາດ
ໄດ້ຕັ້ງເຈດຈຳນົງ

ທີ່ຈະຊ່ວຍຄົນລຸ້ນຫຼັງ ໃຫ້ພົ້ນຈາກໄພພິບັດ ແຫ່ງສົງຄາມ ຊຶ່ງໄດ້ນຳຄວາມສູນເສຍ ຢ່າງໃຫ່ຍຫຼວງມາສູ່ມວນມະນຸດ ໃນຊົ່ວຊີວິດ ຂອງພວກເຮົາເຖິງສອງຄັ້ງແລ້ວ,

ທີ່ຈະຢືນຢັງເຖິງຄວາມເຊື່ອໝັ້ນ ໃນສິດທິອັນພື້ນຖານ ຂອງມະນຸດ, ໃນກຽດສັກສີ ແລະ ຄຸນຄ່າຂອງມວນມະນຸດ ແຕ່ລະຄົນ, ໃນສິດສະເໝີພາບລະຫວ່າງຊາຍ ແລະ ຍິງ ກໍຄືບັນດາປະຊາຊາດໃຫ່ຍ ແລະ ນ້ອຍ,

ທີ່ຈະສ້າງເງື່ອນໄຂອັນຈຳເປັນ ໃຫ້ແກ່ການປົກປັກຮັກສາຄວາມ ຍຸຕິທຳ ແລະ ການເຄົາລົບຕໍ່ພັນທະທັງປວງ ທີ່ເກີດມາຈາກສົນທິສັນຍາ ແລະ ທີ່ມາອື່ນໆຂອງກົດໝາຍລະຫວ່າງປະເທດ,

ທີ່ຈະສົ່ງເສີມຄວາມກ້າວຫນ້າທາງສັງຄົມ ແລະ ເງື່ອນໄຂແຫ່ງການດຳລົງຊີວິດອັນດີກ່ວາເກົ່າທ່າມກາງອິດສະລະພາບທີ່ກ້ວາງຂວາງຍິ່ງໆຂຶ້ນ,

**ແລະ ເພື່ອຈຸດປະສົງດັ່ງກ່າວ**

ທີ່ຈະປະຕິບັດການຜ່ອນສັ້ນຜ່ອນຍາວ ແລະ ດຳລົງຊີວິດຢູ່ຮ່ວມກັນຖານບ້ານໃກ້ເຮືອນຄຽງທີ່ດີ,

ທີ່ຈະໂຮມກຳລັງຂອງພວກເຮົາເພື່ອປົກປັກຮັກສາສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດ,

ທີ່ຈະຍອມຮັບຫຼັກການ ແລະ ສ້າງຕັ້ງວິທີການຄ້ຳປະກັນວ່າ ຈະບໍ່ມີການໃຊ້ກຳລັງອາວຸດເວັ້ນເສຍແຕ່ວ່າເພື່ອຜົນປະໂຫຍດຮ່ວມກັນ, ທີ່ຈະເພິ່ງພາສະຖາບັນສາກົນຕ່າງໆເພື່ອພັດທະນາຄວາມກ້າວຫນ້າທາງດ້ານເສດຖະກິດ ສັງຄົມຂອງທຸກໆປະຊາຊົນ.

ໜ້າປົກຂອງກົດບັດສະຫະປະຊາຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 234 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 01.8.2012

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການສ້າງນິຕິກຳ

---

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 081/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 09/ຄປຈ, ລົງວັນທີ 23 ກໍລະກົດ 2012;

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1. ປະກາດໃຊ້ກົດໝາຍວ່າດ້ວຍການສ້າງນິຕິກຳ.

ມາດຕາ 2. ລັດຖະດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດແຫ່ງ ສປປ ລາວ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ຈູມມາລີ ໄຊຍະສອນ

ໜ້າປົກຂອງກົດໝາຍ

- ຄູສົນທະນາກັບນັກຮຽນດ້ວຍຄຳຖາມດັ່ງນີ້:
  1) ນັກຮຽນຮູ້ບໍ່ວ່າສິ່ງທີ່ຄູຍົກໃຫ້ເບິ່ງນີ້ແມ່ນຫຍັງ?
  2) ສິ່ງໃດແມ່ນລະບຽບວິໄນ, ກົດໝາຍ, ນິຕິກຳພາກພື້ນ ແລະ ສາກົນ?
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບດັ່ງນີ້:

**ຕົວຢ່າງຄຳຕອບ**

1) ຮູບທີ່ເຫັນມີ: ກົດລະບຽບຂອງໂຮງຮຽນ, ອົງການຈັດຕັ້ງຕ່າງໆ ເຊັ່ນ: ຊາວໜຸ່ມ, ແມ່ຍິງ, ກຳມະບານ..., ລັດຖະດຳລັດຂອງປະທານປະເທດ, ປະມວນກົດໝາຍ ສົນທິສັນຍາສາກົນ, ກົດບັດສະຫະປະຊາຊາດ
2) ນັກຮຽນສາມາດຕອບຕາມຄວາມຄິດເຫັນຂອງເຂົາເຈົ້າ ເຊັ່ນ:

| ປະເພດເອກະສານ | ຊື່ເອກະສານທີ່ນັກຮຽນຮູ້ |
|---|---|
| ລະບຽບ | ລະບຽບໂຮງຮຽນ.<br>ລະບຽບອົງການຈັດຕັ້ງແມ່ຍິງ.<br>ລະບຽບອົງການຈັດຕັ້ງຊາວໜຸ່ມ. |
| ກົດໝາຍ | ກົດໝາຍຄອບຄົວ.<br>ກົດໝາຍສິດທິເດັກ.<br>ກົດໝາຍການສຶກສາ. |
| ນິຕິກຳພາກພື້ນ ແລະ ສາກົນ | ກົດບັດສະຫະປະຊາຊາດ.<br>ກົດບັດອາຊຽນ. |

**ຄ. ຄົ້ນຄວ້າເປັນກຸ່ມ (20 ນາທີ)**

- ຄູແບ່ງນັກຮຽນເປັນກຸ່ມຕາມຄວາມເໝາະສົມ. ຈາກນັ້ນໃຫ້ນັກຮຽນອ່ານບົດຮຽນຂໍ້ທີ 1 ແລະ 2 ໃນປຶ້ມແບບຮຽນໜ້າທີ 20-21 ແລະ ກົດໝາຍວ່າດ້ວຍການສ້າງນິຕິກຳ ພາກທີ 1 ບັນຍັດທົ່ວໄປ ໜ້າທີ 1-2 ໃຫ້ນັກຮຽນອ່ານແລ້ວຕອບຄຳຖາມລຸ່ມນີ້:

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------------

ສະພາແຫ່ງຊາດ

ເລກທີ 19 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 12 ກໍລະກົດ 2012

# ກົດໝາຍ
# ວ່າດ້ວຍ ການສ້າງນິຕິກຳ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ຂັ້ນຕອນກ່ຽວກັບການສ້າງນິຕິກຳ ເພື່ອເຮັດໃຫ້ການສ້າງ ແລະ ປັບປຸງນິຕິກຳ ມີປະສິດທິພາບ, ມີຄວາມໂປ່ງໃສ, ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ເນື້ອໃນຂອງນິຕິກຳ ມີຄຸນນະພາບ, ຮັດກຸມ, ເຂົ້າໃຈງ່າຍ, ສາມາດຈັດຕັ້ງປະຕິບັດໄດ້ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການສ້າງລັດແຫ່ງກົດໝາຍ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ.

### ມາດຕາ 2. ການສ້າງນິຕິກຳ

ນິຕິກຳ ແມ່ນ ເອກະສານທາງດ້ານກົດໝາຍ ທີ່ດັດປັບສາຍພົວພັນສັງຄົມ, ມີຜົນບັງຄັບທົ່ວໄປ ຫຼື ມີຜົນບັງຄັບສະເພາະ, ຖືກສ້າງຂຶ້ນ, ຮັບຮອງ ແລະ ປະກາດໃຊ້ ໂດຍອົງການທີ່ມີສິດອຳນາດຂອງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ.

ການສ້າງນິຕິກຳ ແມ່ນ ຂະບວນການເຄື່ອນໄຫວຮ່າງນິຕິກຳ ໂດຍອົງການທີ່ມີສິດອຳນາດຂອງລັດຂັ້ນສູນກາງ ແລະ ທ້ອງຖິ່ນ ນັບແຕ່ຂັ້ນຕອນການກະກຽມ, ການເກັບກຳຂໍ້ມູນ, ການຂຽນ ຈົນຮອດການພິຈາລະນາຮັບຮອງ ແລະ ປະກາດໃຊ້ນິຕິກຳ.

ການສ້າງນິຕິກຳ ແມ່ນ ລວມເອົາການປັບປຸງນິຕິກຳ. ການປັບປຸງນິຕິກຳ ແມ່ນ ການເພີ່ມເຕີມ, ຕັດອອກ ຫຼື ປ່ຽນແປງເນື້ອໃນຫຼັກການທີ່ບໍ່ສອດຄ່ອງ.

**ມາດຕາ 3. ປະເພດນິຕິກຳ**

ນິຕິກຳ ມີ ສອງ ປະເພດ ດັ່ງນີ້:

1. ນິຕິກຳທີ່ມີຜົນບັງຄັບທົ່ວໄປ;
2. ນິຕິກຳທີ່ມີຜົນບັງຄັບສະເພາະ.

**ມາດຕາ 4. ນິຕິກຳທີ່ມີຜົນບັງຄັບທົ່ວໄປ**

ນິຕິກຳທີ່ມີຜົນບັງຄັບທົ່ວໄປ ແມ່ນ ນິຕິກຳທີ່ວາງອອກ ເພື່ອຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ ແລະ ສັງຄົມ, ມີຜົນບັງຄັບໃນຂອບເຂດທົ່ວປະເທດ ຫຼື ໃນຂົງເຂດໃດໜຶ່ງທີ່ແນ່ນອນ ໂດຍບໍ່ໄດ້ເຈາະຈົງສະເພາະໃສ່ການຈັດຕັ້ງ ຫຼື ບຸກຄົນໃດໜຶ່ງ.

ລະບົບນິຕິກຳ ທີ່ມີຜົນບັງຄັບທົ່ວໄປ ປະກອບດ້ວຍ:

1. ລັດຖະທຳມະນູນ;
2. ກົດໝາຍ;
3. ມະຕິຂອງສະພາແຫ່ງຊາດ;
4. ມະຕິຂອງຄະນະປະຈຳສະພາແຫ່ງຊາດ;
5. ລັດຖະບັນຍັດ ຂອງປະທານປະເທດ;
6. ດຳລັດຂອງລັດຖະບານ;
7. ມະຕິຂອງລັດຖະບານ;
8. ຄຳສັ່ງ, ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ;
9. ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ຂອງລັດຖະມົນຕີວ່າການ, ຫົວໜ້າອົງການ ທີ່ຂຶ້ນກັບລັດຖະບານ;
10. ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ;
11. ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ຂອງເຈົ້າເມືອງ, ຫົວໜ້າເທດສະບານ;
12. ກົດລະບຽບຂອງບ້ານ.

ສົນທິສັນຍາສາກົນ ແມ່ນ ນິຕິກຳໜຶ່ງ ຊຶ່ງຕ້ອງປະຕິບັດຕາມບົດບັນຍັດຂອງນິຕິກຳສະເພາະ.

**ມາດຕາ 5. ນິຕິກຳທີ່ມີຜົນບັງຄັບສະເພາະ**

ນິຕິກຳທີ່ມີຜົນບັງຄັບສະເພາະ ແມ່ນ ນິຕິກຳທີ່ວາງອອກ ເພື່ອຮັບໃຊ້ວຽກງານຄຸ້ມຄອງບໍລິຫານ ໂດຍເຈາະຈົງໃສ່ການຈັດຕັ້ງ ຫຼື ບຸກຄົນໃດໜຶ່ງ.

ນິຕິກຳທີ່ມີຜົນບັງຄັບສະເພາະ ປະກອບດ້ວຍ:

1. ລັດຖະດຳລັດປະກາດໃຊ້ກົດໝາຍ;
2. ລັດຖະດຳລັດ, ດຳລັດ ຫຼື ຂໍ້ຕົກລົງ ກ່ຽວກັບການຍ້ອງຍໍ ຫຼື ແຕ່ງຕັ້ງບຸກຄົນ ໃຫ້ດຳລົງຕຳແໜ່ງໃດໜຶ່ງ ຫຼື ກ່ຽວກັບວຽກງານສະເພາະໃດໜຶ່ງ;
3. ແຈ້ງການ.

2

**ຄໍາຖາມ**:

1) ລະບຽບວິໄນແມ່ນຫຍັງ?
2) ກົດໝາຍແມ່ນຫຍັງ?
3) ລະບຽບວິໄນ ແລະ ກົດໝາຍແຕກຕ່າງກັນແນວໃດ?
4) ນິຕິກໍາແມ່ນຫຍັງ?

- ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານ.
- ຄູ ແລະ ນັກຮຽນສະຫຼຸບຮ່ວມກັນດັ່ງນີ້:

**ຄໍາຕອບ**:

1) ລະບຽບວິໄນ: ແມ່ນຂໍ້ກໍານົດທີ່ບຸກຄົນໃດໜຶ່ງ, ການຈັດຕັ້ງ ຫຼື ໜ່ວຍງານໃດໜຶ່ງ ພ້ອມກັນວາງອອກ ແລະ ພ້ອມກັນປະຕິບັດດ້ວຍຄວາມຕື່ນຕົວ, ສະໝັກໃຈ ແລະ ມີຄວາມຮັບຜິດຊອບສູງຕໍ່ຂໍ້ກໍານົດດັ່ງກ່າວ ເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ. ຖ້າຫາກບຸກຄົນໃດລະເມີດຕໍ່ກົດລະບຽບກໍຈະຖືກປະຕິບັດວິໄນຕາມຂໍ້ກໍານົດທີ່ໄດ້ກ່າວໄວ້ໃນກົດລະບຽບ ເຊັ່ນ: ລະບຽບໂຮງຮຽນ, ອົງການຈັດຕັ້ງແມ່ຍິງ, ອົງການຈັດຕັ້ງຊາວໜຸ່ມ, ອົງການຈັດຕັ້ງກໍາມະບານ ເປັນຕົ້ນ.
2) ກົດໝາຍ: ແມ່ນບັນດາຂໍ້ບັງຄັບທີ່ລັດວາງອອກ ເພື່ອຄຸ້ມຄອງປະຊາຊົນຂອງລັດໃນທົ່ວສັງຄົມ ໃຫ້ສັງຄົມມີຄວາມສະຫງົບສຸກ. ກົດໝາຍມີຜົນບັງຄັບລວມ ຊຶ່ງພົນລະເມືອງທຸກຄົນຕ້ອງປະຕິບັດ, ຖ້າຜູ້ໃດຝ່າຝືນກໍຈະຖືກລົງໂທດ ຫຼື ຖືກປັບໃໝຕາມກໍລະນີໜັກເບົາທີ່ກົດໝາຍໄດ້ກໍານົດໄວ້ ເຊັ່ນ: ກົດໝາຍຄອບຄົວ, ກົດໝາຍສິດທິເດັກ, ກົດໝາຍການສຶກສາ ແລະ ອື່ນໆ.
3) ລະບຽບວິໄນ ແລະ ກົດໝາຍແຕກຕ່າງກັນຄື: ລະບຽບມີການກໍານົດໂທດ ແຕ່ເປັນພຽງຂໍ້ບັງຄັບຂອງອົງການຈັດຕັ້ງໃດໜຶ່ງເທົ່ານັ້ນ. ແຕ່ກົດໝາຍແມ່ນແມ່ນຂໍ້ບັງຄັບຂອງບ້ານເມືອງໂດຍຜ່ານການຮັບຮອງຈາກສະພາແຫ່ງຊາດເປັນລະບຽບລວມຂອງປະຊາຊົນທົ່ວປະເທດ ແລະ ມີຜົນບັງຄັບໃຊ້ທົ່ວໄປ.
4) ນິຕິກໍາ: ແມ່ນເອກະສານທາງດ້ານກົດໝາຍ ທີ່ດັດປັບສາຍພົວພັນສັງຄົມ, ມີຜົນບັງຄັບທົ່ວໄປ ຫຼື ມີຜົນບັງຄັບສະເພາະ, ຖືກສ້າງຂຶ້ນ, ຮັບຮອງ ແລະ ປະກາດໃຊ້ໂດຍອົງການທີ່ມີສິດອໍານາດຂອງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ. ນິຕິກໍາມີຫຼາຍ

ລະດັບ ເຊັ່ນ: ລັດຖະທຳມະນູນ, ກົດໝາຍ, ມະຕິສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ ແລະ ມະຕິຂອງລັດຖະບານ, ກົດລະບຽບຕ່າງໆ.

**໗. ສົນທະນາກ່ຽວກັບ ເລື່ອງ: "ທ້າວທະນົງ" (15 ນາທີ)**

- ຄູໃຫ້ນັກຮຽນອ່ານເລື່ອງ "ທ້າວທະນົງ" ໃນປຶ້ມແບບຮຽນ ໜ້າທີ 21-23. ຈາກນັ້ນ, ຕອບຄຳຖາມລຸ່ມນີ້:
  1) ທ້າວທະນົງ ແລະ ນາງສາຍບົວເປັນຄົນແນວໃດ?
  2) ເປັນຫຍັງທ້າວທະນົງຈຶ່ງໄປລັກເຄື່ອງເພິ່ນຢູ່ຂ້າງເຮືອນ?
  3) ການໄປລັກເຄື່ອງເພິ່ນຢູ່ຂ້າງເຮືອນຜິດລະບຽບ ຫຼື ກົດໝາຍ? ຍ້ອນຫຍັງ?
  4) ຄູໄດ້ຕັກເຕືອນນັກຮຽນວ່າແນວໃດ?
  5) ນັກຮຽນໄດ້ບົດຮຽນຫຍັງແດ່ຈາກການອ່ານເລື່ອງນີ້?
  6) ຖ້າໂຮງຮຽນບໍ່ມີລະບຽບວິໄນຈະເປັນແນວໃດ?
  7) ຖ້າປະເທດບໍ່ມີກົດໝາຍຈະເປັນແນວໃດ?
  8) ຖ້າພາກພື້ນ ແລະ ສາກົນບໍ່ມີຂໍ້ຕົກລົງຕ່າງໆຮ່ວມກັນຈະເປັນແນວໃດ?
- ຄູຖາມ ແລະ ໃຫ້ນັກຮຽນຕອບໄປເທື່ອລະຂໍ້.
- ນັກຮຽນອາສາສະໝັກຕອບຄຳຖາມ.
- ຄູສະຫຼຸບແຕ່ລະຄຳຖາມດັ່ງນີ້:

  **ຄຳຕອບ**:
  1) ທ້າວທະນົງ ແລະ ນາງສາຍບົວເປັນນັກຮຽນທີ່ເຄົາລົບນັບຖືລະບຽບວິໄນຂອງໂຮງຮຽນເປັນຢ່າງດີ ແລະ ເປັນລູກທີ່ດີຂອງພໍ່ແມ່.
  2) ຍ້ອນລາວອາຍທີ່ໝູ່ເຢາະເຢີ້ຍວ່າລາວນຸ່ງເຄື່ອງນັກຮຽນຊຸດເກົ່າໄປອອກແຮງງານນຳໝູ່.
  3) ການໄປລັກເຄື່ອງເພິ່ນຢູ່ຂ້າງເຮືອນຜິດກົດໝາຍ. ຍ້ອນວ່າລາວໄປລັກເອົາຊັບສິນຂອງຄົນອື່ນ ຊຶ່ງຜິດຕໍ່ຂໍ້ບັງຄັບ ກໍຄືກົດໝາຍທີ່ລັດວາງອອກ.
  4) ບໍ່ຄວນລັກເອົາເຄື່ອງຂອງຄົນອື່ນ, ຕ້ອງປະຕິບັດຕາມລະບຽບວິໄນຂອງໂຮງຮຽນ ແລະ ເຄົາລົບກົດໝາຍຂອງບ້ານເມືອງ. ການເກີດມາແລ້ວທຸກຍາກບໍ່ແມ່ນຄວາມຜິດ ຂໍພຽງເຮົາເປັນຄົນດີ, ສ້າງປະໂຫຍດຕໍ່ສັງຄົມ ກໍຈະໄດ້ຮັບການຍ້ອງຍໍຈາກທຸກຄົນ.

5) ພວກເຮົາທຸກຄົນຕ້ອງປະຕິບັດຕາມລະບຽບວິໄນ ແລະ ກົດໝາຍເພື່ອເຮັດໃຫ້ສັງຄົມມີຄວາມສະຫງົບສຸກ, ປະເທດຊາດມີຄວາມຮຸ່ງເຮືອງ, ກ້າວໜ້າ. ນັກຮຽນຕ້ອງປະຕິບັດຕາມລະບຽບວິໄນ ແລະ ກົດໝາຍຢ່າງເຂັ້ມງວດ, ຕັ້ງໃຈຮໍ່າຮຽນ, ປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ, ຕ້ານຜູ້ທີ່ຝ່າຝືນລະບຽບ ແລະ ບໍ່ເຄົາລົບຕໍ່ກົດໝາຍບ້ານເມືອງ.

6) ຖ້າບໍ່ມີລະບຽບວິໄນຈະເຮັດໃຫ້ໂຮງຮຽນບໍ່ມີຄວາມສະຫງົບສຸກ, ນັກຮຽນ ແລະ ຄູບໍ່ມີຄວາມເຄົາລົບນັບຖືເຊິ່ງກັນ ແລະ ກັນ, ຂາດມາລະຍາດ, ບໍ່ມີຄວາມສຸພາບຮຽບຮ້ອຍ.

7) ຖ້າບໍ່ມີກົດໝາຍ ສັງຄົມ ແລະ ປະເທດຊາດກໍຈະຕ້ອງມີຄວາມວຸ້ນວາຍ, ບໍ່ມີສິດສະເໝີພາບ, ບໍ່ມີຄວາມສະຫງົບສຸກ, ການດຳລົງຊີວິດບໍ່ມີຄວາມຍຸຕິທຳ (ມີການປຸ້ນ, ຈີ້, ລັກເຄື່ອງ).

8) ຖ້າບັນດາປະເທດໃນພາກພື້ນ ແລະ ສາກົນບໍ່ມີບັນດາສົນທິສັນຍາ, ສັນຍາ, ກົດບັດຂໍ້ຕົກລົງຮ່ວມກັນກໍຈະເຮັດໃຫ້ສັງຄົມໂລກເກີດຄວາມວຸ້ນວາຍ, ບໍ່ມີການພົວພັນຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີການຈຳແນກ ແລະ ບໍ່ເຄົາລົບຄວາມແຕກຕ່າງ, ມີຂໍ້ຂັດແຍ້ງລະຫວ່າງປະເທດທີ່ບໍ່ໄດ້ຮັບການແກ້ໄຂຈົນເຮັດໃຫ້ມີຜົນຕ່າງໆຕາມມາ ເຊັ່ນ: ສົງຄາມລະຫວ່າງປະເທດ, ຄວາມບໍ່ສະເໝີພາບ, ບັນຫາທາງສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ເປັນຕົ້ນ.

**3. ສະຫຼຸບ (5 ນາທີ)**

- ຄູ ແລະ ນັກຮຽນສະຫຼຸບກ່ຽວກັບລະບຽບວິໄນ, ກົດໝາຍ ແລະ ນິຕິກຳພາກພື້ນ ແລະ ສາກົນ.

ຄູອະທິບາຍເພີ່ມຕື່ມວ່າ ນອກຈາກນິຕິກຳທີ່ສ້າງຂຶ້ນເພື່ອຮັບໃຊ້ພາຍໃນປະເທດຍັງມີນິຕິກຳພາກພື້ນ ແລະ ສາກົນ ຊຶ່ງແມ່ນບັນດາສົນທິສັນຍາ, ສັນຍາ, ກົດບັດຂໍ້ຕົກລົງ ທີ່ລັດຖະບານໃດໜຶ່ງໄດ້ລົງນາມເປັນລາຍລັກອັກສອນກັບພາຄີຕ່າງປະເທດຊຶ່ງພາໃຫ້ເກີດສິດ ແລະ ພັນທະຕາມກົດໝາຍສາກົນ ໂດຍມີຊື່ສະເພາະຕາມການຕົກລົງເຫັນດີຂອງແຕ່ລະຝ່າຍ ເຊັ່ນ: ກົດບັດສະຫະປະຊາຊາດ, ກົດບັດອາຊຽນ ເປັນຕົ້ນ.

ລະບຽບວິໄນ, ກົດໝາຍ ແລະ ນິຕິກຳພາກພື້ນ ແລະ ສາກົນແມ່ນສິ່ງທີ່ເຮັດໃຫ້ຄົນເຮົາເປັນຄົນດີ ແລະ ສາມາດດຳລົງຊີວິດຢູ່ຮ່ວມກັນໄດ້ຢ່າງສະຫງົບສຸກ. ຖ້າບໍ່ມີລະບຽບ

ວິໄນ, ກົດໝາຍ ແລະ ນິຕິກຳພາກພື້ນ ແລະ ສາກົນ ກໍຈະເຮັດໃຫ້ໂຮງຮຽນ, ຊຸມຊົນ, ສັງຄົມ, ປະເທດຊາດ ແລະ ສັງຄົມໂລກເກີດຄວາມວຸ້ນວາຍ, ປະຊາຊົນບໍ່ມີສິດສະເໝີພາບ, ການດຳລົງຊີວິດບໍ່ມີຄວາມຍຸຕິທຳ, ບັນດາປະຊາຊາດບໍ່ມີການພົວພັນຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ສັງຄົມໂລກມີການຈຳແນກ ແລະ ບໍ່ເຄົາລົບຄວາມແຕກຕ່າງ, ບັນຫາເຫຼົ່ານັ້ນອາດກໍ່ໃຫ້ເກີດຂໍ້ຂັດແຍ້ງ ແລະ ບັນຫາຕ່າງໆ ເຊັ່ນ: ບັນຫາທາງສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ທັງພາຍໃນ ແລະ ລະຫວ່າງປະເທດ ເປັນຕົ້ນ.

## IV. ການວັດ ແລະ ປະເມີນຜົນ

ປະເມີນນັກຮຽນຈາກການຕອບຄຳຖາມດ້ວຍການໝາຍເລກ 1, 2 ແລະ 3 ໃສ່ຮູບ ☐ ຢູ່ຕໍ່ໜ້າຄຳຕອບທີ່ເຫັນວ່າແມ່ນພຶດຕິກຳທີ່ກ່ຽວກັບລະບຽບວິໄນ, ກົດໝາຍ, ນິຕິກຳພາກພື້ນ ແລະ ສາກົນ ດັ່ງນີ້:

ໝາຍເລກ 1 ແມ່ນພຶດຕິກຳກ່ຽວຂ້ອງກັບລະບຽບວິໄນ

ໝາຍເລກ 2 ແມ່ນພຶດຕິກຳກ່ຽວຂ້ອງກັບກົດໝາຍ

ໝາຍເລກ 3 ແມ່ນພຶດຕິກຳກ່ຽວຂ້ອງກັບກົດໝາຍ ນິຕິກຳພາກພື້ນ ແລະ ສາກົນ

☐ ມັກຂາດໂຮງຮຽນເລື້ອຍໆ.

☐ ມາໂຮງຮຽນທັນໂມງທັນເວລາ.

☐ ຍ່າງອອກຫ້ອງເວລາຄູກຳລັງສອນ.

☐ ການຊ່ວຍເຫຼືອທາງດ້ານສະບຽງອາຫານແກ່ປະເທດທີ່ທຸກຍາກ.

☐ ເລີກຮຽນແລ້ວບໍ່ກັບເມືອເຮືອນພາກັນໄປທ່ຽວ.

☐ ຄົນຂີ້ລັກຖືກຕຳຫຼວດຈັບ.

☐ ລົມໂທລະສັບໃນຊົ່ວໂມງຮຽນ.

☐ ຂີ່ລົດຕຳຄົນແລ້ວບໍ່ໄປມອບຕົວຕໍ່ເຈົ້າໜ້າທີ່.

☐ ແກ້ໄຂບັນຫາສິ່ງແວດລ້ອມຂອງບັນດາປະເທດອາຊີຕາເວັນອອກສ່ຽງໃຕ້.

☐ ໃນຊົ່ວໂມງຮຽນບໍ່ເອົາເສື້ອເຂົ້າໃນ.

☐ ທຸກຄົນໃນຄອບຄົວມີສິດເທົ່າທຽມກັນ.

☐ ໄປໂຮງຮຽນທຸກມື້.

☐ ບໍ່ແຊກແຊງກິດຈະກຳພາຍໃນຂອງປະເທດອື່ນ.

**ຄໍາຕອບ**

1 ມັກຂາດໂຮງຮຽນເລື້ອຍໆ.

1 ມາ ໂຮງຮຽນທັນໂມງທັນເວລາ.

1 ຍ່າງອອກຫ້ອງເວລາຄູກໍາລັງສອນ.

3 ການຊ່ວຍເຫຼືອທາງດ້ານສະບຽງອາຫານແກ່ປະເທດທີ່ທຸກຍາກ.

1 ເລີກຮຽນແລ້ວບໍ່ກັບເມືອເຮືອນພາກັນໄປທ່ຽວ.

2 ຄົນຂີ້ລັກຖືກຕໍາຫຼວດຈັບ.

1 ລືມໂທລະສັບໃນຊົ່ວໂມງຮຽນ.

2 ຂີ່ລົດຕໍາຄົນແລ້ວບໍ່ໄປມອບຕົວຕໍ່ເຈົ້າໜ້າທີ່.

3 ແກ້ໄຂບັນຫາສິ່ງແວດລ້ອມຂອງບັນດາປະເທດອາຊີຕາເວັນອອກສ່ຽງໃຕ້.

1 ໃນຊົ່ວໂມງຮຽນບໍ່ເອົາເສື້ອເຂົ້າໃນ.

2 ທຸກຄົນໃນຄອບຄົວມີສິດເທົ່າທຽມກັນ.

1 ໄປໂຮງຮຽນທຸກມື້.

3 ບໍ່ແຊກແຊງກິດຈະກໍາພາຍໃນຂອງປະເທດອື່ນ.

**ໝາຍເຫດ**

- ຄູສາມາດໃຊ້ວິທີການສອນອື່ນທີ່ເຫັນວ່າສອດຄ່ອງ, ເໝາະສົມກວ່າ ແຕ່ທີ່ສໍາຄັນຕ້ອງຮັບປະກັນວ່າສາມາດບັນລຸຕາມຈຸດປະສົງທີ່ກໍານົດໄວ້.

# ບົດທີ 6 ການສ້າງສາຍສຳພັນເພື່ອນມິດ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 1.2 ການສ້າງສາຍສຳພັນເພື່ອນມິດ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍຂອງຄຳວ່າ: ເພື່ອນ ແລະ ການສ້າງສາຍສຳພັນເພື່ອນມິດ.
- ບອກການສ້າງສາຍສຳພັນລະຫວ່າງບຸກຄົນ ແລະ ພາກສ່ວນອື່ນໃນໂລກ.
- ເຄົາລົບນັບຖືການສ້າງສາຍສຳພັນເພື່ອນມິດດ້ວຍຄວາມສັດຊື່, ຈິງໃຈຕໍ່ກັນ.

## II. ເນື້ອໃນ

**ເພື່ອນ**

ເພື່ອນໝາຍເຖິງຄົນທີ່ຢູ່ອ້ອມຂ້າງຂອງເຮົາ ໂດຍບໍ່ມີການເລືອກຊົນຊັ້ນ, ວັນນະ, ທຸກຄົນສາມາດເປັນເພື່ອນກັນໄດ້ໝົດຂໍພຽງມີຄວາມຈິງໃຈຕໍ່ກັນ ແລະ ພົວພັນກັນໃຫ້ເໝາະສົມ. ເພື່ອນແມ່ນຄວາມຮູ້ສຶກຜູກພັນກັນລະຫວ່າງສອງຄົນ ຫຼື ຫຼາຍຄົນໂດຍມີລັກສະນະ ແລະ ມີຄວາມເຂົ້າໃຈກັນໃນຫຼາຍດ້ານ, ຮ່ວມການເຄື່ອນໄຫວ ຫຼື ຮ່ວມອຸດົມການໃນການດຳລົງຊີວິດ.

**ການສ້າງສາຍສຳພັນເພື່ອນມິດ**

ແມ່ນການສ້າງສາຍພົວພັນທີ່ດີຕໍ່ກັນລະຫວ່າງຄົນກັບຄົນ ຊຶ່ງອາດຈະແມ່ນສັງຄົມດຽວກັນ ຫຼື ຄົນລະສັງຄົມກໍສາມາດມີການພົວພັນນຳກັນໄດ້ຂໍພຽງມີຄວາມຮັກ, ຄວາມຜູກພັນ, ເຂົ້າອົກ, ເຂົ້າໃຈເຊິ່ງກັນ ແລະ ກັນ. ສະນັ້ນ ການສ້າງສາຍສຳພັນເພື່ອນມິດ ບໍ່ພຽງແຕ່ເຮົາຈະສ້າງກັບຄົນອ້ອມຂ້າງ, ຄົນໃກ້ຊິດເທົ່ານັ້ນ ເຮົາຕ້ອງສາມັກຄີຮັກແພງກັບບັນດາເຜົ່າໃນທົ່ວປະເທດ ແລະ ສ້າງສາຍສຳພັນທີ່ດີກັບບັນດາປະຊາຊາດໃນທົ່ວໂລກ ເພື່ອດຳລົງຊີວິດຢູ່ຮ່ວມກັນໃນໂລກຢ່າງມີຄວາມສະຫງົບສຸກ.

ສ້າງສາຍສຳພັນລະຫວ່າງບຸກຄົນ ແລະ ພາກສ່ວນອື່ນໃນໂລກ ສະແດງອອກຜ່ານຫຼາຍຮູບແບບເຊັ່ນ: ຜ່ານສື່ຕ່າງໆ, ການເດີນທາງເພື່ອແລກປ່ຽນວັດທະນະທຳ ຫຼື ເຂົ້າຮ່ວມແຂ່ງຂັນກິລາ, ສິລະປະ ໃນລະດັບທ້ອງຖິ່ນ, ພາກພື້ນ ແລະ ສາກົນ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຂັ້ນ ມ.3
2. ເລື່ອງສັ້ນ ຫຼື ວາລະສານ ທີ່ເວົ້າເຖິງການສ້າງສາຍພົວພັນແບບພິເສດລະຫວ່າງ ລາວ-ຫວຽດນາມ
3. ບົດເພງປະຕິວັດ (ເຜົ່າລາວເອີຍ)
4. ບົດເພງສາຍໃຈລາວ-ຫວຽດນາມ ແລະ ມິດຕະພາບລາວ-ຫວຽດ (ຖ້າມີ)

## IV. ກິດຈະກຳການຮຽນການສອນ

**1. ທົບທວນບົດທີ່ຮຽນຜ່ານມາ (5 ນາທີ)**

- ຄູຕັ້ງຄຳຖາມ
  1) ລະບຽບວິໄນແມ່ນຫຍັງ?
  2) ກົດໝາຍແມ່ນຫຍັງ?
- ນັກຮຽນອາສາສະໝັກຕອບ 1-2 ຄົນ.
- ຄູສະຫຼຸບຄຳຕອບຂອງນັກຮຽນຕາມເນື້ອໃນທີ່ມີໃນປຶ້ມແບບຮຽນ

  **ຄຳຕອບ**

  1) ລະບຽບວິໄນ ແມ່ນຂໍ້ກຳນົດທີ່ກຸ່ມຄົນໃດໜຶ່ງ ຫຼື ໜ່ວຍງານໃດໜຶ່ງພ້ອມກັນວາງອອກ ແລະ ພ້ອມກັນປະຕິບັດດ້ວຍຄວາມຕື່ນຕົວ ແລະ ສະໝັກໃຈ ເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍຂອງໜ່ວຍງານນັ້ນ.
  2) ກົດໝາຍ ແມ່ນບັນດາຂໍ້ບັງຄັບທີ່ລັດວາງອອກ ເພື່ອຄຸ້ມຄອງປະຊາຊົນຂອງລັດໃນທົ່ວສັງຄົມ ໃຫ້ສັງຄົມມີຄວາມສະຫງົບສຸກ.

**2. ສະເໜີບົດຮຽນໃໝ່**

**ກ. ສົນທະນາຖາມຕອບ (20 ນາທີ)**

- ຄູໃຫ້ນັກຮຽນອ່ານເນື້ອໃນບົດຮຽນຢູ່ໜ້າ 25 ແລະ 26 ແລ້ວຕອບຄຳຖາມລຸ່ມນີ້:
  1) ເພື່ອນແມ່ນຫຍັງ?
  2) ການສ້າງສາຍສຳພັນເພື່ອນມິດແມ່ນແນວໃດ?
  3) ການສ້າງສາຍສຳພັນລະຫວ່າງບຸກຄົນ ແລະ ພາກສ່ວນອື່ນໃນໂລກສະແດງແນວໃດ? (ນັກຮຽນຕອບຕາມຄວາມເຂົ້າໃຈ).
- ນັກຮຽນອາສາສະໝັກຕອບຄຳຖາມ.

- ຄູສະຫຼຸບກ່ຽວກັບຄຳຕອບຂອງນັກຮຽນດັ່ງນີ້:

**ຄຳຕອບ**

1) ເພື່ອນ ໝາຍເຖິງຄົນທີ່ຢູ່ອ້ອມຂ້າງຂອງເຮົາ ໂດຍບໍ່ມີການເລືອກຊົນຊັ້ນ, ວັນນະ, ທຸກຄົນສາມາດເປັນເພື່ອນກັນໄດ້ໝົດຂໍພຽງມີຄວາມຈິງໃຈຕໍ່ກັນ ແລະ ພົວພັນກັນໃຫ້ເໝາະສົມ.
2) ການສ້າງສາຍສຳພັນເພື່ອນມິດ ແມ່ນການສ້າງສາຍພົວພັນທີ່ດີຕໍ່ກັນລະຫວ່າງຄົນກັບຄົນ ຊຶ່ງອາດຈະແມ່ນສັງຄົມດຽວກັນ ຫຼື ຄົນລະສັງຄົມກໍສາມາດມີການພົວພັນນຳກັນໄດ້ຂໍພຽງມີຄວາມຮັກ, ຄວາມຜູກພັນ, ເຂົ້າອົກ, ເຂົ້າໃຈເຊິ່ງກັນ ແລະ ກັນ.
3) ການສ້າງສາຍສຳພັນລະຫວ່າງບຸກຄົນ ແລະ ພາກສ່ວນອື່ນໃນໂລກ ສະແດງອອກຜ່ານຫຼາຍຮູບແບບ ເຊັ່ນ: ຜ່ານສື່ຕ່າງໆ, ການເດີນທາງເພື່ອແລກປ່ຽນວັດທະນະທຳ ຫຼື ເຂົ້າຮ່ວມແຂ່ງຂັນກິລາ, ສິລະປະ ໃນລະດັບທ້ອງຖິ່ນ, ພາກພື້ນ ແລະ ສາກົນ.

**ຄ. ສົນທະນາລວມ ເລື່ອງ "ເດັກນ້ອຍລາວໃນຕ່າງແດນ" (20 ນາທີ)**

- ຄູແນະນຳໃຫ້ນັກຮຽນອ່ານເລື່ອງ "ເດັກນ້ອຍລາວໃນຕ່າງແດນ" ໃນປຶ້ມແບບຮຽນ ໜ້າທີ 27 ແລ້ວຕອບຄຳຖາມລຸ່ມນີ້:

**ຄຳຖາມ**

1) ເລື່ອງຂ້າງເທິງນີ້ບ່ອນໃດເວົ້າເຖິງການສ້າງສາຍສຳພັນເພື່ອນມິດທີ່ດີຕໍ່ກັນ?
2) ແນວໃດຈຶ່ງເອີ້ນວ່າການສ້າງສາຍສຳພັນເພື່ອນມິດ?
3) ຍ້ອນຫຍັງຄົນເຮົາຈຶ່ງຕ້ອງສ້າງສາຍສຳພັນເພື່ອນມິດທີ່ດີຕໍ່ກັນ?
4) ນັກຮຽນຄວນສ້າງສາຍສຳພັນເພື່ອນມິດແນວໃດກັບໝູ່ເພື່ອນໃນຫ້ອງຮຽນ ຫຼື ໂຮງຮຽນດຽວກັນ ແລະ ແຫ່ງອື່ນ?

- ນັກຮຽນຄົ້ນຄວ້າຕອບຄຳຖາມ.
- ຄູໃຫ້ນັກຮຽນຈຳນວນໜຶ່ງປະກອບຄວາມຄິດເຫັນເພີ່ມເຕີມຖ້າຂໍ້ໃດຍັງບໍ່ຄົບຖ້ວນ.
- ຄູສະຫຼຸບຄືນການຕອບ.

**ຄຳຕອບ**

1) ພວກເຂົາໄດ້ທັກທາຍສະບາຍດີກັນ, ຖາມເຖິງບ້ານເກີດເມືອງນອນ ແລະ ເລື່ອງຕ່າງໆ ຂອງກັນ ແລະ ກັນຢ່າງມ່ວນຊື່ນ.
2) ການສ້າງສາຍສຳພັນເພື່ອນມິດ ແມ່ນການສ້າງສາຍພົວພັນທີ່ດີຕໍ່ກັນລະຫວ່າງຄົນກັບຄົນ ຊຶ່ງອາດຈະແມ່ນສັງຄົມດຽວກັນ ຫຼື ຄົນລະສັງຄົມກໍສາມາດມີການພົວ

ພົນນຳກັນໄດ້ຂໍພຽງມີຄວາມຮັກ, ຄວາມຜູກພັນ, ເຂົ້າອົກ, ເຂົ້າໃຈເຊິ່ງກັນ ແລະ ກັນ.

3) ຍ້ອນວ່າພວກເຮົາຕ້ອງມີການສ້າງສາຍສຳພັນເພື່ອນມິດທີ່ດີຕໍ່ກັນຢູ່ໃນສັງຄົມ, ບໍ່ມີໃຜຈະຢູ່ໂດດດ່ຽວໄດ້ໂດຍປາສາຈາກໝູ່ເພື່ອນ ແລະ ເຮົາຍັງຕ້ອງສາມັກຄີຮັກແພງກັບບັນດາເຜົ່າໃນທົ່ວປະເທດ ແລະ ສ້າງສາຍສຳພັນທີ່ດີກັບບັນດາປະຊາຊາດໃນທົ່ວໂລກ ເພື່ອດຳລົງຊີວິດຢູ່ຮ່ວມກັນໃນໂລກຢ່າງມີຄວາມສະຫງົບສຸກ.

4) ຂໍ້ 4 ໃຫ້ນັກຮຽນຕອບຕາມຄວາມເຂົ້າໃຈ.

**3. ສະຫຼຸບ (5 ນາທີ)**

ຄູສະຫຼຸບຄືນກ່ຽວກັບຄວາມໝາຍຂອງເພື່ອນ ແລະ ການສ້າງສາຍສຳພັນເພື່ອນມິດແລ້ວເນັ້ນຕື່ມວ່າ: ການສ້າງສາຍພົວພັນເພື່ອນມິດທີ່ດີຕໍ່ກັນຈະຕ້ອງດຳລົງຊີວິດຢູ່ຮ່ວມກັນຢ່າງສັນຕິ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ມີຄວາມເບີກບານມ່ວນຊື່ນ. ສະນັ້ນ, ເຮົາຢູ່ຮ່ວມກັນ, ເຮັດວຽກຮ່ວມກັນ ບໍ່ວ່າຢູ່ໃນຄອບຄົວ, ໂຮງຮຽນ, ຊຸມຊົນ, ສັງຄົມ, ພາກພື້ນ ແລະ ສາກົນ.

**ວຽກບ້ານ**:

- ຄູແນະນຳໃຫ້ນັກຮຽນເຮັດບົດເຝິກຫັດຢູ່ເຮືອນແລ້ວເອົາມາສົ່ງຄູໃນຊົ່ວໂມງຕໍ່ໄປ.

## IV. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນຜົນຈາກ:

- ການຕອບຄຳຖາມປະລະໄນລຸ່ມນີ້:
- ນັກຮຽນຈົ່ງໝາຍ ✓ ໃສ່ຕໍ່ໜ້າຄຳຕອບທີ່ເຫັນວ່າຖືກຕ້ອງທີ່ສຸດພຽງຂໍ້ດຽວ

1. ຂໍ້ໃດທີ່ສະແດງເຖິງສາຍພົວພັນເພື່ອນມິດທີ່ດີກັບທຸກຄົນ?

   ກ. ເຫັນໝູ່ພົບຄວາມຫຍຸ້ງຍາກບໍ່ສົນໃຈ

   ຂ. ຍິ້ມແຍ້ມແຈ່ມໃສຕໍ່ກັບເພື່ອນຂອງຕົນເທົ່ານັ້ນ

   ຄ. ບໍ່ມັກປະກອບສ່ວນພັດທະນາປະເທດຊາດ

   ✓ ງ. ແບ່ງເບົາຄວາມທຸກ ແລະ ໃຫ້ກຳລັງໃຈຕໍ່ຄົນອື່ນ

2. ເມື່ອມີຄົນບໍ່ຮູ້ຈັກກັບຕົນ ແຕ່ເຂົາຍິ້ມໃຫ້ກ່ອນເຈົ້າຈະເຮັດແນວໃດ?

   ກ. ບໍ່ສົນໃຈ

   ✓ ຂ. ຍິ້ມຕອບ

   ຄ. ເຮັດໜ້າເສີຍໆ

   ງ. ບໍ່ສະແດງທ່າທາງຫຍັງເລີຍ

3. ໃນວັນພັກຮຽນເຮົາຄວນໄປພັກຜ່ອນກັບຄອບຄົວບໍ່?ຍ້ອນຫຍັງ?

ກ. ບໍ່ໄປເພາະຂີ້ຄ້ານ

ຂ. ບໍ່ໄປຢາກເບິ່ງໂທລະທັດ

ຄ. ບໍ່ໄປເພາະຈະໄປຫຼິ້ນນຳໝູ່

✓ ງ. ໄປເພາະຈະຢູ່ພ້ອມໜ້າກັບຄອບຄົວ

**ໝາຍເຫດ**

- ສຳລັບໂຮງຮຽນທີ່ບໍ່ມີເງື່ອນໄຂໃນການເອົາເຈ້ຍຄຳຕອບໄປຕິດໃສ່ກະດານແມ່ນໃຫ້ນັກຮຽນເອົາເຈ້ຍມາໂຮມກັນໃສ່ກ່ອງ  ແລ້ວໃຫ້ນັກຮຽນຈັບເອົາຄຳຕອບຂຶ້ນມາອ່ານກໍໄດ້ ຫຼື ຄູຫາກມີວິທີການອື່ນທີ່ສອດຄ່ອງ ແລະ ເໝາະສົມກໍສາມາດນຳມາໃຊ້ແທນໄດ້.

# ບົດທີ 7 ການປະກອບສ່ວນເຄື່ອນໄຫວວຽກງານການເມືອງ-ສັງຄົມ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 5 ຜົນໄດ້ຮັບການປະກອບສ່ວນເຄື່ອນໄຫວວຽກງານການເມືອງ-ສັງຄົມ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍຂອງສັງຄົມ, ການປະກອບສ່ວນເຄື່ອນໄຫວວຽກງານການເມືອງ-ສັງຄົມ, ບຸກຄົນສຳຄັນທີ່ກໍ່ໃຫ້ເກີດການປ່ຽນແປງໃນລະດັບທ້ອງຖິ່ນ ແລະ ລະດັບຊາດ.
- ເຫັນຄຸນຄ່າຂອງການປະກອບສ່ວນເຄື່ອນໄຫວວຽກງານການເມືອງ-ສັງຄົມ, ບຸກຄົນສຳຄັນທີ່ກໍ່ໃຫ້ເກີດການປ່ຽນແປງໃນລະດັບທ້ອງຖິ່ນ ແລະ ລະດັບຊາດ.
- ບອກຜົນໄດ້ຮັບຂອງການປະກອບສ່ວນເຄື່ອນໄຫວວຽກງານການເມືອງ-ສັງຄົມ.
- ປະກອບສ່ວນເຄື່ອນໄຫວວຽກງານຂອງໂຮງຮຽນ, ທ້ອງຖິ່ນ ແລະ ຂອງຊາດ.

## II. ເນື້ອໃນ

ສັງຄົມ ແມ່ນການພົວພັນລະຫວ່າງຄົນກັບຄົນ, ການຢູ່ຮ່ວມກັນ ຊຶ່ງມີການພົວພັນແລກປ່ຽນເຊິ່ງກັນ ແລະ ກັນໃນດ້ານຕ່າງໆ, ການຊ່ວຍເຫຼືອ, ເອື້ອເຟື້ອເພື່ອແຜ່, ສາມັກຄີຮັກແພງກັນ.

ການເຄື່ອນໄຫວວຽກງານການເມືອງ-ສັງຄົມ ແມ່ນການຮ່ວມສະແດງອອກຂອງກຸ່ມຄົນ ຫຼື ການປະຕິບັດວຽກງານຮ່ວມກັນ ເພື່ອຍົກສູງສະຕິຄວາມຮັບຜິດຊອບຂອງພົນລະເມືອງລາວທຸກຄົນເຂົ້າຮ່ວມໃນການປະຕິບັດ ເປົ້າໝາຍພັດທະນາເສດຖະກິດ-ສັງຄົມ ດຳລົງຊີວິດຮ່ວມກັນຢູ່ໃນສັງຄົມໃຫ້ມີຄວາມສະຫງົບ, ການແກ້ໄຂປະກົດການຫຍໍ້ທໍ້, ການຊ່ວຍເຫຼືອປະຊາຊົນທີ່ຖືກເຄາະຮ້າຍຈາກໄພທຳມະຊາດ ເຊັ່ນ: ນ້ຳຖ້ວມ, ລົມພາຍຸ, ໄຟໄໝ້, ໄພແຫ້ງແລ້ງ. ນອກນີ້ ຍັງຕ້ອງປະກອບສ່ວນເຂົ້າຮ່ວມການເຄື່ອນໄຫວກິດຈະກຳປົກປັກຮັກສາສິ່ງແວດລ້ອມ ແລະ ຮັກສາອະນາໄມຕາມທ້ອງຖະໜົນຫຼວງ ຫຼື ສວນສາທາລະນະຕ່າງໆຊ່ວຍສັງຄົມກໍຄື ປະເທດຊາດ, ຕ້ານການຄ້າຂາຍເຖື່ອນ, ຜິດກົດໝາຍ, ສິ່ງເສບຕິດ, ການຄ້າມະນຸດ, ການພະນັນທຸກປະເພດ, ການຂົ່ມຂືນສຳເລົາ... ພ້ອມກັນນັ້ນ ຍັງຕ້ອງສ້າງຄວາມ

ສາມັກຄີປອງດອງຊາດ ແລະ ສ້າງ ເພື່ອນມິດທີ່ດີກັບຊາດອື່ນໆໃນໂລກ.

ຜົນໄດ້ຮັບຂອງການປະກອບສ່ວນເຄື່ອງໄຫວວຽກງານການເມືອງ-ສັງຄົມມີ ຄື: ປະເທດຊາດມີຄວາມຈະເລີນກ້າວໜ້າ, ສັງຄົມມີຄວາມຍຸດຕິທຳ, ມີຄວາມສະຫງົບສຸກ, ໝັ້ນຄົງ, ອຸດົມສົມບູນ, ຮັ່ງມີທາງດ້ານວັດຖຸ ແລະ ຈິດໃຈ...

ບຸກຄົນສຳຄັນທີ່ກໍ່ໃຫ້ເກີດການປ່ຽນແປງໃນລະດັບທ້ອງຖິ່ນ ແລະ ລະດັບຊາດ ເປັນບຸກຄົນມີທັດສະນະມະຫາຊົນກວ້າງຂວາງ, ດຸໝັ່ນ, ເປັນແບບຢ່າງທີ່ດີ, ປຸກລະດົມຂົນຂວາຍໃນການເຄື່ອນໄຫວວຽກງານການເມືອງ-ສັງຄົມ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຊັ້ນ ມ.3
2. ປຶ້ມຄູ່ມືການແຊກຊ້ອນການສຶກສາພົນລະເມືອງໂລກ
3. ຮູບພາບການເຄື່ອນໄຫວວຽກງານການເມືອງ-ສັງຄົມ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທວນຄືນບົດຮຽນເກົ່າ (5 ນາທີ)**

**ກ. ຄູຕັ້ງຄຳຖາມ**

1) ການສ້າງສາຍສຳພັນເພື່ອນມິດແມ່ນຫຍັງ?

2) ຢາກສ້າງສາຍສຳພັນເພື່ອນມິດຕ້ອງເຮັດແນວໃດ?

- ນັກຮຽນ 1-2 ຄົນອາສາສະໝັກຕອບ.
- ຄູສະຫຼຸບຄືນຕາມເນື້ອໃນບົດຮຽນ ບົດທີ 6 ຂໍ້ 1.2

**2. ສະເໜີບົດຮຽນໃໝ່**

**ກ. ສຶກສາເນື້ອໃນບົດຮຽນ (35 ນາທີ)**

- ຄູແບ່ງນັກຮຽນເປັນກຸ່ມຕາມຄວາມເໝາະສົມ. ຈາກນັ້ນ, ໃຫ້ນັກຮຽນແຕ່ລະກຸ່ມອ່ານເນື້ອໃນບົດຮຽນຂໍ້ທີ 1, 2, 3, 4 ແລະ 5 ໃນປຶ້ມແບບຮຽນ ແລ້ວຕອບຄຳຖາມລຸ່ມນີ້:

1) ສັງຄົມແມ່ນຫຍັງ?

2) ການປະກອບສ່ວນເຄື່ອນໄຫວວຽກງານການເມືອງ-ສັງຄົມແມ່ນແນວໃດ?

3) ນັກຮຽນຄວນປະພຶດຕົນແນວໃດ ເພື່ອປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານການເມືອງ-ສັງຄົມ?

4) ການປະກອບສ່ວນເຄື່ອງໄຫວວຽກງານການເມືອງ-ສັງຄົມມີຄວາມຈຳເປັນແນວໃດ?
5) ຜົນໄດ້ຮັບຂອງການເຄື່ອນໄຫວວຽກງານການເມືອງ-ສັງຄົມມີຫຍັງແດ່?
6) ຈົ່ງບອກຊື່ຜູ້ທີ່ມີບົດບາດໃນການເຄື່ອນໄຫວວຽກງານການເມືອງ-ສັງຄົມທີ່ກໍ່ໃຫ້ເກີດການປ່ຽນແປງໃນສັງຄົມ? ຍ້ອນຫຍັງ?
7) ຈົ່ງອ່ານເລື່ອງ ປະກອບສ່ວນເຂົ້າຮ່ວມງານມະຫາກຳກິລາຊີເກມ ຄັ້ງທີ 25 ແລ້ວສັງລວມສິ່ງທີ່ນາງສອນເພັດ ແລະ ທ້າວສູນທອນ ໄດ້ຮຽນຮູ້ຈາກການເຂົ້າຮ່ວມວຽກງານດັ່ງກ່າວ.

- ນັກຮຽນຄົ້ນຄວ້າ ແລະ ຕອບຄຳຖາມຕາມການມອບໝາຍຂອງຄູ.
- ຄູໃຫ້ຕາງໜ້າກຸ່ມຂຶ້ນລາຍງານ.
- ຄູ ແລະ ນັກຮຽນສະຫຼຸບຄຳຕອບຮ່ວມກັນ.

**ຄຳຕອບ**

1) ສັງຄົມ ແມ່ນການພົວພັນລະຫວ່າງຄົນກັບຄົນ, ການຢູ່ຮ່ວມກັນ ຊຶ່ງມີການພົວພັນແລກປ່ຽນເຊິ່ງກັນ ແລະ ກັນໃນດ້ານຕ່າງໆ, ການຊ່ວຍເຫຼືອ, ເອື້ອເຟື້ອເພື່ອແຜ່, ສາມັກຄີຮັກແພງກັນ.
2) ການເຄື່ອນໄຫວວຽກງານການເມືອງ-ສັງຄົມ ແມ່ນການຮ່ວມສະແດງອອກຂອງກຸ່ມຄົນ ຫຼື ການປະຕິບັດວຽກງານຮ່ວມກັນ ເພື່ອຍົກສູງສະຕິຄວາມຮັບຜິດຊອບຂອງພົນລະເມືອງລາວທຸກຄົນເຂົ້າໃນການປະຕິບັດ ໂດຍເປົ້າໝາຍພັດທະນາເສດຖະກິດ-ສັງຄົມ, ດຳລົງຊີວິດຮ່ວມກັນຢູ່ໃນສັງຄົມໃຫ້ມີຄວາມສະຫງົບ, ການແກ້ໄຂປາກົດການຫຍໍ້ທໍ້, ການຊ່ວຍເຫຼືອປະຊາຊົນທີ່ຖືກເຄາະຮ້າຍຈາກໄພທຳມະຊາດ, ປົກປັກຮັກສາສິ່ງແວດລ້ອມ, ສ້າງຄວາມສາມັກຄີປອງດອງຊາດ ແລະ ສ້າງເພື່ອນມິດທີ່ດີກັບຊາດອື່ນໆໃນໂລກ.
3) ນັກຮຽນຕ້ອງຕື່ນຕົວສະໝັກໃຈເຂົ້າຮ່ວມໃນການຈັດຕັ້ງລວມໝູ່, ການຈັດຕັ້ງການເມືອງຂອງພັກ, ຊາວໜຸ່ມ, ກຳມະບານ, ເຍົາວະຊົນ, ສະຫະພັນແມ່ຍິງ, ບັນດາສະມາຄົມວິທະຍາສາດ ແລະ ອື່ນໆ. ເພື່ອເສີມຂະຫຍາຍກຳລັງແຮງຂອງທົ່ວປວງຊົນ, ສ້າງໂອກາດໃຫ້ແຕ່ລະຄົນໄດ້ພັດທະນາ, ແລກປ່ຽນຄວາມຮູ້, ປະສົບການຂອງຕົນ ໂດຍສະເພາະແມ່ນຄຸນຄ່າ ແລະ ຄວາມສາມາດບົ່ມຊ້ອນໃນຕົວຂອງຄົນ.

4) ແມ່ນໜ້າທີ່ຂອງຄົນລາວທຸກຄົນ ຍ້ອນວ່າມັນເປັນພື້ນຖານໃຫ້ແກ່ການພັດທະນາ ວັດທະນະທຳ-ສັງຄົມ, ເສດຖະກິດມີການຂະຫຍາຍຕົວ, ຄົນໄດ້ຮັບການການ ສຶກສາ, ມີສຸຂະພາບດີ, ມີວິຊາອາຊີບ, ມີສີມື ແລະ ມີຄຸນສົມບັດສົມທຳດີ...ຊຶ່ງມັນ ໄດ້ສ້າງເງື່ອນໄຂ ແລະ ຄວາມສາມາດໃນການພັດທະນາເສດຖະກິດໃຫ້ຂະຫຍາຍ ຕົວໄວ ແລະ ມີປະສິດທິຜົນສູງ.
5) ຜົນໄດ້ຮັບຂອງການປະກອບສ່ວນເຄື່ອງໄຫວວຽກງານການເມືອງ-ສັງຄົມມີ ຄື: ປະ ເທດຊາດມີຄວາມຈະເລີນກ້າວໜ້າ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ມີ ຄວາມສະຫງົບສຸກ, ໝັ້ນຄົງ, ອຸດົມສົມບູນ, ຮັ່ງມີທາງດ້ານວັດຖຸ ແລະ ຈິດໃຈ...
6) ຜູ້ທີ່ມີບົດບາດໃນການເຄື່ອນໄຫວວຽກງານການເມືອງ-ສັງຄົມ ທີ່ກໍ່ໃຫ້ເກີດການ ປ່ຽນແປງໃນສັງຄົມແມ່ນ ທ່ານ ໄກສອນ ພົມວິຫານ ຍ້ອນວ່າ ເປັນຜູ້ທີ່ມີທັດສະນະ ມະຫາຊົນກວ້າງຂວາງ, ດຸໝັ່ນ, ເປັນແບບຢ່າງທີ່ດີ ແລະ ປຸກລະດົມຂົນຂວາຍໃນ ການເຄື່ອນໄຫວວຽກງານການເມືອງ-ສັງຄົມ (ສຳລັບຄຳຕອບຂໍ້ນີ້ ນັກຮຽນສາມາດ ເລືອກເອົາບຸກຄົນອື່ນ ໃນລະດັບທ້ອງຖິ່ນ, ພາກພື້ນ ແລະ ສາກົນກໍໄດ້ ເຊັ່ນ: ທ່ານ ໄຮ່ຈິມິນ, ທ່ານສີຈິນຜິ້ງ, ທ່ານເລນິນ ເປັນຕົ້ນ).
7) ສິ່ງທີ່ນາງສອນເພັດ ແລະ ທ້າວສູນທອນ ໄດ້ຮຽນຮູ້ຈາກການເຂົ້າຮ່ວມວຽກງານ ດັ່ງກ່າວແມ່ນ ເຮັດໃຫ້ເຂົາເຈົ້າມີຄວາມຕື່ນຕົວໃນການປະກອບສ່ວນວຽກງານການ ເມືອງ-ສັງຄົມ, ມີຄວາມຫ້າວຫັນ, ອົດທົນ, ຈິງໃຈ, ສາມັກຄີ ແລະ ມີຄວາມຮັບ ຜິດຊອບ.

**3. ສະຫຼຸບ (10 ນາທີ)**

ຄູ ແລະ ນັກຮຽນສະຫຼຸບເນື້ອໃນບົດຮຽນກ່ຽວກັບສັງຄົມ, ການເຄື່ອນໄຫວວຽກງານ ການເມືອງ-ສັງຄົມ, ບຸກຄົນສຳຄັນທີ່ກໍ່ໃຫ້ເກີດການປ່ຽນແປງໃນລະດັບທ້ອງຖິ່ນ ແລະ ລະ ດັບຊາດ ພ້ອມເນັ້ນຕື່ມວ່າ:

ການປະກອບສ່ວນວຽກງານການເມືອງ-ສັງຄົມເປັນໜ້າທີ່ຂອງທຸກໆຄົນ ເພື່ອໃຫ້ວຽກ ງານສຳເລັດ, ມີການປ່ຽນແປງໄປໃນທາງທີ່ດີໃນລະດັບທ້ອງຖິ່ນ ແລະ ລະດັບຊາດ. ຄົນ ທີ່ຈະກໍ່ໃຫ້ເກີດການປ່ຽນແປງທີ່ດີນີ້ຕ້ອງເປັນບຸກຄົນມີທັດສະນະມະຫາຊົນກວ້າງຂວາງ, ດຸໝັ່ນ, ເປັນແບບຢ່າງທີ່ດີ ແລະ ປຸກລະດົມຂົນຂວາຍໃນການເຄື່ອນໄຫວວຽກງານການ ເມືອງ-ສັງຄົມ.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນຈາກການຕອບຄຳຖາມລຸ່ມນີ້:

- ໃຫ້ນັກຮຽນໝາຍ ✓ ໃສ່ຕໍ່ໜ້າຄຳຕອບທີ່ເຫັນວ່າຖືກຕ້ອງ

1. ຂໍ້ໃດ ບໍ່ແມ່ນ ຄວາມໝາຍຂອງສັງຄົມ?
   - ກ. ຄົນຈຳນວນຫຼາຍ
   - ຂ. ການຢູ່ຮ່ວມກັນ
   - ✓ ຄ. ບຸກຄົນ
   - ງ. ຄອບຄົວ
2. ຂໍ້ໃດ ບໍ່ແມ່ນ ການເຄື່ອນໄຫວວຽກງານການເມືອງ-ສັງຄົມ?
   - ກ. ການປະຕິບັດວຽກງານຮ່ວມກັນ
   - ຂ. ຊ່ວຍເຫຼືອຜູ້ປະສົບໄພ
   - ✓ ຄ. ການເຫັນອົກເຫັນໃຈຄົນອື່ນໃນສັງຄົມ
   - ງ. ການເຄື່ອນໄຫວກິລາ-ສິລະປະ
3. ແນວໃດຈຶ່ງເອີ້ນວ່າບຸກຄົນສຳຄັນກໍ່ໃຫ້ເກີດການປ່ຽນແປງໃນລະດັບທ້ອງຖິ່ນ ແລະ ລະດັບຊາດ?
   - ກ. ມີຜູ້ນຳພາຈຶ່ງເຄື່ອນໄຫວວຽກງານ
   - ຂ. ປະກອບສ່ວນວຽກງານຍ້ອນມີຜູ້ຮຽກຮ້ອງ
   - ✓ ຄ. ປຸກລະດົມຄົນອື່ນໃນການເຄື່ອນໄຫວວຽກງານ
   - ງ. ປະກອບສ່ວນວຽກງານເພື່ອຜົນປະໂຫຍດສ່ວນຕົວ

**ຂໍ້ມູນເພີ່ມເຕີມ**:

- ປະຫວັດ ແລະ ຜົນງານຂອງທ່ານ ໄກສອນ ພົມວິຫານ

  https://muan.sanook.com/22227/

# ບົດທີ 8 ການຊອກຮູ້ຮ່ຳຮຽນ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 3 ຄຸນປະໂຫຍດຂອງການເຄົາລົບນັບຖື ແລະ ການຊອກຮູ້ຮ່ຳຮຽນກັບບັນດາເຜົ່າ-ຊາດອື່ນ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍຂອງການເຄົາລົບນັບຖື ແລະ ການຊອກຮູ້ຮ່ຳຮຽນ, ຄວາມແຕກຕ່າງກັນລະຫວ່າງສັງຄົມ, ວັດທະນະທຳຂອງຊາດ ແລະ ຂອງໂລກ ແລະ ສ້າງສາຍສຳພັນອັນດີງາມກັບທຸກເຜົ່າ ແລະ ຊາດອື່ນ.
- ເຫັນຄຸນຄ່າຂອງການຊອກຮູ້ຮ່ຳຮຽນນຳຜູ້ອື່ນ ຫຼື ຊາດອື່ນ
- ປະພຶດຕົນເປັນຄົນດຸໝັ່ນໃນການຊອກຮູ້ຮ່ຳຮຽນ, ເຄົາລົບນັບຖືວັດທະນະທຳຂອງຊາດຕົນ ແລະ ຂອງຊາດອື່ນໃນໂລກ.

## II. ເນື້ອໃນ

ການເຄົາລົບນັບຖື ແລະ ການຊອກຮູ້ຮ່ຳຮຽນກັບຊາດອື່ນ ແມ່ນການເຄົາລົບນັບຖືອະທິປະໄຕ, ຜົນປະໂຫຍດ ແລະ ວັດທະນະທຳຂອງຊາດອື່ນ ພ້ອມທັງການສຶກສາຫາຄວາມຮູ້, ຄວາມສາມາດໃຫ້ສູງຂຶ້ນ ໂດຍສະເພາະແຕ່ລະເຜົ່າ, ແຕ່ລະຊາດກໍມີຜົນງານໃນດ້ານເສດຖະກິດ, ວິທະຍາສາດເຕັກນິກ, ສິລະປະ, ວັດທະນະທຳ ແລະ ຜະລິດຕະພັນທີ່ດີເດັ່ນ, ຮີດຄອງປະເພນີອັນດີງາມຂອງໃຜລາວ ທຸກການຍຸຍົງຄວາມກຽດຊັງໃນຊາດ ຫຼື ລະຫວ່າງສາສະໜາຊຶ່ງຈະສ້າງການຈຳແນກ, ຄວາມຮຸນແຮງນັ້ນຕ້ອງຖືກຫ້າມດ້ວຍກົດໝາຍ.

ສະນັ້ນ, ເຮົາຄວນຊອກຮູ້, ຮັບເອົາສິ່ງທີ່ດີມາເສີມຂະຫຍາຍໃຫ້ດີຂຶ້ນ. ການເຄົາລົບ ນັບຖື ແລະ ຊອກຮູ້ຮ່ຳຮຽນນຳຊາດອື່ນ ກໍເພື່ອສ້າງເງື່ອນໄຂໃຫ້ປະເທດເຮົາມີຄວາມກ້າວໜ້າ, ຮັ່ງມີ ແລະ ເຂັ້ມແຂງ. ອີກດ້ານໜຶ່ງ ໂລກປັດຈຸບັນແມ່ນໂລກແຫ່ງຂໍ້ມູນຂ່າວສານ ແລະ ມີການແຂ່ງຂັນຮອບດ້ານ. ເພື່ອຢາກໃຫ້ປະເທດຕົນເອງກ້າວໜ້າວ່ອງໄວ, ກ້າວໄກ ແລະ ທັນກັບຊາດອື່ນ ເຮົາຕ້ອງຊອກຮູ້ຮ່ຳຮຽນໃຫ້ຫຼາຍເພື່ອພັດທະນາປະເທດຊາດໃຫ້ມີຄວາມກ້າວໜ້າຕະຫຼອດ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຂັ້ນ ມ.3

2. ວິດີໂອ 1 ບຸນກອງເຂົ້າໃຫຍ່ ປະຈຳປີ 2020 ຢູ່ເມືອງສັງທອງ ນະຄອນຫຼວງວຽງຈັນ - YouTube
3. ວິດີໂອ 2 ປະຫວັດຄວາມເປັນມາຂອງບຸນກະເຣີ ເຜົ່າກຶມມຸ - Story of KMHMU new year - YouTube
4. ວິດີໂອ 3 This is South East Asia: Culture, Food, and Places - YouTube
5. ຮູບພາບບຸກຄົນທີ່ເປັນແບບຢ່າງໃນການຊອກຮູ້ຂໍ້ມູນຂ່າວສານທາງດ້ານອິນເຕີເນັດ...

## IV. ກິດຈະກຳການຮຽນການສອນ

### 1. ທົບທວນບົດທີ່ຮຽນຜ່ານມາ

**ກ. ຫຼິ້ນເກມ (5 ນາທີ)**

- ຄູໃຫ້ນັກຮຽນນັບເລກຕາມຈຳນວນນັກຮຽນທີ່ມີຢູ່ໃນຫ້ອງເລີ່ມແຕ່ຜູ້ທີ 1 ເຖິງຜູ້ສຸດທ້າຍ. ຈາກນັ້ນ, ເລືອກເອົານັກຮຽນຜູ້ທີ່ໄດ້ໝາຍເລກຄີກຈຳນວນ 4 ຄົນເວົ້າຄືນສິ່ງທີ່ຕົນໄດ້ຮຽນໃນຊົ່ວໂມງຜ່ານມາ.
- ຄູ ແລະ ນັກຮຽນທວນຄືນບົດຮຽນທີ່ຜ່ານມາຮ່ວມກັນ.

### 2. ສະເໜີເນື້ອໃນບົດຮຽນ

**ຂ. ເບິ່ງວິດີໂອ ກ່ຽວກັບບຸນປະເພນີຂອງທ້ອງຖິ່ນ ແລະ ພາກພື້ນ (20 ນາທີ)**

- ຄູໃຫ້ນັກຮຽນ ເບິ່ງວິດີໂອ 1, 2 ແລະ 3 ແລ້ວຖາມນັກຮຽນ ດັ່ງນີ້:
  1) ນັກຮຽນເຫັນຫຍັງແດ່ໃນວິດີໂອ 1, 2 ແລະ 3?
  2) ບຸນປະເພນີທີ່ສຳຄັນຢູ່ທ້ອງຖິ່ນຂອງນັກຮຽນມີຫຍັງແດ່?
  3) ໃນວິດີໂອ 3 ມີສິ່ງໃດແດ່ທີ່ຄ້າຍຄື ແລະ ແຕກຕ່າງກັບປະເທດລາວ?
- ຄູ ແລະ ນັກຮຽນສັງລວມຄຳຕອບກ່ຽວກັບວິດີໂອຮ່ວມກັນ ດັ່ງນີ້:

**ຄຳຕອບ**:

1) ບຸນກອງເຂົ້າໃຫຍ່ ແຂວງໄຊຍະບູລີ, ບຸນກະເຣີຂອງເຜົ່າລາວເທິງ, ອາຊີຕາເວັນອອກສ່ຽງໃຕ້ກ່ຽວກັບວັດທະນະທຳ, ອາຫານ ແລະ ສະຖານທີ່.
2) ຄຳຕອບຂໍ້ນີ້ແມ່ນໃຫ້ເອົາຄຳຕອບຕົວຈິງຈາກນັກຮຽນ.
3) ສິ່ງທີ່ຄືກັນແມ່ນແຕ່ລະປະເທດລ້ວນມີວັດທະນະທຳ, ອາຫານ ແລະ ສະຖານທີ່ສຳຄັນທີ່ມີເອກະລັກຂອງຕົນເອງ. ເຖິງຢ່າງໃດກໍຕາມ ຮູບແບບຂອງການສະແດງອອກທາງດ້ານວັດທະນະທຳກໍຍັງມີລັກສະນະທີ່ແຕກຕ່າງກັນ, ປະເພດຂອງອາຫານລວມເຖິງວິທີໃນການປຸງແຕ່ງກໍແຕກຕ່າງກັນ ແລະ ສະຖານທີ່ສຳຄັນກໍຂຶ້ນກັບ

ຈຸດພິເສດຂອງແຕ່ລະປະເທດ.

**ຄ. ຄົ້ນຄວ້າເປັນກຸ່ມ (20 ນາທີ)**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ, ຈາກນັ້ນໃຫ້ນັກຮຽນອ່ານເນື້ອໃນບົດຮຽນຂໍ້ທີ 1, 2, 3 ໃນປຶ້ມແບບຮຽນ ແລ້ວຕັ້ງຄຳຖາມດັ່ງນີ້:
  1) ການຊອກຮູ້ຮໍ່າຮຽນແມ່ນຫຍັງ?
  2) ນອກຈາກຢູ່ໂຮງຮຽນແລ້ວເຮົາສາມາດຊອກຮູ້ຮໍ່າຮຽນຢູ່ໃສແດ່?
  3) ຜົນດີ ແລະ ຜົນເສຍຂອງການຊອກຮູ້ຮໍ່າຮຽນມີຫຍັງແດ່?
  4) ຍ້ອນຫຍັງຈຶ່ງຄວນມີການເຄົາລົບ ແລະ ຊອກຮູ້ຮໍ່າຮຽນນຳເຜົ່າ ແລະ ຊາດອື່ນ?
  5) ສິ່ງທີ່ພວກເຮົາຄວນ ຫຼື ບໍ່ຄວນຮໍ່າຮຽນ ແລະ ຮັບເອົາຈາກຊາດອື່ນມີຫຍັງແດ່?
  6) ນັກຮຽນຈະປັບຕົວເຂົ້າກັບວັດທະນະທຳທີ່ແຕກຕ່າງກັນຂອງທ້ອງຖິ່ນອື່ນ ແລະ ປະເທດອື່ນແນວໃດ?
- ຄູໃຫ້ນັກຮຽນແຕ່ລະກຸ່ມສັງລວມຄຳຕອບເປັນແຜນວາດ ດັ່ງຕົວຢ່າງແຜນວາດລຸ່ມນີ້:



- ຄູ ແລະ ນັກຮຽນສະຫຼຸບກ່ຽວກັບແຜນວາດຮ່ວມກັນດັ່ງນີ້:

**ຄໍາຕອບ**



**3. ສະຫຼຸບ (5 ນາທີ)**

ການຊອກຮູ້ຮໍ່າຮຽນ ບໍ່ພຽງແຕ່ຊອກຮູ້ຮໍ່າຮຽນດ້ວຍຕົນເອງເທົ່ານັ້ນ, ນັກຮຽນຍັງສາມາດຊອກຮູ້ຮໍ່າຮຽນນໍາຄູອາຈານ, ປຶ້ມຕໍາລາ, ໝູ່ເພື່ອນ, ຄອບຄົວ, ສັງຄົມ ແລະ ທຸກຊັ້ນຄົນ ທັງໃນຊາດ, ພາກພື້ນ ແລະ ສາກົນ ໂດຍບໍ່ມີການຈໍາແນກຜິວພັນ, ພາສາ, ສາສະໜາ, ເຄົາລົບ ແລະ ຮຽນຮູ້ເອົາສິ່ງໃໝ່ໆ ທີ່ແຕກຕ່າງກັນ ເພື່ອຮຽນຮູ້ໃນການຢູ່ຮ່ວມກັນຢ່າງສັນຕິ. ສະນັ້ນ, ຢາກເປັນນັກຮຽນເກັ່ງ, ມີຄວາມຮູ້, ຄວາມສາມາດ, ປະສົບຜົນສໍາເລັດໃນຊີວິດ, ເຮົາຕ້ອງມີຄວາມພາກພຽນພະຍາຍາມ, ດຸໝັ່ນ, ອົດທົນ ຊອກຮູ້ຮໍ່າຮຽນຢູ່ສະເໝີ, ດັ່ງຄໍາສຸພາສິດທີ່ວ່າ: "ຄວາມພະຍາຍາມຢູ່ບ່ອນໃດ ຄວາມສໍາເລັດຢູ່ບ່ອນນັ້ນ".

ຈາກນັ້ນ, ຄູເວົ້າເພີ່ມຕື່ມວ່າ: ນັກຮຽນແຕ່ລະຄົນມາຈາກຄອບຄົວທີ່ແຕກຕ່າງກັນ, ປະເທດລາວກໍມີຄວາມຫຼາກຫຼາຍທາງດ້ານເຜົ່າ ເຊັ່ນດຽວກັບໂລກທີ່ປະກອບດ້ວຍຫຼາຍເຊື້ອ ຊາດ ຊຶ່ງມີເອກະລັກສະເພາະເປັນຂອງຕົນເອງແຕ່ລະຄອບຄົວ, ທ້ອງຖິ່ນ ແລະ ປະເທດ. ສະນັ້ນເຮົາຕ້ອງຮຽນຮູ້ ແລະ ເຄົາລົບຄວາມຫຼາກຫຼາຍທາງດ້ານ ສັງຄົມ ແລະ ວັດທະນະທໍາຂອງຄົນອື່ນ ແລະ ຊາດອື່ນ, ຫຼີກລ່ຽງທຸກການຈໍາແນກ, ສ້າງຄວາມເປັນປໍລະປັກ ຫຼື ຄວາມຮຸນແຮງ ເພື່ອການດໍາລົງຊີວິດຢູ່ໃນສັງຄົມ ແລະ ໂລກຢ່າງສັນຕິ. ການເຄົາລົບນັບຖື ແລະ ການຊອກຮູ້ຮໍ່າຮຽນນໍາຊາດອື່ນຕ້ອງມີການເລືອກເຟັ້ນທີ່ດີ, ເໝາະສົມກັບສະພາບຄວາມເປັນຈິງ ແລະ ຮີດຄອງປະເພນີຂອງຊາດເຮົາຈຶ່ງຈະຊ່ວຍໃຫ້ປະເທດເຮົາໄດ້ຮັບການພັດທະນາ ແລະ ຮັກສາເອກະລັກສະເພາະຂອງຊາດລາວໄວ້.

**ວຽກບ້ານ**

1. ຄູແນະນໍາໃຫ້ນັກຮຽນອ່ານເລື່ອງ "ນັກຮຽນເກັ່ງ" ແລ້ວຂຽນສິ່ງທີ່ຕົນໄດ້ຮຽນຮູ້ຈາກການອ່ານເລື່ອງນີ້ມາສົ່ງຄູເພື່ອກວດ.
2. ຄູແນະນໍາໃຫ້ນັກຮຽນເຮັດບົດເຝິກຫັດ ໃນປຶ້ມແບບຮຽນຂໍ້ 1, 2, 3, 4, 6 ແລະ 7 ແລ້ວຂຽນຄໍາຕອບມາສົ່ງຄູໃນຊົ່ວໂມງຕໍ່ໄປ.

## IV. ການວັດ ແລະ ການປະເມີນຜົນ

ປະເມີນນັກຮຽນຈາກການສະແດງຄວາມຄິດເຫັນຂອງນັກຮຽນກ່ຽວກັບສິ່ງທີ່ຄວນ ແລະ ບໍ່ຄວນປະຕິບັດໃນການຊອກຮູ້ຮໍ່າຮຽນໃນຕາຕະລາງລຸ່ມນີ້:

| ລາຍການ | ຄວນ | ບໍ່ຄວນ |
|---|---|---|
| ໃສ່ເຄື່ອງທຸກຢ່າງຕາມແບບດາລາ | | |
| ຊອກຮູ້ຮີດຄອງປະເພນີຂອງເຜົ່າຕ່າງໆ | | |
| ຟັງແຕ່ເພງຕ່າງປະເທດບໍ່ຟັງເພງລາວ | | |
| ຕໍາໜິຄົນທີ່ແຕ່ງກາຍຊຸດປະຈໍາເຜົ່າ | | |
| ຮຽນຮູ້ເຕັກນິກທີ່ທັນສະໄໝຈາກຄົນອື່ນ, ຊາດອື່ນ | | |
| ໃຊ້ພາສາຕ່າງປະເທດແທນພາສາລາວ | | |
| ຮຽນຮູ້ວັດທະນະທໍາຂອງຕ່າງປະເທດ | | |
| ເຄົາລົບໃນຄວາມແຕກຕ່າງ, ບໍ່ມີການຈໍາແນກເຊື້ອຊາດ, ພາສາ ແລະ ອື່ນໆ | | |
| ຫຼົ້ນກິນຟຸມເຟືອຍຕາມກະແສສັງຄົມ | | |
| ປະຕິເສດການຮຽນຮູ້ພາສາຕ່າງປະເທດ | | |
| ການຊອກຮູ້ຮໍ່າຮຽນແມ່ນເພື່ອໃຫ້ຕົນເອງເກັ່ງກວ່າຄົນອື່ນຢ່າງດຽວ | | |
| ມີແຕ່ການຊອກຮູ້ຮໍ່າຮຽນດ້ວຍຕົວເອງກໍພຽງພໍແລ້ວ | | |
| ພວກເຮົາຕ້ອງມີການຊອກຮູ້ຮໍ່າຮຽນຢູ່ສະເໝີ | | |
| ເລືອກເຟັ້ນ ແລະ ສົ່ງເສີມວັດທະນະທໍາທີ່ມີລັກສະນະກ້າວໜ້າ. | | |

**ຄຳຕອບ**

| ລາຍການ | ຄວນ | ບໍ່ຄວນ |
|---|---|---|
| ໃສ່ເຄື່ອງທຸກຢ່າງຕາມແບບດາລາ | | ✓ |
| ຊອກຮູ້ຮີດຄອງປະເພນີຂອງເຜົ່າຕ່າງໆ | ✓ | |
| ຟັງແຕ່ເພງຕ່າງປະເທດບໍ່ຟັງເພງລາວ | | ✓ |
| ຕຳໜິຄົນທີ່ແຕ່ງກາຍຊຸດປະຈຳເຜົ່າ | | ✓ |
| ຮຽນຮູ້ເຕັກນິກທີ່ທັນສະໄໝຈາກຄົນອື່ນ, ຊາດອື່ນ | ✓ | |
| ໃຊ້ພາສາຕ່າງປະເທດແທນພາສາລາວ | | ✓ |
| ຮຽນຮູ້ວັດທະນະທຳຂອງຕ່າງປະເທດ | ✓ | |
| ເຄົາລົບໃນຄວາມແຕກຕ່າງ, ບໍ່ມີການຈຳແນກເຊື້ອຊາດ, ພາສາ ແລະ ອື່ນໆ | ✓ | |
| ຫຼົ້ນກິນຟຸມເຟືອຍຕາມກະແສສັງຄົມ | | ✓ |
| ປະຕິເສດການຮຽນຮູ້ພາສາຕ່າງປະເທດ | | ✓ |
| ການຊອກຮູ້ຮໍ່າຮຽນແມ່ນເພື່ອໃຫ້ຕົນເອງເກັ່ງກວ່າຄົນອື່ນຢ່າງດຽວ | | ✓ |
| ມີແຕ່ການຊອກຮູ້ຮໍ່າຮຽນດ້ວຍຕົວເອງກໍພຽງພໍແລ້ວ | | ✓ |
| ພວກເຮົາຕ້ອງມີການຊອກຮູ້ຮໍ່າຮຽນຢູ່ສະເໝີ | ✓ | |
| ເລືອກເຟັ້ນ ແລະ ສົ່ງເສີມວັດທະນະທຳທີ່ມີລັກສະນະກ້າວໜ້າ | ✓ | |

**ໝາຍເຫດ**

ສຳລັບຄູທີ່ບໍ່ມີ ຫຼື ບໍ່ສາມາດນຳໃຊ້ວິດີໂອປະກອບການສອນຕາມທີ່ແນະນຳແມ່ນສາມາດຊອກສື່ການສອນອື່ນທີ່ສອດຄ່ອງເພື່ອປະກອບການສອນແທນໄດ້.

ຄູສາມາດໃຊ້ວິທີການສອນອື່ນທີ່ເຫັນວ່າສອດຄ່ອງ, ເໝາະສົມກວ່າ ແຕ່ທີ່ສຳຄັນຕ້ອງຮັບປະກັນວ່າສາມາດບັນລຸຕາມຈຸດປະສົງທີ່ກຳນົດໄວ້.

ຄູສາມາດຊອກສື່ການສອນເປັນປຶ້ມປະເພດຕ່າງໆ, ວາລະສານ, ໜັງສືພິມ... ທີ່ເປັນແຫຼ່ງຂໍ້ມູນຂ່າວສານໃນການຊອກຮູ້ຮໍ່າຮຽນດ້ວຍຕົນເອງ.

ຄູສາມາດຍົກຕົວຢ່າງບຸກຄົນແບບຢ່າງຮຽນເກັ່ງໃນວິຊາຕ່າງໆ ຢູ່ໃນຫ້ອງຮຽນ, ໂຮງຮຽນ ຫຼື ຢູ່ໃນສະຖາບັນການສຶກສາອື່ນໆ ທີ່ມີຊື່ສຽງໂດ່ງດັງທາງດ້ານການສຶກສາ.

**ເອກະສານອ້າງອີງ**:


- ປຶ້ມປະມວນສົນທິສັນຍາສາກົນ ວ່າດ້ວຍສິດທິທາງດ້ານການເມືອງ ແລະ ພົນລະເຮືອນ (ມາດຕາ 20 ຂໍ້ທີ 2 ໜ້າທີ 50).
- ວິດີໂອ 1 ບຸນກອງເຂົ້າໃຫຍ່ ປະຈຳປີ 2020 ຢູ່ເມືອງສັງທອງ

  https://www.youtube.com/watch?v=OWWU-o2bAfM

- ວິດີໂອ 2 ປະຫວັດຄວາມເປັນມາຂອງບຸນກະເຣິ ເຜົ່າກຶມມຸ

  https://www.youtube.com/watch?v=_WWEB1pRN84

- ວິດີໂອ 3 This is South East Asia: Culture, Food, and Places

  https://www.youtube.com/watch?v=zqYXJdWY0Ts

# ບົດທີ 11 ການອອກແຮງງານດ້ວຍຄວາມຕື່ນຕົວ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 2. ການໝູນໃຊ້ຄວາມຕື່ນຕົວ ແລະ ປະດິດສ້າງ ອອກແຮງງານເຂົ້າໃນການດຳລົງຊີວິດ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍຂອງການຕື່ນຕົວ ແລະ ປະດິດສ້າງໃນການອອກແຮງງານ.
- ໝູນໃຊ້ຄວາມຕື່ນຕົວ ແລະ ມີຫົວຄິດປະດິດສ້າງ ເຂົ້າໃນການອອກແຮງງານໃນການດຳລົງຊີວິດ ແລະ ປະກອບສ່ວນເຂົ້າໃນອົງການຈັດຕັ້ງຕ່າງໆ.

## II. ເນື້ອໃນ

ການອອກແຮງງານ ແມ່ນໜ້າທີ່ສຳຄັນສຳລັບສັງຄົມມະນຸດ ເພື່ອເຮັດໃຫ້ປະເທດຊາດຂອງຕົນຢືນຍົງຄົງຕົວ ແລະ ພັດທະນາໄປເລື້ອຍໆ. ສະນັ້ນ, ແຕ່ລະຄົນລ້ວນແຕ່ຕ້ອງມີສະຕິຕໍ່ການອອກແຮງງານ ແລະ ມີຫົວຄິດປະດິດສ້າງຢູ່ສະເໝີ.

ການອອກແຮງງານດ້ວຍຄວາມຕື່ນຕົວ ແມ່ນເປັນເຈົ້າການໃນທຸກວຽກງານ, ບໍ່ລໍຖ້າໃຫ້ຄົນອື່ນມາຕັກເຕືອນ, ມາບັງຄັບ, ແຕ່ເຮັດດ້ວຍຄວາມຕື່ນຕົວ, ເອົາໃຈໃສ່ ແລະ ມີຄວາມຮັບຜິດຊອບສູງ.

ການອອກແຮງງານດ້ວຍຄວາມປະດິດສ້າງ ຜ່ານການອອກແຮງງານຫຼາຍຄັ້ງ, ຫຼາຍທົ່ນຈົນເຮັດໃຫ້ຄົນເຮົາຮູ້ຄິດ, ຮູ້ດັດແປງ, ປັບປຸງໃນດ້ານເຕັກນິກ ໂດຍຜ່ານການອອກແຮງງານຕົວຈິງ... ເພື່ອປະຢັດເຫື່ອແຮງ, ເວລາ, ວັດສະດຸອຸປະກອນ, ພ້ອມທັງຍົກສູງຄຸນນະພາບ ແລະ ມີປະສິດທິຜົນສູງໃນການອອກແຮງງານຢູ່ສະເໝີ.

ການໝູນໃຊ້ຄວາມຕື່ນຕົວ ແລະ ປະດິດສ້າງອອກແຮງງານເຂົ້າໃນການດຳລົງຊີວິດໃນສັງຄົມປັດຈຸບັນ ຖ້າບໍ່ມີຄວາມຕື່ນຕົວ, ບໍ່ມີຫົວຄິດປະດິດສ້າງໝູນໃຊ້ເຂົ້າໃນການຮ່ຳຮຽນ, ການອອກແຮງງານ ກໍຈະບໍ່ສາມາດຂະຫຍາຍຕົວໄປຄຽງຄູ່ກັບສັງຄົມໄດ້. ສະນັ້ນ, ທຸກຄົນຕ້ອງມີຄວາມຕື່ນຕົວເອງ ແລະ ມີຫົວຄິດປະດິດສ້າງ. ຖືວ່າການອອກແຮງງານແມ່ນພັນທະ ແລະໜ້າທີ່ຂອງທຸກຄົນໃນສັງຄົມຈຶ່ງສາມາດຍົກສູງຄຸນນະພາບທາງດ້ານວັດຖຸ ແລະ ຈິດໃຈເຂົ້າໃນການດຳລົງຊີວິດ.

ນອກຈາກນັ້ນ, ການໝູນໃຊ້ແຮງງານຍັງມີຄວາມສຳຄັນຕໍ່ຊຸມຊົນ, ທ້ອງຖິ່ນ ເປັນຕົ້ນ

ແມ່ນການປະກອບສ່ວນເຂົ້າໃນບຸນປະເພນີ, ກິລາກາຍະກຳ, ແຂ່ງຂັນສິລະປະ, ແລກປ່ຽນວັດທະນະທຳ, ການຕອບຄຳຖາມວິທະຍາສາດ ແລະ ການນຳໃຊ້ຫົວຄິດປະດິດສ້າງເຂົ້າໃນການພັດທະນາສີມືແຮງງານຂອງຄົນລາວ ໂດຍສະເພາະແມ່ນຊາວໜຸ່ມ, ນັກຮຽນ, ນັກສຶກສາ ຊຶ່ງເປັນແຮງງານຕົ້ນຕໍໃນການຜະລິດທີ່ສຳຄັນ ເຊັ່ນ: ການຕໍ່າຫູກ, ຈັກສານ, ຜະລິດຕະພັນໃນທ້ອງຖິ່ນ ທີ່ກໍ່ໃຫ້ເກີດການຜະລິດສິນຄ້າ ແລະ ບໍລິການ ເພື່ອຕອບສະໜອງໃຫ້ສັງຄົມ ໄປສູ່ພາກພື້ນ ແລະ ສາກົນ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຂັ້ນ ມ.3
2. ຮູບພາບກ່ຽວກັບການອອກແຮງງານດ້ວຍຄວາມຕື່ນຕົວ, ມີຫົວຄິດປະດິດສ້າງໃນການອອກແຮງງານ, ການຜະລິດ, ຮໍ່າຮຽນດີທີ່ເປັນແບບຢ່າງ
3. ຮູບພາບອື່ນໆທີ່ກ່ຽວຂ້ອງກັບບົດຮຽນ (ຖ້າມີ)
4. ເຈ້ຍຂາວແຜ່ນໃຫຍ່ ຫຼື ເຈ້ຍແຜ່ນນ້ອຍ, ບິກເຝີດ, ບິກ, ສະກັອດ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ລະດົມສະໝອງ (5 ນາທີ)**

**ກ. ສັງເກດຮູບພາບ**

- ຄູໃຫ້ນັກຮຽນສັງເກດຮູບພາບດ້ານລຸ່ມນີ້:



ຜະລິດຕະພັນຈັກສານ



ຜະລິດຕະພັນຖົງແສ່ວ



ຜະລິດຕະພັນຕໍ່າຫູກ

- ຄູຖາມນັກຮຽນວ່າ:
  1) ນີ້ແມ່ນຮູບຫຍັງ?
  2) ມີຄວາມສຳຄັນແນວໃດຕໍ່ການພັດທະນາເສດຖະກິດ?
- ຄູໃຫ້ນັກຮຽນຕອບຄຳຖາມກ່ຽວກັບຮູບພາບ.
- ຄູສະຫຼຸບວ່າ ນີ້ແມ່ນສ່ວນໜຶ່ງຂອງການອອກແຮງງານດ້ວຍຄວາມປະດິດສ້າງເຂົ້າໃນການພັດທະນາເສດຖະກິດ.

**2. ສົນທະນາຖາມ-ຕອບ (15 ນາທີ)**

- ຄູຕັ້ງຄຳຖາມ
  1) ການອອກແຮງງານແມ່ນຫຍັງ?
  2) ການອອກແຮງງານດ້ວຍຄວາມຕື່ນຕົວ ແລະ ປະດິດສ້າງແມ່ນຫຍັງ?
- ຄູໃຫ້ນັກຮຽນ 3-4 ຄົນຕອບຄຳຖາມຕາມຄວາມເຂົ້າໃຈຂອງຕົນ.
- ຄູສະຫຼຸບຄຳຕອບ ໃຫ້ນັກຮຽນ
  1) ການອອກແຮງງານ ແມ່ນໜ້າທີ່ສຳຄັນສຳລັບສັງຄົມມະນຸດ ເພື່ອເຮັດໃຫ້ປະເທດຊາດຂອງຕົນຍືນຍົງຄົງຕົວ ແລະ ພັດທະນາໄປເລື້ອຍໆ. ສະນັ້ນ, ແຕ່ລະຄົນລ້ວນແຕ່ຕ້ອງມີສະຕິຕໍ່ການອອກແຮງງານ ແລະ ມີຫົວຄິດປະດິດສ້າງຢູ່ສະເໝີ.
  (ນັກຮຽນສາມາດຕອບຕາມຄວາມເຂົ້າໃຈ)
  2) ການອອກແຮງງານດ້ວຍຄວາມຕື່ນຕົວ ແມ່ນເປັນເຈົ້າການໃນທຸກວຽກງານ, ບໍ່ລໍຖ້າໃຫ້ຄົນອື່ນມາຕັກເຕືອນ ຫຼື ມາບັງຄັບ, ແຕ່ເຮັດດ້ວຍຄວາມຕື່ນຕົວ, ເອົາໃຈໃສ່ ແລະ ມີຄວາມຮັບຜິດຊອບສູງ.

     ການອອກແຮງງານດ້ວຍຄວາມປະດິດສ້າງ ຜ່ານການອອກແຮງງານຫຼາຍຄັ້ງຈົນເຮັດໃຫ້ຄົນເຮົາຮູ້ຄິດ, ຮູ້ດັດແປງ, ປັບປຸງໃນດ້ານເຕັກນິກ ໂດຍຜ່ານການອອກແຮງງານຕົວຈິງ... ເພື່ອປະຢັດເຫື່ອແຮງ, ເວລາ, ວັດສະດຸອຸປະກອນ, ພ້ອມທັງຍົກສູງຄຸນນະພາບ ແລະ ມີປະສິດທິຜົນສູງໃນການອອກແຮງງານຢູ່ສະເໝີ.

**ຄ. ສົນທະນາກຸ່ມ (25 ນາທີ)**

- ສົນທະນາກ່ຽວກັບການໝູນໃຊ້ຄວາມຕື່ນຕົວ ແລະ ປະດິດສ້າງອອກແຮງງານໃນການສ້າງເສດຖະກິດໃຫ້ຄອບຄົວ ແລະ ສັງຄົມ.
- ຄູແບ່ງນັກຮຽນອອກເປັນ 2 ກຸ່ມ.

- ຄູເອົາຄຳຖາມໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄວ້າສົນທະນາ.
  1) ການໝູນໃຊ້ຄວາມຕື່ນຕົວ ແລະ ປະດິດສ້າງອອກແຮງງານເຂົ້າໃນການດຳລົງຊີວິດແມ່ນຫຍັງ?
  2) ທາງດ້ານເສດຖະກິດແຮງງານເປັນປັດໄຈການຜະລິດທີ່ສຳຄັນແນວໃດແດ່ຢູ່ໃນທ້ອງຖິ່ນ ແລະ ໃນໂລກ?
- ຕາງໜ້າໃຫ້ແຕ່ລະກຸ່ມຂຶ້ນນຳສະເໜີ ກຸ່ມອື່ນໆ ປະກອບຄຳຄິດເຫັນ.
- ຄູສັງລວມຄຳຕອບຂອງນັກຮຽນ ແລ້ວສະຫຼຸບເນື້ອໃນທີ່ຖືກຕ້ອງເປັນເອກະພາບກັນ.

ການໝູນໃຊ້ຄວາມຕື່ນຕົວ ແລະ ປະດິດສ້າງອອກແຮງງານເຂົ້າໃນການດຳລົງຊີວິດ ການດຳລົງຊີວິດໃນສັງຄົມປັດຈຸບັນ ຖ້າບໍ່ມີຄວາມຕື່ນຕົວ, ບໍ່ມີຫົວຄິດປະດິດສ້າງໝູນໃຊ້ເຂົ້າໃນການຮ່ຳຮຽນ, ການອອກແຮງງານ ກໍຈະບໍ່ມີຄວາມສາມາດຂະຫຍາຍຕົວໄປຄຽງຄູ່ກັບສັງຄົມໄດ້. ສະນັ້ນ, ທຸກຄົນຕ້ອງມີຄວາມຕື່ນຕົວເອງ ແລະ ມີຫົວຄິດປະດິດສ້າງ. ຖືວ່າການອອກແຮງງານແມ່ນພັນທະ ແລະ ໜ້າທີ່ຂອງທຸກຄົນໃນສັງຄົມຈຶ່ງສາມາດຍົກສູງຄຸນນະພາບທາງດ້ານວັດຖຸ ແລະ ຈິດໃຈເຂົ້າໃນການດຳລົງຊີວິດ.

ນອກຈາກນັ້ນ, ການໝູນໃຊ້ແຮງງານຍັງມີຄວາມສຳຄັນຕໍ່ຊຸມຊົນ, ທ້ອງຖິ່ນ ເປັນຕົ້ນແມ່ນການປະກອບສ່ວນເຂົ້າໃນບຸນປະເພນີ, ກິລາກາຍຍະກຳ, ແຂ່ງຂັນສິລະປະ, ແລກປ່ຽນວັດທະນະທຳ, ການຕອບຄຳຖາມວິທະຍາສາດ ແລະ ການນຳໃຊ້ຫົວຄິດປະດິດສ້າງເຂົ້າໃນການພັດທະນາສີມືແຮງງານຂອງຄົນລາວ ໂດຍສະເພາະແມ່ນຊາວໜຸ່ມ, ນັກຮຽນ, ນັກສຶກສາຊຶ່ງເປັນແຮງງານຕົ້ນຕໍໃນການຜະລິດທີ່ສຳຄັນ ເຊັ່ນ: ການຕ່ຳຫູກ, ຈັກສານ, ຜະລິດຕະພັນໃນທ້ອງຖິ່ນ ທີ່ກໍ່ໃຫ້ເກີດການຜະລິດສິນຄ້າ ແລະ ບໍລິການ ເພື່ອຕອບສະໜອງໃຫ້ສັງຄົມ ໄປສູ່ພາກພື້ນ ແລະ ສາກົນ.

**3. ຄູສະຫຼຸບ (5 ນາທີ)**

ຄູສະຫຼຸບບົດຮຽນໂດຍຫຍໍ້ກ່ຽວກັບ:
- ການອອກແຮງງານດ້ວຍຄວາມຕື່ນຕົວ ແລະ ປະດິດສ້າງ.
- ການໝູນໃຊ້ຄວາມຕື່ນຕົວ ແລະ ປະດິດສ້າງອອກແຮງງານເຂົ້າໃນການດຳລົງຊີວິດ

ຄູເນັ້ນໃຫ້ນັກຮຽນນຳເອົາຄວາມຮູ້ໃນຊົ່ວໂມງນີ້ໄປນຳໃຊ້ໃນຊີວິດປະຈຳວັນ.

## IV. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນຈາກການຕອບຄຳຖາມປະລະໄນລຸ່ມນີ້:

- ໃຫ້ນັກຮຽນໝາຍ ✓ ໃສ່ຕໍ່ໜ້າຄຳຕອບທີ່ເຫັນວ່າຖືກຕ້ອງ

1. ຂໍ້ໃດແມ່ນການໝູນໃຊ້ແຮງງານເພື່ອສົ່ງເສີມເສດຖະກິດພາຍໃນ, ສັງຄົມ ແລະ ພາກພື້ນ?

   ກ. ໃຊ້ສິນຄ້າທີ່ລາຄາບໍ່ແພງ

   ຂ. ຈຳໜ່າຍສິນຄ້າຄຸນນະພາບບໍ່ສູງ

   ✓ ຄ. ຜະລິດສິນຄ້າທ້ອງຖິ່ນຂອງຄົນລາວ

   ງ. ນຳເອົາສິນຄ້າຂອງຕ່າງປະເທດມາຈຳໜ່າຍ

2. ຂໍ້ໃດບໍ່ແມ່ນການເຂົ້າຮ່ວມກິດຈະກຳຂອງທ້ອງຖິ່ນ

   ກ. ແຂ່ງຂັນສິລະປະ

   ຂ. ຕອບຄຳຖາມວິທະຍາສາດ

   ✓ ຄ. ການເດີນທາງໄປທ່ອງທ່ຽວ

   ງ. ການແຂ່ງຂັນກິລາກາຍະກຳ

**ເອກະສາເພີ່ມເຕີມ**:

- ປຶ້ມແບບຮຽນກ່ຽວກັບ: ແຮງງານ ແລະ ເສດຖະກິດແຮງງານ (ພາສາໄທ)

  http://old-book.ru.ac.th/e-book/e/EC300(51)/EC300-1.pdf

- ກົດໝາຍວ່າດ້ວຍແຮງງານສະບັບປັບປຸງ ເລກທີ 43/ສພຊ

# ບົດທີ 13 ການຕ້ານປາກົດການຫຍໍ້ທໍ້ທາງສັງຄົມ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 1 ປາກົດການຫຍໍ້ທໍ້ທາງສັງຄົມແມ່ນຫຍັງ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍຂອງປາກົດການຫຍໍ້ທໍ້ທາງສັງຄົມ ແລະ ສິ່ງທ້າທາຍໃນໂລກ ໃນດ້ານຄວາມທຸກຍາກ.
- ເຫັນຄຸນຄ່າໃນການແກ້ໄຂສິ່ງທ້າທາຍໃນໂລກໃນດ້ານຄວາມທຸກຍາກ.
- ສະເໜີວິທີການແກ້ໄຂປາກົດການຫຍໍ້ທໍ້ທາງສັງຄົມ ແລະ ສິ່ງທ້າທາຍໃນໂລກໃນດ້ານ ຄວາມທຸກຍາກ.

## II. ເນື້ອໃນ

ປາກົດການຫຍໍ້ທໍ້ທາງສັງຄົມ ແມ່ນບັນຫາ ຫຼື ເຫດການຕ່າງໆ ທີ່ເກີດຂຶ້ນໃນສັງຄົມເຊັ່ນ: ຄວາມທຸກຍາກ, ການລະບາດຂອງພະຍາດຕ່າງໆ, ຄວາມດ້ອຍການສຶກສາ ຫຼື ຂາດໂອກາດທາງການສຶກສາ, ການສໍ້ລາດບັງຫຼວງ, ການພະນັນ, ໂສເພນີ, ຢາເສບຕິດ, ຂີ້ລັກ, ງັດແງະ, ການໃຊ້ອຳນາດເຖື່ອນ ແລະ ການລະເມີດກົດໝາຍບ້ານເມືອງເປັນຕົ້ນ.

ຜົນຮ້າຍຂອງປາກົດການຫຍໍ້ທໍ້ທາງສັງຄົມມີຜົນກະທົບຕໍ່ສຸຂະພາບ, ຈິດໃຈຂອງຕົນເອງ, ຄອບຄົວ, ສັງຄົມ, ຄວາມໝັ້ນຄົງ ແລະ ການພັດທະນາປະເທດຊາດ. ນອກຈາກນີ້ຍັງສົ່ງຜົນກະທົບຕໍ່ໂລກອີກດ້ວຍ.

ການຕ້ານປາກົດການຫຍໍ້ທໍ້ທາງສັງຄົມແມ່ນການຕ້ານການກໍ່ຄວາມວຸ້ນວາຍ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມກໍຄືການບໍ່ປະຕິບັດຕໍ່ຂໍ້ຫ້າມເຊັ່ນ:

- ຫ້າມຫຼິ້ນການພະນັນທຸກປະເພດບໍ່ວ່າຈະຢູ່ໃນຮູບການໃດ
- ຫ້າມຜະລິດ, ຄ້າຂາຍ, ເຜີຍແຜ່ນຳໃຊ້ຢາເສບຕິດທຸກຊະນິດ, ຜູ້ທີ່ຕິດຢາເສບຕິດຕ້ອງໄດ້ຮັບການບຳບັດ.
- ຫ້າມຍົວະຍົງ, ຫຼອກລວງເອົາເດັກນ້ອຍ, ຊາວໜຸ່ມ, ແມ່ຍິງ ໄປຂາຍປະເວນີ, ສູບຢາ, ດື່ມເຫຼົ້າ ແລະ ສານກະຕຸ້ນຕ່າງໆເຂົ້າສູ່ຮ່າງກາຍ. ຖ້າຫາກກະທຳສິ່ງດັ່ງກ່າວຈະຖືກລົງໂທດຕາມກົດໝາຍ.

ການປ້ອງກັນບໍ່ໃຫ້ເກີດມີປາກົດການຫຍໍ້ທໍ້ທາງສັງຄົມແມ່ນການສຶກສາອົບຮົມແນວຄິດນັກຮຽນໃຫ້ມີຄວາມຮັກຊາດ, ຮັກປະຊາຊົນບັນດາເຜົ່າ ແລະ ທຳມາຫາກິນດ້ວຍຄວາມຊອບທຳຖືກຕ້ອງຕາມກົດໝາຍ.

ຄວາມທຸກຍາກໝາຍເຖິງການທີ່ຂາດຄວາມຕ້ອງການພື້ນຖານຂອງມະນຸດ ຫຼື ເອີ້ນ ວ່າຂາດປັດໄຈ 4 ຊຶ່ງໄດ້ແກ່: ອາຫານ, ອາພອນ (ເສື້ອຜ້າ), ໂອສົດ (ຢາປົວພະຍາດ) ແລະອາຄານສະຖານທີ່ ຫຼື ທີ່ຢູ່ອາໄສ. ນອກຈາກນີ້ ຄວາມທຸກຍາກທີ່ເກີດຂຶ້ນຍັງລວມໄປເຖິງການຂາດໂອກາດທາງການສຶກສາ ແລະ ຂາດການເຂົ້າເຖິງສະຫວັດດີການດ້ານອື່ນໆ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນວິຊາສຶກສາພົນລະເມືອງຂັ້ນ ມ.3
2. ຮູບພາບໃນປຶ້ມແບບຮຽນ
3. ຮູບພາບອື່ນໆ ທີ່ກ່ຽວຂ້ອງກັບບົດຮຽນ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທົບທວນບົດທີ່ຮຽນຜ່ານມາ**

**ກ. ສົນທະນາຖາມ-ຕອບ (5 ນາທີ )**

- ຄູຕັ້ງຄຳຖາມ.
  1) ມື້ເຊົ້ານີ້ກ່ອນມາໂຮງຮຽນນັກຮຽນໄດ້ເຮັດຫຍັງຊ່ວຍພໍ່ແມ່ ຫຼື ຜູ້ປົກຄອງ?
  2) ການທີ່ນັກຮຽນໄດ້ປະກອບສ່ວນວຽກງານຢູ່ໃນຄອບຄົວຊ່ວຍພໍ່ແມ່ ຫຼື ຜູ້ປົກຄອງສະແດງເຖິງຫຍັງ?
- ນັກຮຽນຄົ້ນຄິດ ແລະ ຕອບຄຳຖາມ.
- ຄູສະຫຼຸບຕາມຄຳຕອບຂອງນັກຮຽນ ແລະ ອະທິບາຍເພີ່ມເຕີມຄື:

ການທີ່ນັກຮຽນໄດ້ປະກອບສ່ວນວຽກງານຢູ່ໃນຄອບຄົວຊ່ວຍພໍ່ແມ່ ຫຼື ຜູ້ປົກຄອງສະແດງເຖິງສິດ ແລະ ພັນທະນັກຮຽນ ຊຶ່ງບໍ່ສະເພາະແຕ່ແມ່ນສິດ ແລະ ພັນທະເທົ່ານັ້ນ ແຕ່ຍັງແມ່ນຄວາມຮັບຜິດຊອບ, ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ນອກຈາກນັ້ນ ຍັງສະແດງເຖິງຄວາມຮັກຄວາມຜູກພັນທີ່ມີຕໍ່ກັບຄົນໃນຄອບຄົວອີກດ້ວຍ.

**2. ສະເໜີບົດຮຽນໃໝ່ (20 ນາທີ )**

**ກ. ສັງເກດຮູບພາບ**

- ຄູໃຫ້ນັກຮຽນສັງເກດຮູບພາບໃນປຶ້ມແບບຮຽນ ແລ້ວຖາມວ່າ:

1) ນັກຮຽນເຫັນຫຍັງແດ່ໃນຮູບພາບ?
2) ຄົນໃນແຕ່ລະຮູບພາບກຳລັງເຮັດຫຍັງ?
3) ນັກຮຽນເຄີຍຕົກຢູ່ໃນກໍລະນີໃດໃນຮູບພາບນີ້ບໍ່?
4) ນັກຮຽນຈົ່ງບອກເຖິງປາກົດການຫຍໍ້ທໍ້ທາງສັງຄົມທີ່ນັກຮຽນເຄີຍພົບເຫັນມີຫຍັງແດ່?
5) ນັກຮຽນເຄີຍຕົກຢູ່ໃນປາກົດການຫຍໍ້ທໍ້ນັ້ນບໍ່?

- ສຳລັບຄຳຖາມ ຂໍ້ທີ 1-5 ແມ່ນນັກຮຽນສາມາດຕອບແບບເປີດກວ້າງຄວາມຮູ້ຕາມປະສົບການທີ່ມີ, ຫຼັງຈາກນັກຮຽນຕອບແລ້ວຄູສະຫຼຸບຄຳຕອບຕາມທີ່ນັກຮຽນໄດ້ຕອບມາ ແລະ ເພີ່ມເຕີມບາງບັນຫາທີ່ຍັງບໍ່ທັນຄົບຖ້ວນ.
- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ.
- ຄູຍາຍຄຳຖາມໃຫ້ແຕ່ລະກຸ່ມ 1 ບັນຫາດັ່ງຕໍ່ໄປນີ້:

1) ປາກົດການຫຍໍ້ທໍ້ທາງສັງຄົມແມ່ນຫຍັງ?
2) ຜົນຮ້າຍຂອງປາກົດການຫຍໍ້ທໍ້ທາງສັງຄົມມີຄືແນວໃດ?
3) ການຕ້ານປາກົດການຫຍໍ້ທໍ້ທາງສັງຄົມມີຄືແນວໃດ?
4) ການປ້ອງກັນບໍ່ໃຫ້ມີປາກົດການຫຍໍ້ທໍ້ທາງສັງຄົມມີແນວໃດ?

- ນັກຮຽນຄົ້ນຄວ້າ ແລະ ຊອກຫາຄຳຕອບ.
- ຄູໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນສະເໜີ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຄືນຄຳຕອບຂອງນັກຮຽນແຕ່ລະກຸ່ມ.

**ຄຳຕອບ**

1) ປາກົດການຫຍໍ້ທໍ້ທາງສັງຄົມ ແມ່ນບັນຫາ ຫຼື ເຫດການຕ່າງໆ ທີ່ເກີດຂຶ້ນໃນສັງຄົມ ເຊັ່ນ: ຄວາມທຸກຍາກ, ການລະບາດຂອງພະຍາດຕ່າງໆ, ຄວາມດ້ອຍການສຶກສາ ຫຼື ຂາດໂອກາດທາງການສຶກສາ, ການສໍ້ລາດບັງຫຼວງ, ການພະນັນ, ໂສເພນີ, ຢາເສບຕິດ, ຂີ້ລັກ, ງັດແງະ, ການໃຊ້ອຳນາດເຖື່ອນ ແລະ ການລະເມີດກົດໝາຍບ້ານເມືອງເປັນຕົ້ນ.
   - ຄູເນັ້ນຕື່ມກ່ຽວກັບຄວາມທຸກຍາກ ແມ່ນການທີ່ຂາດສິ່ງຕອບສະໜອງຄວາມຕ້ອງການພື້ນຖານຂອງມະນຸດ ຫຼື ເອີ້ນວ່າ ຂາດປັດໄຈ 4 ຊຶ່ງໄດ້ແກ່: ອາຫານ, ອາພອນ (ເສື້ອຜ້າ), ໂອສົດ (ຢາປົວພະຍາດ) ແລະ ອາຄານສະຖານທີ່ ຫຼື ທີ່ຢູ່ອາໄສ. ນອກຈາກນີ້ ຄວາມທຸກຍາກທີ່ເກີດຂຶ້ນຍັງລວມໄປເຖິງການຂາດໂອກາດທາງການສຶກສາ ແລະ ຂາດການເຂົ້າເຖິງສະຫວັດດີການດ້ານອື່ນໆ.

2) ຜົນຮ້າຍຂອງປາກົດການຫຍໍ້ທໍ້ທາງສັງຄົມເປັນພິດໄພຕໍ່ຄວາມໝັ້ນຄົງ ແລະ ການພັດທະນາປະເທດຊາດ, ມີຜົນກະທົບຕໍ່ສຸຂະພາບ, ຈິດໃຈຂອງຕົນເອງ, ຄອບຄົວ, ສັງຄົມ ແລະ ປະເທດຊາດ ແລະ ໃນໂລກອີກດ້ວຍ.

3) ການຕ້ານປາກົດການຫຍໍ້ທໍ້ທາງສັງຄົມແມ່ນການຕ້ານການກໍ່ຄວາມວຸ້ນວາຍ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມກໍຄືການປະຕິບັດຕໍ່ຂໍ້ຫ້າມ ເຊັ່ນ:

- ຫ້າມການພະນັນທຸກປະເພດບໍ່ວ່າຈະຢູ່ໃນຮູບການໃດ.
- ຫ້າມຜະລິດ, ຄ້າຂາຍ, ເຜີຍແຜ່ນຳໃຊ້ຢາເສບຕິດທຸກຊະນິດ, ຜູ້ທີ່ຕິດຢາເສບຕິດຕ້ອງໄດ້ຮັບການບຳບັດ.
- ຫ້າມຍົວະຍົງ, ຫຼອກລວງເອົາເດັກນ້ອຍ, ຊາວໜຸ່ມ, ແມ່ຍິງ ໄປຂາຍປະເວນີ, ສູບຢາ, ດື່ມເຫຼົ້າ ແລະ ສານກະຕຸ້ນຕ່າງໆເຂົ້າສູ່ຮ່າງກາຍ. ຖ້າຫາກກະທຳສິ່ງດັ່ງກ່າວຈະຖືກລົງໂທດຕາມກົດໝາຍ.

4) ການປ້ອງກັນບໍ່ໃຫ້ເກີດມີປາກົດການຫຍໍ້ທໍ້ທາງສັງຄົມແມ່ນການສຶກສາອົບຮົມແນວຄິດນັກຮຽນໃຫ້ມີຄວາມຮັກຊາດ, ຮັກປະຊາຊົນບັນດາເຜົ່າ ແລະ ທຳມາຫາກິນດ້ວຍຄວາມຊອບທຳຖືກຕ້ອງຕາມກົດໝາຍ.

**ຂ. ສົນທະນາເປັນກຸ່ມກ່ຽວກັບສາເຫດຂອງຜູ້ທີ່ຕົກຢູ່ໃນປາກົດການຫຍໍ້ທໍ້ທາງສັງຄົມ ແລະ ວິທີປ້ອງກັນ (15 ນາທີ)**

- ຄູໃຫ້ນັກຮຽນອ່ານເຫດການ 1 ແລະ 2 ໃນປຶ້ມແບບຮຽນ ໜ້າທີ 64-65 ຫຼັງຈາກນັ້ນໃຫ້ນັກຮຽນຕອບຄຳຖາມດັ່ງນີ້:
  1) ສາເຫດຕົ້ນຕໍທີ່ພາໃຫ້ເກີດປາກົດການຫຍໍ້ທໍ້ທາງສັງຄົມມີຫຍັງແດ່?
  2) ນັກຮຽນມີວິທີປ້ອງກັນແນວໃດເພື່ອບໍ່ໃຫ້ຕົກຢູ່ໃນປາກົດການຫຍໍ້ທໍ້ທາງສັງຄົມ?
- ນັກຮຽນຕອບຄຳຖາມຕາມເຫດການ.
- ຄູໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນສະເໜີ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຄືນຄຳຕອບຂອງນັກຮຽນແຕ່ລະກຸ່ມ.

**ຄຳຕອບ**

1) ສາເຫດຕົ້ນຕໍທີ່ພາໃຫ້ເກີດປາກົດການຫຍໍ້ທໍ້ທາງສັງຄົມມີຄື: ມັກຫຼິ້ນ, ມັກທ່ຽວ ແລະ ເປັນຄົນຂີ້ຄ້ານ, ເປັນຄົນມັກຊອກຮູ້ຊອກເຫັນສິ່ງທີ່ແປກ, ຍ້ອນມີໝູ່ບໍ່ດີຊວນໄປຫຼິ້ນນຳ, ມີຜູ້ຍົວະຍົງ, ຄວາມຮູ້ເທົ່າບໍ່ເຖິງການ ແລະ ຢາກຮູ້ຢາກລອງ.

2) (ນັກຮຽນຕອບຕາມຄວາມຄິດເຫັນກ່ຽວກັບວິທີປ້ອງກັນເພື່ອບໍ່ໃຫ້ຕົກຢູ່ໃນປະກົດການຫຍໍ້ທໍ້ທາງສັງຄົມ)

**3. ສະຫຼຸບ (10 ນາທີ)**

- ຄູ ແລະ ນັກຮຽນສະຫຼຸບກ່ຽວກັບເນື້ອໃນບົດຮຽນທີ່ຮຽນທັງໝົດໃນ 1 ຊົ່ວໂມງຄື:
  1) ປາກົດການຫຍໍ້ທໍ້ທາງສັງຄົມ...
  2) ຜົນຮ້າຍຂອງປາກົດການຫຍໍ້ທໍ້ທາງສັງຄົມ...
  3) ການຕ້ານປາກົດການຫຍໍ້ທໍ້ທາງສັງຄົມ...
  4) ການປ້ອງກັນຕໍ່ປາກົດການຫຍໍ້ທໍ້ທາງສັງຄົມ...

ຄູເວົ້າສູ່ນັກຮຽນຟັງກ່ຽວກັບວັນສາກົນແຫ່ງການລົບລ້າງຄວາມທຸກຍາກ ຊຶ່ງສ້າງຕັ້ງຂຶ້ນໃນວັນທີ 17 ຕຸລາ ປີ 1987 ໂດຍອົງການສະຫະປະຊາຊາດ. ຈຸດປະສົງຂອງວັນດັ່ງກ່າວແມ່ນເພື່ອແກ້ໄຂບັນຫາຄວາມທຸກຍາກໃນໂລກ ໂດຍມີເປົ້າໝາຍເພື່ອການພັດທະນາແບບຍືນຍົງ ແລະ ເພື່ອຢຸດຕິຄວາມທຸກຍາກໃນທຸກຮູບແບບແນໃສ່ໃຫ້ທຸກຄົນໄດ້ຮັບການຄຸ້ມຄອງທາງສັງຄົມ ແລະ ເຂົ້າເຖິງການບໍລິການຂັ້ນພື້ນຖານ, ການເຄົາລົບຕໍ່ສິດທິມະນຸດ.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນນັກຮຽນຈາກການຕອບຄຳຖາມຂ້າງລຸ່ມນີ້:

- ໃຫ້ນັກຮຽນໝາຍ ✓ ໃສ່ຕໍ່ໜ້າຄຳຕອບທີ່ເຫັນວ່າຖືກຕ້ອງ

1. ຂໍ້ໃດຕໍ່ໄປນີ້ແມ່ນປາກົດການຫຍໍ້ທໍ້ທາງສັງຄົມ?
   ກ. ມີສິ່ງອຳນວຍຄວາມສະດວກ
   ຂ. ມີໂອກາດທາງການສຶກສາ
   ຄ. ມີປັດໄຈ 4
   ✓ ງ. ຂາດຄວາມອົດທົນ
2. ຂໍ້ຄວາມຢູ່ຂ້າງລຸ່ມນີ້ນອນໃນຫົວຂໍ້ບົດຮຽນໃດ?

   ເປັນໄພຕໍ່ຄວາມໝັ້ນຄົງ ແລະ ການພັດທະນາປະເທດຊາດ, ມີຜົນກະທົບຕໍ່ສຸຂະພາບ, ຈິດໃຈຂອງຕົນເອງ, ຄອບຄົວ, ສັງຄົມ ແລະ ປະເທດຊາດ ແລະ ໃນໂລກອີກດ້ວຍ.

   ✓ ກ. ຜົນກະທົບຂອງປາກົດການຫຍໍ້ທໍ້ທາງສັງຄົມ
   ຂ. ການປ້ອງກັນຕໍ່ປາກົດການຫຍໍ້ທໍ້ທາງສັງຄົມ

ຄ. ການຕ້ານປາກົດການຫຍໍ້ທໍ້ທາງສັງຄົມ

ງ. ຜົນຮ້າຍຂອງປາກົດການຫຍໍ້ທໍ້ທາງສັງຄົມ

3. ຂໍ້ໃດຕໍ່ໄປນີ້ບໍ່ແມ່ນການຕ້ານປາກົດການຫຍໍ້ທໍ້ທາງສັງຄົມ?

✓ ກ. ເຜີຍແຜ່ຂໍ້ມູນໃຫ້ໃຫ້ທຸກຄົນເຂົ້າໃຈເຖິງຜົນດີຂອງປາກົດການຫຍໍ້ທໍ້

ຂ. ເຜີຍແຜ່ຂໍ້ມູນໃຫ້ໃຫ້ທຸກຄົນເຂົ້າໃຈເຖິງຜົນຮ້າຍຂອງປາກົດການຫຍໍ້ທໍ້

ຄ. ເຜີຍແຜ່ຂໍ້ມູນໃຫ້ໃຫ້ທຸກຄົນເຂົ້າໃຈເຖິງຄວາມສໍາຄັນຂອງປາກົດການຫຍໍ້ທໍ້

ງ. ເຜີຍແຜ່ຂໍ້ມູນໃຫ້ໃຫ້ທຸກຄົນເຂົ້າໃຈເຖິງຜົນປະໂຫຍດຂອງປາກົດການຫຍໍ້ທໍ້

4. ຊາວໜຸ່ມຄວນເຮັດແນວໃດແດ່ ເພື່ອສະແດງເຖິງການປະກອບສ່ວນໃນການປ້ອງກັນປາກົດການຫຍໍ້ທໍ້ທາງສັງຄົມ?

ກ. ມີນໍ້າໃຈຮັກຊາດ, ຮັກຄວາມຍຸຕິທໍາ ແລະ ບໍ່ປະຕິບັດຕາມລະບຽບກົດໝາຍ

✓ ຂ. ມີນໍ້າໃຈຮັກຊາດ, ຮັກຄວາມຍຸຕິທໍາ ແລະ ປະຕິບັດຕາມລະບຽບກົດໝາຍ

ຄ. ມີນໍ້າໃຈຮັກຊາດ, ບໍ່ຮັກຄວາມຍຸຕິທໍາ ແລະ ປະຕິບັດຕາມລະບຽບກົດໝາຍ

ງ. ບໍ່ມີນໍ້າໃຈຮັກຊາດ, ຮັກຄວາມຍຸຕິທໍາ ແລະ ປະຕິບັດຕາມລະບຽບກົດໝາຍ

5. ວັນສາກົນແຫ່ງການລົບລ້າງຄວາມທຸກຍາກ ຊຶ່ງສ້າງຕັ້ງຂຶ້ນໃນວັນທີ ເດືອນ ປີ ໃດ?

ກ. ວັນທີ 16 ຕຸລາ ປີ 1987

✓ ຂ. ວັນທີ 17 ຕຸລາ ປີ 1987

ຄ. ວັນທີ 18 ຕຸລາ ປີ 1987

ງ. ວັນທີ 19 ຕຸລາ ປີ 1987

# ບົດທີ 15 ການປ້ອງກັນບໍ່ໃຫ້ເກີດອຸບັດຕິເຫດ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 2 ການປ້ອງກັນອຸບັດຕິເຫດຈາກທາດເບື່ອ, ເຄມີ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມອັນຕະລາຍຂອງອຸບັດຕິເຫດທີ່ເກີດຈາກວັດຖຸລະເບີດ, ທາດເບື່ອເຄມີ, ໄຟໄໝ້ ແລະ ການມີຄວາມຮັບຜິດຊອບໃນການປ້ອງກັນອຸບັດຕິເຫດຕ່າງໆ ທີ່ອາດຈະເກີດຂຶ້ນຢູ່ໃນຄອບຄົວ, ໂຮງຮຽນ ແລະ ຊຸມຊົນ.
- ເຫັນໄດ້ເຖິງຄວາມອັນຕະລາຍຂອງການເກີດອຸບັດຕິເຫດຕ່າງໆ ແລະ ຕັ້ງໜ້າປະຕິບັດຂໍ້ກຳນົດກົດໝາຍທີ່ລັດວາງອອກ.
- ບອກວິທີປ້ອງກັນອຸບັດຕິເຫດທີ່ເກີດຈາກວັດຖຸລະເບີດ, ທາດເບື່ອເຄມີ ແລະ ໄຟໄໝ້.

## II. ເນື້ອໃນ

**ຄວາມອັນຕະລາຍຂອງອຸບັດຕິເຫດທີ່ເກີດຈາກວັດຖຸລະເບີດ, ທາດເບື່ອເຄມີ ແລະ ໄຟໄໝ້**

ອັນຕະລາຍຂອງອຸບັດຕິເຫດເກີດຈາກວັດຖຸລະເບີດ ເຮັດໃຫ້ບາດເຈັບ, ເສຍອົງຄະ, ເສຍອະນາຄົດ ແລະ ເສຍຊີວິດ.

ອັນຕະລາຍຂອງອຸບັດຕິເຫດເກີດຈາກທາດເບື່ອເຄມີເຮັດໃຫ້ ເສຍຊີວິດ, ພິການ, ເປ້ຍລ່ອຍ... ຊຶ່ງເປັນພາລະໃຫ້ຄອບຄົວ, ສັງຄົມ ແລະ ປະເທດຊາດ.

ອັນຕະລາຍຂອງອຸບັດຕິເຫດເກີດຈາກໄຟໄໝ້ ແມ່ນທຳລາຍທຳມະຊາດ, ອາກາດເປັນພິດ, ຊັບສິນເສຍຫາຍ...

**ການປ້ອງກັນອຸບັດຕິເຫດທີ່ເກີດຈາກວັດຖຸລະເບີດ, ທາດເບື່ອເຄມີ ແລະ ໄຟໄໝ້**

ການປ້ອງກັນອຸບັດຕິເຫດຈາກວັດຖຸລະເບີດ: ເມື່ອພົບເຫັນລະເບີດບໍ່ຄວນຈັບບາຍ, ບໍ່ທັບມ້າງ ແລະ ບໍ່ເຂົ້າໃກ້ເຂດທີ່ມີເຄື່ອງໝາຍອັນຕະລາຍ.

ການປ້ອງກັນອຸບັດຕິເຫດຈາກທາດເບື່ອເຄມີ: ສຶກສາ ແລະ ຕ້ອງຮຽນຮູ້ທາງດ້ານທາດເບື່ອເຄມີ ແລະ ຮູ້ນຳໃຊ້ໃຫ້ເປັນປະໂຫຍດ.

ການປ້ອງກັນອຸບັດຕິເຫດຈາກໄຟໄໝ້: ເລືອກໃຊ້ເຊື້ອໄຟໃຫ້ເໝາະສົມ, ບໍ່ໃຫ້ເກີດ

ມົນລະ ພິດຫຼາຍ, ຕິດຕັ້ງໄຟຟ້າໃຫ້ຖືກຕ້ອງຕາມຫຼັກການ ແລະ ມີຄວາມຮັບຜິດຊອບ...

**ຄວາມຮັບຜິດຊອບໃນການປ້ອງກັນອຸບັດຕິເຫດຕ່າງໆ ທີ່ອາດຈະເກີດຂຶ້ນຢູ່ໃນຄອບຄົວ, ໂຮງຮຽນ ແລະ ຊຸມຊົນ.**

ການມີຄວາມຮັບຜິດຊອບໃນການປ້ອງກັນອຸບັດຕິເຫດຕ່າງໆ ທີ່ອາດຈະເກີດຂຶ້ນຢູ່ໃນຄອບຄົວ, ໂຮງຮຽນ ແລະ ຊຸມຊົນ ແມ່ນທຸກຄົນຕ້ອງເປັນເຈົ້າການ, ມີສະຕິລະມັດລະວັງ. ຖ້າພົບເຫັນສິ່ງທີ່ອາດຈະກໍ່ໃຫ້ເກີດອຸບັດຕິເຫດທີ່ມີຄວາມອັນຕະລາຍ ແມ່ນໃຫ້ແຈ້ງຕໍ່ພໍ່ແມ່, ຄູ ຫຼື ອຳນາດການປົກຄອງ ເພື່ອຊ່ວຍແກ້ໄຂ ຫຼື ລະງັບເຫດການບໍ່ໃຫ້ເກີດອັນຕະລາຍ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນວິຊາສຶກສາພົນລະເມືອງ ແລະ ຄູ່ມືຄູແຊກຊ້ອນສຶກສາພົນລະເມືອງໂລກ
2. ຮູບພາບຕ່າງໆ ທີ່ກ່ຽວຂ້ອງກັບບົດຮຽນ (ຖ້າມີ)

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທວນຄືນຄວາມຮູ້ພື້ນຖານ (5 ນາທີ)**

- ຄູໃຫ້ນັກຮຽນສັງເກດຮູບພາບໃນປຶ້ມແບບຮຽນ ໜ້າທີ 72-73 ແລະ ຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງລຸ່ມນີ້:
  1) ນັກຮຽນເຫັນຫຍັງແດ່ໃນຮູບພາບ?
  2) ຮູບພາບດັ່ງກ່າວເກີດຈາກຫຍັງ?
- ນັກຮຽນຕອບຕາມຄວາມເຂົ້າໃຈ.
- ຄູ ແລະ ນັກຮຽນສະຫຼຸບຄຳຕອບຮ່ວມກັນ.

**2. ສະເໜີບົດຮຽນໃໝ່**

**ກ. ຄົ້ນຄວ້າເປັນກຸ່ມ (35 ນາທີ)**

- ຄູແບ່ງນັກຮຽນຕາມຄວາມເໝາະສົມ ແລ້ວຄູຢາຍຄຳຖາມໃຫ້ແຕ່ລະກຸ່ມ.
- ຄູໃຫ້ນັກຮຽນອ່ານເນື້ອໃນບົດຮຽນຂໍ້ທີ 1, 2 ແລະ 3 ແລ້ວຕອບຄຳຖາມລຸ່ມນີ້:
  1) ວັດຖຸລະເບີດ, ທາດເບື່ອເຄມີ ແລະ ໄຟໄໝ້ ແມ່ນຫຍັງ?
  2) ອັນຕະລາຍທີ່ເກີດຈາກວັດຖຸລະເບີດ, ທາດເບື່ອເຄມີ ແລະ ໄຟໄໝ້ ມີຫຍັງແດ່?
  3) ພວກເຮົາຄວນປ້ອງກັນອຸບັດຕິເຫດທີ່ເກີດຈາກວັດຖຸລະເບີດ, ທາດເບື່ອເຄມີ ແລະ ໄຟໄໝ້ ໄດ້ແນວໃດ?

4) ນັກຮຽນຄວນມີຄວາມຮັບຜິດຊອບແນວໃດໃນການປ້ອງກັນອຸບັດຕິເຫດທີ່ອາດຈະເກີດຂຶ້ນຢູ່ໃນຄອບຄົວ, ໂຮງຮຽນ ແລະ ຊຸມຊົນ?

- ນັກຮຽນຄົ້ນຄວ້າຕອບຄຳຖາມ.
- ຕາງໜ້າກຸ່ມຂຶ້ນສະເໜີ, ກຸ່ມອື່ນປະກອບຄວາມເຫັນເພີ່ມເຕີມ.
- ຄູ ແລະ ນັກຮຽນສະຫຼຸບຄຳຕອບຮ່ວມກັນ.

**ຄຳຕອບ**

1) ວັດຖຸລະເບີດແມ່ນສິ່ງເສດເຫຼືອຈາກສົງຄາມ ຊຶ່ງປະກອບມີຫຼາຍຢ່າງເຊັ່ນ: ໝາກແຕກ, ໝາກໂບມ, ລູກປືນ ແລະ ວັດຖຸອື່ນໆ.
   - ເຄມີ ແມ່ນທາດດ່ຽວ, ທາດປະສົມ, ທາດສົມປົນ ທີ່ເກີດຂຶ້ນເອງຕາມທຳມະຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງຄົງຕົວໃນພາວະແຂງ, ແຫຼວ ຫຼື ທາດອາຍ.
   - ທາດເບື່ອເຄມີ (ເຄມີເປັນພິດ) ແມ່ນເຄມີໃດໜຶ່ງ ຊຶ່ງປະຕິກິລິຍາເຄມີຂອງມັນ ມັກຈະເກີດຜົນກະທົບຕໍ່ຂະບວນການຊີວິດ, ເປັນເຫດໃຫ້ເສຍຊີວິດ, ບາດເຈັບ, ອຳມະພາດຊົ່ວຄາວ ຫຼື ຖາວອນ.
   - ໄຟໄໝ້ ແມ່ນເຫດການທີ່ເກີດຈາກໄຟທີ່ຂາດການຄວບຄຸມເຮັດໃຫ້ເກີດມີການແຜ່ລາມໄປຕາມບໍລິເວນທີ່ມີເຊື້ອໄຟ.
2) ອັນຕະລາຍທີ່ເກີດຈາກວັດຖຸລະເບີດ, ທາດເບື່ອເຄມີ ແລະ ໄຟໄໝ້ມີຄື:
   - ວັດຖຸລະເບີດມີ: ບາດເຈັບ, ເສຍອົງຄະ, ເສຍອະນາຄົດ ແລະ ເສຍຊີວິດ.
   - ທາດເບື່ອເຄມີ: ເສຍຊີວິດ, ພິການ, ເປ້ຍລ່ອຍ... ຊຶ່ງເປັນພາລະໃຫ້ຄອບຄົວ, ສັງຄົມ ແລະ ປະເທດຊາດ.
   - ໄຟໄໝ້: ທຳລາຍທຳມະຊາດ, ອາກາດເປັນພິດ, ຊັບສິນເສຍຫາຍ...
3) ການປ້ອງກັນອຸບັດຕິເຫດເກີດຈາກວັດຖຸລະເບີດ, ທາດເບື່ອເຄມີ ແລະ ໄຟໄໝ້ມີຄື:
   - ການສະກັດກັ້ນອຸບັດຕິເຫດເກີດຈາກວັດຖຸລະເບີດ: ເມື່ອພົບເຫັນລະເບີດຫ້າມບໍ່ໃຫ້ຈັບບາຍ, ບໍ່ຍິງກະຖຸນໃສ່, ບໍ່ທັບມ້າງ, ບໍ່ໂຍນຫຼິ້ນ ແລະ ບໍ່ເຂົ້າໃກ້ເດັດຂາດ.
   - ປ້ອງກັນອຸບັດຕິເຫດເກີດຈາກທາດເບື່ອເຄມີ: ສຶກສາໃຫ້ເຂົ້າໃຈກ່ຽວກັບທາດເຄມີແຕ່ລະຊະນິດ, ບໍ່ໃຊ້ເກີນຂະໜາດທີ່ກຳນົດໄວ້, ບໍ່ປຸງແຕ່ງອາຫານມີລົດຊາດດ້ວຍແປ້ງນົວຫຼາຍ, ບໍ່ກິນນ້ຳມັນສັດຫຼາຍ, ນຳໃຊ້ຢາປົວພະຍາດຕາມແພດແນະນຳ, ບໍ່ດື່ມຂອງມຶນເມົາ ແລະ ນ້ຳອັດລົມຫຼາຍ, ບໍ່ໃຊ້ຢາ ແລະ ເຄື່ອງບໍລິໂພກໝົດກຳນົດ,

ບໍ່ໃຊ້ສະບູຝຸ່ນສະຜົມ, ໃຊ້ຢາຂ້າແມງໄມ້ຕ້ອງລະມັດລະວັງບໍ່ໃຫ້ຖືກຕົນໂຕ, ບໍ່ຖິ້ມຊອງ ຫຼື ກ່ອງຢາປາບສັດຕູພືດລົງແມ່ນໍ້າ.

- ການປ້ອງກັນອຸບັດຕິເຫດເກີດຈາກໄຟໄໝ້: ເລືອກໃຊ້ເຊື້ອໄຟທີ່ເໝາະສົມ ແລະ ບໍ່ໃຫ້ເກີດມົນລະພິດ, ເວລາໃຊ້ເຄື່ອງຈັກຕ້ອງກວດກາເບິ່ງເລື້ອຍໆ, ມ້ຽນເຊື້ອໄຟໄວ້ບ່ອນທີ່ປອດໄພ, ຫ່າງໄກຄວາມຮ້ອນ ແລະ ໄຟ, ບໍ່ຖິ້ມສິ່ງທີ່ເປັນເຊື້ອໄຟໃສ່ກອງຂີ້ເຫຍື້ອ, ຕິດຕັ້ງສາຍໄຟຟ້າໃຫ້ຖືກຕ້ອງ, ບໍ່ສຽບປັກສຽບໃສ່ຫຼາຍອັນເກີນລະດັບຂອງມັນ ແລະ ການໃຊ້ໄຟຟ້າຄວນລະມັດລະວັງເປັນພິເສດ ເພື່ອບໍ່ໃຫ້ເກີດອັກຄີໄພ.

4) ການມີຄວາມຮັບຜິດຊອບສະກັດກັ້ນອຸບັດຕິເຫດທີ່ເກີດຈາກວັດຖຸລະເບີດ, ທາດເບື່ອເຄມີ ແລະ ໄຟໄໝ້ ທີ່ອາດຈະເກີດຂຶ້ນຢູ່ໃນຄອບຄົວ, ໂຮງຮຽນ ແລະ ຊຸມຊົນ ແມ່ນທຸກຄົນຕ້ອງເປັນເຈົ້າການ, ມີສະຕິລະມັດລະວັງ. ຖ້າພົບເຫັນສິ່ງທີ່ອາດຈະກໍ່ໃຫ້ເກີດອຸບັດຕິເຫດທີ່ມີຄວາມອັນຕະລາຍ ແມ່ນໃຫ້ແຈ້ງຕໍ່ພໍ່ແມ່, ຄູ ຫຼື ອໍານາດການປົກຄອງ ເພື່ອຊ່ວຍແກ້ໄຂ ຫຼື ລະງັບເຫດການບໍ່ໃຫ້ເກີດອັນຕະລາຍ.

**3. ສະຫຼຸບ (10 ນາທີ)**

- ຄູສະຫຼຸບເນື້ອໃນບົດຮຽນ ກ່ຽວກັບອຸບັດຕິເຫດທີ່ເກີດຈາກອາວຸດ, ວັດຖຸລະເບີດ, ທາດເບື່ອເຄມີ, ໄຟໄໝ້ ແລະ ການມີຄວາມຮັບຜິດຊອບໃນການປ້ອງກັນອຸບັດຕິເຫດຕ່າງໆ ທີ່ອາດຈະເກີດຂຶ້ນຢູ່ໃນຄອບຄົວ, ໂຮງຮຽນ ແລະ ຊຸມຊົນ.
- ຄູເນັ້ນຕື່ມວ່າ ອຸບັດຕິເຫດທີ່ເກີດຈາກອາວຸດ, ວັດຖຸລະເບີດ, ທາດເບື່ອເຄມີ ແລະ ໄຟໄໝ້ເປັນສິ່ງອັນຕະລາຍທີ່ສຸດຕໍ່ຊີວິດ, ຊັບສິນ, ເງິນຄໍາ... ສະນັ້ນ, ລັດຈຶ່ງວາງຂໍ້ກໍານົດກົດໝາຍ ເພື່ອປ້ອງກັນ ແລະ ສະກັດກັ້ນ. ທຸກຄົນຕ້ອງມີຄວາມຮັບຜິດຊອບໃນການເປັນເຈົ້າການ, ມີສະຕິລະມັດລະວັງ ແລະ ຮຽນຮູ້ວິທີການປ້ອງກັນອຸບັດຕິເຫດຕ່າງໆ ທີ່ອາດຈະເກີດຂຶ້ນຢູ່ໃນຄອບຄົວ, ໂຮງຮຽນ ແລະ ຊຸມຊົນ.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນນັກຮຽນຈາກ: ການຕອບຄຳຖາມປາລະໄນລຸ່ມນີ້:

- ໃຫ້ນັກຮຽນໝາຍ √ ໃສ່ຕໍ່ໜ້າຄຳຕອບທີ່ເຫັນວ່າຖືກຕ້ອງ

1. ການປ້ອງກັນອຸບັດຕິເຫດຈາກວັດຖຸລະເບີດຄວນເຮັດແນວໃດ?

    ກ. ເມື່ອພົບເຫັນລະເບີດຄວນເກັບມ້ຽນແລ້ວລາຍງານຕໍ່ພາກສ່ວນທີ່ກ່ຽວຂ້ອງ.

    ຂ. ເມື່ອພົບເຫັນລະເບີດຕ້ອງເອົາມາໃຫ້ອຳນາດການປົກຄອງບ້ານເພື່ອນຳໄປເກັບມ້ຽນໄວ້ບ່ອນທີ່ປອດໄພ.

    ✓ ຄ. ເມື່ອພົບເຫັນລະເບີດບໍ່ຄວນຈັບບາຍ, ບໍ່ທັບມ້າງ, ບໍ່ເຂົ້າໃກ້ເຂດທີ່ມີເຄື່ອງໝາຍອັນຕະລາຍ.

    ງ. ເຮັດຮົ້ວອ້ອມ ຫຼື ເຮັດເຄື່ອງໝາຍໃສ່ບ່ອນທີ່ມີລະເບີດ

2. ຂໍ້ໃດແມ່ນການປ້ອງກັນອຸບັດຕິເຫດຈາກທາດເບື່ອເຄມີ?

    ກ. ປຸງອາຫານດ້ວຍແປ້ງນົວຫຼາຍ

    ຂ. ດື່ມຂອງມຶນເມົາ ແລະ ນ້ຳອັດລົມຫຼາຍ

    ຄ. ຊື້ຢາປົວພະຍາດກິນເອງ, ໃຊ້ຢາຂ້າແມງໄມ້ຫຼາຍ

    ✓ ງ. ສຶກສາໃຫ້ເຂົ້າໃຈກ່ຽວກັບທາດເຄມີ, ບໍ່ໃຊ້ເກີນຂະໜາດ

3. ຂໍ້ໃດ ບໍ່ແມ່ນ ຄວາມຮັບຜິດຊອບໃນການປ້ອງກັນອຸບັດຕິເຫດຕ່າງໆ ທີ່ອາດຈະເກີດຂຶ້ນຢູ່ໃນຄອບຄົວ, ໂຮງຮຽນ ແລະ ຊຸມຊົນແນວໃດ?

    ກ. ບໍ່ເຂົ້າໃກ້ບ່ອນທີ່ຈະເກີດຄວາມອັນຕະລາຍ

    ຂ. ບໍ່ເຂົ້າໃກ້ບ່ອນທີ່ມີປ້າຍເຕືອນອັນຕະລາຍ

    ✓ ຄ. ບໍ່ເປັນເຈົ້າການໃນການປ້ອງກັນອຸບັດຕິເຫດຕ່າງໆ

    ງ. ບໍ່ເກັບເປັນຄວາມລັບເມື່ອພົບເຫັນສິ່ງທີ່ຈະເກີດຄວາມອັນຕະລາຍ

**ຂໍ້ມູນເພີ່ມເຕີມ**

- ສາເຫດທີ່ພາໃຫ້ເກີດໄຟໄໝ້

  https://www.pdsthailand.com/message/view.php?id=74

## 4. ຊັ້ນມັດທະຍົມສຶກສາ ປີທີ 4

ການແຊກຊ້ອນການສຶກສາພົນລະເມືອງໂລກເຂົ້າໃນວິຊາສຶກສາພົນລະເມືອງ ຊັ້ນມັດທະຍົມສຶກສາ ປີທີ 4 ສາມາດແຊກຊ້ອນໄດ້ 4 ບົດ ຄື: ບົດທີ 3, 4, 9, 11.

- ບົດທີ 3 ຊົ່ວໂມງທີ 1 ຫົວຂໍ້ທີ 2. ທາດແທ້ຂອງປະຊາທິປະໄຕນິຕິແນວໃດ ໃຫ້ຄູນຳໃຊ້ປື້ມຄູ່ມືຄູ ເຫຼັ້ມນີ້ສອນ.
- ບົດທີ 4 ຊົ່ວໂມງທີ 1 ຫົວຂໍ້ທີ 2. ການປົກປັກຮັກສາສັນຕິພາບ ໃຫ້ຄູນຳໃຊ້ປື້ມຄູ່ມືຄູ ເຫຼັ້ມນີ້ສອນ.
- ບົດທີ 9 ຊົ່ວໂມງທີ 1 ຫົວຂໍ້ທີ 2. ແບບແຜນວິທີເຮັດວຽກມີປະສິດທິພາບ ໃຫ້ຄູນຳໃຊ້ປື້ມຄູ່ມືຄູເຫຼັ້ມນີ້ສອນ, ສຳລັບຊົ່ວໂມງທີ 2 ໃຫ້ຄູນຳໃຊ້ປື້ມຄູ່ມື ວິຊາສຶກສາພົນລະເມືອງ.
- ບົດທີ 11 ຊົ່ວໂມງທີ 1 ຫົວຂໍ້ທີ 3. ການພັດທະນາຊັບພະຍາກອນມະນຸດ ໃຫ້ຄູນຳໃຊ້ປື້ມຄູ່ມືຄູ ເຫຼັ້ມນີ້ສອນ ສຳລັບຊົ່ວໂມງທີ 2 ແລະ 3 ໃຫ້ຄູນຳໃຊ້ປື້ມຄູ່ມື ວິຊາສຶກສາພົນລະເມືອງ.

# ບົດທີ 3 ການມີປະຊາທິປະໄຕ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 2 ທາດແທ້ຂອງປະຊາທິປະໄຕມີຄືແນວໃດ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ບອກຄວາມໝາຍຂອງການມີປະຊາທິປະໄຕ, ຂະບວນປະຊາທິປະໄຕ, ຄວາມໂປ່ງໃສ.
- ປຽບທຽບການມີປະຊາທິປະໄຕ ແລະ ບໍ່ມີປະຊາທິປະໄຕ
- ເຄົາລົບສິດປະຊາທິປະໄຕຂອງຄົນອື່ນ ແລະ ມີຄວາມໂປ່ງໃສໃນສັງຄົມ.
- ຝຶກຝົນຕົນເອງໃຫ້ກາຍເປັນຄົນມີປະຊາທິປະໄຕ ເພື່ອປະກອບສ່ວນເຂົ້າໃນວຽກລວມຂອງໂຮງຮຽນ, ຫ້ອງຮຽນ, ສັງຄົມ ແລະ ຊຸມຊົນ, ສ້າງຕົນເອງໃຫ້ເປັນທີ່ໄວ້ວາງ ໃຈຂອງຄອບຄົວ, ໝູ່ເພື່ອນ ກໍຄືການຈັດຕັ້ງ.

## II. ເນື້ອໃນ

ປະຊາທິປະໄຕ ແມ່ນສິດອຳນາດຂຶ້ນຢູ່ກັບປະຊາຊົນ, ປະຊາຊົນມີສິດເຮັດການຜະລິດ, ແກ້ໄຂຊີວິດການເປັນຢູ່ຂອງຕົນເອງ, ມີສິດສຶກສາຮ່ຳຮຽນ, ມີສິດປະກອບຄວາມຄິດເຫັນ, ມີສິດປະກອບສ່ວນເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມຕາມຄວາມສາມາດ ແລະ ປະຕິບັດຕາມກົດໝາຍກຳນົດໄວ້. ປະຊາທິປະໄຕ ແມ່ນມີການຈັດຕັ້ງ, ມີລະບຽບວິໄນພາຍໃຕ້ກົດໝາຍ ແລະ ມີຄວາມເປັນເອກະພາບກັນທາງດ້ານຄວາມຄິດ, ການກະທຳ ແລະ ອື່ນໆ.

ທຸກຄົນມີສິດເສລີພາບໃນການຄິດ ແລະ ສະແດງຄວາມຄິດເຫັນ ລວມທັງເສລີພາບໃນການຍຶດຖືຄວາມຄິດເຫັນຂອງຕົນ ໂດຍປາສະຈາກຄວາມຢ້ານກົວ, ການແຊກແຊງ ແລະ ມີອິດສະຫຼະພາບໃນການຊອກຫາ, ໄດ້ຮັບ ແລະ ເຜີຍແຜ່ຂໍ້ມູນຂ່າວສານບໍ່ວ່າທາງປາກເປົ່າ, ເປັນລາຍລັກອັກສອນ ຫຼື ຜ່ານວິທີທາງອື່ນໃດໜຶ່ງທີ່ບຸກຄົນນັ້ນເລືອກ (ອາຊຽນ, ໃນໂອກາດກອງປະຊຸມສຸດຍອດອາຊຽນຄັ້ງທີ 21 ທີ່ພະນົມເປັນ).

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາ ສຶກສາພົນລະເມືອງ ຂັ້ນ ມ.4
2. ປຶ້ມລັດຖະທຳມະນູນແຫ່ງ ສປປ ລາວ ປີ 2003 (ສິດ ແລະ ພັນທະຂອງພົນລະເມືອງ)

3. ບົດເລື່ອງ ຫຼື ເຫດການໃດໜຶ່ງທີ່ກ່ຽວພັນກັບການມີປະຊາທິປະໄຕທີ່ຖືກຕ້ອງ ແລະ ຍົກເຫດການມີປະຊາທິປະໄຕທີ່ບໍ່ຖືກຕ້ອງ
4. ຮູບພາບທີ 1 ແລະ 2 ໃນປຶ້ມແບບຮຽນ

## IV. ກິດຈະກຳການຮຽນການສອນ

**1. ທົບທວນບົດທີ່ຮຽນຜ່ານມາ**

**ຫຼິ້ນເກມ (5 ນາທີ)**

- ຄູໃຫ້ນັກຮຽນຈັບຄູ່ກັບໝູ່ທີ່ເຫັນວ່າມີ 1 ຢ່າງທີ່ຄືກັບຕົນເອງ, ຜູ້ທີ່ຈັບຄູ່ບໍ່ໄດ້ ຫຼື ຈັບຄູ່ຊ້າ ຈະຖືກເລືອກໃຫ້ເວົ້າຄືນສິ່ງທີ່ຕົນໄດ້ຮຽນໃນຊົ່ວໂມງຜ່ານມາ.
- ຄູ ແລະ ນັກຮຽນທົບທວນຄືນບົດຮຽນທີ່ຜ່ານມາຮ່ວມກັນ.

**2. ສະເໜີບົດຮຽນໃໝ່**

**ກ. ສັງເກດຮູບພາບ (5 ນາທີ)**

- ຄູໃຫ້ນັກຮຽນສັງເກດຮູບພາບທີ່ຢູ່ໃນປຶ້ມແບບຮຽນ ໜ້າທີ 10, 11 ແລະ ລຸ່ມນີ້:




- ຄູຕັ້ງຄຳຖາມດັ່ງນີ້:
  1) ນີ້ແມ່ນຮູບຫຍັງ?
  2) ນັກຮຽນມີຄວາມຮູ້ສຶກແນວໃດເມື່ອເຫັນຮູບນີ້?
  3) ຮູບພາບເຫຼົ່ານີ້ສະແດງເຖິງຫຍັງ?

- ຄູໃຫ້ນັກຮຽນ 3-4 ຄົນອະທິບາຍກ່ຽວກັບຮູບພາບ.
- ຄູ ແລະ ນັກຮຽນສະຫຼຸບກ່ຽວກັບຮູບພາບໂດຍຫຍໍ້ ດັ່ງນີ້:

**ຄໍາຕອບ**

1) ປະຊາມະຕິໃນກອງປະຊຸມສະພາ, ຄູ ແລະ ນັກຮຽນຮ່ວມກັນອອກຄໍາຄິດເຫັນ ແລະ ຄົນທີ່ບໍ່ສາມາດສະແດງຄວາມຄິດເຫັນຍ້ອນຖືກຂົ່ມຂູ່.
2) ທຸກຄົນມີສິດສະແດງຄວາມຄິດເຫັນຢ່າງເປັນປະຊາທິປະໄຕ ໂດຍປາສະຈາກຄວາມຢ້ານກົວ, ການແຊກແຊງ ແລະ ມີອິດສະຫຼະພາບໃນທຸກດ້ານເທົ່າທຽມກັນໃນທຸກດ້ານ.
3) ສະແດງເຖິງການມີ ແລະ ບໍ່ມີປະຊາທິປະໄຕ.

**ຂ. ຄົ້ນຄວ້າເປັນກຸ່ມ (30 ນາທີ)**

- ຄູແບ່ງນັກຮຽນເປັນ 3 ກຸ່ມ. ຈາກນັ້ນ, ໃຫ້ນັກຮຽນອ່ານເນື້ອໃນບົດຮຽນ ໃນປຶ້ມແບບຮຽນຂໍ້ທີ 1 ແລະ 2 ໜ້າທີ 10-11 ແລະ ເລື່ອງ ຫ້ອງ ມ.4 ດີເດັ່ນຮອບດ້ານ ແລ້ວຕອບຄໍາຖາມລຸ່ມນີ້:

ກຸ່ມທີ 1:

1) ປະຊາທິປະໄຕໝາຍເຖິງຫຍັງ?
2) ສິດປະຊາທິປະໄຕສະແດງອອກແນວໃດແດ່?
3) ປະຊາທິປະໄຕທີ່ບໍ່ຖືກຕ້ອງແມ່ນແນວໃດ?
4) ຜົນຂອງການໃຊ້ປະຊາທິປະໄຕທີ່ບໍ່ຖືກຕ້ອງຈະເປັນແນວໃດ?
5) ທາດແທ້ຂອງປະຊາທິປະໄຕແມ່ນຫຍັງ?

ກຸ່ມທີ 2:

1) ປະຊາທິປະໄຕເກີດຂຶ້ນໄດ້ແນວໃດ?
2) ການມີປະຊາທິປະໄຕເປັນສິ່ງທີ່ດີ ຫຼື ບໍ່ດີ? ເພາະເຫດໃດ?
3) ພາກພື້ນ ແລະ ສາກົນໃຫ້ຄວາມສໍາຄັນກ່ຽວກັບປະຊາທິປະໄຕແນວໃດ?
4) ຖ້າບໍ່ມີປະຊາທິປະໄຕສະພາບການຂອງປະເທດຊາດ, ພາກພື້ນ ແລະ ສາກົນຈະເປັນແນວໃດ? ຍົກຕົວຢ່າງພ້ອມ.

ກຸ່ມທີ 3:

1) ຄູປະຈໍາຫ້ອງ ມ.4 ໄດ້ມີການນໍາພາຫ້ອງຄືແນວໃດ?
2) ນັກຮຽນຫ້ອງ ມ.4 ໄດ້ປະກອບສ່ວນຫຍັງແດ່ໃສ່ແຜນການຂອງຫ້ອງ?

3) ນັກຮຽນຈະເຮັດຫຍັງແດ່ເພື່ອເຮັດໃຫ້ຫ້ອງຂອງຕົນກາຍເປັນຫ້ອງດີເດັ່ນຮອບດ້ານ?
4) ຈາກການຮຽນເລື່ອງນີ້ນັກຮຽນໄດ້ຮຽນຮູ້ຫຍັງແດ່?
5) ໃນເລື່ອງນີ້ມີເນື້ອໃນທີ່ເວົ້າເຖິງການມີປະຊາທິປະໄຕສະແດງອອກຢູ່ບ່ອນໃດ?

- ຄູໃຫ້ນັກຮຽນແຕ່ລະກຸ່ມອາສາສະໝັກຕອບ.
- ຄູ ແລະ ນັກຮຽນສະຫຼຸບຮ່ວມກັນດັ່ງນີ້:

**ຄຳຕອບ**

ກຸ່ມທີ 1:

1) ປະຊາທິປະໄຕ ໝາຍເຖິງອຳນາດຂອງປະຊາຊົນ, ປະຊາທິປະໄຕຍັງໝາຍເຖິງຮູບແບບຂອງການຈັດຕັ້ງຂອງລັດໃນດ້ານການເມືອງ ຫຼື ຂອງສັງຄົມໃດໜຶ່ງ ທີ່ຍອມຮັບວ່າປະຊາຊົນເປັນຜູ້ມີອຳນາດທີ່ແທ້ຈິງ.
2) ທຸກຄົນມີສິດເສລີພາບໃນການຄິດ ແລະ ສະແດງຄວາມຄິດເຫັນ ລວມທັງ ເສລີພາບໃນການຍຶດຖືຄວາມຄິດເຫັນ ໂດຍປາສະຈາກການແຊກແຊງ ແລະ ມີອິດສະຫຼະພາບໃນການຊອກຫາ, ໄດ້ຮັບ ແລະ ເຜີຍແຜ່ ຂໍ້ມູນຂ່າວສານບໍ່ວ່າທາງປາກເປົ່າ, ເປັນລາຍລັກອັກສອນ ຫຼື ຜ່ານວິທີທາງອື່ນໃດໜຶ່ງທີ່ບຸກຄົນນັ້ນເລືອກ.
3) ມີປະຊາທິປະໄຕ ບໍ່ໝາຍຄວາມວ່າຢາກເຮັດຫຍັງກໍເຮັດ, ຢາກເວົ້າຫຍັງກໍເວົ້າໄດ້. ການມີປະຊາທິປະໄຕຕ້ອງຢູ່ພາຍໃຕ້ລະບຽບກົດໝາຍ, ຮີດຄອງປະເພນີອັນດີງາມຂອງຊາດ, ມີການຈັດຕັ້ງເຄື່ອນໄຫວຕາມພາລະບົດບາດ ແລະ ສິດໜ້າທີ່ຂອງຕົນ.
4) ຈະມີຜົນສະທ້ອນໃຫ້ແກ່ຕົນເອງ, ຄອບຄົວ ແລະ ສັງຄົມເກີດຄວາມວຸ້ນວາຍສັບ ສົນນຳໄປສູ່ການໃຊ້ຄວາມຮຸນແຮງອັນບໍ່ເປັນທີ່ປາຖະໜາຂອງທຸກຄົນ.
5) ທາດແທ້ຂອງປະຊາທິປະໄຕເວລາໃດກໍມີການຈັດຕັ້ງ, ມີການນຳພາ, ມີລະບຽບວິໄນຢູ່ພາຍໃຕ້ຂໍ້ກຳນົດຂອງກົດໝາຍ.

ກຸ່ມທີ 2:

1) ປະຊາທິປະໄຕ ບໍ່ໄດ້ເກີດຂຶ້ນດ້ວຍຕົວຂອງມັນເອງ ແຕ່ແມ່ນຍ້ອນຜົນຂອງການຕໍ່ສູ້, ຜົນຂອງການຕັ້ງໃຈຮ່ຳຮຽນ ຝຶກຝົນຕົນເອງໃຫ້ມີຄວາມຮູ້, ຄວາມສາມາດ, ເປັນພົນລະເມືອງດີຂອງຊາດ ແລະ ປະກອບສ່ວນເຂົ້າໃນວຽກງານລວມໝູ່, ສັງຄົມກໍຄືປະເທດຊາດ.

2) ການມີປະຊາທິປະໄຕແມ່ນສິ່ງທີ່ດີ ແຕ່ຕ້ອງຢູ່ພາຍໃຕ້ກົດໝາຍຂອງບ້ານເມືອງ ກໍຄືຮີດ ຄອງປະເພນີອັນດີງາມຂອງຊາດ, ມີການຈັດຕັ້ງ, ມີການນໍາພາ, ເຄື່ອນໄຫວຕາມພາລະບົດບາດ, ຕາມສິດ ແລະ ພັນທະ ຈຶ່ງເຮັດໃຫ້ສັງຄົມມີຄວາມສະຫງົບສຸກ, ມີຄວາມຍຸຕິທໍາ, ການສ້າງສາພັດທະນາປະເທດຈຶ່ງບັນລຸຜົນສໍາເລັດສັງຄົມມີຄວາມໝັ້ນຄົງ.

3) ພາກພື້ນ ແລະ ສາກົນໃຫ້ຄວາມສໍາຄັນກ່ຽວກັບປະຊາທິປະໄຕດ້ວຍການກໍານົດເອົາວັນທີ 15 ກັນຍາ ຂອງທຸກໆ ປີເປັນວັນປະຊາທິປະໄຕໂລກ.

4) ຈະເຮັດໃຫ້ເກີດຄວາມບໍ່ສະເໝີພາບ, ເກີດໄພຂົ່ມຂູ່ໃນສັງຄົມໂລກ, ມີຄວາມວຸ້ນວາຍສັບສົນ, ບໍ່ມີຄວາມສາມັກຄີ, ເກີດມີການເອົາລັດເອົາປຽບກັນ, ປະຊາຊາດມີຄວາມແຕກແຍກຈົນກໍ່ໃຫ້ເກີດຄວາມຮຸນແຮງ. ຕົວຢ່າງ: ຖ້າມີປະເທດໃດໜຶ່ງເຂົ້າມາແຊກແຊງກິດຈະການພາຍໃນຂອງປະເທດອື່ນ ຈະເຮັດໃຫ້ປະເທດທີ່ຖືກແຊກແຊງບໍ່ມີປະຊາທິປະໄຕໃນການປະຄອງຕົນເອງ ເມື່ອເກີດມີສົງຄາມຕໍ່ສູ້ເພື່ອທວງເອົາປະຊາທິປະໄຕຄືນມາ ສົງຄາມດັ່ງກ່າວບໍ່ໄດ້ມີຜົນກະທົບພຽງແຕ່ສອງປະເທດ ແຕ່ຍັງສົ່ງຜົນກະທົບທັງທາງກົງ ແລະ ທາງອ້ອມຕໍ່ກັບຫຼາຍປະເທດຢູ່ໂລກເປັນຕົ້ນແມ່ນການສູນເສຍທັງຊີວິດ ແລະ ຊັບສິນ, ການຂາດແຄນສະບຽງອາຫານ, ຢາປົວພະຍາດ, ບັນຫາທາງສັງຄົມ, ເສດຖະກິດ ແລະ ອື່ນໆ.

ກຸ່ມທີ 3:

1) ເຕົ້າໂຮມນັກຮຽນຫ້ອງ ມ.4 ທັງໝົດຜ່ານແຜນການປະຈໍາປີຮຽນ.

2) ນັກຮຽນແຕ່ລະຄົນໄດ້ເປັນເຈົ້າການໃນການປະກອບຄໍາຄິດເຫັນເຂົ້າໃສ່ແຜນການຢ່າງຄົບຖ້ວນ ແລະ ມີການແບ່ງວຽກງານໃຫ້ແຕ່ລະຄົນຮັບຜິດຊອບ.

3) ນັກຮຽນທຸກຄົນຕ້ອງຕື່ນຕົວເປັນເຈົ້າການເຮັດໃຫ້ຫ້ອງຮຽນມີການຈັດຕັ້ງຄົບຊຸດ ແລະ ມີແຜນການເຄື່ອນໄຫວທີ່ດີ.

4) ສະແດງອອກຢູ່ບ່ອນວ່າ ນັກຮຽນແຕ່ລະຄົນໄດ້ເປັນເຈົ້າການໃນການປະກອບຄໍາຄິດເຫັນເຂົ້າໃສ່ແຜນການ.

**3. ສະຫຼຸບ (10 ນາທີ)**

- ຄູສະຫຼຸບເນື້ອໃນບົດຮຽນກ່ຽວກັບຄວາມໝາຍ ແລະ ທາດແທ້ຂອງປະຊາທິປະໄຕ.

ພ້ອມນັ້ນ ຄູອະທິບາຍຕື່ມວ່າ ທຸກຄົນຕ້ອງກ້າສະແດງຄວາມຄິດເຫັນ ໃຫ້ຖືກຕ້ອງກັບສະພາບຕົວຈິງ ແລະ ຮັບປະກັນລັກສະນະສ້າງສັນມ່ວນຊື່ນ ເພື່ອປະກອບສ່ວນເຂົ້າໃນວຽກ

ງານຂອງຫ້ອງຮຽນ, ໂຮງຮຽນ ກໍຄືສັງຄົມ, ຄອບຄົວ ແລະ ປະເທດຊາດໃຫ້ດີ ຫຼືກເວັ້ນການເວົ້າສຸດສີບໍ່ຈິງໃຈ, ຂົ່ມໝູ່ຍໍຕົນ ສິ່ງດັ່ງກ່າວນັ້ນຈະນໍາໄປສູ່ຄວາມແຕກແຍກ, ຄວາມບໍ່ເຂົ້າໃຈກັນ. ການມີປະຊາທິປະໄຕທີ່ດີເຮັດໃຫ້ທຸກຄົນມີສິດປະກອບຄວາມຄິດເຫັນ ແລະ ມີສິດປະກອບສ່ວນເຫື່ອແຮງ, ວັດຖຸຕ່າງໆ ເພື່ອພັດທະນາສັງຄົມ ແລະ ປະເທດຊາດ, ມີຄວາມເປັນເອກະພາບກັນ ເພື່ອເປັນກໍາລັງແຮງໃນການພັດທະນາ ແລະ ອື່ນໆ. ການມີປະຊາທິປະໄຕມີຄວາມສໍາຄັນໃນການດໍາລົງຊີວິດຄື: ໄດ້ພັດທະນາຕົນເອງ, ໄດ້ເຄື່ອນໄຫວວຽກງານໃນສັງຄົມ ແລະ ປະກອບສ່ວນພັດທະນາປະເທດຊາດ. ແຕ່ການມີປະຊາທິປະໄຕນັ້ນຕ້ອງຢູ່ພາຍໃຕ້ກົດໝາຍ, ສອດຄ່ອງກັບຮີດຄອງປະເພນີ, ວັດທະນະທໍາຂອງຊາດ ແລະ ທ້ອງຖິ່ນຂອງຕົນ.

- ຄູ ແລະ ນັກຮຽນສະຫຼຸບກ່ຽວກັບເນື້ອໃນບົດຮຽນທີ່ຮຽນທັງໝົດໃນ 1 ຊົ່ວໂມງ.

**ວຽກບ້ານ**

- ຄູໃຫ້ນັກຮຽນເຮັດບົດຝຶກຫັດທີ 1, 2, 3 ແລະ 4 ໃນປຶ້ມແບບຮຽນຢູ່ໃນຫ້ອງ ຫຼື ແນະນໍາໃຫ້ນັກຮຽນເຮັດບົດເຝິກຫັດຢູ່ບ້ານ ແລ້ວຂຽນຄໍາຕອບມາສົ່ງຄູໃນຊົ່ວໂມງຕໍ່ໄປ.

## IV. ການວັດ ແລະ ການປະເມີນຜົນ

ປະເມີນນັກຮຽນຈາກ:

ການສະແດງຄວາມຄິດເຫັນຂອງນັກຮຽນກ່ຽວກັບການມີປະຊາທິປະໄຕໃນຕາຕະລາງລຸ່ມນີ້:

| ລາຍການ | ແມ່ນ | ບໍ່ແມ່ນ |
|---|---|---|
| ປະຊາທິປະໄຕແມ່ນທຸກຄົນມີສິດເຂົ້າຮ່ວມປະກອບຄໍາຄິດເຫັນປຶກສາຫາລື ແລະ ມີຄວາມເປັນເອກະພາບກັນທາງດ້ານການຈັດຕັ້ງປະຕິບັດ | | |
| ປະຊາທິປະໄຕແມ່ນການສະແດງຄວາມຄິດເຫັນ ແລະ ການກະທໍາບົນພື້ນຖານລະບຽບກົດໝາຍທີ່ກໍານົດໄວ້ | | |
| ການມີປະຊາທິປະໄຕເປັນພື້ນຖານໃຫ້ແກ່ຄວາມເປັນເອກະພາບທາງດ້ານຄວາມຄິດ ແລະ ການກະທໍາ | | |
| ການມີປະຊາທິປະໄຕເປັນພື້ນຖານໃຫ້ແກ່ການມີອໍານາດຜູກຂາດ | | |
| ນັກຮຽນປະກອບຄໍາຄິດເຫັນໃສ່ແຜນການເຄື່ອນໄຫວຂອງໂຮງຮຽນ | | |
| ຄູ ຫຼື ນັກຮຽນສະແດງຄໍາຄິດເຫັນຕາມໃຈຂອງຕົນເອງ | | |
| ວັນທີ 15 ກັນຍາ ຂອງທຸກໆ ປີເປັນວັນປະຊາທິປະໄຕໂລກ | | |

| | | |
|---|---|---|
| ປະຊາທິປະໄຕແມ່ນການສົ່ງເສີມໃຫ້ພຽງກຸ່ມຄົນຈຳນວນໜຶ່ງປະກອບຄຳຄິດເຫັນ, ປຶກສາຫາລື ແລະ ເປັນຜູ້ກຳນົດການຈັດຕັ້ງປະຕິບັດ | | |
| ຖ້າບໍ່ມີປະຊາທິປະໄຕຈະເຮັດໃຫ້ມີຄວາມວຸ້ນວາຍສັບສົນ, ບໍ່ມີຄວາມສາມັກຄີ, ເກີດມີການເອົາລັດເອົາປຽບກັນ, ປະຊາຊາດມີຄວາມແຕກແຍກຈົນກໍໃຫ້ເກີດຄວາມຮຸນແຮງ. | | |
| ການມີປະຊາທິປະໄຕສ້າງໂອກາດໃຫ້ທຸກຄົນໄດ້ພັດທະນາຕົນເອງ ແລະ ປະກອບສ່ວນເຂົ້າໃນການພັດທະນາສັງຄົມ | | |
| ຖ້າບໍ່ມີປະຊາທິປະໄຕໃນພາກພື້ນ ແລະ ສາກົນຈະເຮັດໃຫ້ເກີດຄວາມບໍ່ສະເໝີພາບ, ເກີດໄພຂົ່ມຂູ່ໃນສັງຄົມໂລກ | | |
| ຖ້າບໍ່ມີປະຊາທິປະໄຕໃນພາກພື້ນ ແລະ ສາກົນຈະເຮັດໃຫ້ສັງຄົມໂລກມີຄວາມສະຫງົບສຸກ | | |
| ພວກເຮົາຕ້ອງມີການຊອກຮູ້ຮ່ຳຮຽນຢູ່ສະເໝີ | | |
| ເລືອກເຟັ້ນ ແລະ ສົ່ງເສີມວັດທະນະທຳທີ່ມີລັກສະນະກ້າວໜ້າ | | |

**ຄຳຕອບ**:

| ລາຍການ | ແມ່ນ | ບໍ່ແມ່ນ |
|---|---|---|
| ປະຊາທິປະໄຕແມ່ນທຸກຄົນມີສິດເຂົ້າຮ່ວມປະກອບຄຳຄິດເຫັນປຶກສາຫາລື ແລະ ມີຄວາມເປັນເອກະພາບກັນທາງດ້ານການຈັດຕັ້ງປະຕິບັດ. | ✓ | |
| ປະຊາທິປະໄຕແມ່ນການສະແດງຄວາມຄິດເຫັນ ແລະ ການກະທຳບົນພື້ນຖານລະບຽບກົດໝາຍທີ່ກຳນົດໄວ້ | ✓ | |
| ການມີປະຊາທິປະໄຕເປັນພື້ນຖານໃຫ້ແກ່ຄວາມເປັນເອກະພາບທາງດ້ານຄວາມຄິດ ແລະ ການກະທຳ | ✓ | |
| ການມີປະຊາທິປະໄຕເປັນພື້ນຖານໃຫ້ແກ່ການມີອຳນາດຜູກຂາດ | | ✓ |
| ນັກຮຽນປະກອບຄຳຄິດເຫັນໃສ່ແຜນການເຄື່ອນໄຫວຂອງໂຮງຮຽນ | ✓ | |
| ຄູ ຫຼື ນັກຮຽນສະແດງຄຳຄິດເຫັນຕາມໃຈຂອງຕົນເອງ | ✓ | |
| ວັນທີ 15 ກັນຍາ ຂອງທຸກໆ ປີເປັນວັນປະຊາທິປະໄຕໂລກ | ✓ | |

| | | |
|---|---|---|
| ປະຊາທິປະໄຕແມ່ນການສົ່ງເສີມໃຫ້ພຽງກຸ່ມຄົນຈຳນວນໜຶ່ງປະກອບຄຳຄິດເຫັນ, ປຶກສາຫາລື ແລະ ເປັນຜູ້ກຳນົດການຈັດຕັ້ງປະຕິບັດ | | ✓ |
| ຖ້າບໍ່ມີປະຊາທິປະໄຕຈະເຮັດໃຫ້ມີຄວາມວຸ້ນວາຍສັບສົນ, ບໍ່ມີຄວາມສາມັກຄີ, ເກີດມີການເອົາລັດເອົາປຽບກັນ, ປະຊາຊາດມີຄວາມແຕກແຍກຈົນກໍ່ໃຫ້ເກີດຄວາມຮຸນແຮງ | ✓ | |
| ການມີປະຊາທິປະໄຕສ້າງໂອກາດໃຫ້ທຸກຄົນໄດ້ພັດທະນາຕົນເອງ ແລະ ປະກອບສ່ວນເຂົ້າໃນການພັດທະນາສັງຄົມ | ✓ | |
| ຖ້າບໍ່ມີປະຊາທິປະໄຕໃນພາກພື້ນ ແລະ ສາກົນຈະເຮັດໃຫ້ເກີດຄວາມບໍ່ສະເໝີພາບ, ເກີດໄພຂົ່ມຂູ່ໃນສັງຄົມໂລກ | ✓ | |
| ຖ້າບໍ່ມີປະຊາທິປະໄຕໃນພາກພື້ນ ແລະ ສາກົນຈະເຮັດໃຫ້ສັງຄົມໂລກມີຄວາມສະຫງົບສຸກ | | ✓ |
| ພວກເຮົາຕ້ອງມີການຊອກຮູ້ຮ່ຳຮຽນຢູ່ສະເໝີ | ✓ | |
| ເລືອກເຟັ້ນ ແລະ ສົ່ງເສີມວັດທະນະທຳທີ່ມີລັກສະນະກ້າວໜ້າ | ✓ | |

**ໝາຍເຫດ**

- ຄູສາມາດໃຊ້ວິທີການສອນອື່ນປ່ຽນແທນໄດ້ຖ້າຫາກເຫັນວ່າ ວິທີການສອນນັ້ນສອດຄ່ອງ ແລະ ເໝາະສົມກວ່າ.

**ເອກະສານອ້າງອີງ**


- ປະມວນສົນທິສັນຍາສາກົນ, ສິດທິມະນຸດ, ກົນສົນທິສັນຍາ ແລະ ກົດໝາຍ; ກະຊວງການຕ່າງປະເທດ.
- ອາຊຽນ, ໃນໂອກາດກອງປະຊຸມສຸດຍອດອາຊຽນຄັ້ງທີ 21 ທີ່ພະນົມເປັນ.
- ກົນສົນທິສັນຍາ ແລະ ກົດໝາຍ, 1999 ກະຊວງການຕ່າງປະເທດ.

# ບົດທີ 4 ການປົກປັກຮັກສາສັນຕິພາບ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 2 ການປົກປັກຮັກສາສັນຕິພາບ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ, ຄວາມສໍາຄັນ, ການປົກປັກຮັກສາສັນຕິພາບ, ການຢູ່ຮ່ວມກັນຢ່າງສັນຕິເພື່ອໃຫ້ເກີດມີສັນຕິພາບຢູ່ໃນໂລກ.
- ເຫັນຄຸນຄ່າ ແລະ ຄວາມສໍາຄັນຂອງການປົກປັກຮັກສາສັນຕິພາບ ແລະ ການຢູ່ຮ່ວມກັນຢ່າງສັນຕິຢູ່ໃນໂລກ.
- ຈໍາແນກລະຫວ່າງສົງຄາມ ແລະ ສັນຕິພາບເພື່ອຢູ່ຮ່ວມກັນຢ່າງສັນຕິເພື່ອໃຫ້ເກີດມີສັນຕິພາບຢູ່ໃນໂລກ.

## II. ເນື້ອໃນ

ສັນຕິພາບໝາຍເຖິງຄວາມສະຫງົບສຸກ, ບໍ່ມີການລົບລາຂ້າຟັນ, ບໍ່ມີເສິກສົງຄາມ, ດິນແດນບໍ່ຖືກຍຶດຄອງ, ບໍ່ມີການປຸ້ນສະດົມ ແລະ ຂົ່ມຂູ່ໃດໆ, ສັງຄົມມີຄວາມສະຫງົບສຸກ. ອີກຢ່າງໜຶ່ງສັນຕິພາບແມ່ນຄວາມຖືກຕ້ອງປອງດອງ ແລະ ເຂົ້າອົກເຂົ້າໃຈກັນຢູ່ຮ່ວມກັນໂດຍສັນຕິ.

ສັນຕິພາບມີຄວາມສໍາຄັນຕໍ່ຊີວິດຂອງມະນຸດແມ່ນສິ່ງທີ່ມະນຸດຕ້ອງການມີແຕ່ຢູ່ໃນພາວະສັນຕິພາບເທົ່ານັ້ນປະເທດຈິ່ງຈະມີຄວາມສະຫງົບສຸກ, ບັນດາປະເທດຕ່າງໆໃນໂລກຈິ່ງມີໂອກາດທໍາຄວາມເຂົ້າໃຈເຊິ່ງກັນ ແລະ ກັນ, ຊ່ວຍເຫຼືອກັນ ແລະ ພ້ອມກັນສ້າງສາພັດທະນາປະເທດຊາດຂອງຕົນ ແລະ ພັດທະນາໂລກໃຫ້ມີຄວາມສີວິໄລ, ມີສັນຕິພາບຈິ່ງມີໂອກາດຟື້ນຟູເສດຖະກິດ, ວັດທະນະທໍາສັງຄົມໃຫ້ຈະເລີນກ້າວໜ້າ, ພວກເຮົາຈິ່ງມີໂອກາດສຶກສາຮໍ່າຮຽນ, ເຄື່ອນໄຫວກິລາ, ວັນນະຄະດີ ແລະ ອື່ນໆ.

ການປົກປັກຮັກສາສັນຕິພາບ ແມ່ນຄວາມຈໍາເປັນ ແລະ ແມ່ນໜ້າທີ່ຂອງປະຊາຊາດໃນທົ່ວໂລກຕ້ອງຮ່ວມກັນແກ້ໄຂບັນຫາທີ່ເກີດຂຶ້ນດ້ວຍການເຈລະຈາໂດຍສັນຕິວິທີ, ຫຼີກເວັ້ນການໃຊ້ຄວາມຮຸນແຮງທຸກຮູບແບບ. ສະນັ້ນ ການປົກປັກຮັກສາສັນຕິພາບ ຈິ່ງກາຍເປັນໜ້າທີ່ລວມຂອງບັນດາປະຊາຊາດຕ່າງໆ ໃນຂອບເຂດທົ່ວໂລກ.

## III. ສື່ການຮຽນການສອນ.

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຂັ້ນ ມ.4
2. ຮູບພາບ ໃນປຶ້ມແບບຮຽນ ແລະ ຮູບພາບກ່ຽວກັບສົງຄາມ
3. ເຈ້ຍນ້ອຍສໍາລັບຂຽນຄໍາຕອບ
4. ກາວຕິດເຈ້ຍ, ສະກັອດ

## IV. ກິດຈະກໍາການຮຽນການສອນ

**1. ທົບທວນບົດທີ່ຮຽນຜ່ານມາ (5 ນາທີ)**

- ຄູຕັ້ງຄໍາຖາມ:
  1) ປະຊາທິປະໄຕແມ່ນຫຍັງ?
  2) ຖ້າບໍ່ມີປະຊາທິປະໄຕຈະເປັນແນວໃດ?
- ຄູໃຫ້ນັກຮຽນຕອບ.
- ຄູສະຫຼຸບຄໍາຕອບຕາມທີ່ນັກຮຽນຕອບ ໂດຍອີງຕາມເນື້ອໃນທີ່ມີຢູ່ໃນປຶ້ມແບບຮຽນ ແລະ ອະທິບາຍເພີ່ມເຕີມວ່າ: ຖ້າບໍ່ມີປະຊາທິປະໄຕ ກໍບໍ່ມີຄວາມສະເໝີພາບ ໃນເມື່ອບໍ່ມີຄວາມສະເໝີພາບກໍຈະເກີດມີຄວາມຂັດແຍ້ງ, ມີຄວາມຮຸນແຮງ, ມີສົງຄາມ ແລະ ການດໍາລົງຊີວິດກໍຈະບໍ່ມີສັນຕິພາບ. ສະນັ້ນ, ເຮັດແນວໃດເພື່ອໃຫ້ໂລກຂອງເຮົາມີສັນຕິພາບ, ປາສະຈາກສົງຄາມ ແລະ ຄວາມຂັດແຍ່ງ ພວກເຮົາຕ້ອງປົກປັກຮັກສາສັນຕິພາບທີ່ພວກເຮົາມີໄວ້ໃຫ້ດີທີ່ສຸດ ເພື່ອການຢູ່ຮ່ວມກັນຢ່າງສັນຕິ ແລະ ມີຄວາມສຸກ.

**2. ຄູສະເໜີບົດຮຽນໃໝ່**

**ກ. ສັງເກດຮູບພາບ (10 ນາທີ)**

- ຄູໃຫ້ນັກຮຽນສັງເກດຮູບພາບໃນປຶ້ມແບບຮຽນ ແລະ ຮູບພາບຢູ່ທ້າຍບົດຮຽນນີ້:

**ຮູບພາບປະກອບການສອນ:**



ສັນຕິພາບໂລກ




ວັນແຫ່ງສັນຕິພາບ



ການຮ່ວມມືກັນເພື່ອປົກປັກຮັກສາສັນຕິພາບ




ຄ້ອງສັນຕິພາບໂລກ



ຜົນຮ້າຍຈາກສົງຄາມ



ຜົນກະທົບຈາກສົງຄາມ



ຜົນເສຍຫາຍຈາກສົງຄາມ

- ຄູຖາມນັກຮຽນວ່າ:
  1) ນັກຮຽນເຫັນຫຍັງແດ່ໃນຮູບພາບ?
  2) ຄົນໃນແຕ່ລະຮູບພາບກຳລັງເຮັດຫຍັງ?
  3) ນັກຮຽນເຄີຍເຫັນຮູບພາບນີ້ຢູ່ໃສແດ່?
  4) ຄວາມໝາຍຂອງຮູບພາບນີ້ແມ່ນຫຍັງ?
- ຄູໃຫ້ນັກຮຽນຄົ້ນຄວ້າຊອກຫາຄຳຕອບ.
- ຄູສະຫຼຸບຄຳຕອບຕາມທີ່ນັກຮຽນໄດ້ຕອບມາ ແລະ ເພີ່ມເຕີມບາງບັນຫາທີ່ຍັງບໍ່ທັນຄົບຖ້ວນ

**ຂ. ສະເໜີຄວາມໝາຍ ແລະ ຄວາມສຳຄັນຂອງການປົກປັກຮັກສາສັນຕິພາບ (20 ນາທີ)**

- ຄູໃຫ້ນັກຮຽນແຕ່ລະຄົນອ່ານຂໍ້ທີ 1- 2 ໃນປຶ້ມແບບຮຽນ.
- ຄູໃຫ້ນັກຮຽນຕອບຄຳຖາມດັ່ງນີ້:
  1) ຄວາມໝາຍຂອງສັນຕິພາບແມ່ນຫຍັງ?
  2) ຄວາມສຳຄັນຂອງສັນຕິພາບມີແນວໃດແດ່?

3) ການປົກປັກຮັກສາສັນຕິພາບຄວນເຮັດແນວໃດ?

- ນັກຮຽນຕອບຄຳຖາມ
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຄຳຕອບຄື

**ຄຳຕອບ**

1) ສັນຕິພາບໝາຍເຖິງຄວາມສະຫງົບສຸກ, ບໍ່ມີການລົບລາຂ້າຟັນ, ບໍ່ມີເສິກສົງຄາມ, ດິນແດນບໍ່ຖືກຍຶດຄອງ, ບໍ່ມີການປຸ້ນສະດົມ ແລະ ຂົ່ມຂູ່ໃດໆ, ສັງຄົມມີຄວາມສະຫງົບສຸກ. ອີກຢ່າງໜຶ່ງສັນຕິພາບແມ່ນຄວາມຖືກຕ້ອງປອງດອງ ແລະ ເຂົ້າອົກເຂົ້າໃຈກັນຢູ່ຮ່ວມກັນໂດຍສັນຕິ.
2) ສັນຕິພາບມີຄວາມສຳຄັນຕໍ່ຊີວິດຂອງມະນຸດແມ່ນສິ່ງທີ່ມະນຸດຕ້ອງການມີແຕ່ຢູ່ໃນພາວະສັນຕິພາບເທົ່ານັ້ນປະເທດຈຶ່ງຈະມີຄວາມສະຫງົບສຸກ, ບັນດາປະເທດຕ່າງໆໃນໂລກຈຶ່ງມີໂອກາດທຳຄວາມເຂົ້າໃຈເຊິ່ງກັນ ແລະ ກັນ, ຊ່ວຍເຫຼືອກັນ ແລະ ພ້ອມກັນສ້າງສາພັດທະນາປະເທດຊາດຂອງຕົນ ແລະ ພັນທະນາໂລກໃຫ້ມີຄວາມສີວິໄລ, ມີສັນຕິພາບຈຶ່ງມີໂອກາດຟື້ນຟູເສດຖະກິດ, ວັດທະນະທຳສັງຄົມໃຫ້ຈະເລີນກ້າວໜ້າ, ພວກເຮົາຈຶ່ງມີໂອກາດສຶກສາຮໍ່າຮຽນ, ເຄື່ອນໄຫວກິລາ, ວັນນະຄະດີ ແລະ ອື່ນໆ.
3) ການປົກປັກຮັກສາສັນຕິພາບ ແມ່ນຄວາມຈຳເປັນ ແລະ ແມ່ນໜ້າທີ່ຂອງປະຊາຊາດໃນທົ່ວໂລກຕ້ອງຮ່ວມກັນແກ້ໄຂບັນຫາທີ່ເກີດຂຶ້ນດ້ວຍການເຈລະຈາໂດຍສັນຕິວິທີ, ຫຼີກເວັ້ນການໃຊ້ຄວາມຮຸນແຮງທຸກຮູບແບບ. ສະນັ້ນ ການປົກປັກຮັກສາສັນຕິພາບ ຈຶ່ງກາຍເປັນໜ້າທີ່ລວມຂອງບັນດາປະຊາຊາດຕ່າງໆ ໃນຂອບເຂດທົ່ວໂລກ.

- ຄູເນັ້ນຕື່ມວ່າ ສັນຕິພາບໝາຍເຖິງຄວາມຖືກຕ້ອງປອງດອງ, ຄວາມເຂົ້າອົກເຂົ້າໃຈ ແລະ ການຢູ່ຮ່ວມກັນໂດຍສັນຕິ. ເຖິງແມ່ນວ່າໃນສັງຄົມນັ້ນໆ ຈະມີຄວາມຂັດ ແຍ້ງກັນກໍຕາມ ຊຶ່ງຄົນໃນສັງຄົມມີມຸມມອງທີ່ແຕກຕ່າງກັນ ແຕ່ຕ້ອງຍອມຮັບຄວາມແຕກຕ່າງ ແລະ ເຄົາລົບຄວາມຫຼາກຫຼາຍ ຈຶ່ງສາມາດປັບຕົວເຂົ້າຫາກັນໄດ້ ເພາະໃນສັງຄົມ ຫຼື ໃນໂລກນີ້ ເປັນໄປບໍ່ໄດ້ທີ່ຈະບໍ່ມີຄວາມຂັດແຍ່ງເລີຍ ມັນມີຢູ່ທຸກສັງຄົມ ແຕ່ມັນຢູ່ທີ່ຄວາມເຂົ້າໃຈ ແລະ ການປັບຕົວເຂົ້າຫາກັນບົນພື້ນຖານຄວາມເຂົ້າອົກເຂົ້າໃຈ, ການຜ່ອນສັ້ນ, ຜ່ອນຍາວ, ການເຈລະຈາ, ການແກ້ໄຂຂໍ້ຂັດແຍ່ງ, ບໍ່ໃຊ້ຄວາມຮຸນແຮງ ແລະ

ຍອມຮັບຄວາມເຫັນທີ່ແຕກຕ່າງກັນ ເພື່ອຢູ່ຮ່ວມກັນຢ່າງສັນຕິນີ້ ແລະ ຄືສັນຕິພາບ.

**ຄ. ຈຳແນກລະຫວ່າງສົງຄາມ ແລະ ສັນຕິພາບ (10 ນາທີ)**

- ຄູໃຫ້ນັກຮຽນຈຳແນກລະຫວ່າງສົງຄາມ ແລະ ສັນຕິພາບເພື່ອຢູ່ຮ່ວມກັນຢ່າງສັນຕິບົນພື້ນຖານການຍອມຮັບຄວາມຄິດເຫັນທີ່ແຕກຕ່າງ ເພື່ອໃຫ້ເກີດມີສັນຕິພາບຢູ່ໃນໂລກ.
- ຄູໃຫ້ນັກຮຽນແຕ່ລະຄົນຂຽນຄຳຕອບໃສ່ເຈ້ຍ ແລ້ວເອົາໄປຕິດໃສ່ກະດານ ໂດຍຄູແບ່ງກະດານອອກເປັນສອງຟາກ ແລ້ວໃຫ້ແຕ່ລະຄົນໄປຂຽນຄວາມຄິດຂອງຕົນເອງກ່ຽວກັບສົງຄາມ ແລະ ສັນຕິພາບ ຫຼື ຈະໃຫ້ແຕ່ລະຄົນຂຽນໃສ່ເຈ້ຍມາຕິດໃສ່ກໍໄດ້ ອີງຕາມຄວາມເໝາະສົມ.

| ສົງຄາມ | ສັນຕິພາບ |
|---|---|
| ການທຳລາຍ, ... | ຄວາມສະຫງົບ,... |
| .................................................... | .................................................... |
| .................................................... | .................................................... |
| .................................................... | .................................................... |
| .................................................... | .................................................... |

- ຄູອະທິບາຍຕື່ມວ່າ: ສົງຄາມມີຫຼາຍແບບຄື: ສົງຄາມໂລກ ຄັ້ງທີ I ແລະ II, ສົງຄາມລະຫວ່າງປະເທດ, ສົງຄາມຈິດຕະສາດ, ສົງຄາມປະຊາຊົນ...

**3. ຄູສະຫຼຸບ (5 ນາທີ)**

ຄູສະຫຼຸບ ໂດຍເນັ້ນໃຫ້ນັກຮຽນເຂົ້າໃຈວ່າ: ສັນຕິພາບມີຄວາມສຳຄັນທີ່ສຸດຕໍ່ມວນມະນຸດ, ມີແຕ່ສັນຕິພາບເທົ່ານັ້ນ ປະເທດຊາດຈຶ່ງມີຄວາມສະຫງົບສຸກ, ມີເງື່ອນໄຂໄດ້ພັດທະນາປະເທດຊາດ ແລະ ພັດທະນາໂລກໃຫ້ມີຄວາມສີວິໄລ ເພາະວ່າ ມີສັນຕິພາບຈຶ່ງມີໂອກາດໄດ້ສຶກສາຮ່ຳຮຽນ, ເຄື່ອນໄຫວສິລະປະວັນນະຄະດີ, ແລກປ່ຽນຮຽນຮູ້ວັດທະນະທຳທີ່ຫຼາກຫຼາຍຂອງຕົນ ແລະ ຂອງຊາດອື່ນໆໃນໂລກ.

ວັນສາກົນແຫ່ງສັນຕິພາບສ້າງຕັ້ງຂຶ້ນໃນວັນທີ 21/9/1981 ໂດຍສະມັດຊາໃຫຍ່ແຫ່ງສະຫະປະຊາຊາດ, ຈຸດປະສົງຂອງວັນດັ່ງກ່າວແມ່ນເພື່ອບໍ່ໃຊ້ຄວາມຮຸນແຮງ, ການຢຸດຍິງຕະຫຼອດ 24 ຊົ່ວໂມງ. ວັນສາກົນແຫ່ງສັນຕິພາບຈັດຂຶ້ນໃນທຸກໆປີຂອງວັນທີ 21 ເດືອນ ກັນຍາ ທີ່ເວົ້າເຖິງການສົ່ງເສີມສັນຕິພາບ ເພື່ອຊ່ວຍໃຫ້ບັນລຸເປົ້າໝາຍການພັດທະນາແບບຍືນຍົງ, ສ້າງວັດທະນະທຳແຫ່ງສັນຕິພາບ.

ປີ 2023 ເປັນຂີດໝາຍແຫ່ງການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ. ພິທີສະເຫຼີມສະຫຼອງວັນສັນຕິພາບສາກົນ ປີ 2023 ໄປຄຽງຄູ່ກັບກອງປະຊຸມສຸດຍອດ SDG

(18–19 ກັນຍາ) ເພື່ອເປັນຂີດໝາຍສຳຄັນໃນການສ້າງສັງຄົມທີ່ສະຫງົບສຸກ, ປາສະຈາກຄວາມຢ້ານກົວ, ຄວາມຮຸນແຮງ, ຕໍ່ສູ້ເພື່ອຄວາມສະເໝີພາບ, ການປ່ຽນແປງດິນຟ້າອາກາດ, ການຈຳແນກເຊື້ອຊາດ ແລະ ປົກປ້ອງສິດທິມະນຸດ ໃນການຊ່ວຍນຳພາໂລກຂອງເຮົາໄປສູ່ອະນາຄົດທີ່ດີກວ່າ, ທ່ຽງທຳ ແລະ ປອດໄພສຳລັບທຸກຄົນ.

## V. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນນັກຮຽນຈາກການຕອບຄຳຖາມຂ້າງລຸ່ມນີ້:

- ໃຫ້ນັກຮຽນອ່ານຂໍ້ຄວາມລຸ່ມນີ້ແລ້ວໝາຍ ✓ ໃສ່ຄຳຕອບທີ່ສະແດງເຖິງຈິດໃຈຮັກສັນຕິພາບ.

✓ ກ. ຟັງຄວາມຄິດຄວາມເຫັນຂອງຜູ້ອື່ນ

ຂ. ຄວາມເຂົ້າໃຈ ແລະ ການປັບຕົວເຂົ້າຫາກັນບົນພື້ນຖານຄວາມເຂົ້າອົກເຂົ້າໃຈ

✓ ຄ. ຮໍ່າຮຽນເອົາການປະພຶດອັນດີງາມຂອງຄົນອື່ນ

✓ ງ. ພົວພັນຮ່ວມມືກັບບັນດາອົງການເຍົາວະຊົນ, ຊາວໜຸ່ມປະເທດເພື່ອນມິດ ແລະ ສາກົນ

ຈ. ບັງຄັບໃຫ້ຄົນອື່ນຕ້ອງປະຕິບັດຕາມຄຳສັ່ງຂອງຕົນ

✓ ສ. ມີທັດສະນະທີ່ແຕກຕ່າງກັນ

✓ ຊ. ໄປແລກປ່ຽນວັດທະນະທຳກັບຊາດອື່ນ

✓ ດ. ຮ່ວມກັນແກ້ໄຂບັນຫາທີ່ເກີດຂຶ້ນດ້ວຍການເຈລະຈາ

ຕ. ໃຊ້ຄວາມຮຸນແຮງເພື່ອແກ້ໄຂບັນຫາຄວາມຂັດແຍ້ງລະຫວ່າງບຸກຄົນ

✓ ຖ. ຮັກສາຄວາມສະອາດ ແລະ ປູກຕົ້ນໄມ້

# ບົດທີ 9 ການເຮັດວຽກມີປະສິດທິພາບ
## ສອນແຊກຊ້ອນເຂົ້າຫົວຂໍ້ທີ 2 ແບບແຜນວິທີເຮັດວຽກມີປະສິດທິພາບ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ ແລະ ແບບແຜນຂອງການເຮັດວຽກມີປະສິດທິພາບໃນການລົງມືປະຕິບັດທີ່ມີຜົນໄດ້ຮັບ.
- ເຫັນຄຸນຄ່າຂອງການເຮັດວຽກມີປະສິດທິພາບໃນການລົງມືປະຕິບັດທີ່ມີຜົນໄດ້ຮັບ.
- ຍົກຕົວຢ່າງການເຮັດວຽກມີປະສິດທິພາບໃນການລົງມືປະຕິບັດທີ່ມີຜົນໄດ້ຮັບ.

## II. ເນື້ອໃນ

ການເຮັດວຽກມີປະສິດທິພາບ ໝາຍເຖິງການເຮັດວຽກງານ ຫຼື ສ້າງຜະລິດຕະພັນທີ່ມີຄຸນຄ່າຢ່າງສູງສົ່ງ ແລະ ມີຄຸນນະພາບດີທາງດ້ານເນື້ອໃນ ແລະ ຮູບການໃນໄລຍະເວລາອັນແນ່ນອນດຽວກັນ.

ການເຮັດວຽກມີປະສິດທິພາບ ແມ່ນຄວາມຮຽກຮ້ອງຕ້ອງການຂອງຊາວຜູ້ອອກແຮງງານໃນພາລະກິດຫັນເປັນອຸດສາຫະກຳ ແລະ ທັນສະໄໝເພື່ອປະກອບສ່ວນຍົກສູງຄຸນນະພາບຂອງບຸກຄົນ, ຄອບຄົວ ແລະ ສັງຄົມ.

ເພື່ອຢາກເຮັດວຽກໃຫ້ມີປະສິດທິພາບ ທຸກຄົນຈະຕ້ອງຕັ້ງໜ້າຍົກສູງສີໄມ້ລາຍມືດີ, ມີສຸຂະພາບແຂງແຮງ, ອອກແຮງງານດ້ວຍຄວາມຕື່ນຕົວ, ມີລະບຽບວິໄນ, ດຸໝັ່ນພາກພຽນ ແລະ ປະດິດສ້າງ.

ແບບແຜນວິທີເຮັດວຽກມີບົດບາດສຳຄັນຕໍ່ຜົນສຳເລັດ ຫຼື ຄວາມລົ້ມເຫຼວຂອງວຽກງານ, ເພາະວ່າມີແບບແຜນເຮັດວຽກດີການເຮັດວຽກກໍງ່າຍ, ຖ້າບໍ່ມີແບບແຜນເຮັດວຽກງານທີ່ດີກໍຈະພາໃຫ້ມີຄວາມສັບສົນ, ອັນງ່າຍກໍກາຍເປັນອັນຍາກ ແລະ ຍັງສ້າງຄວາມລຳບາກໃຫ້ແກ່ຕົນເອງ ແລະ ຄົນອື່ນ. ສະນັ້ນ, ຢາກເຮັດວຽກມີປະສິດທິພາບມີຜົນສຳເລັດຕ້ອງມີແບບແຜນດັ່ງນີ້:

- ກຳນົດຈຸດປະສົງລະດັບຄາດໝາຍຂອງແຜນການໃຫ້ຈະແຈ້ງ ແລະ ເໝາະສົມກັບຕົວຈິງ.
- ກຳນົດເນື້ອໃນແຜນການພ້ອມທັງຜູ້ຮັບຜິດຊອບແຕ່ລະວຽກຢ່າງລະອຽດ.

- ກຳນົດເວລາໃຫ້ຈະແຈ້ງ.
- ສະເໜີທິດທາງ, ວິທີການ ແລະ ມາດຕະການປະຕິບັດວຽກຕ່າງໆໄວ້ໃນແຜນການ.

ສະນັ້ນ ໃນການລົງມືປະຕິບັດວຽກງານໃຫ້ມີປະສິດທິພາບ ແລະ ມີຜົນໄດ້ຮັບ ພວກເຮົາຕ້ອງມີການວາງແຜນຢ່າງມີຈຸດໝາຍ, ມີແຜນການເພື່ອໃຫ້ມີຜົນສຳເລັດໃນການຮ່ຳຮຽນ ແລະ ການເຮັດວຽກອື່ນໆ ຊຶ່ງກ່ອນອື່ນໝົດຕ້ອງເລີ່ມຈາກຕົນເອງຈາກນັ້ນຈຶ່ງກ້າວໄປເຖິງລະດັບທ້ອງຖິ່ນ, ລະດັບຊາດ ແລະ ສາກົນ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງ ຊັ້ນ ມ.4
2. ຮູບພາບ, ເລື່ອງສັ້ນກ່ຽວຂ້ອງເຖິງຜູ້ທີ່ເປັນແບບຢ່າງເຮັດວຽກມີປະສິດທິພາບ, ມີຄຸນ ນະພາບ ແລະ ມີຜົນສຳເລັດ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທົບທວນບົດທີ່ຮຽນຜ່ານມາ (5 ນາທີ)**

- ຄູຕັ້ງຄຳຖາມ:
  1) ຄວາມດຸໝັ່ນພາກພຽນ ແລະ ປະດິດສ້າງແມ່ນຫຍັງ?
  2) ຄົນທີ່ມີຄວາມດຸໝັ່ນພາກພຽນ ແລະ ປະດິດສ້າງແມ່ນຄົນແນວໃດ?
- ຄູສະຫຼຸບຄຳຕອບຂອງນັກຮຽນຕາມເນື້ອໃນທີ່ມີໃນປຶ້ມແບບຮຽນ.
- ຄູອະທິບາຍຕື່ມວ່າ:

  **ຄຳຕອບ**

  1) ຄວາມດຸໝັ່ນພາກພຽນ ແລະ ປະດິດສ້າງແມ່ນ
  - **ດຸໝັ່ນ** ແມ່ນການສະແດງອອກໃນການເຮັດວຽກງານດ້ວຍຄວາມບຸກບືນ, ຕື່ນຕົວເປັນເຈົ້າການໂດຍບໍ່ມີໃຜສັ່ງ.
  - **ພາກພຽນ** ແມ່ນເຮັດດ້ວຍຄວາມດຸໝັ່ນ, ມີການຄົ້ນຄວ້າ, ຮູ້ໝູນໃຊ້ວິຊາຄວາມຮູ້ ແລະ ຄວາມສາມາດໃຫ້ເປັນປະໂຫຍດ.
  - **ປະດິດສ້າງ** ແມ່ນການເຮັດວຽກ ຫຼື ຄົ້ນຄວ້າດ້ວຍຄວາມບາກບັ່ນ, ຂະຫຍັນເພື່ອ

ຊອກຫາສິ່ງໃໝ່ໆ ທີ່ມີຄຸນຄ່າສູງທາງດ້ານວັດຖຸ ແລະ ຈິດໃຈ ຫຼື ຊອກຫາວິທີແກ້ໄຂໃໝ່ດ້ວຍຫົວຄິດປະດິດສ້າງຂອງຕົນເອງ.

2) ຄົນທີ່ມີຄວາມດຸໝັ່ນພາກພຽນ ແລະ ປະດິດສ້າງ ແມ່ນຄົນທີ່ມີຄວາມຕັດສິນໃຈສູງ, ບຸກບືນເຮັດໃຫ້ສຳເລັດໜ້າທີ່ຂອງຕົນເອງຢ່າງຕັ້ງໜ້າ, ຊອກຮູ້ຮ່ຳຮຽນດ້ວຍຕົນເອງ, ຮຽນນຳໝູ່ເພື່ອນ, ຕຳລາ, ຄູອາຈານ ແລະ ຊອກຮຽນຈາກຕົວຈິງ. ພ້ອມນັ້ນຍັງຊອກຮູ້ວິທີມີພິກໄຫວໃນການແກ້ໄຂເຫດການໃນການຮ່ຳຮຽນ, ການອອກແຮງງານ ແລະ ວຽກງານອື່ນໆ

**2. ສະເໜີບົດຮຽນໃໝ່**

**ກ. ສົນທະນາລວມ (20 ນາທີ)**

- ຄູຕັ້ງຄຳຖາມ:
  1) ເຮັດວຽກມີປະສິດທິພາບແມ່ນຫຍັງ?
  2) ຢາກເຮັດວຽກມີປະສິດທິພາບຕ້ອງເຮັດແນວໃດ?
  3) ເພື່ອຢາກມີແບບແຜນວິທີເຮັດວຽກທີ່ດີຄວນເຮັດແນວໃດ?
- ຄູໃຫ້ນັກຮຽນຕອບຄຳຖາມ 4-5 ຄົນ.
- ຄູອະທິບາຍຄວາມໝາຍຂອງການເຮັດວຽກມີປະສິດທິພາບ.

**ຄຳຕອບ**

1) ການເຮັດວຽກມີປະສິດທິພາບ ໝາຍເຖິງການເຮັດວຽກງານ ຫຼື ສ້າງຜະລິດຕະພັນທີ່ມີຄຸນຄ່າຢ່າງສູງສິ່ງ ແລະ ມີຄຸນນະພາບດີທາງດ້ານເນື້ອໃນ ແລະ ຮູບການໃນໄລຍະເວລາອັນແນ່ນອນດຽວກັນ.
2) ການເຮັດວຽກມີປະສິດທິພາບ ແມ່ນຄວາມຮຽກຮ້ອງຕ້ອງການຂອງຊາວຜູ້ອອກແຮງງານໃນພາລະກິດທັນເປັນອຸດສະຫະກຳ ແລະ ທັນສະໄໝເພື່ອປະກອບສ່ວນຍົກສູງຄຸນນະພາບຂອງບຸກຄົນ, ຄອບຄົວ ແລະ ສັງຄົມ.
3) ເພື່ອຢາກເຮັດວຽກໃຫ້ມີປະສິດທິພາບ ທຸກຄົນຈະຕ້ອງຕັ້ງໜ້າຍົກສູງສີໄມ້ລາຍມືດີ, ມີສຸຂະພາບແຂງແຮງ, ອອກແຮງງານດ້ວຍຄວາມຕື່ນຕົວ, ມີລະບຽບວິໄນ, ດຸໝັ່ນພາກພຽນ ແລະ ປະດິດສ້າງ.
4) ເພື່ອຢາກມີແບບແຜນວິທີເຮັດວຽກທີ່ດີຄວນປະຕິບັດດັ່ງນີ້:

- ກຳນົດຈຸດປະສົງລະດັບຄາດໝາຍຂອງແຜນການໃຫ້ຈະແຈ້ງ ແລະ ເໝາະສົມກັບຕົວຈິງ.
- ກຳນົດເນື້ອໃນແຜນການພ້ອມທັງຜູ້ຮັບຜິດຊອບແຕ່ລະວຽກຢ່າງລະອຽດ.
- ກຳນົດເວລາໃຫ້ຈະແຈ້ງ.
- ສະເໜີທິດທາງ, ວິທີການ ແລະ ມາດຕະການປະຕິບັດວຽກຕ່າງໆໄວ້ໃນແຜນການ.

ສະນັ້ນ ໃນການລົງມືປະຕິບັດວຽກງານໃຫ້ມີປະສິດທິພາບ ແລະ ມີຜົນໄດ້ຮັບ ພວກເຮົາຕ້ອງມີການວາງແຜນຢ່າງມີຈຸດໝາຍ, ມີແຜນການເພື່ອໃຫ້ມີຜົນສຳເລັດໃນການຮ່ຳຮຽນ ແລະ ການເຮັດວຽກອື່ນໆ ຊຶ່ງກ່ອນອື່ນໝົດຕ້ອງເລີ່ມຈາກຕົນເອງຈາກນັ້ນຈຶ່ງກ້າວໄປເຖິງລະດັບທ້ອງຖິ່ນ, ລະດັບຊາດ ແລະ ສາກົນ.

**ຄ. ສົນທະນາສົນທະນາກຸ່ມ (20 ນາທີ)**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ.
- ຄູໃຫ້ນັກຮຽນແຕ່ລະກຸ່ມອ່ານ "ເຫດການ" ໃນປຶ້ມແບບຮຽນ ແລ້ວຕອບຄຳຖາມລຸ່ມນີ້:

**ຄຳຖາມ**

1) ທ້າວຄຳໃສແມ່ນໃຜ?
2) ເມື່ອໄປເປັນຄູສອນທ້າວຄຳໃສເຫັນບັນຫາຫຍັງແດ່?
3) ນາຍຄູຄຳໃສໄດ້ມີວິທີການແກ້ໄຂແນວໃດ?
4) ແບບແຜນການເຮັດວຽກທີ່ມີປະສິດທິພາບຂອງນາຍຄູຄຳໃສມີຜົນໄດ້ຮັບແນວໃດ?

- ຄູໃຫ້ນັກຮຽນຈຳນວນໜຶ່ງປະກອບຄວາມຄິດເຫັນເພີ່ມເຕີມຖ້າຂໍ້ໃດຍັງບໍ່ຄົບຖ້ວນ.
- ຄູສະຫຼຸບຄືນ:

**ຄຳຕອບ**

1) ທ້າວຄຳໃສເປັນທະຫານສັງກັດຢູ່ກອງທັບປະຊາຊົນລາວ, ໄປສູ້ຮົບຖືກບາດເຈັບ, ພາຍຫຼັງປິ່ນປົວດີລາວບໍ່ສາມາດກັບຄືນໄປກົມກອງເກົ່າ ລາວຈຶ່ງຂໍສະເໜີໄປເປັນຄູສອນ
2) ເມື່ອໄປເປັນຄູສອນທ້າວຄຳໃສເຫັນຄວາມທຸກຍາກຫຼາຍ, ຄົນໜ້ອຍ, ເດັກນ້ອຍສ່ວນຫຼາຍບໍ່ໄດ້ເຂົ້າໂຮງຮຽນ, ພວກເຂົາໄປເຮັດວຽກຊ່ວຍພໍ່ແມ່.
3) ນາຍຄູຄຳໃສໄດ້ມີວິທີການແກ້ໄຂຄື: ເອົາເດັກນ້ອຍຈຳນວນໜຶ່ງໄປເຂົ້າໂຮງຮຽນ

ແລະ ຊອກວຽກໃຫ້ເຂົາເຈົ້າພ້ອມ ໂດຍສະເໜີຂໍຄວາຍນຳນາຍບ້ານມາໃຫ້ນັກຮຽນລ້ຽງ.

4) ແບບແຜນການເຮັດວຽກທີ່ມີປະສິດທິພາບຂອງນາຍຄູຄຳໃສມີຜົນໄດ້ຮັບຄື: ຍ້ອນມີແບບແຜນການເຮັດວຽກທີ່ດີ, ການເຮັດວຽກກໍງ່າຍ, ບໍ່ມີຄວາມສັບສົນ, ບໍ່ສ້າງຄວາມລຳບາກໃຫ້ແກ່ຕົນເອງ ແລະ ຄົນອື່ນ ຈຶ່ງເຮັດໃຫ້ວຽກມີປະສິດທິພາບດີ.

**3. ສະຫຼຸບ (5 ນາທີ)**

ຄູສະຫຼຸບເນື້ອໃນບົດຮຽນກ່ຽວກັບ ການເຮັດວຽກມີປະສິດທິພາບ ແລະ ແບບແຜນວິທີເຮັດວຽກ. ພ້ອມທັງເນັ້ນຕື່ມວ່າ ໃນການລົງມືປະຕິບັດວຽກງານໃຫ້ມີປະສິດທິພາບ ແລະ ມີຜົນໄດ້ຮັບ ພວກເຮົາຕ້ອງມີການວາງແຜນຢ່າງມີຈຸດໝາຍ, ມີແຜນການເພື່ອໃຫ້ມີຜົນສຳເລັດໃນການຮໍ່າຮຽນ ແລະ ການເຮັດວຽກອື່ນໆ ຊຶ່ງກ່ອນອື່ນໝົດຕ້ອງເລີ່ມຈາກຕົນເອງຈາກນັ້ນຈຶ່ງກ້າວໄປເຖິງລະດັບທ້ອງຖິ່ນ, ລະດັບຊາດ ແລະ ສາກົນ.

**ວຽກບ້ານ**

- ແນະນຳໃຫ້ນັກຮຽນເຮັດບົດຝຶກຫັດຂໍ້ 1, 2, 3 ແລະ 4 ໃນປຶ້ມແບບຮຽນ ໜ້າທີ 45.

## IV. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນຈາກ:

- ການຕອບຄຳຖາມປະລະໄນລຸ່ມນີ້:
- ໃຫ້ນັກຮຽນໝາຍ ✓ ໃສ່ຕໍ່ໜ້າຄຳຕອບທີ່ເຫັນວ່າຖືກຕ້ອງ

1. ຂໍ້ໃດບໍ່ແມ່ນການເຮັດວຽກທີ່ໃຫ້ມີປະສິດທິພາບສູງ?
   - ກ. ສ້າງຜະລິດຕະພັນທີ່ມີຄຸນຄ່າຢ່າງສູງສົ່ງ
   - ຂ. ມີຄຸນນະພາບດີທາງດ້ານເນື້ອໃນ
   - ✓ ຄ. ການເຮັດວຽກເນັ້ນປະລິມານ
   - ງ. ຄຸນນະພາບຂອງວຽກໄດ້ຕາມເປົ້າໝາຍ
2. ຂໍ້ໃດບໍ່ແມ່ນແບບແຜນວິທີເຮັດວຽກໃຫ້ມີປະສິດທິພາບ?
   - ກ. ກຳນົດຈຸດປະສົງ
   - ຂ. ກຳນົດເນື້ອໃນແຜນການ
   - ✓ ຄ. ກຳນົດບັນຫາ
   - ງ. ກຳນົດເວລາ

# ບົດທີ 11 ພາລະກິດໄວໜຸ່ມລາວຕໍ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ

## ສອນແຊກຊ້ອນເຂົ້າຫົວຂໍ້ທີ 3 ການພັດທະນາຊັບພະຍາກອນມະນຸດ

ເວລາ 1 ຊົ່ວໂມງ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ, ຈຸດໝາຍພື້ນຖານ ແລະ ການພັດທະນາຊັບພະຍາກອນມະນຸດໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝໂດຍການເຂົ້າຮ່ວມອົງການຈັດຕັ້ງຕ່າງໆ.
- ມີຄວາມຮັບຜິດຊອບຕໍ່ຕົນເອງ ແລະ ສັງຄົມເພື່ອຊ່ວຍໃຫ້ເກີດການຮຽນຮູ້ ແລະ ທັກສະຢ່າງຮອບດ້ານໃນສະພາບເງື່ອນໄຂແຫ່ງການປ່ຽນແປງໃນໂລກ.
- ນຳໃຊ້ຄວາມຮູ້ ແລະ ທັກສະຈາກການເຂົ້າຮ່ວມອົງການຈັດຕັ້ງຕ່າງໆເຂົ້າໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

## II. ເນື້ອໃນ

ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ແມ່ນຂະບວນວິວັດແຫ່ງການຫັນປ່ຽນອັນພື້ນຖານຮອບດ້ານຂອງການເຄື່ອນໄຫວດ້ານການຜະລິດ, ທຸລະກິດ, ການບໍລິການ ແລະ ການຄຸ້ມຄອງເສດຖະກິດ-ສັງຄົມ, ຕະຫຼອດຮອດການປ່ຽນແປງທາງດ້ານແບບແຜນການດຳລົງຊີວິດ, ວິທີການຄົ້ນຄິດຂອງສັງຄົມຈາກສະພາບຫຼ້າຫຼັງໄປສູ່ສະພາບກ້າວໜ້າທັນສະໄໝ.

ຈຸດໝາຍພື້ນຖານຂອງການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ແມ່ນຂະຫຍາຍກຳລັງການຜະລິດ, ເພີ່ມກຳລັງແຮງສັງລວມໃຫ້ປະເທດຊາດ, ແກ້ໄຂຄວາມທຸກຍາກ, ຍົກສູງຊີວິດການເປັນຢູ່ຂອງປະຊາຊົນ, ປັບປຸງບູລະນະລະບອບປະຊາທິປະໄຕປະຊາຊົນໃຫ້ມີຄວາມໜັກແໜ້ນເຂັ້ມແຂງເລື້ອຍໆໄປ.

ການພັດທະນາຊັບພະຍາກອນມະນຸດແມ່ນການພັດທະນາຄົນຊຶ່ງເປັນປັດໄຈພື້ນຖານຂອງການພັດທະນາປະເທດຊາດ, ພັກ ແລະ ລັດຖະບານໄດ້ສົ່ງເສີມໃຫ້ທຸກຄົນພັດທະນາຄວາມຮູ້, ຄວາມສາມາດ, ຮູ້ນຳໃຊ້ຄົນທີ່ມີຄວາມຮູ້ຄວາມສາມາດ ແລະ ມີຄຸນນະພາບ.

ໃນການພັດທະນາຊັບພະຍາກອນມະນຸດນັ້ນ ໃນຍຸກປັດຈຸບັນແມ່ນອນຕ້ອງໄດ້ເຂົ້າຮ່ວມໃນອົງການຈັດຕັ້ງຕ່າງໆ ບໍ່ວ່າຈະເປັນອົງການຈັດຕັ້ງຂອງລັດ, ເອກະຊົນ, ອົງການສາກົນ ຫຼື ໂລກກໍຕາມ ສິ່ງທີ່ຂາດບໍ່ໄດ້ກໍຄືຄວາມຮູ້ ແລະ ທັກສະຕ່າງໆ ເພື່ອໃຫ້ໄວໜຸ່ມໃນລາວກໍຄືທົ່ວໂລກ ມີການປ່ຽນແປງທາງດ້ານແບບແຜນການດຳລົງຊີວິດ, ມີວິທີການຄົ້ນຄິດທີ່ເປັນອຸດສາຫະກຳ ແລະ ທັນສະໄໝ ນັ້ນກໍຄືຈາກສະພາບຫຼ້າຫຼັງໄປສູ່ສະພາບທີ່ກ້າວໜ້າ ແລະ ທັນສະໄໝ ເພື່ອໃຫ້ເໝາະສົມກັບສະພາບຄວາມເປັນຈິງຂອງສັງຄົມ ແລະ ໂລກ ໃນການທີ່ຈະພັດທະນາຕົນເອງໃຫ້ກາຍເປັນຊັບພະຍາກອນທີ່ດີໃນອະນາຄົດ.

## III. ສື່ການຮຽນການສອນ

1. ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາ ສຶກສາພົນລະເມືອງຂັ້ນ ມ.4
2. ຮູບພາບໃນປຶ້ມແບບຮຽນ
3. ຮູບພາບທີ່ກ່ຽວຂ້ອງກັບບົດຮຽນ

## IV. ກິດຈະກຳການຮຽນການສອນ

*ຊົ່ວໂມງທີ 1*

**1. ທົບທວນບົດທີ່ຮຽນຜ່ານມາ**

**ກ. ລະດົມສະໝອງ (5 ນາທີ)**

- ຄູຕັ້ງຄຳຖາມ:
  1) ແຕ່ກ່ອນການຄົມມະນາຄົມຢູ່ບ້ານເຮົາເປັນແນວໃດ? ແລະ ປັດຈຸບັນນີ້ເດເປັນແນວໃດ?
  2) ຄົນສະໄໝກ່ອນໃຊ້ພາຫະນະໃດໃນການເດີນທາງ?
  3) ປັດຈຸບັນນີ້ໃຊ້ຫຍັງໃນການເດີນທາງ? ສິ່ງນັ້ນເອີ້ນວ່າຫຍັງ?
- ຄູອາດຈະໃຫ້ນັກຮຽນຕອບ 2-3 ຄົນ. ຈາກນັ້ນ ຄູສະຫຼຸບຫຍໍ້ແລ້ວນຳເຂົ້າສູ່ເນື້ອໃນບົດຮຽນ.
- ຄູສະຫຼຸບກ່ຽວກັບຄຳຕອບຂອງນັກຮຽນຄື:

  **ຄຳຕອບ**

  1) ແຕ່ກ່ອນການຄົມມະນາຄົມຢູ່ບ້ານເຮົາເປັນແບບປະຖົມປະຖານ, ຫົນທາງເປັນຂີ້ດິນແດງ, ຂີ້ຕົມ, ການໄປມາພົບຄວາມຫຍຸ້ງຍາກ, ລົດລາງພາຫະນະບໍ່ຫຼາຍ, ໃຊ້ເວລາດົນ. ສ່ວນປັດຈຸບັນນີ້ແມ່ນມີຄວາມສະດວກສະບາຍ, ທັງລົດລາງພາຫະນະ

ກໍທັນສະໄໝ.

2) ການເດີນທາງຂອງຄົນສະໄໝກ່ອນເດີນທາງດ້ວຍກວຽນ, ເຮືອ, ຂີ່ມ້າ...

3) ປັດຈຸບັນເດີນທາງດ້ວຍລົດ, ເຮືອບິນ, ລົດໄຟ, ເຮືອຈັກ...

**2. ຄູນຳພານັກຮຽນເຂົ້າບົດຮຽນໃໝ່**

**ຂ. ຄົ້ນຄວ້າເປັນກຸ່ມ (20 ນາທີ)**

- ຄູແບ່ງນັກຮຽນເປັນກຸ່ມ ແລ້ວໃຫ້ນັກຮຽນ ອ່ານເນື້ອໃນຂໍ້ 1, 2, 3 ໃນປຶ້ມແບບຮຽນໃຫ້ແຕ່ລະກຸ່ມຄົ້ນຄວ້າຕາມຄຳຖາມລຸ່ມນີ້:

1) ປັດຈຸບັນປະເທດລາວເຮົາເປັນແນວໃດ?

2) ການຫັນເປັນອຸດສາຫະກຳ ແລະ ທັນສະໄໝແມ່ນເຮັດແນວໃດ?

3) ປັດໄຈຕົ້ນຕໍຂອງການຫັນເປັນອຸດສາຫະກຳ ແລະ ທັນສະໄໝມີຫຍັງແດ່?

4) ໃນການພັດທະນາຊັບພະຍາກອນມະນຸດໄວໜຸ່ມຕ້ອງເຮັດແນວໃດແດ່ ເພື່ອປະກອບສ່ວນເຂົ້າໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ?

- ຄູໃຫ້ນັກຮຽນຊອກຫາຄຳຕອບ.

5) ຄູສະຫຼຸບຄຳຕອບຮ່ວມກັບນັກຮຽນຄື:

**ຄຳຕອບ**

1) ປັດຈຸບັນປະເທດເຮົາກຳລັງຢູ່ໃນໄລຍະການພັດທະນາເສດຖະກິດ-ສັງຄົມ ຈາກຜົນສຳເລັດທາງດ້ານກະສິກຳ ແລ້ວກ້າວຂຶ້ນສ້າງອຸດສາຫະກຳຂະໜາດນ້ອຍ, ກໍ່ສ້າງ ແລະ ພັດທະນາຄວາມຮູ້ທາງດ້ານເສດຖະກິດເທື່ອລະກ້າວ.

2) ການປະຕິວັດອຸດສາຫະກຳ ແລະ ທັນສະໄໝແມ່ນການຫັນປ່ຽນອັນພື້ນຖານຮອບດ້ານຂອງການເຄື່ອນໄຫວການຜະລິດ, ທຸລະກິດ, ການບໍລິການ ແລະ ການຄຸ້ມຄອງເສດຖະກິດ-ສັງຄົມ, ຕະຫຼອດຮອດການປ່ຽນແປງທາງດ້ານແບບແຜນການດຳລົງຊີວິດ, ການຄົ້ນຄິດຂອງສັງຄົມຈາກອັນເກົ່າໄປສູ່ອັນໃໝ່ທີ່ກ້າວໜ້າ ແລະທັນສະໄໝ ເພື່ອຍົກສູງປະສິດທິພາບຂອງງານ, ຍົກສູງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈໃຫ້ແກ່ປະຊາຊົນບັນດາເຜົ່າ ແລະ ຄ່ອຍໆລົບລ້າງຄວາມແຕກຕ່າງລະຫວ່າງຊົນນະບົດກັບຕົວເມືອງ...

3) ປັດໄຈຕົ້ນຕໍຂອງການຫັນເປັນອຸດສາຫະກຳ ແລະ ທັນສະໄໝແມ່ນຄົນ ແລະ ກຳລັງແຮງງານ

4) ໃນການພັດທະນາຊັບພະຍາກອນມະນຸດນັ້ນໃນຍຸກປັດຈຸບັນແມ່ນອນຕ້ອງໄດ້ເຂົ້າ

ຮ່ວມໃນອົງການຈັດຕັ້ງຕ່າງໆ ບໍ່ວ່າຈະເປັນອົງການຈັດຕັ້ງຂອງລັດ, ເອກະຊົນ, ອົງການສາກົນ ຫຼື ໂລກກໍຕາມ ສິ່ງທີ່ຂາດບໍ່ໄດ້ກໍຄືຄວາມຮູ້ ແລະ ທັກສະຕ່າງໆ ເພື່ອໃຫ້ໄວໜຸ່ມໃນລາວກໍຄືທົ່ວໂລກ ມີການປ່ຽນແປງທາງດ້ານແບບແຜນການດຳລົງຊີວິດ, ມີວິທີການຄົ້ນຄິດທີ່ເປັນອຸດສາຫະກຳ ແລະ ທັນສະໄໝ ນັ້ນກໍຄືຈາກສະພາບຫຼ້າຫຼັງໄປສູ່ສະພາບທີ່ກ້າວໜ້າ ແລະ ທັນສະໄໝ ເພື່ອໃຫ້ເໝາະສົມກັບສະພາບຄວາມເປັນຈິງຂອງສັງຄົມ ແລະ ໂລກ ໃນການທີ່ຈະພັດທະນາຕົນເອງໃຫ້ກາຍເປັນຊັບພະຍາກອນທີ່ດີໃນອະນາຄົດ.

**3. ຄູສະຫຼຸບ (5 ນາທີ)**

- ຄູ ແລະ ນັກຮຽນສະຫຼຸບຮ່ວມກັນດັ່ງນີ້:

ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ແມ່ນການຫັນປ່ຽນອັນພື້ນຖານ, ຮອບດ້ານຂອງການເຄື່ອນໄຫວການຜະລິດ, ທຸລະກິດ, ການບໍລິການ ແລະ ການຄຸ້ມຄອງເສດຖະກິດ-ສັງຄົມ, ຕະຫຼອດການປ່ຽນແປງທາງດ້ານແບບແຜນການດຳລົງຊີວິດ, ການຄົ້ນຄິດຂອງສັງຄົມຈາກອັນເກົ່າໄປສູ່ອັນໃໝ່ທີ່ກ້າວໜ້າທັນສະໄໝ...

ເພື່ອຢາກຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ປັດໄຈຕົ້ນຕໍແມ່ນຄົນ ແລະ ກຳລັງແຮງງານ.

ໃນການພັດທະນາຊັບພະຍາກອນມະນຸດນັ້ນ ໃນຍຸກປັດຈຸບັນແນ່ນອນຊາວໜຸ່ມ ຊຶ່ງແມ່ນປັດໄຈຕົ້ນຕໍຕ້ອງໄດ້ເຂົ້າຮ່ວມໃນອົງການຈັດຕັ້ງຕ່າງໆ ບໍ່ວ່າຈະເປັນອົງການຈັດຕັ້ງຂອງລັດ, ເອກະຊົນ, ອົງການສາກົນ ຫຼື ໂລກກໍຕາມ ສິ່ງທີ່ຂາດບໍ່ໄດ້ກໍຄືຄວາມຮູ້ ແລະ ທັກສະຕ່າງໆ ເພື່ອໃຫ້ໄວໜຸ່ມໃນລາວກໍຄືທົ່ວໂລກ ມີການປ່ຽນແປງທາງດ້ານແບບແຜນການດຳລົງຊີວິດ, ມີວິທີການຄົ້ນຄິດທີ່ເປັນອຸດສາຫະກຳ ແລະ ທັນສະໄໝ ນັ້ນກໍຄືຈາກສະພາບຫຼ້າຫຼັງໄປສູ່ສະພາບທີ່ກ້າວໜ້າ ແລະ ທັນສະໄໝ ເພື່ອໃຫ້ເໝາະສົມກັບສະພາບຄວາມເປັນຈິງຂອງສັງຄົມ ແລະ ໂລກ ໃນການທີ່ຈະພັດທະນາຕົນເອງໃຫ້ກາຍເປັນຊັບພະຍາກອນທີ່ດີໃນອະນາຄົດ.

ເດືອນທັນວາ ປີ 2009, ສະມັດຊາໃຫຍ່ອົງການສະຫະປະຊາຊາດໄດ້ຮັບຮອງເອົາວັນທີ 12 ສິງຫາ ປີ 2010 ເປັນປີ ຊາວໜຸ່ມສາກົນ, ຮຽກຮ້ອງໃຫ້ລັດຖະບານ, ສັງຄົມ, ບຸກຄົນ ແລະ ປະຊາຄົມໂລກສະໜັບສະໜູນການເຄື່ອນໄຫວຂອງຊາວໜຸ່ມຢູ່ທ້ອງຖິ່ນ ແລະ ສາກົນ. ໃນວັນດັ່ງກ່າວໄດ້ມີກິດຈະກຳກ່ຽວກັບການແລກປ່ຽນລະຫວ່າງຊາວໜຸ່ມປະເທດຕ່າງໆໃນທົ່ວໂລກ ເພື່ອແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນກັບຊາວໜຸ່ມ ແລະ ຊ່ວຍໃຫ້ຊາວໜຸ່ມມີໂອກາດໄດ້ສະແດງຄວາມຮູ້, ຄວາມສາມາດຂອງຕົນໃນການປະກອບອາຊີບ, ເຮັດໃຫ້ຊາວໜຸ່ມໄດ້

ກາຍເປັນຜູ້ສ້າງສັງຄົມ ແລະ ໂລກໃຫ້ໜ້າຢູ່ ໂດຍການເຂົ້າຮ່ວມໃນອົງການຈັດຕັ້ງຕ່າງໆ ຢ່າງຫ້າວຫັນ, ສ້າງສັນຕິພາບ, ການຢູ່ຮ່ວມກັນເປັນຜູ້ນຳໜ້າໃນການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ປະກອບສ່ວນເຂົ້າໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເພື່ອກາຍເປັນຊັບພະຍາກອນມະນຸດທີ່ດີ ແລະ ເຂັ້ມແຂງໃນອະນາຄົດ.

## IV. ການວັດ ແລະ ປະເມີນຜົນ

ວັດ ແລະ ປະເມີນນັກຮຽນຈາກການຕອບຄຳຖາມຂ້າງລຸ່ມນີ້:

- ໃຫ້ນັກຮຽນອ່ານຂໍ້ຄວາມລຸ່ມນີ້ແລ້ວໝາຍ ✓ ໃສ່ຄຳຕອບທີ່ສະແດງເຖິງພາລະກິດຂອງໄວໜຸ່ມລາວຕໍ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

✓ກ. ເອົາໃຈໃສ່ຮ່ຳຮຽນ, ຝຶກຝົນຫຼໍ່ຫຼອມຢ່າງຮອບດ້ານ

✓ຂ. ຕັ້ງໜ້າປະກອບສ່ວນເຄື່ອນໄຫວວຽກງານລວມໝູ່ ແລະ ວຽກງານສັງຄົມ

ຄ. ບໍ່ນຳໃຊ້ສິ່ງທີ່ຮຽນມາເຂົ້າໃນຕົວຈິງ

✓ງ. ມີນ້ຳໃຈຊ່ວຍເຫຼືອທຸກຄົນທີ່ຢູ່ອ້ອມຂ້າງ

✓ຈ. ການເຮັດວຽກກໍເພື່ອປະກອບສ່ວນພັດທະນາປະເທດຊາດໃຫ້ເຂັ້ມແຂງ

✓ສ. ເຂົ້າຮ່ວມໃນອົງການຈັດຕັ້ງຕ່າງໆຢ່າງຫ້າວຫັນ ແລະ ມີຄວາມຮັບຜິດຊອບ

✓ຊ. ປົກປັກຮັກສາສິ່ງແວດລ້ອມ

ຍ. ຄ່ອຍໆລົບລ້າງຄວາມແຕກຕ່າງລະຫວ່າງຊົນນະບົດກັບຕົວເມືອງ

ດ. ປະກອບສ່ວນຕ້ານຄວາມຮຸນແຮງ

ສະໜັບສະໜູນການສ້າງຕົ້ນສະບັບໂດຍ ສູນການສຶກສາເພື່ອຄວາມເຂົ້າໃຈສາກົນ
ໃນພາກພື້ນອາຊີ-ປາຊີຟິກ (APCEIU)
ສະໜັບສະໜູນການພິມໂດຍ................................................
ພິມທີ່ໂຮງພິມ...........................ພິມຄັ້ງທີ......... ຈຳນວນ...............ຫົວ
ທະບຽນພິມເລກທີ...................................
ຂະໜາດ 18x25 ຊມ
ສະຫງວນລິຂະສິດ